ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V (2021-2025) ຂອງແຂວງບໍລິຄໍາໄຊ



## ວິໄສທັດຮອດປີ 2030 ທີ່ວ່າ:

“ ສ້າງແຂວງບໍລິຄໍາໄຊ ເປັນປະຕູເສດຖະກິດ, ແຫຼ່ງຜະລິດພະລັງງານ,
ບໍລິການທາງຜ່ານ ແລະ ຄຸ້ມຄອງສິ່ງແວດລ້ອມແບບຍືນຍົງ ”

ບໍລິຄໍາໄຊ, ມັງກອນ 2021

# ໂຄງການຈຸດສຸມ 2021-2025
# ຂອງແຂວງບໍລິຄຳໄຊ











2021

## ສາລະບານ

**ພາກທີ I: ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016-2020). .......... 1**

**1. ທົບທວນຄາດໝາຍລວມ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງບໍລິຄໍາໄຊ 5 ປີ ຄັ້ງທີ IV (2016-2020). .......... 1**

1.1 ທິດທາງໜ້າທີ່ລວມ: .......... 1

ທິດທາງ ໜ້າທີ່ຕົ້ນຕໍຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016-2020) ທີ່ໄດ້ວາງໄວ້ມີດັ່ງນີ້:...2

1.2 ຄາດໝາຍສູ້ຊົນລວມ:.......... 2

**2. ສະພາບແວດລ້ອມສາກົນ, ພາກພື້ນ ແລະ ພາຍໃນ. .......... 4**

2.1. ສະພາບແວດລ້ອມສາກົນ ແລະ ພາກພື້ນ. .......... 4

2.2. ສະພາບແວດລ້ອມພາຍໃນ. .......... 5

**3. ຜົນສໍາເລັດຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016-2020). .......... 5**

3.1 **ເປົ້າໝາຍ 1:** ເສດຖະກິດມີການເຕີບໂຕຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ, ສ້າງໄດ້ຄວາມສົມດຸນຕາມໂຄງປະກອບເສດຖະກິດ ໂດຍການສຸມໃສ່ພື້ນຖານອຸດສາຫະກໍາປຸງແຕ່ງໃຫ້ເຂັ້ມແຂງ ແລະ ບໍລິການທາງຜ່ານຢ່າງແຂງແຮງ.......5

3.2 **ເປົ້າໝາຍ 2:** ພັດທະນາຊັບພະຍາກອນມະນຸດ ແລະ ຍົກລະດັບຄວາມສາມາດຂອງບຸກຄະລາກອນຈາກພາກລັດ ແລະ ກໍາລັງແຮງງານຊ່ວຍໝູນຈາກພາກເອກະຊົນ; ຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໄດ້ຮັບການແກ້ໄຂ; ທຸກເຜົ່າຊົນ ແລະ ເພດໄວ ສາມາດເຂົ້າເຖິງການສຶກສາ ແລະ ການບໍລິການສາທາລະນະສຸກຢ່າງທົ່ວເຖິງ ແລະ ມີຄຸນນະພາບ; ພັດທະນາວັດທະນາທໍາອັນດີງາມທີ່ເປັນເອກະລັກຂອງຊາດ ຂອງເຜົ່າໄດ້ຮັບການສົ່ງເສີມ, ປົກປັກຮັກສາ ແລະ ພັດທະນາຢ່າງຍືນຍົງ. .......... 19

3.3. **ເປົ້າໝາຍ 3:** ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມໄດ້ຮັບການປົກປັກຮັກສາ, ນໍາໃຊ້ຢ່າງມີປະສິດທິຜົນ ແລະ ຮັບປະກັນຄວາມຍືນຍົງ, ກຽມພ້ອມຮັບມືກັບໄພພິບັດຢ່າງທັນການ ແລະ ຟື້ນຟູຄືນສິ່ງທີ່ຖືກຜົນກະທົບຈາກທໍາມະຊາດໃຫ້ດີກວ່າເກົ່າ. .......... 29

3.4. ບັນດາວຽກຈຸດສຸມປົ່ນອ້ອມທີ່ພົວພັນກັບຫຼາຍຂະແໜງການ: .......... 30

3.5. ສັງເກດຕີລາຄາຜົນສໍາເລັດຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016-2020): .......... 36

**ພາກທີ II: ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V (2021-2025). ..........39**

**1. ສະພາບແວດລ້ອມທີເອື້ອອໍານວຍ ແລະ ສິ່ງທ້າທາຍ. ..........39**

1.1. ສະພາບພາກພື້ນ ແລະ ສາກົນ.......... 39

1.2. ສະພາບພາຍໃນ. .......... 41

**2. ຈຸດໝາຍລວມ: ..........41**

**3. ທິດທາງ ແລະ ໜ້າທີ່ຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V (2021-2025). .41**

**4. ເປົ້າໝາຍ ແລະ ວຽກງານຈຸດສຸມຂອງແຜນການ 5 ປີ ຄັ້ງທີ V (2021-2025) ..........42**

4.1. **ເປົ້າໝາຍ 1:** ເສດຖະກິດຂອງແຂວງເຕີບໂຕຢ່າງມີຄຸນນະພາບ ແລະ ຕາມທິດສົມດຸນເທື່ອລະກ້າວ. .........42

4.2. **ເປົ້າໝາຍ 2:** ຊັບພະຍາກອນມະນຸດມີຄຸນນະພາບດີຂຶ້ນ, ທັງມີຄວາມສາມາດຄົ້ນຄວ້າ ແລະ ນໍາໃຊ້ວິທະຍາສາດ-ເຕັກໂນໂລຊີ ແລະ ພູມປັນຍາເພື່ອສົ່ງເສີມການຜະລິດ ແລະ ການບໍລິການໃຫ້ຫຼາກຫຼາຍ ແລະ ມີມູນຄ່າເພີ່ມສູງຂຶ້ນ. .......... 49

4.3. **ເປົ້າໝາຍທີ 3:** ຊີວິດການເປັນຢູ່ດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ. .......... 57

4.4. **ເປົ້າໝາຍທີ 4:** ການພັດທະນາຕາມທິດສີຂຽວ ແລະ ເປັນມິດຕໍ່ສິ່ງແວດລ້ອມ. ..............................63
4.5. **ເປົ້າໝາຍທີ 5:** ການຮ່ວມມື, ເຊື່ອມໂຍງ ແລະ ເຊື່ອມຈອດພາຍໃນປະເທດ, ພາກພື້ນ ແລະ ສາກົນ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ. ..............................66
4.6. **ເປົ້າໝາຍທີ 6:** ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ ແລະ ສັງຄົມໄດ້ຮັບການປົກປ້ອງຕາມທິດລັດແຫ່ງກົດໝາຍຢ່າງມີຄວາມສັກສິດ..............................71
**5. ທິດທາງການລົງທຶນ. ..............................75**
5.1 ການລົງທຶນຂອງລັດ. ..............................75
5.2 ການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ. ..............................75
5.3 ການລົງທຶນຈາກສິນເຊື່ອທະນາຄານ. ..............................76
**ພາກທີ III: ມາດຕະການ, ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະ ກິດ-ສັງຄົມ 5 ປີ ຄັ້ງທີ V ແຂວງບໍລິຄໍາໄຊ (2021-2025). ..............................77**
1. ມາດຕະການໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V (2021-2025).... 77
2. ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V (2021-2025)............. 78
- **ເອກະສານຊ້ອນທ້າຍ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄຳໄຊ ເລກທີ **52** /ຂບຊ
ບໍລິຄຳໄຊ, ວັນທີ **15 ມີນາ 2021**

# ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V (2021-2025) ແຂວງບໍລິຄຳໄຊ

- ອີງຕາມ ມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນ ປະຕິວັດລາວ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016 - 2020).
- ອີງຕາມ ມະຕິກອງປະຊຸມໃຫຍ່ ຄັ້ງທີ VI ອົງຄະນະພັກແຂວງ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016-2020) ຂອງແຂວງບໍລິຄຳໄຊ.
- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 05/ນຍ, ລົງວັນທີ 21 ພຶດສະພາ 2019 ວ່າດ້ວຍການສ້າງແຜນພັດທະນາເສດທະກິດ-ສັງຄົມ 5 ປີ ຄັ້ງທີ 9 (2021 - 2025).

ໂດຍເປັນການສັງເກດຕີລາຄາ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016 - 2020) ທີ່ຜ່ານມາ; ທັງເປັນການສືບຕໍ່ຈັດຕັ້ງປະຕິບັດ ວິໄສທັດ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V ຂອງແຂວງ ໃຫ້ສອດຄ່ອງກັບທ່າແຮງ, ສະພາວະຄວາມເປັນຈິງ ແລະ ທ່າອ່ຽງຂອງຍຸກສະໄໝ, ພວກເຮົາໄດ້ສະຫຼຸບສັງລວມ, ວາງທິດທາງ, ຄາດໝາຍສູ້ຊົນ ແລະ ເປົ້າໝາຍວຽກງານຈຸດສຸມ ດັ່ງລາຍລະອຽດລຸ່ມນີ້:

## ພາກທີ I
## ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016 - 2020)

### 1. ທົບທວນຄາດໝາຍລວມ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງບໍລິຄຳໄຊ 5 ປີ ຄັ້ງທີ IV (2016-2020).

ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV ຂອງແຂວງ ໄດ້ຮັບຮອງເອົາໃນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ VI ອົງຄະນະພັກແຂວງບໍລິຄຳໄຊ ລະຫວ່າງວັນທີ 6-8 ພຶດສະພາ 2015 ຊຶ່ງໄດ້ກຳນົດທິດທາງໜ້າທີ່ລວມຄາດໝາຍສູ້ຊົນ ແລະ ໝາກຜົນທີ່ຄາດວ່າຈະບັນລຸ **ດັ່ງນີ້:**

### 1.1 ທິດທາງໜ້າທີ່ລວມ:

ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016-2020) ເປັນແຜນສືບຕໍ່ບຸກທະລຸເພື່ອນຳເອົາແຂວງບໍລິຄຳໄຊ ຫຼຸດພົ້ນຈາກຄວາມທຸກຍາກ, ເປັນແຜນຂ້າມຜ່ານຄວາມດ້ອຍພັດທະນາ, ເປັນແຜນສືບຕໍ່ຈັດສັນອາຊີບ ແລະ ພູມລຳເນົາຄົງທີ່ ໃຫ້ໝັ້ນຄົງ ແລະ ສືບຕໍ່ນຳເອົາ 4 ບຸກທະລຸ ເຂົ້າສູ່ການປະຕິບັດ ໃຫ້ປະກົດຜົນເປັນຈິງ, (**1.** ບຸກທະລຸດ້ານຈິນຕະນາການ; **2.** ບຸກທະລຸດ້ານກົນໄກ, ລະບອບລະບຽບການບໍລິຫານ; **3.** ບຸກທະລຸດ້ານການພັດທະນາຊັບພະຍາກອນມະນຸດ ແລະ **4.** ບຸກທະລຸດ້ານການແກ້ໄຂຄວາມທຸກຍາກຂອງປະຊາຊົນ); ເສີມຂະຫຍາຍຂະບວນການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ຕາມທິດ 3 ສ້າງ ໃຫ້ທົ່ວເຖິງ, ໜັກແໜ້ນ ແລະ ເຂັ້ມແຂງ; ສືບຕໍ່ສ້າງເສດຖະກິດຂອງແຂວງໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ, ສ້າງເງື່ອນໄຂໃຫ້ປະຊາຊົນບັນດາເຜົ່າມີຄວາມຜາສຸກ, ຮັບປະກັນຄວາມຍືນຍົງທາງດ້ານການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ; ຮັບ ປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ, ເປີດກວ້າງການພົວພັນ-ຮ່ວມມື ກັບປະເທດເພື່ອນມິດຍຸດທະສາດ, ບ້ານໃກ້ເຮືອນຄຽງ ແລະ ອົງການຈັດຕັ້ງສາກົນ ໃຫ້ໜັກແໜ້ນ.

**ທິດທາງ ໜ້າທີ່ຕົ້ນຕໍຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016-2020) ທີ່ໄດ້ວາງໄວ້ ມີດັ່ງນີ້:**

1) ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ້ນ, ສ້າງສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

2) ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ, ຮັບປະກັນຄວາມມີສະຖຽນລະພາບດ້ານເສດຖະກິດມະຫາພາກຕາມທ່າແຮງທີ່ມີ; ຮັບປະກັນການພັດທະນາໃຫ້ຍືນຍົງ ມີຄວາມສອດຄ່ອງກົມກຽວລະຫວ່າງການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ການປົກປັກຮັກສາສະພາບແວດລ້ອມ ທັງເປັນເຈົ້າການຮັບມືກັບໄພພິບັດທາງທຳມະຊາດໃຫ້ທັນການ, ຮັບປະກັນການພັດທະນາຊົນນະບົດຮອບດ້ານ ຕິດແໜ້ນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ ຕາມທິດ 3 ສ້າງ.

3) ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ, ສ້າງກຳລັງແຮງງານໃຫ້ມີສີມື, ມີລະບຽບວິໄນ ແລະ ດຸໝັ່ນອົດທົນ, ສ້າງໃຫ້ໄດ້ຊ່ຽວຊານສະເພາະດ້ານວິຊາການ ແລະ ເຕັກນິກ, ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານລັດ, ວິສາຫະກິດ ແລະ ຜູ້ປະກອບການ ໃຫ້ມີຄວາມສາມາດແຂ່ງຂັນຫຼາຍຂຶ້ນ ທັງພາຍໃນ ແລະ ຕ່າງປະເທດ.

4) ສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການບໍລິການດ້ານການຄ້າ, ການລົງທຶນ, ການດຳເນີນທຸລະກິດ; ຕັ້ງໜ້າປຸກລະດົມແຫຼ່ງທຶນຕ່າງໆ ຈາກທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການພັດທະນາ ເຮັດໃຫ້ເສດຖະກິດຂອງແຂວງມີການຂະຫຍາຍຕົວດ້ວຍຈັງຫວະຕໍ່ເນື່ອງໝັ້ນທ່ຽງ ແລະ ມີຄວາມຍືນຍົງ.

5) ເພີ່ມທະວີການພົວພັນ-ຮ່ວມມືຢ່າງຮອບດ້ານ ກັບເພື່ອນມິດຍຸດທະສາດ ແລະ ແບບບ້ານໃກ້ເຮືອນຄຽງ, ພັດທະນາຄວາມຮູ້-ຄວາມສາມາດໃນຂະບວນການແຂ່ງຂັນ-ເຊື່ອມໂຍງ, ຍາດແຍ່ງບົດຮຽນ ແລະ ປະສົບການໃນການພັດທະນາ ເພື່ອໝູນໃຊ້ເຂົ້າໃນການບໍລິການທາງຜ່ານໃຫ້ມີຜົນປະໂຫຍດສູງສຸດ.

**1.2 ຄາດໝາຍສູ້ຊົນລວມ.**

**1.2.1 ດ້ານມະຫາພາກ.**

- ຮັບປະກັນໃຫ້ເສດຖະກິດຂະຫຍາຍຕົວດ້ວຍຈັງຫວະທີ່ໝັ້ນທ່ຽງ ແລະ ຕໍ່ເນື່ອງ 7,8% ຂຶ້ນໄປ.
- ລວມຍອດຜະລິດຕະພັນພາຍໃນ (GPP) ໃນປີ 2020 ບັນລຸໃຫ້ໄດ້ 6.682 ຕື້ກີບ ສະເລ່ຍໃສ່ຫົວຄົນ 2.730 ໂດລາສະຫະລັດ ຫຼື 21.979.000 ກີບ.
- ລາຍໄດ້ແຫ່ງຊາດ (GNI) ສະເລ່ຍຕໍ່ຫົວຄົນ ໃຫ້ໄດ້ປະມານ 2.320 ໂດລາສະຫະລັດ.
- ໂຄງປະກອບເສດຖະກິດ:

+ ຂະແໜງກະສິກຳ ຂະຫຍາຍຕົວ 3,5% ຕໍ່ປີ ກວມ 36% ຂອງ GPP ຫຼື 2.405,52 ຕື້ກີບ;

+ ຂະແໜງອຸດສາຫະກຳ ຂະຫຍາຍຕົວ 10%ຕໍ່ປີ ກວມ 34% ຂອງ GPP ຫຼື 2.271,88 ຕື້ກີບ

+ ຂະແໜງການບໍລິການ ຂະຫຍາຍຕົວ 8,8% ຕໍ່ປີ ກວມ 30% ຂອງ GPP ຫຼື 2.004,6 ຕື້ກີບ.

- ສູ້ຊົນເກັບລາຍຮັບເຂົ້າງົບປະມານເພີ່ມຂຶ້ນ ບໍ່ໃຫ້ຫຼຸດ 10% ຕໍ່ປີ (ພູດຂອງແຂວງ 12%ຕໍ່ປີ);( ສະພາຮັບຮອງ13,5%).
- ລາຍຈ່າຍໃຫ້ຢູ່ໃນລະດັບ 9,59% ຕໍ່ປີ (ສະພາຮັບຮອງ 7,5%) ແລະ ຂາດດຸນລວມປະມານ 3,27%. (ສະພາຮັບຮອງ 1,41%).
- ສິນຄ້າສົ່ງອອກໃຫ້ເພີ່ມຂຶ້ນສະເລ່ຍ 26,2%ຕໍ່ປີ;
- ຂາເຂົ້າບໍ່ເກີນ 30%ຕໍ່ປີ ແລະ ຂາດດຸນການຄ້າສະເລ່ຍປະມານ 3,8% ຕໍ່ປີ.

**1.2.2 ດ້ານເສດຖະກິດ.**

- ສູ້ຊົນຜະລິດເຂົ້າໃຫ້ໄດ້ 157.000 ໂຕນ ສະເລ່ຍເຂົ້າກິນ 457 ກິໂລຕໍ່ຄົນຕໍ່ປີ.
- ຂະຫຍາຍຝູງສັດໃຫ້ໄດ້ສະເລ່ຍປະມານ 3% ໃນນັ້ນ: ງົວ 2%, ຄວາຍ 1%, ໝູ 4%, ແບ້ 4%, ສັດປີກ 3% ລ້ຽງປາ ແລະ ສັດນ້ຳ 4-5%ຕໍ່ປີ.
- ປັບປຸງ ແລະ ສົ່ງເສີມການລ້ຽງສັດເປັນກຸ່ມ, ເປັນຟາມ ໃຫ້ກວມ 15% ຂອງຝູງສັດແຕ່ລະປະເພດ.

- ສົ່ງເສີມການປູກຜັກສະອາດ, ປອດສານພິດ ເປັນມິດກັບສິ່ງແວດລ້ອມ ໃຫ້ໄດ້ 25 ເຮັກຕາ.

- ສົ່ງເສີມການປູກໄມ້ ໃຫ້ໄດ້ 1.000 ເຮັກຕາຕໍ່ປີ, ເກັບແກ່ນໄມ້ ໃຫ້ໄດ້ 1.000 ກິໂລຕໍ່ປີ ແລະ ກ້າເບ້ຍໄມ້ 1 ລ້ານເບ້ຍຕໍ່ປີ.

- ປັບປຸງລະບົບຊົນລະປະທານຖາວອນ ໃຫ້ໄດ້ 37 ແຫ່ງ, ຄອງເໝືອງ 36.000 ແມັດ, ສະໜອງນໍ້າໃຫ້ໄດ້ 10.056 ເຮັກຕາ **ໃນນັ້ນ:** ລະດູແລ້ງ 7.800 ເຮັກຕາ (ນາແຊງ ແລະ ພືດ); ຂະຫຍາຍເນື້ອທີ່ນາໃໝ່ ເຂດພູຄໍາ, ຊຽງລີ ແລະ ດອນຊາດ ໃຫ້ໄດ້ 600 ເຮັກຕາ.

- ປັບປຸງ, ສ້ອມແປງ ແລະ ກໍ່ສ້າງ ຂົວ-ທາງ ໃຫ້ໄດ້ມາດຕະຖານຂອງອາຊຽນ.

- ຂະຫຍາຍລະບົບນໍ້າປະປາໃຫ້ໄດ້ 50% ຂອງທຸກໆເທດສະບານເມືອງ ແລະ ບ້ານໃຫຍ່.

- ສູ້ຊົນສ້າງມູນຄ່າຈໍລະຈອນສິນຄ້າພາຍໃນແຂວງ ໃຫ້ໄດ້ 656 ຕື້ກີບ, ມູນຄ່າການສົ່ງອອກໃຫ້ຂະຫຍາຍຕົວ ແລະ ເພີ່ມຂຶ້ນສະເລ່ຍ 160 ຕື້ກີບຕໍ່ປີ, ຂາເຂົ້າ 224 ຕື້ກີບຕໍ່ປີ, ດຸນການຄ້າ ປະມານ 64 ຕື້ກີບ ແລະ ສິນຄ້າຜ່ານແດນປະມານ 208 ຕື້ກີບຕໍ່ປີ.

- ສູ້ຊົນໃຫ້ການກໍ່ສ້າງເຂື່ອນໄຟຟ້າ ສໍາເລັດ 2 ແຫ່ງ, ເຮັດໃຫ້ອັດຕາການຊົມໃຊ້ໄຟຟ້າຖາວອນ ກວມ 98% ຂອງຄົວເຮືອນທັງໝົດ.

- ສູ້ຊົນດຶງດູດນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາທ່ຽວຊົມແຂວງບໍລິຄໍາໄຊ ໃຫ້ໄດ້ປະມານ 140.000 ຄົນຕໍ່ປີ.

- ຂະຫຍາຍຕາໜ່າງ ແລະ ການບໍລິການໂທລະຄົມ ໄປສູ່ຊົນນະບົດ ແລະ ເຂດຫ່າງໄກ ໃຫ້ກວມ 100% ຂອງຈໍານວນບ້ານໃນທົ່ວແຂວງ, ການຊົມໃຊ້ໂທລະສັບ ສະເລ່ຍໃສ່ປະຊາກອນໃຫ້ໄດ້ 90/100 ຄົນ.

- ສ້າງກຸ່ມການຜະລິດ, ການບໍລິການ ແລະ ເສດຖະກິດຮ່ວມມືຂອງປະຊາຊົນໃຫ້ກວມທຸກເມືອງ.

**1.2.3 ດ້ານສັງຄົມ ແລະ ເປົ້າໝາຍສະຫັດສະຫວັດດ້ານການພັດທະນາໃໝ່ (S-MDGs).**

- ຄາດວ່າແຂວງຈະມີພົນລະເມືອງປະມານ 303.845 ຄົນ ດ້ວຍອັດຕາການຂະຫຍາຍຕົວ 1,85% ຕໍ່ປີ.

- ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍ ໃຫ້ໄດ້ 5 ບ້ານ, ລຶບລ້າງບ້ານທຸກຍາກໃຫ້ໄດ້ 100%, ອັດຕາຄວາມທຸກຍາກຂອງຄອບຄົວ ໃຫ້ຍັງເຫຼືອໜ້ອຍກວ່າ 2%.

- ບ້ານພັດທະນາໃຫ້ກວມ 85% ຂຶ້ນໄປ, ປະກາດເມືອງໄຊຈໍາພອນ ແລະ ແຂວງພົ້ນທຸກ ໃນປີ 2020.

- ປັບປຸງ ແລະ ກໍ່ສ້າງໂຮງຮຽນວິຊາຊີບຂອງພາກລັດ ແລະ ເອກະຊົນ ໃຫ້ໄດ້ທຽບເທົ່າມາດຕະຖານອາຊຽນ.

- ສູ້ຊົນເຮັດໃຫ້ອັດຕາເຂົ້າຮຽນຂອງເດັກ 3-5 ປີ ບັນລຸ 55% ຂຶ້ນໄປ.

- ສູ້ຊົນເຮັດໃຫ້ອັດຕາປະລະ ແລະ ຄ້າງຫ້ອງໃນທຸກຂັ້ນຮຽນບໍ່ໃຫ້ເກີນ 2%.

- ສູ້ຊົນເຮັດໃຫ້ອັດຕາການລອດເຫຼືອໃນຊັ້ນປະຖົມບັນລຸ 95% ຂຶ້ນໄປ.

- ສືບຕໍ່ເຮັດໃຫ້ອັດຕາເຂົ້າຮຽນຊັ້ນປະຖົມບັນລຸ 99%, ຊັ້ນມັດທະຍົມຕົ້ນ 95% ແລະ ມັດທະຍົມປາຍໃຫ້ບັນລຸ 65% ຂຶ້ນໄປ.

- ສູ້ຊົນປະກາດແຂວງຈົບຊັ້ນມັດທະຍົມຕົ້ນບໍາລຸງ ແລະ ລຶບລ້າງພະຍາດໝາກແດງ ໃນປີ 2017.

- ສູ້ຊົນເຮັດໃຫ້ດັດສະນີຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ໃນທຸກຊັ້ນຮຽນ ເທົ່າ 1.

- ສ້າງຂະບວນການກິລາ-ກາຍຍະກໍາ ໃຫ້ກາຍເປັນຂອງທົ່ວປວງຊົນ.

- ສ້າງ ແລະ ປັບປຸງ ໂຮງໝໍຂອງລັດ ໃຫ້ໄດ້ທຽບເທົ່າມາດຕະຖານອາຊຽນ.

- ສູ້ຊົນໃຫ້ປະຊາຊົນເຂົ້າເຖິງລະບົບປະກັນສຸຂະພາບກວມ 80% ຂຶ້ນໄປ.

- ສືບຕໍ່ເຮັດໃຫ້ອັດຕາສ່ວນການຂາດສານອາຫານ ແລະ ອັດຕາສ່ວນການຕາຍຂອງເດັກອາຍຸຕໍ່າກວ່າ 1 ປີ, 5 ປີ ໃຫ້ໄດ້ເກີນມາດຕະຖານ.

- ສືບຕໍ່ເຮັດໃຫ້ອັດຕາການຕາຍຂອງແມ່ ບໍ່ໃຫ້ເກີນ 30 ຄົນ ຕໍ່ເດັກເກີດມີຊີວິດ 100.000 ຄົນ.

- ສືບຕໍ່ເຮັດໃຫ້ອັດຕາການຊົມໃຊ້ນໍ້າສະອາດ ແລະ ອັດຕາການຊົມໃຊ້ວິດຖ່າຍ ໃຫ້ໄດ້ 95%.

- ສ້າງບ້ານສາທາລະນະສຸກແບບຢ່າງ ໃຫ້ໄດ້ 95%, ຄອບຄົວສາທາລະນະສຸກແບບຢ່າງໃຫ້ໄດ້ 90%.

- ສ້າງບ້ານວັດທະນະທໍາໃຫ້ໄດ້ຕື່ມ 72 ບ້ານ, ຄອບຄົວວັດທະນະທໍາໃຫ້ໄດ້ 85%, ສ້າງກົມກອງວັດທະນະທໍາໃຫ້ໄດ້ 2 ກົມກອງ ແລະ 1 ເມືອງ.

- ສ້າງບ້ານປອດຄະດີ ໃຫ້ໄດ້ 99%, ຄອບຄົວປອດຄະດີ ໃຫ້ໄດ້ 95%.

- ສູ້ຊົນສ້າງສວນສາທາລະນະ ໃນເທດສະບານແຂວງ ໃຫ້ໄດ້ 1 ແຫ່ງ, ເຮັດໃຫ້ເມືອງປາກຊັນ ເປັນເມືອງ ສີຂຽວ, ສະອາດ ແລະ ມີຊີວິດສົດຊື່ນ.

**1.2.4 ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:**

- ຟື້ນຟູ, ບູລະນະ ແລະ ປົກປັກຮັກສາເນື້ອທີ່ປ່າໄມ້ ໃຫ້ກວມ 70% ຂອງເນື້ອທີ່ທັງໝົດໃນທົ່ວແຂວງ.

- ຈັດສັນ, ຄຸ້ມຄອງ, ກວດກາ ແລະ ຫຼຸດຜ່ອນຜົນກະທົບຕໍ່ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທັນເປັນວຽກຂອງປວງຊົນຕິດພັນກັບການດຳລົງຊີວິດ, ສ້າງລາຍຮັບທີ່ໝັ້ນຄົງ ເພື່ອແກ້ໄຂຄວາມທຸກຍາກ.

- ສູ້ຊົນອອກໃບຕາດິນໃຫ້ໄດ້ 13.610 ຕອນ.

**1.2.5 ມາດຖານຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາ:**

ສຸມໃສ່ບັນລຸເງື່ອນໄຂຫຼຸດພົ້ນຄວາມທຸກຍາກໃນປີ 2020 ແລະ ຄວາມດ້ອຍພັດທະນາຫຼັງປີ 2025 **ເຊັ່ນ:**

- ລາຍໄດ້ແຫ່ງຊາດ (GNI) ສະເລ່ຍຕໍ່ຫົວຄົນ ໃຫ້ໄດ້ປະມານ 2.320 ໂດລາສະຫະລັດ.

- ພັດທະນາຊັບສິນມະນຸດ (HAI): ① ອັດຕາການຮຽນຮູ້ໜັງສືຜູ້ໃຫຍ່, ② ອັດຕາການຕາຍຂອງເດັກລຸ່ມ 5 ປີ, ③ ອັດຕາເຂົ້າຮຽນລວມ, ④ ອັດຕາສ່ວນຂອງປະຊາກອນທີ່ຂາດສານອາຫານ ໃຫ້ໄດ້ສູງກວ່າ 68%.

- ດັດສະນີຄວາມບອບບາງທາງດ້ານເສດຖະກິດ (EVI): ① ສັດສ່ວນປະຊາກອນທີ່ຖືກເຄາະຮ້າຍຈາກໄພພິບັດທຳມະຊາດ, ② ຄວາມບໍ່ມີສະຖຽນລະພາບທາງດ້ານການຜະລິດກະສິກຳ, ③ ຂະໜາດຂອງປະຊາກອນ, ④ ຄວາມຫ່າງໄກຂອງປະເທດທີ່ບໍ່ມີທາງອອກສູ່ທະເລ, ⑤ ຄວາມບໍ່ມີສະຖຽນລະພາບຂອງການສົ່ງອອກສິນຄ້າ ແລະ ການບໍລິການ, ⑥ ຄວາມບໍ່ຫຼາກຫຼາຍຂອງສິນຄ້າສົ່ງອອກ, ⑦ ສັດສ່ວນຂອງຂະແໜງກະສິກຳ-ປ່າໄມ້ຕໍ່ GPP  ໃຫ້ບັນລຸຕໍ່າກວ່າ 32%.

**1.3 ໝາກຜົນທີ່ຄາດວ່າຈະບັນລຸ.**

**1.3.1 ເປົ້າໝາຍທີ 1: ເສດຖະກິດມີການເຕີບໂຕຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ, ສ້າງໄດ້ຄວາມສົມດຸນຕາມໂຄງປະກອບເສດຖະກິດ ໂດຍການສຸມໃສ່ພື້ນຖານອຸດສາຫະກຳປຸງແຕ່ງໃຫ້ເຂັ້ມແຂງ ແລະ ບໍລິການທາງຜ່ານຢ່າງແຂງແຮງ.**

**1.3.2 ເປົ້າໝາຍທີ 2: ພັດທະນາຊັບພະຍາກອນມະນຸດ ແລະ ຍົກລະດັບຄວາມສາມາດຂອງບຸກຄະລາກອນຈາກພາກລັດ ແລະ ກຳລັງແຮງງານຊ່ວຍໜູນຈາກພາກເອກະຊົນ; ຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໄດ້ຮັບການແກ້ໄຂ; ທຸກເຜົ່າຊົນ ແລະ ເພດໄວ ສາມາດເຂົ້າເຖິງການສຶກສາ ແລະ ການບໍລິການສາທາລະນະສຸກຢ່າງທົ່ວເຖິງ ແລະ ມີຄຸນນະພາບ; ປົກປັກຮັກສາ ແລະ ພັດທະນາວັດທະນາທຳອັນດີງາມທີ່ເປັນເອກະລັກຂອງຊາດ, ຂອງເຜົ່າໃຫ້ຍືນຍົງ.**

**1.3.3 ເປົ້າໝາຍທີ 3: ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ຮັບການປົກປັກຮັກ ສາ, ນຳໃຊ້ຢ່າງມີປະສິດທິຜົນ ແລະ ຮັບປະກັນຄວາມຍືນຍົງ, ກຽມພ້ອມຮັບມືກັບໄພພິບັດຢ່າງທັນການ ແລະ ຟື້ນຟູຄືນສິ່ງທີ່ຖືກຜົນກະທົບຈາກທຳມະຊາດໃຫ້ດີກວ່າເກົ່າ.**

**1.3.4 ວຽກງານປົ່ນອ້ອມ ແລະ ຕິດພັນຫຼາຍຂະແໜງການ.**

**2. ສະພາບແວດລ້ອມສາກົນ, ພາກພື້ນ ແລະ ພາຍໃນ.**

**2.1. ສະພາບແວດລ້ອມສາກົນ ແລະ ພາກພື້ນ.**

ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV  ຂອງແຂວງ ໄດ້ດຳເນີນໄປທ່າມກາງທີ່ສະພາບແວດລ້ອມສາກົນ ແລະ ພາກພື້ນ ມີທັງສິ່ງອຳນວຍຄວາມສະດວກ ແລະ ສິ່ງທ້າທາຍເກີດຂຶ້ນຫຼາຍພໍສົມຄວນ, ການຮ່ວມມືສາກົນ ແລະ ພາກພື້ນ ຍັງສືບຕໍ່ເພີ່ມຂຶ້ນ **ເຊັ່ນ:** ການລວມຕົວກັນເຂົ້າເປັນປະຊາຄົມເສດຖະກິດອາຊຽນ (AEC) ໃນທ້າຍປີ 2015; ສະພາບວິກິດການທາງດ້ານເສດຖະກິດ-ການເງິນ ຂອງບັນດາປະເທດໃນກຸ່ມປະຊາຄົມເອີລົບ ໄດ້ຮັບການແກ້ໄຂ, ເສດຖະກິດຂອງອາເມລິກາ-ສປ ຈີນ ຂະຫຍາຍຕົວ; ຂະບວນການທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ດ້ານຂໍ້ມູນຂ່າວສານໄດ້ມີການພັດທະນາ; ຄຽງຄູ່ກັບສິ່ງທີ່ເອື້ອອຳນວຍກໍ່ເຫັນໄດ້ວ່າ ເສດຖະກິດຂອງໂລກກໍ່ຍັງຂະຫຍາຍຕົວຊ້າ ແລະ ເກີດວິກິດທາງດ້ານການເງິນ, ຂໍ້ຂັດແຍ່ງທາງດ້ານການເມືອງ, ການຄ້າ, ສະພາບໄພຫວ່າງງານຍັງສູງ, ຢູ່ບາງປະເທດເກີດມີສະພາບຄວາມບໍ່ສະຫງົບ, ມີສົງຄາມ, ໄພພິບັດຕ່າງໆນັບມື້ຮຸນແຮງ, ເກີດມີເຊື້ອໄວຣັດ, ພະຍາດລະບາດບາງຊະນິດ ໄດ້ເກີດຂຶ້ນກັບຄົນ ແລະ ສັດ, ໂດຍສະເພາະພະຍາດອາຫິວາໝູອາຟຣິກກາ, ພະຍາດ COVID-19 ແລະ ອື່ນໆ.

**2.2. ສະພາບແວດລ້ອມພາຍໃນ.**

ປະເທດເຮົາຍັງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບຢ່າງໜັກແໜ້ນ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ຊຶ່ງໄດ້ກາຍເປັນປັດໃຈພື້ນຖານທີ່ເອື້ອອໍານວຍຄວາມສະດວກໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມໂດຍລວມ, ການດໍາເນີນການຜະລິດ-ທຸລະກິດ, ການຄ້າ, ການລົງທຶນ ແລະ ການບໍລິການດ້ານຕ່າງໆ ມີການຂະຫຍາຍຕົວເປັນຈັງຫວະທີ່ດີ ແລະ ເພີ້ມຂຶ້ນແຕ່ລະປີ, ພະນັກງານ, ທະຫານ, ຕໍາຫຼວດ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າໄດ້ເປັນເຈົ້າການເຂົ້າຮ່ວມໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນ: ການບຸກທະລຸທັງດ້ານຈິນຕະນາການ, ການປັບປຸງລະບຽບ-ກົນໄກໃຫ້ສອດຄ່ອງ, ການພັດທະນາຊັບພະຍາກອນມະນຸດ ແລະ ພັດທະນາຊົນນະບົດ-ລຶບລ້າງຄວາມທຸກຍາກຢ່າງຕັ້ງໜ້າ, ປະຕິບັດວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ (ວຽກງານ 3 ສ້າງ) ໃຫ້ປະກົດຜົນເປັນຈິງ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ທີ່ກໍານົດໄວ້; ພິເສດເຫັນວ່າ ທົ່ວແຂວງຍັງສືບຕໍ່, ມີສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ພື້ນຖານໂຄງລ່າງໄດ້ຮັບການປັບປຸງ-ປ່ຽນແປງດີຂຶ້ນເປັນກ້າວໆ, ເສດຖະກິດມີການຂະຫຍາຍຕົວຢ່າງໜັກແໜ້ນ, ຕໍ່ເນື່ອງ ແລະ ມີຄວາມໝັ້ນທ່ຽງ.

**3. ຜົນສໍາເລັດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016-2020).**

**3.1 ເປົ້າໝາຍທີ 1: ເສດຖະກິດມີການເຕີບໂຕຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ, ສ້າງໄດ້ຄວາມສົມດຸນຕາມໂຄງປະກອບເສດຖະກິດ ໂດຍການສຸມໃສ່ພື້ນຖານອຸດສາຫະກໍາປຸງແຕ່ງໃຫ້ເຂັ້ມແຂງ ແລະ ບໍລິການທາງຜ່ານຢ່າງແຂງແຮງ.**

**3.1.1 ຮັບປະກັນໃຫ້ເສດຖະກິດຂອງແຂວງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ.**

**3.1.1.1 ດ້ານເສດຖະກິດມະຫາພາກ.**

ໄດ້ກໍານົດນະໂຍບາຍໃນການຄຸ້ມຄອງ ແລະ ດັດສົມເສດຖະກິດມະຫາພາກໂດຍສະເພາະການປະຕິບັດນະໂຍບາຍຕໍ່ຜູ້ລົງທຶນຢ່າງເໝາະສົມ ເຮັດໃຫ້ເສດຖະກິດຂອງແຂວງໃນໄລຍະ 5 ປີຜ່ານມາ ຍັງສືບຕໍ່ຂະຫຍາຍຕົວສະເລ່ຍ 6,5% (ແຜນ 7,8%); ຂະແໜງກະສິກໍາ ຂະຫຍາຍຕົວ 4% (ແຜນ 3,5%); ຂະແໜງອຸດສາຫະກໍາ ຂະຫຍາຍຕົວ 11% (ແຜນ 10%); ຂະແໜງບໍລິການ ຂະຫຍາຍຕົວ 3%(ແຜນ 8,8%).

- ໃນປີ 2020 ລວມຍອດຜະລິດຕະພັນພາຍໃນບັນລຸ 6.083,93 ຕື້ກີບ, ສະເລ່ຍຕໍ່ຫົວຄົນ 19,37 ລ້ານກີບ ຫຼື 2.131 ໂດລາ.

- ການປ່ຽນແປງໂຄງປະກອບເສດຖະກິດ: ຄາດໝາຍ 5 ປີຜ່ານມາ (2016-2020) ວາງຄາດໝາຍໄວ້ຂະແໜງກະສິກໍາກວມ 36% ຈັດຕັ້ງປະຕິບັດຕົວຈິງ ຂະແໜງກະສິກໍາກວມ 30,5% ມີທ່າອ່ຽງຫຼຸດລົງ; ອຸດສາຫະກໍາຄາດໝາຍ ກວມ 34% ປະຕິບັດກວມ 45,8% ມີທ່າອ່ຽງເພີ້ມຂຶ້ນ ແລະ ການບໍລິການຄາດໝາຍ ກວມ 30% ການຈັດຕັ້ງປະຕິບັດຕົວຈິງ 23,7% ຫຼຸດລົງ ຍ້ອນການລະບາດພະຍາດ COVID-19, ໂຄງປະກອບເສດຖະກິດຕາມສາມຂະແໜງການ ເຫັນວ່າໄປ ຕາມທິດຫັນເປັນອຸດສາຫະກໍາ ແລະ ທັນສະໄໝເທື່ອລະກ້າວ.

**ຕາຕະລາງ 1: ການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ (GPP)**

| ປີ | GPP ລາຄາປະຈຸບັນ(ຕື້ກີບ) | GPP ລາຄາປະຈຸບັນ(ໂດລາ) | GPPລາຄາຄົງທີ່ | ອັດຕາການຂະຫຍາຍຕົວ % |
|---|---|---|---|---|
| 2016 | 4,474.78 | 553,217,347.66 | 4,446.56 | 8.01 |
| 2017 | 5,057.75 | 612,615,203.39 | 4,803.62 | 8.03 |
| 2018 | 5,252.30 | 625,348,234.16 | 5,094.47 | 6.05 |
| 2019 | 5,833.24 | 657,613,510.24 | 5,489.53 | 7.75 |
| 2020 | 6,083.94 | 669,152,613.67 | 5,647.83 | 2.88 |
| **ລວມ** | **26,702.01** | **3,135,922,750.69** | | |
| **ສະເລ່ຍ** | | | | **6.54** |

**ແຫຼ່ງຂໍ້ມູນ: ສູນສະຖິຕິປະຈໍາແຂວງ**

**ຕາຕະລາງ 2: ໂຄງປະກອບ GPP ໄລຍະ 5 ປີ ຄັ້ງທີ IV (2016-2020)**

| ລາຍລະອຽດ | ຄາດໝາຍ | ປະຕິບັດ | | | | |
|---|---|---|---|---|---|---|
| | 2016-2020 | 2016 | 2017 | 2018 | 2019 | 2020 |
| GPP | 100 | 100 | 100 | 100 | 100 | 100 |
| ກະສິກຳ-ປ່າໄມ້ (%) | 36.00 | 30.54 | 29.19 | 25.05 | 24.87 | 30.5 |
| ອຸດສະຫະກຳ (%) | 34.00 | 39.69 | 41.71 | 44.36 | 45.61 | 45.8 |
| ການບໍລິການ (%) | 30.00 | 29.77 | 29.10 | 30.59 | 29.52 | 23.7 |

ແຫຼ່ງຂໍ້ມູນ: ສູນສະຖິຕິປະຈຳແຂວງ

**ຕາຕະລາງ 3: ລວມຍອດຜະລິດຕະພັນພາຍໃນ (GPP) ແລະ ສະເລ່ຍຕໍ່ຫົວຄົນ**

| ປີ | GPP ລາຄາປະຈຸບັນ(ຕື້ກີບ) | ໂດລາ | ແຜນ $/ຄົນ | ປະຕິບັດ $/ຄົນ | ປະຕິບັດ ກີບ/ຄົນ |
|---|---|---|---|---|---|
| 2016 | 4,474.78 | 553,217,347.66 | 1,980.00 | 1,981.69 | 16,029,857.34 |
| 2017 | 5,057.75 | 612,615,203.39 | 2,169.00 | 2,150.85 | 17,757,451.90 |
| 2018 | 5,252.30 | 625,348,234.16 | 2,361.00 | 2,151.92 | 18,073,935.43 |
| 2019 | 5,833.24 | 657,613,510.24 | 2,550.00 | 2,161.00 | 18.773.625.00 |
| 2020 | 6,083.94 | 669,152,613.67 | 2,732.00 | 2,131.39 | 19,378,553.29 |
| **ລວມ 5 ປີ** | **26,702.01** | | | | |

ແຫຼ່ງຂໍ້ມູນ: ສູນສະຖິຕິປະຈຳແຂວງ

**3.1.1.2 ດ້ານງົບປະມານຂອງລັດ.**

ພວກເຮົາໄດ້ປັບປຸງກົນໄກໃນການຈັດເກັບລາຍຮັບເຂົ້າງົບປະມານໃຫ້ທັນເປັນທັນສະໄໝ ແລະ ແທດເໝາະກັບຕົວຈິງ ໂດຍຖືເອົາການຍົກລະດັບເກັບກຳຂໍ້ມູນຖານລາຍຮັບທີ່ມີແລ້ວ ແລະ ຂະຫຍາຍຖານລາຍຮັບໃໝ່ດ້ານອາກອນ, ທີ່ດິນ ແລະ ໄດ້ມີການແບ່ງຂັ້ນຄຸ້ມຄອງການຈັດເກັບລາຍຮັບ ແລະ ການຕິດຕາມເລັ່ງທວງໜີ້ສິນທີ່ຍັງຄົງຄ້າງ, ສາມາດຈັດເກັບລາຍຮັບເຂົ້າງົບປະມານໄດ້ລື່ນແຜນ ໃນ 04 ປີຜ່ານມາ 2016-2019 ຈຳນວນ 49 ຕື້ກີບ (ທຽບໃສ່ແຜນຂອງກະຊວງ), ປີ 2020 ແມ່ນບໍ່ໄດ້ຕາມແຜນ, ສັງລວມໃນ 5 ປີປະຕິບັດໄດ້ທັງໝົດ 3.589,32 ຕື້ກີບ, **ໃນນັ້ນ:**

- **ລາຍຮັບພູດສູນກາງ:** ປະຕິບັດໄດ້ທັງໝົດ 2.633,66 ຕື້ກີບ ເທົ່າກັບ 174,34% ຂອງແຜນ, ສະເລ່ຍ 526,73 ຕື້ກີບ/ປີ **ໃນນີ້:**

+ ພາສີ 2.595 ຕື້ກີບ ກວມ 98,5%, ສະເລ່ຍ 519 ຕື້ກີບ/ປີ.

+ ໄມ້ 31,8 ຕື້ກີບ ກວມ 1,2%, ສະເລ່ຍ 6,3 ຕື້ກີບ/ປີ.

+ ວີຊ່າ 2,8 ຕື້ກີບ ກວມ 0,11%, ສະເລ່ຍ 0,57 ຕື້ກີບ/ປີ.

- **ລາຍຮັບພູດຂອງແຂວງ:** ສາມາດປະຕິບັດໄດ້ 964,67 ຕື້ກີບ ເທົ່າກັບ 95,04% ຂອງແຜນ, ສະເລ່ຍ 192 ຕື້ກີບ/ປີ, **ໃນນັ້ນ:**

+ ສວຍສາອາກອນ 803,49 ຕື້ກີບ, ກວມ 83,2%, ສະເລ່ຍ 160,70 ຕື້ກີບຕໍ່ປີ.

+ ທີ່ດິນ 29,86 ຕື້ກີບ ສະເລ່ຍ 5,97 ຕື້ກີບຕໍ່ປີ ກວມ 3,1%, ຊັບສິນຂອງລັດ 53,06 ຕື້ກີບ ສະເລ່ຍ 10,61 ຕື້ກີບຕໍ່ປີ ກວມ 5,5%; ລາຍຮັບດັ່ງກ່າວສາມາດກຸ້ມລາຍຈ່າຍພາກບໍລິຫານປົກກະຕິ, ເງິນອຸດໜູນ-ນະໂຍບາຍ ແລະ ເງິນເດືອນແຕ່ລະປີ.

**- ດ້ານລາຍຈ່າຍ:** ລວມຍອດລາຍຈ່າຍທັງໝົດປະຕິບັດໄດ້ 2.346,09 ຕື້ກີບ ສະເລ່ຍ 469,22 ຕື້ກີບຕໍ່ປີ ໃນນັ້ນ: ເງິນເດືອນ 1.413,73 ຕື້ກີບ ສະເລ່ຍ 282,75 ຕື້ກີບຕໍ່ປີ ກວມ 60,26%; ເງິນອຸດໜູນ-ນະໂຍບາຍ 183,15 ຕື້ກີບ ສະເລ່ຍ 36,63 ຕື້ກີບຕໍ່ປີ ກວມ 7,8%; ບໍລິຫານ 200,71 ຕື້ກີບ ສະເລ່ຍ 40,14 ຕື້ກີບຕໍ່ປີ ກວມ 8,56% ໃນນັ້ນ: ບໍລິຫານວິຊາການ 62,54 ຕື້ກີບ, ສະເລ່ຍ 12,51 ຕື້ກີບຕໍ່ປີ; ດັດສົມສິ່ງເສີມ 65,67 ຕື້ກີບ ສະເລ່ຍ 13,13 ຕື້ກີບຕໍ່ປີ. ຈ່າຍຊື້ໃໝ່ 6,36 ຕື້ກີບ ສະເລ່ຍ 1,27 ຕື້ກີບຕໍ່ປີ ກວມ 0,27 % ແລະ ການລົງທຶນຂອງລັດ 404,27 ຕື້ກີບ ສະເລ່ຍ 80,85 ຕື້ກີບຕໍ່ປີ ກວມ 17,23%.

**ຕາຕະລາງ: 4 ການປະຕິບັດລາຍຮັບ-ລາຍຈ່າຍງົບປະມານ 5 ປີ.**

**ຫົວໜ່ວຍ: ຕື້ກີບ**

| ລ/ດ | ເນື້ອໃນ | ແຜນ 2016-20 | ປະຕິບັດ | | | | | ລວມ 5 ປີ | ສະເລ່ຍ 2016-20 |
|---|---|---|---|---|---|---|---|---|---|
| | | | 2016 | 2017 | 2018 | 2019 | 2020 | | |
| **ລວມລາຍຮັບທັງໝົດ:** | | **2,525.59** | **602.62** | **759.82** | **910.92** | **761.68** | **563.28** | **3,598.32** | **719.66** |
| I | **ພູດສູນກາງ** | 1,510.59 | **411.30** | **569.28** | **695.96** | **553.41** | **403.70** | **2,633.66** | **526.73** |
| 1 | ພາສີ | | 400.73 | 565.01 | 686.75 | 547.36 | 395.65 | 2,595.50 | **519.10** |
| 2 | ໄມ້ສູນກາງ | | 9.58 | 3.51 | 8.24 | 5.03 | 5.50 | 31.86 | **6.37** |
| 3 | ວິຊາ | | 0.87 | 0.72 | 0.58 | 0.63 | 0.06 | 2.87 | **0.57** |
| 4 | ຕົ້ນທຶນ-ດອກເບ້ຍ | | 0.13 | 0.03 | 0.40 | 0.39 | 2.49 | 3.43 | **0.69** |
| II | **ພູດຂອງແຂວງ** | **1,015.00** | **191.32** | **190.54** | **214.96** | **208.26** | **159.59** | **964.67** | **192.93** |
| 1 | ສວຍສາອາກອນ | | 152.42 | 153.51 | 179.36 | 172.36 | 145.84 | 803.49 | **160.70** |
| 2 | ທີ່ດິນ | | 5.22 | 5.81 | 6.34 | 6.37 | 6.12 | 29.86 | **5.97** |
| 3 | ຊັບສິນ | | 12.40 | 10.56 | 11.25 | 11.30 | 7.54 | 53.06 | **10.61** |
| 4 | ພາສີພູດທ້ອງຖິ່ນ | | 0.96 | - | - | - | - | 0.96 | **0.19** |
| 5 | ຄ່າບໍລິການ | | 20.31 | 20.66 | 18.01 | 18.23 | 0.08 | 77.30 | **15.46** |
| III | **ລວມລາຍຈ່າຍ** | **2,861.00** | **523.78** | **474.26** | **477.08** | **450.78** | **420.19** | **2,346.09** | **469.22** |
| 1 | ເງິນເດືອນ | | 307.37 | 268.72 | 276.15 | 280.05 | 281.45 | 1,413.73 | **282.75** |
| 2 | ອຸດໜູນນະໂຍບາຍ | | 38.13 | 33.32 | 33.09 | 39.07 | 39.55 | 183.15 | **36.63** |
| 3 | ບໍລິຫານ | | 44.60 | 40.33 | 38.56 | 39.03 | 38.20 | 200.71 | **40.14** |
| | ບໍລິຫານວິຊາການ | | 15.54 | 13.85 | 12.08 | 10.94 | 10.13 | 62.54 | **12.51** |
| 4 | ດັດສົມ | | 12.69 | 12.35 | 12.31 | 14.09 | 14.24 | 65.67 | **13.13** |
| | ດັດສົມວິຊາການ | | 1.65 | 1.56 | 1.57 | 2.10 | 1.21 | 8.09 | **1.62** |
| 5 | ແຮ-ບຳເນັດເກີນແຜນ | | 16.74 | 1.20 | 24.83 | 14.45 | 14.99 | 72.20 | **14.44** |
| | ບຳເນັດນາຍບ້ານ | | - | - | - | - | - | - | |
| 6 | ຊື້ໃໝ່ | | 2.69 | 2.79 | - | 0.46 | 0.42 | 6.36 | **1.27** |
| 7 | ລົງທຶນຂອງລັດ | | 101.57 | 115.55 | 92.15 | 63.64 | 31.35 | 404.27 | **80.85** |
| IV | **ດຸ່ນດ່ຽງ** | 269.41 | (332.47) | (283.72) | (262.12) | (242.52) | (260.61) | (1,381.43) | **(276.29)** |

**ແຫຼ່ງຂໍ້ມູນ: ພະແນກການເງິນແຂວງ**

### 3.1.1.3 ດ້ານກະສິກຳ-ປ່າໄມ້.

ຜ່ານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016-2020) ຂອງແຂວງ ເຫັນວ່າຂະແໜງກະສິກຳ-ປ່າໄມ້ ມີບົດບາດສຳຄັນຫຼາຍດ້ານຄື: ການຜະລິດສະບຽງອາຫານ ສາມາດກຸ້ມຕົນເອງໂດຍພື້ນຖານ ເຊິ່ງມີການເພີ່ມຂຶ້ນໃນແຕ່ລະປີ, ມີສ່ວນແຮໄວ້ ແລະ ຂາຍເປັນສິນຄ້າສົ່ງອອກຈຳນວນໜຶ່ງ, ການນຳໃຊ້ເຕັກນິກ-ວິທະຍາສາດ ເຂົ້າຊ່ວຍໃນການຜະລິດເປັນສິນຄ້າຂອງຊາວກະສິກອນ ເປັນຂະບວນກວ້າງຂວາງ, ການສຳຫຼວດ-ຈັດສັນດິນກະສິກຳ-ປ່າໄມ້ຂັ້ນມະຫາພາກ ສຳເລັດໂດຍພື້ນຖານ, ການຕັດໄມ້ທຳລາຍປ່າແບບສະຊາຍ ຕິດພັນກັບການຈັດສັນທີ່ຢູ່ອາໃສ ແລະ ອາຊີບຄົງທີ່ທີ່ຜິດຕໍ່ລະບຽບກົດໝາຍຫຼຸດລົງ, ການປົກປັກຮັກສາ, ຄຸ້ມຄອງ ແລະ ພັດທະນາປ່າໄມ້, ແຫຼ່ງນ້ຳມີຄວາມສົມດຸນ ແລະ ຍືນຍົງ, ການສ້າງມູນຄ່າຜະລິດຕະພັນພາຍໃນທາງດ້ານການປູກຝັງ, ລ້ຽງສັດ ມີການຂະຫຍາຍຕົວ ແລະ ເພີ່ມຂຶ້ນໃນລະດັບສະເລ່ຍ 1,4%ຕໍ່ປີ, ຊຶ່ງສະແດງອອກດັ່ງນີ້:

➢ **ດ້ານການຜະລິດສະບຽງອາຫານ:**

**- ການຜະລິດເຂົ້າ:** ໃນປີ 2020 ທົ່ວແຂວງສາມາດຜະລິດເຂົ້າເປືອກໄດ້ 143.258 ໂຕນທຽບໃສ່ແຜນບັນລຸໄດ້ 91,24% (ແຜນ 157.000 ໂຕນ); ສະເລ່ຍຕໍ່ຫົວຄົນ 456 ກິໂລ/ຄົນ/ປີ; ມີເນື້ອທີ່ນາປີ ທັງໝົດ 36.745 ຮຕ, ຜົນຜະລິດ 134.749 ໂຕນ, ສະມັດຕະພາບ 3,6 ໂຕນ/ຮຕ (ແຜນ 3,9 ໂຕນ/ຮຕ); ເນື້ອທີ່ນາແຊງປະຕິບັດໄດ້

1.851 ຮຕ, (ເນື້ອທີ່ເກັບກ່ຽວ 1.699 ເຮັກຕາ, ສະມັດຕະພາບ 3,8 ໂຕນ/ຮຕ ຜົນຜະລິດ 6.625 ໂຕນ) (ແຜນ 4,4 ໂຕນ/ເຮັກຕາ); ໄຮ່ໝູນວຽນ ເນື້ອທີ່ປະຕິບັດໃຫ້ໄດ້ 1.555 ຮຕ, ເນື້ອທີ່ເກັບກ່ຽວ 1.189 ຮຕ, ຜົນຜະລິດ 1.884 ໂຕນ, ສະມັດຕະພາບ 1,5 ໂຕນ/ຮຕ; ທົ່ວແຂວງມີສະຖານີບໍລິການທາງດ້ານເຕັກນິກດ້ານກະສິກຳ ແລະ ປ່າໄມ້ ຈຳນວນ 11 ສະຖານີ, ໃຫ້ບໍລິການແກ່ປະຊາຊົນບັນດາເຜົ່າ ແລະ ຊາວກະສິກອນໄດ້ເປັນຢ່າງດີ.

**ຕາຕະລາງ 5: ການຜະລິດເຂົ້າເປືອກໃນແຕ່ລະປີ.**

| ລາຍການ | ຫ/ໜ | ປະຕິບັດ | | | | | | | ສະເລ່ຍ/ປີ |
|---|---|---|---|---|---|---|---|---|---|
| | | ແຜນ 2016-20 | 2016 | 2017 | 2018 | 2019 | 2020 | ລວມ 5 ປີ | |
| ເນື້ອທີ່ນາປີ | ຮຕ | | 35,112 | 36,315 | 37,47 | 37,795 | 36,745 | 145,967 | 29,193 |
| ຜົນຜະລິດເຂົ້ານາປີ | ໂຕນ | | 105,941 | 142,345 | 98,747 | 142,238 | 134,749 | 624,020 | 124,804 |
| ເນື້ອທີນາແຊງ | ຮຕ | | 1,637 | 1,623 | 689 | 1,357 | 1,851 | 7,157 | 1,431 |
| ຜົນຜະລິດເຂົ້ານາແຊງ | ໂຕນ | | 6,693 | 7,621 | 2,957 | 5,904 | 6,625 | 29,800 | 5,960 |
| ເນື້ອທີໄຮ່ໝູນວຽນ | ຮຕ | | 2,444 | 2,263 | 1,812 | 1,313 | 1,555 | 9,387 | 1,877 |
| ຜົນຜະລິດເຂົ້າໄຮ່ | ໂຕນ | | 4,325 | 3,744 | 2,961 | 2,011 | 1,884 | 14,925 | 2,985 |
| ຜົນຜະລິດລວມ | ໂຕນ | 785,000 | 116,959 | 153,710 | 104,665 | 150,153 | 143,258 | 668,745 | 133,749 |
| **ສະເລ່ຍ/ຄົນ/ປີ** | **ກິໂລ** | **457** | **405** | **519** | **340** | **478** | **456** | **2,189** | **440** |

**ແຫຼ່ງຂໍ້ມູນ: ພະແນກກະສິກຳ-ປ່າໄມ້**

**- ການປູກພືດສະບຽງ:** ການຜະລິດພືດຜັກຕ່າງໆ ເພື່ອຕອບສະໜອງໃຫ້ແກ່ການບໍລິໂພກ ພາຍໃນ ສະເລ່ຍ 57.241 ໂຕນ/ປີ, ທຽບໃສ່ແຜນບັນລຸໄດ້ 155% (ມີລາຍລະອຽດ ແຕ່ລະພືດ), ປີ 2020 ຜະລິດສາລີຫວານໄດ້ 5.915 ໂຕນ; ຜະລິດເຜືອກມັນຕ່າງໆ (ບໍ່ນັບມັນຕົ້ນ) ບັນລຸໄດ້ 8.811 ໂຕນ, ຜົນຜະລິດໄມ້ໃຫ້ໝາກ 1.870 ໂຕນ ແລະ ປະເພດພືດສະບຽງອື່ນໆ ໄດ້ 40.645 ໂຕນ.

**- ການລ້ຽງສັດ ແລະ ການປະມົງ:** ໄດ້ມີການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ, ໄດ້ມີການຫັນປ່ຽນລະບົບ, ຮູບແບບ ແລະ ວິທີການລ້ຽງ, ຈາກການລ້ຽງແບບທຳມະຊາດຫັນໄປສູ່ການລ້ຽງແບບເຕັກນິກວິທະຍາສາດ ແລະ ຫັນເປັນກຸ່ມ, ເປັນຟາມຫຼາຍຂຶ້ນ **ເປັນຕົ້ນ:** ສັດ, ປາ ແລະ ໄຂ່ ມີການຂະຫຍາຍຕົວ ສະເລ່ຍ 3,6% **ໃນນີ້:** ຄວາຍ 35.990 ໂຕ ເທົ່າກັບ 97,19% ຂອງແຜນ (ແຜນ 36.000 ໂຕ), ງົວ 90.447 ໂຕ ເທົ່າກັບ 102,39% ຂອງແຜນ (ແຜນ 90.438 ໂຕ), ໝູ 87.078 ໂຕ ເທົ່າກັບ 89,93% ຂອງແຜນ (ແຜນ 87.430 ໂຕ), ແບ້ 28.143ໂຕ ເທົ່າກັບ 100,3% ຂອງແຜນ (ແຜນ 28.139 ໂຕ), ສັດປີກ 973.153 ໂຕ ເທົ່າກັບ 95,02% ຂອງແຜນ (ແຜນ 974.608 ໂຕ), ຜະລິດປາກະຊັງໄດ້ 2.347 ໂຕນ ເທົ່າກັບ 109,51% ຂອງແຜນ (ແຜນ 2.146 ໂຕນ), ປາລ້ຽງໃນໜອງ ໄດ້ 4.744 ໂຕນ ເທົ່າກັບ 109% ຂອງແຜນ (ແຜນ 4.352 ໂຕນ), ຜົນຜະລິດປາທຳມະຊາດໄດ້ 1.840 ໂຕນ ທຽບໃສ່ປີ 2019 ເພີ່ມຂຶ້ນ 41% (ຜົນຜະລິດປາທຳມະຊາດ ປີ 2019 ໄດ້ 1.298 ໂຕນ), ຜະລິດໄຂ່ໄດ້ 1.050 ໂຕນ ເທົ່າກັບ 76,42% ຂອງແຜນ (ແຜນ 1.333,61ໂຕນ), ສາມາດສັກຢາວັກຊີນປ້ອງກັນພະຍາດສັດເພີ່ມຂຶ້ນແຕ່ລະປີກວມເອົາ: ງົວ 75,83%, ຄວາຍ 60,32%, ໝູ 30,27%, ສັດປີກ 32,15% ຂອງຈຳນວນຝູງສັດທັງໝົດ; ການສະໜອງຊີ້ນ, ປາ ແລະ ໄຂ່ ເພື່ອບໍລິໂພກ ໄດ້ທັງໝົດ 16.303 ໂຕນ, ໂດຍສະເລ່ຍ 52,4 ກິໂລ/ຄົນ/ປີ ຂອງແຜນ (ແຜນ 16.711 ໂຕ່ນ ສະເລ່ຍ 55 ກິໂລ/ຄົນ/ປີ).

➢ **ດ້ານການຜະລິດສິນຄ້າ.**

ການຜະລິດພືດເປັນສິນຄ້າໃນປີ 2020 ສາມາດຜະລິດໄດ້ທັງໝົດ 291.907 ໂຕນ ເທົ່າກັບ 120,84% ຂອງແຜນການ, ໂດຍສະເພາະການສົ່ງອອກເຂົ້າ ສ່ວນໃຫຍ່ແມ່ນການຄ້າຕາມຊາຍແດນສະເລ່ຍປີໜຶ່ງປະມານ 5.110 ໂຕນ, ລາຍຮັບສະເລ່ຍ 15-20 ລ້ານກີບ/ເຮັກຕາ/ປີ, ມັນຕົ້ນໄດ້ 175.486 ໂຕນ, ລາຍຮັບສະເລ່ຍ 20-25 ລ້ານກີບ/ເຮັກຕາ/ປີ, ຢາສູບ 591 ໂຕນ, ລາຍຮັບສະເລ່ຍ 35-40 ລ້ານກີບ/ເຮັກຕາ/ປີ, ສາລີເປັນອາຫານສັດ 4.571 ໂຕນ, ລາຍຮັບສະເລ່ຍ 20-25 ລ້ານກີບ/ເຮັກຕາ, ໝາກກ້ວຍ 51.470 ໂຕນ, ລາຍຮັບສະເລ່ຍ 50-

55 ລ້ານກີບ/ເຮັກຕາ, ຜັກສະອາດ 26.487 ໂຕນ, ລາຍຮັບ 40-45 ລ້ານກີບ/ເຮັກຕາ, ໝາກນັດ 13.416 ໂຕນ, ລາຍຮັບ 18-20 ລ້ານກີບ/ເຮັກຕາ, ໝາກຫຸ່ງ 2.942 ໂຕນ, ລາຍຮັບ 34-36 ລ້ານກີບ/ເຮັກຕາ, ອ້ອຍ 16.944 ໂຕນ, ລາຍຮັບ 30-32 ລ້ານກີບ/ເຮັກຕາ; ນອກນັ້ນ, ຍັງມີກຸ່ມປູກຜັກອິນຊີ ບ້ານຫົວນາ ເມືອງບໍລິຄັນ ຈຳນວນ 7 ຄອບຄົວ ມີເນື້ອທີ່ 8.800 ຕາແມັດ, ໄດ້ຮັບການຢັ້ງຢືນເປັນກຸ່ມປູກ ໃນປີ 2018 ແລະ 2019 ຢ່າງເປັນທາງການ, ປີ 2020 ມີການປູກຢູ່ໃນເຮືອນຮົ່ມ ຈຳນວນ 35 ເຮືອນຮົ່ມ ຄາດຄະເນສ້າງລາຍໄດ້ 96.500.000 ກີບ, ການປູກຢາງພາລາກໍ່ໄດ້ເພີ່ມຂຶ້ນ ໃນປີ 2020 ມີເນື້ອທີ່ 16.930,04 ເຮັກຕາ, ກີດແລ້ວ 10.731,25 ເຮັກຕາ, ລວມຜົນຜະລິດ 27.472 ໂຕນ (ຢາງກ້ອນ), ລາຄາສະເລ່ຍ 5.400 ກີບ/1 ກິໂລ ມູນຄ່າ 148,34 ຕື້ກວ່າກີບ.

ການລ້ຽງສັດ ແລະ ການປະມົງເປັນສິນຄ້າຮອດປີ 2020 ເຫັນວ່າຂະຫຍາຍຕົວ ແລະ ມີປັດໄຈໃໝ່ເກີດຂຶ້ນຫຼາຍ ໂດຍສະເພາະການນຳໃຊ້ແນວພັນປັບປຸງ ແລະ ກ້າວໄປສູ່ການລ້ຽງແບບເປັນກຸ່ມ, ເປັນຟາມເພີ່ມຂຶ້ນຢູ່ແຕ່ລະບ້ານ ເຊິ່ງສະແດງອອກໃນສະຖິຕິປີ 2020 ການລ້ຽງສັດໃຫຍ່ ງົວ, ຄວາຍ ມີ 21 ຟາມ, 174 ກຸ່ມ, ມີງົວ 12.990 ໂຕ, ຄວາຍທັງໝົດ 7.800 ໂຕ; ກຸ່ມລ້ຽງແບ້ ມີ 38 ກຸ່ມ ມີແບ້ທັງໝົດ 11.158 ໂຕ; ກຸ່ມ ແລະ ຟາມລ້ຽງໝູ 23 ຟາມ, ມີໝູ 29.325 ໂຕ ແລະ ຟາມລ້ຽງສັດປີກ ມີ 8 ຟາມ ຈຳນວນ 218.070 ໂຕ ແລະ ການລ້ຽງປາ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ການລ້ຽງໃສ່ກະຊັງ ແລະ ການລ້ຽງປາໃນໜອງ ໃນທົ່ວແຂວງ ມີໜອງປາລ້ຽງ 1.667 ໜອງ, ລ້ຽງໃສ່ກະຊັງ 366 ກະຊັງ ສາມາດສະໜອງຊີ້ນປາໃຫ້ແກ່ສັງຄົມໄດ້ ປະມານ 3.874,2 ໂຕນ ເພີ່ມຂຶ້ນ 7,12%/ປີ, ການລ້ຽງສັດ ແລະ ປາ ຂາຍເປັນສິນຄ້າ ເປັນມູນຄ່າ 440.733.332.000 ກີບ.

- ***ການພັດທະນາໂຄງລ່າງ ແລະ ວັດຖຸເຕັກນິກຕ່າງໆ.***

ໄດ້ສຸມໃສ່ຟື້ນຟູ, ກໍ່ສ້າງ ແລະ ສ້ອມແປງຊົນລະປະທານ ເພື່ອຮັບປະກັນການສະໜອງນ້ຳຊົນລະປະທານໃຫ້ແກ່ການຜະລິດກະສິກຳ ທົ່ວແຂວງມີລະບົບຊົນລະປະທານທັງໝົດ 349 ແຫ່ງ ໃນນັ້ນມີ: ຈັກສູບນ້ຳ 34 ແຫ່ງ, ອ່າງເກັບນ້ຳ 7 ແຫ່ງ, ຝາຍນ້ຳລົ້ນ 40 ແຫ່ງ, ເຂື່ອນດິນ 2 ແຫ່ງ, ຝາຍກວາຍຫີນ 14 ແຫ່ງ, ຊົນລະປະທານໃຊ້ດ້ວຍທໍ່ມີ 84 ແຫ່ງ, ຝາຍສັນບາງ 7 ແຫ່ງ, ຝາຍສັນມົນ 1 ແຫ່ງ, ຝາຍຫີນກໍ່ 5 ແຫ່ງ, ຝາຍລາດ 150 ແຫ່ງ, ຝາຍດິນ ມີ 4 ແຫ່ງ ສາມາດສະໜອງນ້ຳໃຫ້ເນື້ອທີ່ໄດ້ 10.444 ເຮັກຕາ.

ນອກຈາກການປັບປຸງໂຄງລ່າງ, ວັດຖຸ-ເຕັກນິກແລ້ວ ຍັງຈັດຕັ້ງກຸ່ມຜະລິດໄດ້ 84 ກຸ່ມ ຄື: ປູກເຂົ້າເປັນສິນຄ້າ 26 ກຸ່ມ, ຜະລິດແນວພັນເຂົ້າ 7 ກຸ່ມ, ປັບປຸງຄຸນນະພາບເຂົ້າ 5 ກຸ່ມ, ປູກຜັກອິນຊີ 2 ກຸ່ມ, ມັນຕົ້ນ 16 ກຸ່ມ, ປູກພືດຜັກ 9 ກຸ່ມ, ປູກໝາກກ້ວຍ 5 ກຸ່ມ, ປູກໝາກນັດ 3 ກຸ່ມ, ໝາກເດືອຍ 2 ກຸ່ມ, ປູກອ້ອຍ 2 ກຸ່ມ, ປູກສາລີ 1 ກຸ່ມ ແລະ ປູກຢາສູບ 6 ກຸ່ມ, ຊຸກຍູ້ ແລະ ສົ່ງເສີມການສັກຢາປ້ອງກັນພະຍາດສັດລ້ຽງຂອງປະຊາຊົນໄດ້ 50% ຂອງຝູງສັດທັງໝົດ, ຕ້ານ ແລະ ສະກັດກັ້ນການລະບາດຂອງພະຍາດໝູອາຟຣິກກາ ໄດ້ຢ່າງທັນການ, ສົ່ງເສີມການລ້ຽງສັດເພື່ອຮັບປະກັນດ້ານບໍລິໂພກພາຍໃນ ເປັນຕົ້ນ: ຊີ້ນ, ປາ, ໄຂ່ ໄດ້ 47,5 ກິໂລ/ຄົນ/ປີ (ແຜນການ 55 ກິໂລ/ຄົນ/ປີ).

- ***ວຽກປ່າໄມ້ ແລະ ຟື້ນຟູປ່າ:*** ເອົາໃຈໃສ່ປົກປັກຮັກສາ ແລະ ຟື້ນຟູປ່າໄມ້, ຄຸ້ມຄອງປ່າໄມ້ໃຫ້ເຂົ້າສູ່ລະບຽບຫຼັກການເທື່ອລະກ້າວ, ປະຈຸບັນການປົກຫຸ້ມຂອງປ່າໄມ້ 70,4 %, ໄດ້ສຸມໃສ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງປ່າໄມ້ຕາມລະບົບ 3 ປະເພດປ່າຄື: (ປ່າຜະລິດ) ມີເນື້ອທີ່ 181.182 ເຮັກຕາ, ກວມເອົາ 56 ບ້ານ, ເນື້ອທີ່ປ່າປ້ອງກັນ ມີ 617,094 ເຮັກຕາ ກວມເອົາ 47 ບ້ານ, ເນື້ອທີ່ປ່າສະຫງວນ ມີ 368.517 ເຮັກຕາ ກວມເອົາ 140 ບ້ານ (ມີ 2 ບ້ານ ທີ່ນອນໃນເຂດປ່າ ແລະ 138 ບ້ານ ຢູ່ອ້ອມຂ້າງ) ແລະ ເນື້ອທີ່ນອກສາມປະເພດປ່າ 379.737 ເຮັກຕາ; ເກັບແກ່ນໄມ້ໄດ້ 7.293 ກິໂລ ເທົ່າກັບ 91,16% ທຽບໃສ່ແຜນການ (8.000 ກິໂລ); ກ້າເບ້ຍໄມ້ໄດ້ 5.897.830 ເບ້ຍ ເທົ່າກັບ 107,23% ທຽບໃສ່ແຜນການ (5.500.000 ເບ້ຍ); ປູກໄມ້ ປະຕິບັດໄດ້ 3.905,17 ເຮັກຕາ ເທົ່າກັບ 78,10% ທຽບໃສ່ແຜນການ (5.000 ເຮັກຕາ); ຂຶ້ນທະບຽນສວນປູກ ປະຕິບັດໄດ້ 3.818 ເຮັກຕາ ເທົ່າກັບ 58,74% ທຽບໃສ່ແຜນການ (6.500 ເຮັກຕາ); ຟື້ນຟູປ່າແບບທຳມະຊາດ ປະຕິບັດໄດ້ 94.615,90 ເຮັກຕາ ເທົ່າກັບ 91,86%, ທຽບໃສ່ແຜນການ (103.000 ເຮັກຕາ) ຟື້ນຟູປ່າໄມ້ດ້ວຍການປູກເສີມກ້ອງປ່າໄດ້ 833,80 ເຮັກຕາ.

**3.1.1.4 ດ້ານພະລັງງານ-ບໍ່ແຮ່.**

- ໄດ້ຂະຫຍາຍຕາຄ່າຍໄຟຟ້າລົງສູ່ເຂດການພະລິດ ແລະ ຮາກຖານບ້ານໃນຊົນນະບົດ ປີ 2020 ມີຫຼັງຄາເຮືອນກວມ 95%, ບ້ານຊົມໃຊ້ໄຟຟ້າຖາວອນ 284 ບ້ານ ເທົ່າກັບ 100% ຂອງບ້ານທັງໝົດ, ບ້ານສຸດທ້າຍແມ່ນ

ບ້ານສິບເຕີ່ງ ເມືອງໄຊຈຳພອນ ແລະ ບ້ານນ້ຳກູ້ ເມືອງວຽງທອງ (ວັນທີ 18 ມິຖຸນາ 2020).

- ຄຸ້ມຄອງ, ຕິດຕາມ, ຊຸກຍູ້ຈັດຕັ້ງປະຕິບັດການກໍ່ສ້າງ ໂຄງການເຂື່ອນໄຟຟ້າຕ່າງໆ ໄດ້ສຳເລັດ ເຊັ່ນ: ນ້ຳມັງ 1 (ເມືອງທ່າພະບາດ) ໄດ້ເປີດຂາຍໄຟໃນປີ 2017, ນ້ຳງຽບ 1 (ເມືອງບໍລິຄັນ) ໄດ້ເປີດຂາຍໄຟຟ້າໃນ (5 ກັນຍາ 2019), ນ້ຳຊໍ້ (ເມືອງວຽງທອງ) ໄດ້ເປີດຂາຍໄຟຟ້າ (1 ມັງກອນ 2019), ນ້ຳເທີນ 1 ຮອດ 2020 ສຳເລັດ 69,23% ຄາດວ່າເປີດຂາຍໄຟຟ້າຕົ້ນປີ 2022, ພ້ອມນັ້ນກໍ່ໄດ້ເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້ ໂຄງການທີ່ໄດ້ເຊັນສັນຍາສຶກສາຄວາມເປັນໄປໄດ້ (MOU) ພາຍໃນແຂວງ ຂັ້ນສູນກາງຄຸ້ມຄອງຈຳນວນ 10 ໂຄງການ ແລະ ໂຄງການພັດທະນາພະລັງງານ ຂັ້ນແຂວງຄຸ້ມຄອງຈຳນວນ 29 ໂຄງການ ໃນນັ້ນ ຢູ່ໃນຂັ້ນຕອນສັນຍາດຳເນີນງານ 6 ໂຄງການ ແລະ ໂຄງການທີ່ໄດ້ຜ່ານການຮັບຮອງບົດວິພາກ 4 ໂຄງການ.

- ດ້ານບໍ່ແຮ່ ເປັນເຈົ້າການໃນການຊຸກຍູ້ ຕິດຕາມ ແລະ ກວດກາ ບັນດາບໍລິສັດທີ່ໄດ້ເຊັນສັນຍາກັບລັດຖະບານອະນຸຍາດໃຫ້ຂຸດຄົ້ນ ແລະ ສຳຫຼວດ ຢູ່ພາຍໃນແຂວງ ມີ 2 ບໍລິສັດ ມີເນື້ອທີທັງໝົດ 1.884 ກິໂລຕາແມັດ, ໃນນັ້ນ: ເນື້ອທີ່ຂຸດຄົ້ນ 1.464,23 ກິໂລຕາແມັດ ກວມເອົາ 44 ບ້ານ ໃນ 4 ເມືອງ, ( ເມືອງບໍລິຄັນ, ຄຳເກີດ, ວຽງທອງ, ໄຊຈຳພອນ), ເນື້ອທີ່ສຳຫຼວດມີແຮ່ 419,77 ກິໂລຕາແມັດ ກວມເອົາ 9 ບ້ານ ໃນ 2 ເມືອງ (ເມືອງບໍລິຄັນ ແລະ ປາກກະດິງ), ຈຳນວນແຮ່ທາດທີ່ຖືກເກັບກຳຂໍ້ມູນ ຂຸດຄົ້ນ ແລະ ສຳຫຼວດ ຢູ່ພາຍໃນແຂວງ ມີທັງໝົດ 9 ແຮ່ທາດຄື: ຄຳ, ເງິນ, ທອງ, ເຫຼັກ, ກົ່ວ, ນິແກນ, ໂກບານ, ເກືອໂປຕັດ, ແກ້ວນາງຝານ.

- ການລົງທຶນດ້ານກິດຈະການບໍ່ແຮ່ມີ 73 ບໍລິສັດ 113 ກິດຈະການ ມີເນື້ອທີ່ທັງໝົດ 14.027,2 ເຮັກຕາ ຂັ້ນກະຊວງອະນຸຍາດ 4 ບໍລິສັດ 4 ກິດຈະການ ມີເນື້ອທີ່ 13.724 ເຮັກຕາ, ຂັ້ນແຂວງມີ 46 ບໍລິສັດ, 87 ກິດຈະການ, ມີເນື້ອທີ່ 289,2 ເຮັກຕາ; ຂັ້ນເມືອງມີ 23 ບໍລິສັດ, 23 ກິດຈະການ, ມີເນື້ອທີ່ 14 ເຮັກຕາ, ໃນນັ້ນ; ກິດຈະການກະກຽມກໍ່ສ້າງຕັ້ງໂຮງງານຂົບປູນຂາວ 34 ບໍລິສັດ, 34 ກິດຈະການ, ມີເນື້ອທີ່ 118,5 ເຮັກຕາ.

- ການຂຸດຄົ້ນແຮ່ທາດ ຂອງບໍລິສັດບໍ່ຄຳ-ຄຳເກີດແສນອຸດົມ ນັບແຕ່ວັນທີ 21 ມັງກອນ 2019 - 30 ພະຈິກ2019 ປະຕິບັດໄດ້ໂລຫະຄຳແທ່ງ 732,50 ກິໂລກຼາມ, ຈຳໜ່າຍ 123,43 ກິໂລກຼາມ ມູນຄ່າ 4.761.559,11 ໂດລາ.

- ບໍລິສັດ ກາວິໂກ ບໍ່ແຮ່ລາວຈຳກັດ ຍັງຢູ່ຂັ້ນຕອນການສຶກສາຄວາມເປັນໄປໄດ້ ດ້ານເສດຖະກິດການເງິນຂອງໂຄງການ.

**3.1.1.5 ດ້ານອຸດສາຫະກຳ-ການຄ້າ.**

➢ **ວຽກອຸດສາຫະກຳ.**

ບັນດາຂະແໜງການກ່ຽວຂ້ອງ ໄດ້ເປັນເຈົ້າການຊຸກຍູ້ ສົ່ງເສີມເຮັດໃຫ້ວຽກງານດັ່ງກ່າວຂະຫຍາຍຕົວໄປໃນຈັງຫວະທີ່ດີ ເຊັ່ນ: ໂຮງງານປະກອບສິ້ນສ່ວນພາຫະນະລົດຈັດ ຍີຫໍ່ ຫາວໂບ້, ໂຮງງານປຸງແຕ່ງຜະລິດຕະພັນວັດສະດຸກໍ່ສ້າງ (ຫຼອມເຫຼັກ, ດິນຈີ່, ດິນບ໋ອກ, ເປຕົ່ງອັດແຮງ, ເຟີນີເຈີໄມ້, ເຫຼັກໂຄງຫຼັງຄາ, ແຜ່ນອາລູຊິງ, ເຈ້ຍ ...), ໂຮງງານປຸງແຕ່ງຜະລິດຕະພັນກະສິກຳ (ຢາງພາລາ, ແປ້ງມັນຕົ້ນ ...) ຮອດປີ 2020 ທົ່ວແຂວງບໍລິຄຳໄຊ ມີໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງທັງໝົດ 2.255 ແຫ່ງ, ຂະໜາດໃຫຍ່ 45 ແຫ່ງ, ຂະໜາດກາງ 43 ແຫ່ງ, ຂະໜາດນ້ອຍ 2.167 ແຫ່ງ, ວຽກງານດັດສົມໂຮງງານປຸງແຕ່ງໄມ້ໃນເມື່ອກ່ອນມີ 84 ໂຮງງານ ຜ່ານການດັດສົມຕົວຈິງຍັງເຫຼືອ 61 ໂຮງງານ, ຢຸດເຊົາດຳເນີນກິດຈະການ ຈຳນວນ 27 ໂຮງງານ, ປັບປຸງສຳເລັດ ຈຳນວນ 26 ໂຮງງານ, ຍົກຍ້າຍອອກຈາກ 3 ປະເພດປ່າ ແລະ ຊຸມຊົນ ຈຳນວນ 10 ໂຮງງານ, ໃຫ້ສືບຕໍ່ປັບປຸງ ຈຳນວນ 23 ໂຮງງານ, ຍັງບໍ່ທັນໄດ້ປະເມີນຈຳນວນ 2 ໂຮງງານ; ຜ່ານມາສາມາດອອກອະນຸຍາດສ້າງຕັ້ງ ແລະ ດຳເນີນກິດຈະການ ຈຳນວນ 68 ໂຮງງານ, ຕໍ່ອະນຸຍາດດຳເນີນກິດຈະການໂຮງງານ ຈຳນວນ 145 ໂຮງງານ; ວຽກຊຸກຍູ້ສົ່ງເສີມ ແລະ ປັບປຸງໂຮງງານນ້ຳດື່ມ ທົ່ວແຂວງມີໂຮງງານນ້ຳດື່ມທັງໝົດ 48 ໂຮງງານ, ໄດ້ຮັບໃບຢັ້ງຢືນ ອຢ" ຈຳນວນ 12 ໂຮງງານ, ເຫັນດີໃຫ້ຍົກຍ້າຍ ຈຳນວນ 3 ໂຮງງານ, ຢຸດເຊົາກິດຈະການ ຈຳນວນ 1 ໂຮງງານ, ໃຫ້ສືບຕໍ່ປັບປຸງ ຈຳນວນ 32 ໂຮງງານ.

➢ **ວຽກງານການຄ້າ.**

ໄດ້ເອົາໃຈໃສ່ປັບປຸງ ແລະ ຍົກລະດັບການບໍລິການຊື້-ຂາຍ ຢູ່ບັນດາຕະຫຼາດທີ່ມີແລ້ວໃຫ້ມີຄຸນນະພາບດີຂຶ້ນ ທົ່ວແຂວງ ມີຕະຫຼາດທັງໝົດ 30 ແຫ່ງ, ຕະຫຼາດໃຫຍ່ 1 ແຫ່ງ, ຕະຫຼາດກາງ 1 ແຫ່ງ, ຕະຫຼາດນ້ອຍ 9 ແຫ່ງ ແລະ ຕະຫຼາດຊຸມຊົນມີ 19 ແຫ່ງ, ປີ 2018 ໄດ້ຮັບຮອງເອົາຕະຫຼາດແສນອຸດົມ ເມືອງຄຳເກີດ ຂຶ້ນມາເປັນຕະຫຼາດ

ໃຫຍ່ ຕາມມາດຕະຖານ, ມີຈຸດແລກປ່ຽນຊື້-ຂາຍ ສິນຄ້າທັງໝົດ 5 ຈຸດ ທີ່ຈະເປັນໜໍ່ແໜງຂະຫຍາຍ ແລະ ກໍ່ສ້າງເປັນຕະຫຼາດໃນອານາຄົດ; ຕົວເລກຈໍລະຈອນສິນຄ້າຂາຍຍົກ ໃນປີ 2020 ຄາດວ່າປະຕິບັດໄດ້ 996 ຕື້ກີບ, ຂາຍຍ່ອຍ 1.092 ຕື້ກີບ.

**ຕາຕະລາງ 6: ສັງລວມສະຖິຕິຕະຫຼາດໄລຍະ 5 ປີ.**

**ຫົວໜ່ວຍ: ແຫ່ງ**

| ລ/ດ | ເນື້ອໃນ | ສະຖິຕິຕະຫຼາດໃນໄລຍະ 5 ປີຜ່ານມາ | | | | ໝາຍເຫດ |
|---|---|---|---|---|---|---|
| | | **2016** | **2017** | **2018** | **2019** | **2020** |
| 1 | ຕະຫຼາດໃຫຍ່ | 0 | 0 | 1 | 1 | 1 |
| 2 | ຕະຫຼາດກາງ | 2 | 2 | 1 | 1 | 1 |
| 3 | ຕະຫຼາດນ້ອຍ | 9 | 9 | 9 | 9 | 9 |
| 4 | ຕະຫຼາດນັດຊຸມຊົນ | 19 | 19 | 19 | 19 | 19 |
| 5 | ຈຸດແລກປ່ຽນຊື້-ຂາຍສິນຄ້າ | | | | 5 | 5 |
| **ລວມຕະຫຼາດ/ຈຸດຊື້-ຂາຍ** | | **30** | **30** | **30** | **30/5** | **30/5** |

**ແຫຼ່ງຂໍ້ມູນ: ພະແນກອຸດສາຫະກຳ ແລະ ການຄ້າແຂວງ**

ໄດ້ຂຶ້ນທະບຽນວິສາຫະກິດທົ່ວແຂວງ ຮອດປີ 2020 ປະຕິບັດໄດ້ ຈຳນວນ 6.125 ຫົວໜ່ວຍ ທຽບໃສ່ແຜນຫຼຸດ 13,29%, ທຶນຈົດທະບຽນ 49.720 ຕື້ກີບ.

- **ການສົ່ງອອກ:** ໃນ 4 ປີຜ່ານມາ ມີມູນຄ່າລວມທັງໝົດ 202,68 ລ້ານໂດລາສະຫະລັດ, ສະເລ່ຍ 50,67 ລ້ານໂດລາສະຫະລັດຕໍ່ປີ; ສະເພາະຂອງແຂວງ ມີມູນຄ່າ 15,45 ລ້ານໂດລາສະຫະລັດ (ຈາກ 12,88 ລ້ານໂດລາສະຫະລັດ ປີ 2016 ມາເປັນ 15,89 ລ້ານໂດລາສະຫະລັດ ແລະ ປີ 2020 ຄາດວ່າຈະມີມູນຄ່າ 20,40 ລ້ານໂດລາສະຫະລັດ); ສິນຄ້າສົ່ງອອກສ່ວນໃຫຍ່ແມ່ນ: ມັນຕົ້ນ, ຢາງພາລາ ແລະ ຜະລິດຕະພັນໄມ້.

- **ການນຳເຂົ້າ:** ໃນ 4 ປີຜ່ານມາ ມີມູນຄ່າລວມທັງໝົດ 1.741,37 ລ້ານໂດລາສະຫະລັດ (ຮັບໃຊ້ພາຍໃນແຂວງ 42,2 ລ້ານໂດລາສະຫະລັດ) ສະເລ່ຍ 10,55 ລ້ານໂດລາສະຫະລັດຕໍ່ປີ (ຈາກ 8,95 ລ້ານໂດລາສະຫະລັດ ປີ 2016 ມາເປັນ 9,56 ລ້ານໂດລາສະຫະລັດ ແລະ ປີ 2020 ຄາດວ່າຈະມີມູນຄ່າ 10,69 ລ້ານໂດລາສະຫະລັດ), ສິນຄ້ານຳເຂົ້າສ່ວນໃຫຍ່ແມ່ນ ເຄື່ອງວັດສະດຸກໍ່ສ້າງ, ພາຫະນະການຜະລິດ ແລະ ເຄື່ອງໄຟຟ້າ, ສິນຄ້າເພື່ອການຊົມໃຊ້ ເຊັ່ນ: ອາຫານ, ເຄື່ອງມືການຢາ ແລະ ຢາປົວພະຍາດ, ເສື້ອຜ້າ ແລະ ເຄື່ອງໃຊ້ສອຍ.

- **ດຸນການຄ້າ:** ໃນໄລຍະ 4 ປີຜ່ານມາ ດຸນການຄ້າ 19,63 ລ້ານໂດລາສະຫະລັດ, ສະເລ່ຍ 4,9 ລ້ານໂດລາສະຫະລັດຕໍ່ປີ (ຈາກ 3,93 ລ້ານໂດລາສະຫະລັດ ປີ 2016 ມາເກີນດຸນ 6,33 ລ້ານໂດລາສະຫະລັດ ປີ 2019, ສຳລັບປີ 2020 ຄາດວ່າຈະເກີນດຸນ 9,71 ລ້ານໂດລາສະຫະລັດ).

- **ສິນຄ້າຜ່ານແດນ:** ໃນ 4 ປີຜ່ານມາ ມີມູນຄ່າລວມທັງໝົດ 87,6 ລ້ານໂດລາສະຫະລັດ ສະເລ່ຍ 21,89 ລ້ານໂດລາສະຫະລັດຕໍ່ປີ (ຈາກ 37,35 ລ້ານໂດລາສະຫະລັດ ປີ 2016 ມາເປັນ 9,50 ລ້ານໂດລາສະຫະລັດ ໃນປີ 2019 ແລະ ປີ 2020 ຄາດວ່າຈະມີມູນຄ່າ 17,73 ລ້ານໂດລາສະຫະລັດ), ສິນຄ້າສ່ວນຫຼາຍແມ່ນ ໝາກໄມ້, ເຄື່ອງດື່ມຊູກຳລັງຈາກປະເທດໄທ ໄປ ປະເທດຫວຽດນາມ.

- **ວຽກຫັດຖະກຳ:** ຊຸກຍູ້ ສົ່ງເສີມພັດທະນາຫັດຖະກຳຕາມທ່າແຮງ ແລະ ມູນເຊື້ອຕາມທ່າແຮງທີ່ມີຂອງປະຊາຊົນບັນດາເຜົ່າຕາມຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດໃຫ້ມີຄຸນນະພາບດີຂຶ້ນ ເປັນຕົ້ນ: ແກະສະຫຼັກໄມ້, ຕ່ຳຫູກ-ທໍ່ໄໝ, ນ້ຳອ້ອຍກ້ອນ, ຈັກສານ, ຢາພື້ນເມືອງ; ສ້າງຫົວໜ່ວຍດັ່ງກ່າວໄດ້ຮັບກາໝາຍໜຶ່ງເມືອງ ໜຶ່ງຜະລິດຕະພັນ (ODOP) 10 ຫົວໜ່ວຍ.

**ຕາຕະລາງ 7: ສັງລວມ ການຄ້າຂາອອກ-ຂາເຂົ້າ ໄລຍະ 4 ປີ (2016-2019) (ລ້ານໂດລາ)**

| ປີ | ສິນຄ້າຂາອອກ | | ສິນຄ້ານຳເຂົ້າ | | ສິນຄ້າຜ່ານ | ດູນການຄ້າ |
|---|---|---|---|---|---|---|
| | ທັງໝົດ | ແຂວງ | ທັງໝົດ | ຮັບໃຊ້ແຂວງ | | |
| 2016 | 33.30 | 12.88 | 342.95 | 8.95 | 37.35 | 3.93 |
| 2017 | 28.52 | 10.16 | 432.18 | 10.85 | 23.73 | (0.69) |
| 2018 | 89.86 | 22.90 | 436.24 | 12.84 | 16.98 | 10.06 |
| 2019 | 49.69 | 15.89 | 318.93 | 9.56 | 9.50 | 6.33 |
| **ລວມ** | **202.68** | **61.83** | **1,741.37** | **42.2** | **87.6** | **19.63** |
| **ສະເລ່ຍຕໍ່ປີ** | **50.67** | **15.45** | **435.34** | **10.55** | **21.89** | **4.9** |
| **ຄາດຄະເນ 2020** | **56.88** | **20.40** | **376.69** | **10.69** | **17.73** | **9.71** |

**ແຫຼ່ງຂໍ້ມູນ: ພະແນກອຸດສາຫະກຳ ແລະ ການຄ້າແຂວງ**

### 3.1.1.6 ດ້ານໂຍທາທິການ ແລະ ຂົນສົ່ງ.

**- ວຽກຂົວ-ທາງ:** ສຸມໃສ່ກໍ່ສ້າງ ແລະ ສ້ອມແປງ ບູລະນະເສັ້ນທາງ ເຮັດໃຫ້ຫຼາຍບ້ານ ມີທາງເສັ້ນທາງເຂົ້າເຖິງ ແລະ ສາມາດທຽວ ໄດ້ຕະຫຼອດປີ; ທົ່ວແຂວງມີເສັ້ນທາງທັງໝົດ 231 ເສັ້ນ ຍາວ 2.337 ກມ ເພີ່ມຂຶ້ນ 11% ຫຼືເທົ່າກັບ 258 ກມ; ພົ້ນເດັ່ນ ຫລາຍບ້ານປະຊາຊົນໄດ້ເປັນເຈົ້າການປະກອບທຶນ ແລະ ແຮງງານ ເພື່ອກໍ່ສ້າງທາງເຂົ້າບ້ານຂອງຕົນ, ຫຼາຍເສັ້ນທາງໄດ້ກໍ່ສ້າງມີຄວາມຄືບໜ້າ ແລະ ສຳເລັດ **ຄື:** ກໍ່ສ້າງເສັ້ນທາງດິນແດງ ແຕ່ວຽງທອງ-ໄຊຈຳພອນ, ຍົກລະດັບປູຢາງ ທາງເລກ 21 ຊ່ວງຜາເມືອງ-ທາສີ; ປູຢາງທາງເລກ 11 ລຽບແຄມຂອງແຕ່ປາກກະດິງ-ຂອນຂວາງ; ສ້ອມແປງຍົກລະດັບປູຢາງ ທຶນທະນາຄານໂລກຈຳນວນ 1 ເສັ້ນ, ກໍ່ສ້າງຍົກລະດັບທາງປູອັດສະຟານປາກຊັນ 1 ຈຳນວນ 4 ເສັ້ນ, ໂຄງການກໍ່ສ້າງຂົວມິດຕະພາບແຫ່ງທີ່ 5 ປາກຊັນ-ບຶງການໄດ້ເລີ່ມຈັດຊື້-ຈັດຈ້າງ ແລະ ແກ້ໄຂຜົນກະທົບສິ່ງປຸກສ້າງ; ສຸມໃສ່ປ້ອງກັນແກ້ໄຂການເຊາະເຈື່ອນ ຕາມລຳແມ່ນ້ຳຂອງຈຳນວນ 5 ແຫ່ງ (ຄວາມຍາວ 1.021 ແມັດ), ຄຸ້ມຄອງກວດກາການປຸກສ້າງໃຫ້ສອດຄ່ອງກັບລະບຽບກົດໝາຍ, ລັດວິສາຫະກິດກໍ່ສ້າງຂົວທາງ ແລະ ຊົນລະປະທານແຂວງ ຮັບເໝົາກໍ່ສ້າງສ້ອມແປງທາງ ຈຳນວນ 18 ໂຄງການ ສ້າງລາຍຮັບໄດ້ 47,1 ຕື້ກີບ.

ປະຊາຊົນໄດ້ເປັນເຈົ້າການປະກອບສ່ວນໃນການສ້າງຂົວ ແລະ ທາງຊອຍ ພາຍໃນບ້ານຂອງບັນດາເມືອງຄືເມືອງທ່າພະບາດ ທາງດິນແດງ 14,6 ກິໂລແມັດ ມູນຄ່າ 291,98 ລ້ານກີບ, ທາງເບຕົງ 6,56 ກິໂລແມັດ ມູນຄ່າ 1,8 ຕື້ກີບ; ເມືອງຄຳເກີດ ທາງດິນແດງ 9,2 ກິໂລແມັດ ມູນຄ່າ 394,90 ລ້ານກີບ, ທາງເບຕົງ 893 ແມັດ ມູນຄ່າ 1,09 ຕື້ກີບ, ຂົວເບເລສອງແຫ່ງຍາວ 71 ແມັດ ມູນຄ່າ 796,32 ລ້ານກີບ; ເມືອງປາກກະດິງ ທາງເບຕົງ 4,5 ກິໂລແມັດ ມູນຄ່າ 750,00 ລ້ານກີບ, ທາງປູຫີນຄົບ 1,5 ກິໂລແມັດ ມູນຄ່າ 180 ລ້ານກີບ, ຂົວໄມ້ສອງແຫ່ງ ຍາວ 35 ແມັດ ມູນຄ່າ 65 ລ້ານກີບ.

ໄດ້ສຸມທຶນຮອນທັງພາຍໃນ ແລະ ຍາດແຍ່ງການຊ່ວຍເຫຼືອຈາກຕ່າງປະເທດ ເຂົ້າໃນການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນດ່ານສາກົນປາກຊັນ, ຫຼັງວັດສີມຸງຄຸນ, ຫ້ອງວ່າການປົກຄອງເມືອງໄຊຈຳພອນຊ່ວງ 1 ແລະ ບ້ານແກ້ງສະດອກ ໄດ້ທັງໝົດ 1,02 ກິໂລແມັດ; ນອກນີ້ ຍັງໄດ້ກໍ່ສ້າງປ້ອງກັນຕະຝັ່ງແຄມຂອງບ້ານທ່າໂພນສັນຍາວ 700 ແມັດ, ປະຕິບັດໄດ້ 48%, ດ່ານສາກົນ ປາກຊັນ-ຫ້ວຍສຽດ 363 ແມັດ ຈັດຕັ້ງປະຕິບັດໄດ້ 21%, ສົ້ນຂົວນ້ຳຊັນຫາ ຫຼັງວັດສີມຸງຄຸນ 500 ແມັດ ປະຕິບັດໄດ້ປະມານ 50%, ຫ້ອງການປົກຄອງເມືອງໄຊຈຳພອນ ຊ່ວງ 2 ຍາວ 100 ແມັດ ປະຕິບັດໄດ້ 10%.

**- ວຽກງານຄຸ້ມຄອງພາຫະນະ ແລະ ການຂົນສົ່ງ.**

ການຂົນສົ່ງສິນຄ້າ ແລະ ໂດຍສານທາງບົກ, ທາງນ້ຳ ໄດ້ຫັນເຂົ້າສູ່ລະບຽບກົດໝາຍຢ່າງເຂັ້ມງວດ, ບໍລິມາດຂົນສົ່ງມີມູນຄ່າເພີ່ມຂຶ້ນໃນແຕ່ລະປີ **ເຊັ່ນ:** ບໍລິມາດຂົນສົ່ງສິນຄ້າປະຕິບັດໄດ້ 4.655 ພັນໂຕນ ເທົ່າກັບ 93%; ບໍລິມາດຂົນສົ່ງໂດຍສານປະຕິບັດໄດ້ 4.719 ພັນເທື່ອຄົນ ເທົ່າກັບ 52% ຂອງແຜນການ, ບໍລິມາດຈໍລະ

ຈອນສິນຄ້າປະຕິບັດໄດ້ 418.642 ໂຕນຕໍ່ກິໂລແມັດ ຫຼຸດແຜນ 6%, ທຸກເມືອງມີສະຖານີລົດໂດຍສານ; ທົ່ວແຂວງມີຈຸດບໍລິການເຮືອບັກ 1 ແຫ່ງ, ຈຸດດ່ານສາກົນ 2 ແຫ່ງ ມີລົດມານຳໃຊ້ການບໍລິການຜ່ານ: ເຂົ້າ 128.017 ເທື່ອຄັນ, ສະເລ່ຍ 25.603 ເທື່ອຄັນຕໍ່ປີ; ອອກ 124.660 ເທື່ອຄັນ ສະເລ່ຍ 24.932 ເທື່ອຄັນຕໍ່ປີ; ໄດ້ເອົາໃຈໃສ່ຄຸ້ມຄອງ, ກວດກາການຂັບຂີ່ພາຫະນະປະເພດຕ່າງໆ ໃຫ້ຖືກຕາມລະບຽບກົດໝາຍ, ຂຶ້ນທະບຽນພາຫະນະປະເພດຕ່າງໆ ໄດ້ 7.434 ຄັນ, ສະເລ່ຍ 1.858 ຄັນຕໍ່ປີ ໃນນີ້: ລົດຈັກ 5.921 ຄັນ, ລົດສີ່ລໍ້ 1.128 ຄັນ, ລົດບັນທຸກ-ໂດຍສານ 373 ຄັນ, ກວດກາເຕັກນິກພາຫະນະໄດ້ທັງໝົດ 11.812 ຄັນ ໃນນີ້: ລົດຈັກ 3.881 ຄັນ, ລົດ 3 ລໍ້-4 ລໍ້ 6.252ຄັນ, ລົດບັນທຸກ-ໂດຍສານ 531 ຄັນ ແລະ ອອກໃບອະນຸຍາດຂັບຂີ່ 3.413 ໃບ ສະເລ່ຍ 853 ໃບຕໍ່ປີ; ໄດ້ປັບປຸງສະມາຄົມໂດຍສານແຂວງ ມາເປັນວິສາຫະກິດລວມໝູ່ບໍລິການຄິວລົດໂດຍສານ, ຕິດຕາມກວດການໍ້າໜັກລົດຂົນສົ່ງສິນຄ້າເປັນປົກກະຕິ, ອອກທະບຽນລົດແບບລະບົບອອນລາຍທັນສະໄໝ.

**- ວຽກງານເຄຫາ, ຜັງເມືອງ ແລະ ນໍ້າປະປາ.**

ຄຸ້ມຄອງການກໍ່ສ້າງເຄຫາສະຖານ, ສິ່ງປຸກສ້າງຕ່າງໆໃຫ້ຖືກຕ້ອງຕາມລະບຽບກົດໝາຍ; ຕິດຕາມ, ກວດກາ ແລະ ຊຸກຍູ້ບັນດາໂຄງການກໍ່ສ້າງສຳນັກງານດ້ວຍທຶນຂອງລັດຢ່າງເປັນປົກກະຕິ; ໄດ້ເອົາໃຈໃສ່ຂະຫຍາຍ ແລະ ປັບປຸງລະບົບນໍ້າປະປາ ຈຳນວນ 9 ແຫ່ງ, ສາມາດສະໜອງນໍ້າປະປາໄດ້ 11.005.928 ແມັດກ້ອນ ເທົ່າກັບ 75% ຂອງແຜນການ, ສະເລ່ຍ 2.201.185 ແມັດກ້ອນ/ປີ, ສ້າງລາຍຮັບຈາກການບໍລິການ ນໍ້າປະປາ ໄດ້ 54,2 ຕື້ກີບ, ມອບພັນທະໃຫ້ລັດໄດ້ 5 ຕື້ກີບ, ພິເສດແມ່ນການກໍ່ສ້າງນໍ້າປະປາ ເມືອງໄຊຈຳພອນ ສຳເລັດແລ້ວ 60%, ນອກນັ້ນ ໄດ້ຕິດຕາມການກໍ່ສ້າງເຄຫາສະຖານ ຂອງໂຄງການລົງທຶນພາກເອກະຊົນທີ່ໄດ້ຮັບອະນຸມັດຈາກແຂວງ.

### 3.1.2 ຮັບປະກັນຄວາມສອດຄ່ອງ ແລະ ກົມກຽວລະຫວ່າງຄວາມສາມາດສະໜອງແຫຼ່ງທຶນກັບການວາງແຜນພັດທະນາ.

ການລົງທຶນທັງໝົດພາຍໃນແຂວງໃນໄລຍະ 5 ປີຜ່ານມາ ປະຕິບັດໄດ້ 7.644,44 ຕື້ກີບ, ເທົ່າກັບ 87,81% ຂອງແຜນ (ແຜນການ 8.704,83 ຕື້ກີບ) ເທົ່າກັບ 28,6% ຂອງລວມຍອດຜະລິດຕະພັນພາຍໃນ GPP 5 ປີ, **ໃນນີ້:**

- ການລົງທຶນຈາກງົບປະມານຂອງລັດ ປະຕິບັດໄດ້ 490,87 ຕື້ກີບ, ເທົ່າກັບ 56,39% ຂອງແຜນການ ແລະ ເທົ່າກັບ 6,42% ຂອງການລົງທຶນທັງໝົດ.

- ການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ປະຕິບັດໄດ້ 5.263,52 ຕື້ກີບ, ເທົ່າກັບ 132,34% ຂອງແຜນການ ແລະ ເທົ່າກັບ 68,85% ຂອງການລົງທຶນທັງໝົດ.

- ການລົງທຶນຈາກການຊ່ວຍເຫຼືອທາງການ ເພື່ອການພັດທະນາ (ODA) ປະຕິບັດໄດ້ 261,17 ຕື້ກີບ, ເທົ່າກັບ 27,27% ຂອງແຜນການ ແລະ ເທົ່າກັບ 3,42% ຂອງການລົງທຶນທັງໝົດ.

- ການລົງທຶນຈາກລະບົບການເງິນ-ເງິນຕາ ຄາດວ່າຈະປະຕິບັດໄດ້ 1.628,88 ຕື້ກີບ ເທົ່າກັບ 72,22% ຂອງແຜນການ ແລະ ເທົ່າກັບ 21,31% ຂອງການລົງທຶນທັງໝົດ.

**ຕາຕະລາງ 8: ການລົງທຶນທັງໝົດ 5 ປີ (2016-2020).**

**ຫົວໜ່ວຍ: ຕື້ກີບ**

| ລາຍລະອຽດ | ຄາດໝາຍ | ປະຕິບັດ | | | | | ລວມ | ກວມ % | ສະເລ່ຍ |
|---|---|---|---|---|---|---|---|---|---|
| | 2016-20 | 2016 | 2017 | 2018 | 2019 | 2020 | 2016-20 | | |
| ການລົງທຶນພາຍໃນ | 870.48 | 115.43 | 121.21 | 139.74 | 77.04 | 37.45 | 490.87 | 6.42 | 98.17 |
| ການຊ່ວຍເຫຼືອລ້າ | 957.53 | 40.94 | 47.54 | 25.64 | 71.79 | 75.26 | 261.17 | 3.42 | 52.23 |
| ການລົງທຶນເອກະຊົນ | 4,352.41 | 1,496.55 | 1,089.00 | 1,092.76 | 1,151.16 | 434.05 | 5,263.52 | 68.85 | 1,052.70 |
| ທະນາຄານ | 2,524.40 | 207.87 | 460.79 | 309.23 | 406.84 | 244.15 | 1,628.88 | 21.31 | 325.78 |
| **ລວມ** | **8,704.83** | **1,860.79** | **1,718.54** | **1,567.37** | **1,706.83** | **790.91** | **7,644.44** | **100.00** | **1,528.89** |

**ແຫຼ່ງຂໍ້ມູນ: ພະແນກແຜນການ ແລະ ການລົງທຶນແຂວງ**

ຕະຫຼອດໄລຍະ 5 ປີ ຜ່ານມາ ແຂວງບໍລິຄຳໄຊ ໄດ້ລະດົມທຸກແຫຼ່ງການລົງທຶນ ເພື່ອສຸມໃສ່ວຽກງານພັດທະນາເສດຖະກິດ-ສັງຄົມຂອງແຂວງຢ່າງຕໍ່ເນື່ອງ ໃນນີ້: ການລົງທຶນຂອງພາກລັດໄດ້ສຸມໃສ່ຊຳລະໜີ້ສິນໂຄງການລົງທຶນ, ໂຄງການສືບຕໍ່ ແລະ ໂຄງການສະເໜີໃໝ່ຈຳນວນໜຶ່ງ ເປັນຕົ້ນ: ໂຄງການຈຸດສຸມ ແລະ ບູລິມະສິດ

ຂອງແຂວງ ກໍ່ຄືຂອງລັດຖະບານ ໂດຍສະເພາະ ແມ່ນການປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມ ທີ່ຈຳເປັນພື້ນຖານ ເຊັ່ນ: ເສັ້ນທາງ, ຊົນລະປະທານ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ນໍ້າລິນ, ສູນຄົ້ນຄວ້າເຕັກນິກກະສິກຳ; ຊຸກຍູ້ສົ່ງເສີມດ້ານເຕັກນິກ-ວິຊາການ, ການພັດທະນາເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ; ການລົງທຶນຈາກທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ໄດ້ສຸມເຂົ້າໃສ່ການຍົກສູງຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ, ສ້າງຂີດຄວາມອາດສາມາດຂອງອົງການບໍລິຫານລັດໃຫ້ມີຄວາມເຂັ້ມແຂງ, ຄໍ້າປະກັນການຜະລິດສະບຽງອາຫານ, ການຄຸ້ມຄອງປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການພັດທະນາຂົງເຂດວັດທະນະທຳ-ສັງຄົມ **ຄື:** ການຈັດຕັ້ງປະຕິບັດບັນດາຕົວຊີ້ວັດເປົ້າໝາຍການພັດທະນາແບບຍືນຍົງ (SDGs), ການສົມທົບທຶນໃນການກໍ່ສ້າງພື້ນຖານໂຄງລ່າງ, ການພັດທະນາຊັບພະຍາກອນມະນຸດ ຕິດພັນກັບການປັບປຸງຊີວິດການເປັນຢູ່ ແລະ ການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ແກ້ໄຂບັນຫາການຂາດສານອາຫານຂອງເດັກ; ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ເປັນຕົ້ນການກໍ່ສ້າງເຂື່ອນໄຟຟ້າ, ພັດທະນາການທ່ອງທ່ຽວ; ເອົາໃຈໃສ່ຊຸກຍູ້ບັນດາວິສາຫາກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ເຂົ້າເຖິງແຫຼ່ງທຶນ (ສິນເຊື່ອຂອງຂະແໜງທະນາຄານ) ເພື່ອພັດທະນາການຜະລິດກະສິກຳ, ອຸດສະຫາກຳປຸງແຕ່ງ-ການຄ້າ, ຫັດຖະກຳ ແລະ ການບໍລິການ; ຊຸກຍູ້ສົ່ງເສີມໃຫ້ພາກທຸລະກິດ ຜູ້ປະກອບການ, ປະຊາຊົນ, ໄດ້ເຂົ້າເຖິງແຫຼ່ງທຶນຢ່າງທັນເວລາ ເພື່ອສ້າງຖານການຜະລິດໃຫ້ເຂັ້ມແຂງ, ມີຄວາມຫຼາກຫຼາຍ, ສ້າງວຽກເຮັດງານທຳ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ.

- ອີງໃສ່ ຄວາມຕ້ອງການພັດທະນາທີ່ມີຫຼາຍ ແຕ່ການຕອບສະໜອງດ້ານງົບປະມານຂອງພາກລັດມີຈຳກັດ ດ້ວຍເຫດນີ້ ແຂວງຈຶ່ງໄດ້ສ້າງເງື່ອນໄຂອຳນວຍຄວາມສະດວກຕ່າງໆ ດ້ວຍການດຶງດູດເອົາການລົງທຶນພາກເອກະຊົນພາຍໃນ ແລະ ຕ່າງປະເທດ ເພື່ອເປັນກຳລັງແຮງສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ໂດຍໄດ້ປັບປຸງບັນຍາກາດການລົງທຶນ **ເປັນຕົ້ນ:** ຈັດຕັ້ງເຜີຍແຜ່ຜັນຂະຫຍາຍບັນດາກົດໝາຍ, ລະບຽບການ ແລະ ນິຕິກຳຕ່າງໆ **ເຊັ່ນ:** ຄຳສັ່ງເລກທີ 02/ນຍ ກ່ຽວກັບການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ, ຄຳສັ່ງເລກທີ 12/ນຍ ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການຜ່ານແດນ, ການນຳເຂົ້າຊົ່ວຄາວ ແລະ ການເຄື່ອນຍ້າຍສິນຄ້າຢູ່ ສປປ ລາວ, ຄຳສັ່ງເລກທີ 03/ນຍ ວ່າດ້ວຍການປັບປຸງວຽກງານບໍລິການ, ອອກໃບອະນຸຍາດການລົງທຶນ ແລະ ອະນຸຍາດດຳເນີນທຸລະກິດ; **ອັນພົ້ນເດັ່ນ** ແຂວງບໍລິຄຳໄຊ ໄດ້ສ້າງເງື່ອນໄຂ, ລະບຽບຈັດສັນງົບປະມານ ແລະ ບຸກຄະລາກອນ ເພື່ອສຶກສາຄົ້ນຄວ້າ ຈົນໄດ້ສຳເລັດການສ້າງຕັ້ງຫ້ອງການບໍລິການເອກະສານຜ່ານປະຕູດຽວ, ເພື່ອແກ້ໄຂຄວາມຊັກຊ້າຂໍອະນຸຍາດການລົງທຶນ, ພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ, ນະໂຍບາຍຍົກເວັ້ນພາສີ, ອາກອນສຳລັບແຜນການນຳເຂົ້າຂອງວິສາຫະກິດ, ພ້ອມກັນນີ້ກໍມີບັນດາເອກະສານສະເໜີຕົ້ນຕໍ ທີ່ຕິດພັນຂອງ 10 ຂະແໜງການ **ຄື:** ພະແນກແຜນການ ແລະ ການລົງທຶນແຂວງ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກກະສິກຳ ແລະ ປ່າໄມ້, ພະແນກອຸດສະຫະກຳ ແລະ ການຄ້າ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທອງທ່ຽວ, ພະແນກສຶກສາທິການ ແລະ ກິລາ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກການເງິນ ແລະ ກອງບັນຊາການ ປກສ ແຂວງ ເພື່ອແກ້ໄຂບັນດາຂອດຂັ້ນທີ່ອຸດຕັນ ໃນວຽກງານບໍລິຫານລັດ.

### 3.1.3 ການພັດທະນາເຂດແຄວ້ນ ແລະ ເຂດເສດຖະກິດຊາຍແດນຂອງແຂວງ.

#### 3.1.3.1 ການພັດທະນາເຂດແຄວ້ນ.

ແຂວງບໍລິຄຳໄຊໄດ້ກຳນົດ ເປັນ 3 ເຂດ ຄື: ເຂດທົ່ງພຽງ (ເມືອງປາກຊັນ, ທ່າພະບາດ, ປາກກະດິງ), ເຂດພູພຽງ (ເມືອງບໍລິຄັນ) ແລະ ພູດອຍ (ເມືອງຄຳເກີດ, ເມືອງວຽງທອງ ແລະ ເມືອງໄຊຈຳພອນ); ແຕ່ການພັດທະນາໄດ້ອີງໃສ່ທ່າແຮງ, ຈຸດພິເສດຂອງແຕ່ລະເຂດໃຫ້ມີຄວາມກົມກຽວສອດຄ່ອງ, ມີຄວາມອາດສາມາດປົ່ມຊ້ອນທາງດ້ານແຫຼ່ງຊັບພະຍາກອນທຳມະຊາດ ທີ່ເປັນພື້ນຖານຊຸກຍູ້ຂະແໜງການຜະລິດ ແລະ ບໍລິການ ໃຫ້ມີມູນຄ່າເພີ່ມສູງຂຶ້ນ ຊຶ່ງສະແດງອອກ **ດັ່ງນີ້:**

**+ ເຂດທົ່ງພຽງ:**

**- ເມືອງປາກຊັນ: "** ***ສ້າງໃຫ້ເປັນເມືອງພັດທະນາ, ສືບຕໍ່ສ້າງເທດສະບານຂອງແຂວງໃຫ້ເປັນເມືອງສວຍງາມ ສະເໜ່ ແລະ ເປັນເມືອງໜ້າຢູ່*** **""** ປັດຈຸບັນ ມີ 54 ບ້ານ (ຍຸບໂຮມມາຈາກ 59

ບ້ານ), ຜ່ານມາ ກໍ່ຄືປະຈຸບັນເມືອງປາກຊັນ ມີຄວາມສະຫງົບ ສາມາດຮັບແຂກລະດັບຕ່າງໆໄດ້ເປັນຢ່າງດີ; ມີທາງ ດິນແດງລະດັບດີເຂົ້າເຖິງທຸກບ້ານ, ທຸກຄອບຄົວໄດ້ນຳໃຊ້ນ້ຳສະອາດ, ຍົກລະດັບສຸກສາລາ ທີ່ປະຈຳຢູ່ບ້ານ ບ້ານ ບົວແວງຄຳ, ບ້ານນາເຂົ້າລົ້ມ, ບ້ານໂພນງາມ, ບ້ານໂພນໄຊ ຂຶ້ນເປັນໂຮງໝໍນ້ອຍ ແລະ ມີໂຮງໝໍນ້ອຍ 1 ແຫ່ງ ທີ່ ໄດ້ຮັບການຊ່ວຍເຫຼືອຈາກໂຄງການລາວລຸກຊຳບວກ ຢູ່ບ້ານຫົງໄຊ, ສຳເລັດການກໍ່ສ້າງໂຮງໝໍແຂວງຫຼັງໃໝ່; ໄດ້ ກໍ່ສ້າງທາງເບຕົງ ແລະ ປູຢາງ 2 ຊັ້ນ ໃນ 8 ບ້ານດ້ວຍທຶນຂອງໂຄງການ ແຊມາອຸນດົງ, WB ແລະ ADB, ໄດ້ກໍ່ ສ້າງທາງເບຕົງເຂົ້າບ້ານດ້ວຍທຶນສົມທົບ 3 ບ້ານ (ບ້ານຫາງຊີງສະຫວ່າງ, ໂພນງາມ ແລະ ຫ້ວຍຊາຍ), ສຳເລັດໂດຍ ພື້ນຖານການກໍ່ສ້າງລະບົບເສັ້ນທາງໃນເຂດປາກຊັນ I ຈຳນວນ 4 ເສັ້ນ, ສຳເລັດການກໍ່ສ້າງສວນສາທາລະນະ ທ່ານ ສີສົມພອນ ລໍວັນໄຊ ໄລຍະ 2, ດຶງໄຟຟ້າເຂົ້າໃສ່ເຂດຜະລິດກະສິກຳ ບ້ານປາກປິງ, ບ້ານສິນໄຊ ແລະ ບ້ານສີວິໄລ; ທາງເທດສະບານ ໄດ້ຮັບການກໍ່ສ້າງ ແລະ ປັບປຸງໄດ້ຢ່າງຈົບງາມ; ການສ້າງກັນຕະຝັ່ງເຈື່ອນນ້ຳຊັນ ບ້ານສີມຸງຄຸນ ສຳ ເລັດ 50%; ສຸມໃສ່ກໍ່ສ້າງລະບົບນ້ຳປະປາສຸຂະພິບານ ບ້ານກ້ອຍອຸດົມ, ກໍ່ສ້າງນ້ຳປະປາຊຸມຊົນ ບ້ານນາສົ້ມມໍ, ສູນການຄ້າສຸວັນນີໂຮມເຊັນເຕີ, ອານາຈັກວັດສະດຸກໍ່ສ້າງ CSC, ຮ້ານຊັບພະສິນຄ້າ, ຮ້ານສະດວກຊື້, ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ພັດຕະຄານ, ສວນສາທາລະນະ, ບ່ອນທ່ອງທ່ຽວພັກຜ່ອນ ໄດ້ຮັບການພັດທະນາເກີດຂຶ້ນ ຫຼາຍບ່ອນ.

**- ເມືອງທ່າພະບາດ: “ *ສ້າງໃຫ້ເປັນເມືອງກະສິກຳປອດສານພິດ, ເສດຖະກິດພັດທະນາ, ແຫຼ່ງທ່ອງທ່ຽວອັດທະນະທຳທີ່ລືຊ່າ, ສິ່ງແວດລ້ອມສວຍງາມຕາ, ປວງປະຊາມີຄວາມສຸກ* ””**ທົ່ວ ເມືອງໄດ້ມີຄວາມສະຫງົບ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດໄດ້ຮັບການພັດທະນາເປັນກ້າວໆ, ດ້ານກະສິກຳ ໄດ້ຊຸກຍູ້ຕິດຕາມປະຊາຊົນຜະລິດເປັນສິນຄ້າ **ເປັນຕົ້ນ:** ປູກເຂົ້າຈຳນວນ 8 ບ້ານ ຜົນຜະລິດ 891,86 ໂຕນ/ປີ, ມູນຄ່າຂາຍ 2,3 ຕື້ກີບ, ຜະລິດແນວພັນເຂົ້າ ທ່າດອກຄຳ 8 ແລະ 11 ໄດ້ 30 ໂຕນ/ປີ, ປູກໄມ້ ໃຫ້ໝາກ ແລະ ພືດຕ່າງໆ ເຊັ່ນ: ປູກ ໝາກມ່ວງ 100 ເຮັກຕາ, ໝາກຫຸ່ງ, ໝາກນາວ, ໝາກມັງກອນ, ມັນຕົ້ນ, ສາລີ, ໝາກອຶ, ຢາສູບມີເນື້ອທີ່ 153,18 ເຮັກຕາ, ສ້າງລາຍຮັບໃຫ້ປະຊາຊົນ 4,5 ຕື້ກີບ/ປີ, ເດັ່ນກວ່າໝູ່ແມ່ນ ຢາງພາລາ ມີເນື້ອທີ່ 2.670 ເຮັກຕາ ມູນຄ່າ 33 ຕື້ກວ່າກີບ/ປີ, ການລ້ຽງສັດກໍ່ມີການຂະຫຍາຍຕົວ ທົ່ວເມືອງມີ ຟາມລ້ຽງໄກ່ໄຂ່ 2 ຟາມ, ຟາມໝູ 3 ຟາມ, ລ້ຽງສັດໃຫຍ່ 2 ຟາມ... ມີຫຼາຍໂຄງການ, ກິດຈະກຳທັງພາກລັດ ແລະ ເອກະຊົນໄດ້ຮັບການລົງທຶນ **ເຊັ່ນ:** ສຳນັກງານຫ້ອງການຂອງສູນກາງ, ໂຮງງານຂ້າສັດທັນສະໄໝ, ກໍ່ສ້າງປ້ອງກັນ ຕະຝັ່ງເຈື່ອນແຄມນ້ຳຂອງ ບ້ານທ່າໂພນສັນ, ການພັດທະນາບ້ານດອນຄອນລາດ, ການກໍ່ສ້າງສູນຜະລິດກະສິກຳ ໂພນມ່ວງ, ຄອງຊົນລະປະທານ ບ້ານນ້ຳຈີງ, ບ້ານທວາຍ, ປາກທວາຍ, ໜອງເກີນ; ກໍ່ສ້າງນ້ຳປະປາ ບ້ານຫາດໄຄ້, ບ້ານທ່າບົກ, ສະຖານີວິທະຍຸຊຸມຊົນ... ສ່ວນການລົງທຶນພາກເອກະຊົນ ກໍ່ເຫັນວ່າ ປະສົບຜົນສຳເລັດໃນຫຼາຍ ກິດຈະການ **ຄື:** ສຳເລັດການກໍ່ສ້າງເຂື່ອນໄຟຟ້ານ້ຳມັງ 1, ການພັດທະນາແຫຼ່ງທ່ອງທ່ຽວຕາດຊາຍ; ຕາດມັງກອນ; ຕາດເຮືອຫັກ ແລະ ຟາມພູຕາວັນ, ກັນຕາຝັ່ງເຈື່ອນບ້ານທ່າບົກ ແລະ ທາງເບຕົງ ໄດ້ 6,56 ກມ ມູນຄ່າ 1,8 ຕື້ກີບ, ຕະຫຼາດຊຸມຊົນ ບ້ານເວີນທາດ, ບ້ານປາກທວາຍ... ໄດ້ເອົາໃຈໃສ່ປະກອບສ່ວນປົກປັກຮັກສາປ່າສະຫງວນແຫ່ງ ຊາດ ພູເຂົາຄວາຍ, ບໍ່ໃຫ້ຖືກບຸກລຸກ **ເປັນຕົ້ນ:** ການຖາງປ່າ, ການລ່າສັດ, ການນຳໃຊ້ເຄື່ອງປ່າຂອງດົງແບບຊະ ຊາຍ ແລະ ເມືອງທ່າພະບາດ ກໍ່ໄດ້ປະກາດເປັນເມືອງສາມະຄີປອງດອງ ເມືອງທີ 2 ຂອງປະເທດ, ວັດພະບາດໂພນ ສັນໄດ້ຮັບເຂົ້າເປັນມໍລະດົກຂອງແຂວງ, ການທ່ອງທ່ຽວທາງທຳມະຊາດ ຢູ່ຫໍຄອຍຊ້າງຍັງສືບຕໍ່ໄດ້ຮັບຄວາມສົນໃຈ ຈາກນັກທ່ອງທ່ຽວຕ່າງເທດ.

**- ເມືອງປາກກະດິງ: “*ສ້າງໃຫ້ເປັນເມືອງສະຫງົບສຸກ, ບໍລິການທາງຜ່ານ, ຜະລິດກະສິກຳ ທີ່ສະອາດ ຕິດພັນກັບອຸດສາຫະກຳປຸງແຕ່ງ ແລະ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມທີ່ ຍືນຍົງ* ”** ຜ່ານການຈັດຕັ້ງປະຕິບັດໄດ້ເຮັດໃຫ້ທົ່ວເມືອງ ມີຄວາມສະຫງົບ, ສັງຄົມມີຄວາມເປັນລະບຽບຮຽບ ຮ້ອຍ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ການບໍລິການກໍ່ໄດ້ມີການຂະຫຍາຍຕົວ **ເປັນຕົ້ນ:** ເຂດ ເສດຖະກິດທາງແບ່ງວຽງຄຳ-ທ່າສະອາດ ເກີດມີໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ, ການກໍ່ສ້າງເຂື່ອນໄຟຟ້າ ນ້ຳເທີນ 1 ສຳເລັດ 70%, ໄດ້ສ້າງວຽກເຮັດງານທຳ, ສ້າງລາຍໄດ້ ແລະ ທຶນພັດທະນາທ້ອງຖິ່ນ, ສາມາດແກ້ໄຂ ຄວາມທຸກຍາກ ປັບປຸງຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າດີຂຶ້ນເປັນກ້າວໆ, ໄດ້ສຳເລັດການທະລຸ ທາງປາກປາງ-ຫີນໂງ່ນ, ຜັງບ້ານວຽງຄຳ; ທົ່ງນາມີ, ກໍ່ສ້າງນ້ຳປະປາເທດສະບານເມືອງ, ການກໍ່ສ້າງທາງປູຢາງ ແຕ່

ປາກກະດິງໄຕ້-ປາກທອນສຳເລັດບາງສ່ວນ, ກໍ່ສ້າງກັນຕະຝັ່ງເຈື່ອນແຄມຂອງ ບ້ານບຸ່ງກວາງ; ການຜະລິດກະສິກຳໄດ້ສຸມໃສ່ການຜະລິດທີ່ຕິດພັນກັບຕະຫຼາດ **ເປັນຕົ້ນ**: ບ້ານລຽບຕາມແຄມຂອງ ໃນການປູກຢາສູບ, ສາລີ, ໝາກນັດ, ໝາກອຶ, ມັນຕົ້ນ ແລະ ຢາງພາລາ; ການລ້ຽງສັດຂະຫຍາຍຕົວ 2,8%/ປີ, ອຳນວຍຄວາມສະດວກໃຫ້ແກ່ການລົງທຶນ ຂອງເອກກະຊົນພາຍໃນ ແລະ ຕ່າງປະເທດ ໃນການກໍ່ສ້າງໂຄງການເຂື່ອນໄຟຟ້ານ້ຳເທີນ 1, ປູກໝາກມ່ວງ, ໄຜ່ກິມຊຸງ, ໝາກມັງກອນ, ໝາກກ້ຽງໃຫຍ່, ຢາງພາລາ, ກໍ່ສ້າງ ແລະ ປັບປຸງຕະຫຼາດວຽງຄຳ, ທົ່ງນາມີ ແລະ ບ້ານໂພນຈະເລີນ.

**- ເມືອງບໍລິຄັນ:** ***"ສ້າງໃຫ້ເປັນເມືອງກະສິກຳ, ອຸດສາຫະກຳ ແລະ ການບໍລິການທາງຜ່ານ ""*** 5 ປີຜ່ານມາ ໄດ້ເອົາໃຈໃສ່ໃນການພັດທະນາພື້ນຖານເສດຖະກິດ-ສັງຄົມຢ່າງກົມກຽວ ລະຫວ່າງບ້ານໃນຕົວເມືອງ ແລະ ບ້ານຢູ່ຊົນນະບົດ ສັງລວມແລ້ວເສດຖະກິດຍັງສືບຂະຫຍາຍຕົວຢ່າງຕໍ່ເນື່ອງ, ສັງຄົມມີຄວາມສະຫງົບທາງດ້ານການເມືອງໜັກແໜ້ນ, ແກ້ໄຂໄດ້ບັນດາປະກົດການຫຍໍ້ທໍ້ທີ່ເກີດຂຶ້ນ **ເປັນຕົ້ນ:** 2 ບ້ານຈຸດສຸມໃຈກາງທີ່ມີຄວາມຫຼໍ່ແຫຼມກໍ່ຄວາມບໍ່ສະຫງົບ ໃນຈຳນວນ 11 ບ້ານ ໃນທົ່ວແຂວງ, ການກໍ່ສ້າງພື້ນຖານໂຄງລ່າງໄດ້ມີການຂະຫຍາຍຕົວຢ່າງຈະແຈ້ງ ເດັ່ນກວ່າໝູ່ ແມ່ນການກໍ່ສ້າງທາງດິນແດງ ແຕ່ເທດສະບານເມືອງໄປຫາບ້ານນ້ຳມິດເມືອງວຽງທອງ, ພ້ອມທັງພັດທະນາສະຖານນີລົດໂດຍສານບໍລິຄັນຫາພູຄຳ ແລະ ປະຈຸບັນກຳລັງຍົກລະດັບ-ປູຢາງເຂດບ້ານ ແລະ ຊຸມຊົນ, ສ້າງໂຮງຮຽນທະຫານທ້ອງຖິ່ນ, ກໍ່ສ້າງ ແລະ ປັບປຸງ ສ້ອມແປງໂຮງຮຽນເຕັກນິກວິຊາຊີບຫ້ວຍຄູນ; ສຳເລັດໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳງຽບ 1, ຈັດສັນພູມລຳເນົາໃຫ້ປະຊາຊົນທີ່ຍົກຍ້າຍມາແຕ່ແຂວງພາກເໜືອ ແລະ ປະຊາຊົນທີ່ຖືກຜົນກະທົບຈາກໂຄງການພັດທະນາ ຈຳນວນ 8 ບ້ານ, ເຂດພັດທະນາທ່າສີ-ນາກຸນ, ບ້ານພູໂຮມໄຊ... ສຳເລັດການຍົກລະດັບສ້ອມແປງທາງຫຼວງແຫ່ງຊາດ ເລກທີ 21 (4B) ຊ່ວງຜາເມືອງ-ທ່າສີ; ດ້ານການປູກຝັງ, ລ້ຽງສັດ ກໍ່ໄດ້ເອົາໃຈໃສ່ຊຸກຍູ້ ສົ່ງເສີມປະຊາຊົນ ແລະ ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຜະລິດເປັນສິນຄ້າ **ເຊັ່ນ:** ປູກເຂົ້າ, ກ້ວຍ, ໝາກນັດ, ມັນຕົ້ນ, ໝາກກ້ຽງ, ປູກພືດຜັກສະອາດໃນເຮືອນຮົ່ມ ແລະ ຢາງພາລາ... ການລ້ຽງສັດກໍ່ຫັນມາລ້ຽງເປັນກຸ່ມ ເປັນຟາມ **ເປັນຕົ້ນ:** ໄກ່ໄຂ່ 2 ຟາມ, ການລ້ຽງປາໃສ່ໜອງຢູ່ ບ້ານນາລ້ອງ, ໂຮງງານຜະລິດແປ້ງມັນຕົ້ນ, ໂຮງງານຜະລິດໂຟມ, ໂຮງງານນ້ຳປາ, ມີການຫັດຖະກຳຕໍ່າຫູກ ແລະ ຜະລິດນ້ຳອ້ອຍກ້ອນໄດ້ຮັບເປັນຜະລິດຕະພັນໂອດ໋ອບ (ໜຶ່ງເມືອງໜຶ່ງຜະລິດຕະພັນ) ເລີ່ມມີໜໍ່ແໜງໃນການເຮັດບໍລິການດ້ານການທ່ອງທ່ຽວ, ບ້ານພັກ, ຮ້ານອາຫານ ເປັນຕົ້ນ: ຖ້ຳນາງຜົມຫອມ, ຫາດດອນຄູນ, ຕາດນ້ຳປາ.

**+ ເຂດພູດອຍ.**

**- ເມືອງຄຳເກີດ:** ***""ສ້າງໃຫ້ເປັນເມືອງອຸດສາຫະກຳ, ການບໍລິການທາງຜ່ານ ຕິດພັນກັບການທ່ອງທ່ຽວ ເພື່ອສ້າງເງື່ອນໄຂໃຫ້ເປັນເມືອງຍຸດທະສາດແນວຫຼັງ ທີ່ສອຍງາມ ແລະ ໜ້າຢູ່ ""*** ໄດ້ສຳເລັດການຊຸກຍູ້ ສົ່ງເສີມບັນດາຫົວໜ່ວຍທຸລະກິດຂະໜາດນ້ອຍ, ຂະໜາດກາງ, ຂະໜາດໃຫຍ່ ມີການຂະຫຍາຍຕົວໃນແຕ່ລະປີ ດ້ານອຸດສາຫະກຳກໍ່ໄດ້ເອົາໃຈໃສ່ຄຸ້ມຄອງ ໂຮງງານແປ້ງມັນຕົ້ນເພື່ອແປຮູບຜົນພະລິດຂອງປະຊາຊົນ, ໂຄງການບໍ່ຄຳ-ຄຳເກີດແສນອຸດົມ, ວຽກງານຫັດຖະກຳກໍ່ໄດ້ມີການຍົກລະດັບ ໂດຍສະເພາະຫັດຖະກຳຈັກສານເພື່ອສົ່ງອອກຢູ່ 4 ບ້ານ, ມີ 2 ຫົວໜ່ວຍ ສາມາດພັດທະນາເປັນສິນຄ້າ ໜຶ່ງເມືອງໜຶ່ງຜະລິດຕະພັນ; ປັບປຸງຍົກລະດັບເສັ້ນທາງ 8A, 1E, ເຮືອນພັກ, ໂຮງແຮມ, ຕະຫຼາດ, ຄິວລົດ ແລະ ໄດ້ຊຸກຍູ້ສົ່ງເສີມການທ່ອງທ່ຽວພາກເອກະຊົນຢູ່ວັງນ້ຳເຢັນ, ຕາດໃກ້, ຖ້ຳມັງກອນ, ບໍ່ນ້ຳອຸ່ນ ແລະ ອ່າງຫ້ວຍຕຸ່ນ; ອັນພົ້ນເດັ່ນແມ່ນປະຊາຊົນປະກອບທຶນສົມທົບກໍ່ສ້າງສ້ອມແປງຂົວ-ທາງ **ເຊັ່ນ:** ປີ 2017 ກໍ່ສ້າງທາງຮ່ອມເບຕົງບ້ານທົ່ງແປ່ 2 ເສັ້ນ, ບ້ານນາແປ່ 1 ເສັ້ນ, ບ້ານໜອງອໍ້ 1 ເສັ້ນ, ບ້ານຫຼັກ 7 ຈຳນວນ 1 ເສັ້ນ ແລະ ໄດ້ສຳເລັດໂຄງການກໍ່ສ້າງເສັ້ນທາງເບຕົງຢູ່ເທດສະບານ ແລະ ທາງປູຢາງ 2 ຊັ້ນເສັ້ນຕ່າງໆພາຍໃນເທດສະບານ; ຮັບຮອງເອົາບຸນປະເພນີຂອງເຜົ່າແຖງ ເປັນງານທ່ອງທ່ຽວທາງດ້ານວັດທະນາທຳຂອງເມືອງ... ການລົງທຶນຂອງລັດໄດ້ສຳເລັດທາງປູເບຕົງຢູ່ເທດສະບານ, ສວນຫຼັກຊາວ, ທາງດິນແດງອັດແໜ້ນເຂົ້າຫາບ້ານ ແກ້ວແສນຄຳ, ຕໍ່ເຕີມໂຮງໝໍຊຸມຊົນ, ສ້າງປະຕູໂຂງເຂົ້າເມືອງ, ຕັດຜັງບ້ານ ແລະ ກຳນົດເອົາເຂດທົ່ງແສນ ເປັນເຂດຜະລິດກະສິກຳ ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມຍືນຍົງ.

**- ເມືອງວຽງທອງ:** ***"ສ້າງໃຫ້ເປັນເມືອງເສດຖະກິດບໍລິການທາງຜ່ານ ຕິດພັນກັບການສ້າງຍຸດທະສາດແນວຫຼັງໃຫ້ເຂັ້ມແຂງຮອບດ້ານ "*** ໄດ້ຊຸກຍູ້ປະຊາຊົນບັນດາເຜົ່າ ແລະ ຜູ້ປະກອບການ ເຮັດການຜະລິດສະບຽງອາຫານໃຫ້ພຽງພໍ ແລະ ຂາຍເປັນສິນຄ້າຈຳນວນໜຶ່ງ ໂດຍເລັ່ງໃສ່ການພັດທະນາດ້ານກະສິກຳທີ່ມີທ່າແຮງ **ເຊັ່ນ:** ປູກເຂົ້າ, ມັນຕົ້ນ ແລະ ລ້ຽງສັດ; ເອົາໃຈໃສ່ກໍ່ສ້າງສະຖານີບໍລິການເຕັກນິກກະສິກຳ ບ້ານວັງຫີນເປັນຈຸດສຸມໃນການພັດທະນາວຽກກະສິກຳ ແລະ ປ່າໄມ້, ສ້ອມແປງຊົນລະປະທານທີ່ມີໃຫ້ສາມາດສະໜອງນ້ຳເຂົ້າສູ່ເຂດການຜະລິດ, ຄຸ້ມຄອງການນຳໃຊ້ທີ່ດິນ, ປ່າໄມ້ ເຂົ້າສູ່ລະບຽບກົດໝາຍເທື່ອລະກ້າວ, ພັດທະນາ ແລະ ຍົກລະດັບຊັບພະຍາກອນມະນຸດໃຫ້ມີຄວາມຮູ້-ຄວາມສາມາດ ໃນການຄຸ້ມຄອງ-ບໍລິຫານລັດ ແລະ ສັງຄົມ ໃຫ້ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ເຕົ້າໂຮມໄດ້ຄວາມສາມັກຄີເປັນປຶກແຜ່ນຂອງປະຊາຊົນບັນດາເຜົ່າ; ຖືເອົາການພັດທະນາເສດຖະກິດ ແລະ ສັງຄົມ ເປັນໃຈກາງ ເລັ່ງໃສ່ການກໍ່ສ້າງພື້ນຖານໂຄງລ່າງທີ່ຈຳເປັນຈຳນວນໜຶ່ງ **ຄື:** ກໍ່ສ້າງເຮືອນ, ສຳນັກງານຫ້ອງການຕ່າງໆ, ໂຮງຮຽນ, ເສັ້ນທາງ, ໂຮງໝໍນ້ອຍ, ນ້ຳປະປາ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ເພື່ອຮອງຮັບໃຫ້ແກ່ການຍົກຍ້າຍ ແລະ ຈັດສັນປະຊາຊົນ 7 ບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາເຂື່ອນໄຟຟ້ານ້ຳເທີນ 1 ຢູ່ເຂດບ້ານຫ້ວຍຫອຍ, ບຸກເບີກເນື້ອທີ່ທຳການຜະລິດໃຫ້ແກ່ປະຊາຊົນ, ແກ້ໄຂບັນຫາການຕັ້ງສະນຳ, ສ້ອມແປງເສັ້ນທາງໃຫ້ໄປໄດ້ສອງລະດູ ແຕ່ບ້ານວັງຫີນ-ມີໄຊ-ບ້ານນາຍາງ-ວັງພຽງ, ຂະຫຍາຍຕາຄ່າຍໄຟຟ້າ 22/0,4 ກລວ ເຂົ້າບ້ານນ້ຳກູ້ ເຊິ່ງເປັນບ້ານສຸດທ້າຍຂອງແຂວງ, ສຳເລັດການກໍ່ສ້າງນ້ຳປະປາເທດສະບານເມືອງ, ພັດທະນາເຂດຈຸດສຸມຈອມທອງໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ, ພັດທະນາຈຸດສຸມທອງມີໄຊ ໃຫ້ມີພື້ນຖານໂຄງລ່າງດີສົມຄວນ, ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດກໍ່ໄດ້ມີການຊຸກຍູ້ສົ່ງເສີມ **ເຊັ່ນ:** ສຳເລັດໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຊໍ້, ໂຮງງານຜະລິດແປ້ງມັນຕົ້ນດາກອນກາສະວາ, ການບໍລິການຂົນສົ່ງໂດຍສານ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ຕະຫຼາດ, ປ້ຳນ້ຳມັນ...

**- ເມືອງໄຊຈຳພອນ:** ***"ສ້າງເມືອງໄຊຈຳພອນວິລະຊົນ ໃຫ້ກາຍເປັນເມືອງໃໝ່ທີ່ສວຍງາມ, ຍຸດຕິການຖາງປ່າເຮັດໄຮ່, ສຸມໃສ່ການພັດທະນາຮອບດ້ານ, ປະຊາຊົນລຶບລ້າງຄວາມທຸກຈົນ ຕິດພັນກັບການສ້າງຍຸດທະສາດແນວຫຼັງ "*** ໄດ້ເອົາໃຈໃສ່ພັດທະນາພື້ນຖານໂຄງລ່າງ, ສຳເລັດການກໍ່ສ້າງເສັ້ນທາງດິນແດງ ແຕ່ບ້ານວັງຫີນເມືອງວຽງທອງ ຫາ ບ້ານໂພນສີ, ສືບຕໍ່ກໍ່ສ້າງສຳນັກງານປົກຄອງເມືອງຫຼັງໃໝ່ສຳນັກງານຫ້ອງການຕ່າງໆ ເພື່ອກະກຽມໃຫ້ແກ່ການຍົກຍ້າຍເທດສະບານເມືອງໄຊຈຳພອນ ຈາກບ້ານໂພນສີໄປຕັ້ງຢູ່ບ້ານນ້ຳອ້ອນຕາມແຈ້ງການເລກທີ 1111/ນຍ ລົງວັນທີ 26 ກໍລະກົດ 2013, ໄດ້ຮັບການຊ່ວຍເຫຼືອຈາກແຂວງເຫງະອານ (ສສ ຫວຽດນາມ) ໃນການສ້າງສຸກສາລາ ຢູ່ບ້ານສົບເຕີງ, ໂຮງໝໍຊຸມຊົນ, ນ້ຳປະປາ ຢູ່ບ້ານ ນ້ຳອ້ອນ, ຂະຫຍາຍຕາຂ່າຍໄຟຟ້າ 22/0,4 ກລວ ເຂົ້າເຖິງທຸກໆບ້ານ ໃນຕົ້ນປີ 2020 **ຄື:** ບ້ານສົບເຕີງ ແລະ ບ້ານສົບຄີ, ສ້ອມແປງຊົນລະປະທານ, ມີສະຖານີລົດໂດຍສານ, ຂະຍາຍຕາໜ່າງສັນຍານໂທລະສັບກວມ 76,4% ຂອງຈຳນວນບ້ານທັງໝົດ, ເຮັດໃຫ້ເມືອງມີພື້ນຖານເສດຖະກິດ-ສັງຄົມດີຂຶ້ນເປັນກ້າວໆ, ພ້ອມນັ້ນກໍ່ໄດ້ເອົາໃຈໃສ່ຍົກລະດັບຄວາມຮູ້ຄວາມສາມາດໃຫ້ສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ໃນການຄຸ້ມຄອງລັດ ຄຸ້ມຄອງສັງຄົມຕາມລະບຽບກົດໝາຍໄດ້ຢ່າງເຂັ້ມງວດ **ເປັນຕົ້ນ:** ການຄຸ້ມຄອງຊັບພະຍາກອນປ່າໄມ້ ແລະ ແຮ່ທາດ, ສະກັດກັ້ນບໍ່ໃຫ້ໄຟໄໝ້ລາມປ່າ; ເຕົ້າໂຮມໄດ້ຄວາມສາມັກຄີປະຊາຊົນບັນດາເຜົ່າ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ ທີ່ເຄີຍດຳລົງຊີວິດອາໄສທຳມະຊາດ ມາຜະລິດກຸ້ມຕົນເອງ ແລະ ເປັນສິນຄ້າ ເຊິ່ງມັນສະແດງອອກ ເຫັນວ່າປະຊາຊົນໄດ້ມີການປູກການລ້ຽງຫຼາຍຂຶ້ນ, ມີວັງສະຫງວນປາ, ມີຜົນຜະລິດຂອງຕົນເອງເພື່ອຂາຍ **ເຊັ່ນ:** ງົວ, ຄວາຍ, ໝາກນັດ, ເຜືອກ, ສາລີ, ມັນຕົ້ນ ແລະ ໝາກກ້ວຍ... ການແກ້ໄຂໄດ້ຄວາມທຸກຍາກຂອງປະຊາຊົນ ດີຂຶ້ນເປັນກ້າວໆ.

**3.1.3.2 ການພັດທະນາເຂດເສດຖະກິດຊາຍແດນຂອງແຂວງ.**

**- ເຂດທາງຊິງ:** ໄດ້ສຳຫຼວດ-ອອກແບບ, ກຳນົດແລວທາງ, ສະຖານທີ່ກໍ່ສ້າງ, ພື້ນທີ່ເວນຄືນ ແລະ ປັກຫຼັກໝາຍຂອບເຂດບໍລິເວນສົ້ນຂົວ ກຳນົດສ້າງເປັນເຂດເສດຖະກິດສົ້ນຂົວຂ້າມແມ່ນ້ຳຂອງແຫ່ງທີ 5 ປາກຊັນ-ບຶງການ ຊຶ່ງຕາມແຜນການ ຈະສຳເລັດໃນປີ 2023 ເຂດເສດຖະກິດດັ່ງກ່າວຕິດພັນກັບການບໍລິການດ່ານສາກົນປາກຊັນ-ບຶງການ ມີເນື້ອທີ່ທັງໝົດ 180 ກວ່າເຮັກຕາ, ເຊິ່ງຈະກຳນົດເປັນເຂດອຸດສະຫະກຳ-ການຄ້າ, ເຂດໂລຈິສຕິກ,

ການບໍລິການ ແລະ ການຂົນສົ່ງ ຕິດພັນກັບເຂດບໍລິການ-ທ່ອງທ່ຽວອ່າງຫ້ວຍສຽດ ແລະ ເຂດດອນລິ້ນປາກນ້ຳຊັນ, ໄດ້ສຳເລັດການສຳຫຼວດ-ອອກແບບ ແລະ ທະລຸແລວທາງເວັ້ນເທດສະບານເມືອງປາກຊັນ 24 ກມ.

**- ເຂດເສດຖະກິດວຽງຄຳ-ທ່າສະອາດ:** ໄດ້ຊຸກຍູ້ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ພາກເອກະຊົນພາຍໃນ ມີການລົງທຶນ ສ້າງດ່ານທ້ອງຖິ່ນ ທ່າສະອາດ-ໂພນໄຊ, ສ້າງທາງດິນແດງ ແຕ່ທາງແບ່ງຫຼັກຊາວ-ທ່າສະອາດ ລວມໄລຍະທາງ 12 ກິໂລແມັດ, ສ້າງບ້ານວຽງຄຳ ເປັນບ້ານໃຫຍ່ກາຍເປັນສີສັນຕົວເມືອງນ້ອຍ ທີ່ມີພື້ນຖານໂຄງລ່າງ ຮັບໃຊ້ໃຫ້ແກ່ການພັດທະນາ ດີພໍສົມຄວນ **ເປັນຕົ້ນ:** ມີໂຮງແຮມ, ເຮືອນພັກ, ຮ້ານອາຫານ, ຕະຫຼາດ, ພັດຕະຄານ, ຜັງເມືອງ ຖະໜົນຫົນທາງ, ນ້ຳປະປາ, ໂຮງໝໍນ້ອຍ, ທະນາຄານ, ເດີ່ນກິລາ, ໂຮງຮຽນ ແລະ ສະຖານທີ່ບໍລິການອື່ນໆ.

**- ເຂດເສດຖະກິດນ້ຳທາງາງ:** ອີງໃສ່ທ່າແຮງ ແລະ ຈຸດພິເສດດ້ານທີ່ຕັ້ງ ໄດ້ກຳນົດໃຫ້ເປັນເຂດເສດຖະກິດຊາຍແດນ, ການລົງທຶນຜ່ານມາ ໄດ້ບຸກເບີກເນື້ອທັງໝົດ 15 ເຮັກຕາ, ໃນນັ້ນ ກໍ່ສ້າງກັນເຈື່ອນ ແລະ ຖົມພື້ນທີ່ແລ້ວຈຳນວນ 6 ເຮັກຕາ, ປະຈຸບັນໄດ້ມີນັກລົງທຶນສົນໃຈ ແລະ ສະເໜີຫາຂັ້ນລັດຖະບານອະນຸມັດຢູ່, ໂດຍເນັ້ນໃສ່ການບໍລິການເປັນຕົ້ນຕໍ: ກໍ່ສ້າງລະບົບສາງ, ການຄ່ຽນຖ່າຍສິນຄ້າ, ຈຸດກວດກາຂອງພາສີ, ຕະຫຼາດນັດຊາຍແດນ...

**- ເຂດເສດຖະກິດຊາຍແດນນ້ຳອ້ອນ:** ໄດ້ກຳນົດເປັນເຂດເສດຖະກິດຊາຍແດນເຊັ່ນກັນເພື່ອເຊື່ອມຈອດກັບບັນດາເມືອງຂອງແຂວງເງະອານ ສສ ຫວຽດນາມ, ໃນ 5 ປີຜ່ານມາໄດ້ສຸມໃສ່ສືບຕໍ່ລົງທຶນພັດທະນາເທດສະບານເມືອງໄຊຈຳພອນຈຸດໃໝ່ (ບ້ານນ້ຳອ້ອນ ເພື່ອໃຫ້ກາຍເປັນສູນກາງການເມືອງ-ເສດຖະກິດຊາຍແດນ ແລະ ຍຸດທະສາດແນວຫຼັງຂອງແຂວງ), ກຳລັງກໍ່ສ້າງອາຄານດ່ານ ເຊິ່ງມີແຜນຈະພັດທະນາໃຫ້ກາຍເປັນດ່ານສາກົນໃນອານາຄົດ.

**- ເຂດເສດຖະກິດທອງມີໄຊ:** ໄດ້ເອົາໃຈໃສ່ພັດທະນາເປັນກຸ່ມບ້ານ ໃຫ້ກາຍເປັນຕົວເມືອງນ້ອຍ ຕິດພັນກັບການສ້າງເຂດຍຸດທະສາດແນວຫຼັງ ເຫັນວ່າໄດ້ມີຄວາມສະຫງົບເປັນຢ່າງດີ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການຍົກລະດັບດີຂຶ້ນ, ມີດ່ານປະເພນີເປັນບ່ອນໄປມາຫາສູ່ ແລະ ຈຸດແລກປ່ຽນຊື້-ຂາຍສິນຄ້າ ລະຫວ່າງເຂດຊາຍແດນ.

**- ເຂດເສດຖະກິດທ່າສີ:** ໄດ້ສຳເລັດການສຳຫຼວດ ອອກແບບແຜນແມ່ບົດໃນການພັດທະນາ ບໍລິເວນ 3 ແຍກທ່າສີ ປັດຈຸບັນໄດ້ມີການລົງທຶນຂອງເອກະຊົນພາຍໃນ, ລົງທຶນໃສ່ການພັດທະນາພື້ນຖານໂຄງລ່າງ ກາຍເປັນຈຸດແວ່ພັກ ບັນດາແຂວງພາກເໜືອ ແລະ ໃຕ້ **ເຊັ່ນ:** ຈຸດພັກລົດ, ປ້ຳນ້ຳມັນ, ອູ່ສ້ອມແປງ, ເຮືອນພັກ, ຮ້ານອາຫານ, ຕະຫຼາດ.

### 3.1.4 ພັດທະນາກຳລັງແຮງງານໃຫ້ມີຄຸນນະພາບ.

ໄລຍະຜ່ານມາ ໄດ້ເພີ່ມທະວີການພັດທະນາກຳລັງແຮງງານ ໃຫ້ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ **ເຊັ່ນ:** ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ, ກຳມະບານ ແລະ ພາກສ່ວນກ່ຽວຂ້ອງ ໄດ້ເປັນເຈົ້າການໃນການຊອກວຽກເຮັດງານທຳ, ປົກປ້ອງການນຳໃຊ້ແຮງງານ ແລະ ພັດທະນາສີມືແຮງງານ **ຄື:** ການຝຶກອົບຮົມການກິດຢາງ, ການຝຶກອົບຮົມການຜະລິດ ແລະ ປຸງແຕ່ງຜະລິດຕະພັນກະສິກຳ, ການຝຶກອົບຮົມສີມືການກໍ່ສ້າງ, ຕະຫຼອດຮອດການຝຶກອົບຮົມປະຕິບັດງານຕົວຈິງຂອງບັນດາໂຮງງານອຸດສາຫະກຳຕ່າງໆ ພາຍໃນແຂວງ, ມີຜູ້ເຂົ້າຮ່ວມຝຶກອົບຮົມ 8.417 ຄົນ ທຽບໃສ່ແຜນ 5 ປີ ປະຕິບັດໄດ້ລື່ນແຜນ 3 ເທົ່າຕົວ, ຄຸ້ມຄອງແຮງງານຕ່າງປະເທດໃຫ້ເຂົ້າສູ່ລະບຽບກົດໝາຍ ດ້ວຍການອອກບັດແຮງງານໄດ້ 1.148 ຄົນ, ມີລະບົບປະກັນສັງຄົມ ແລະ ຮັກສາສຸຂະພາບ ມີຜູ້ຖືສິດນຳໃຊ້ 5.439 ຄົນ.

- ໄດ້ໃຫ້ຄວາມສຳຄັນຕໍ່ບັນດາຫົວໜ່ວຍທຸລະກິດ, ໂຮງງານ ທີ່ມີຜົນງານປະກອບສ່ວນສ້າງບຸກຄະກອນ, ໃຫ້ບ່ອນເຮັດວຽກ ຕໍ່ນັກສຶກສາ ປັນຍາຊົນ ທີ່ຮຽນຈົບວິຊາສະເພາະຕ່າງໆ ດ້ວຍຮູບການຍ້ອງຍໍຊົມເຊີຍໃນວັນສຳຄັນຂອງຊາດ ກໍ່ຄືແຂວງ **ເຊັ່ນ:** ໃບກຽດຕິຄຸນ, ໂລ້ກຽດຕິຍົດ, ໃບຍ້ອງຍໍ, ໃບຊົມເຊີຍ...

- ປະຈຸບັນແຂວງພວກເຮົາມີໂຮງຮຽນວິຊາຊີບ ຂອງລັດ 1 ແຫ່ງ ມີ 4 ສາຂາວິຊາຮຽນ ສ້າງນັກຮຽນວິຊາຊີບໄດ້ 8.417 ຄົນ, ນອກນັ້ນກໍມີໂຮງຮຽນ ບໍລິຫານທຸລະກິດ ທີ່ເປັນຂອງເອກະຊົນ 3 ແຫ່ງ ສາມາດສ້າງນັກສຶກສາບໍລິຫານທຸລະກິດອອກມາຮັບໃຊ້ສັງຄົມ 751 ຄົນ/ປີ.

### 3.1.5 ພັດທະນາຜູ້ປະກອບການ.

ການພັດທະນາຄົນ ແມ່ນປັດໃຈສຳຄັນໃນການພັດທະນາປະເທດຊາດກໍ່ຄືແຂວງ ໂດຍສະເພາະ ຍຸກເຕັກໂນໂລຊີ ແລະ ຍຸກຂອງການເຊື່ອມໂຍງ, ໃນວຽກງານດັ່ງກ່າວນີ້ ຜ່ານມາກໍ່ມີນັກທຸລະກິດຫຼາຍຄົນພາຍໃນແຂວງ ປະສົບຜົນສຳເລັດ ປະກອບສ່ວນຊ່ວຍສ້າງສາພັດທະນາແຂວງດ້ວຍຮູບການຕ່າງໆ ຫຼາຍສົມຄວນ **ເຊັ່ນ:** ຜູ້ອຳນວຍການໂຮງງານ ໝໍ້ແປງໄຟຟ້າ SK, ຜູ້ອຳນວຍການ ບໍລິສັດ Bm-ttpower, ສູນຈຳໜ່າຍເຄື່ອງກໍ່ສ້າງສຸວັນນີການຄ້າ, ສູນການຄ້າ CSC, ໂຄງການລ້ຽງກຸ້ງມັງກອນ ຢູ່ເມືອງທ່າພະບາດ, ຜູ້ພັດທະນາໂຄງການທ່ອງທ່ຽວ ລີສອດທ່າບັກນ້ຳເທີນ, ໂຮງງານນ້ຳດື່ມກາຮວງເຂົ້າ ສາມາດເຂົ້າເຖິງແຫຼ່ງທຶນ SME, ສຳລັບນະໂຍບາຍສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ພວກເຮົາໄດ້ສຸມໃສ່ ຈັດຝຶກອົບຮົມ, ຈັດງານຕະຫຼາດນັດ ແລະ ນຳພາທັດສະນະສຶກສາຖອດຖອນບົດຮຽນທັງພາຍໃນ ແລະ ຕ່າງປະເທດ, ນອກນັ້ນ ຍັງໄດ້ສົ່ງເສີມການຜະລິດກະສິກຳ, ການບໍລິການ ແລະ ຫັດຖະກຳ ຈຳນວນໜຶ່ງຢູ່ແຕ່ລະບ້ານ.

### 3.1.6 ເປີດກວ້າງການຮ່ວມມື, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ຍຶດໝັ້ນແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ ແລະ ເປີດກວ້າງການພົວພັນກັບຫຼາຍປະເທດ, ຫຼາຍລະດັບບົນຫຼັກການແນວທາງການຕ່າງປະເທດຂອງພັກ ຜ່ານມາວຽກງານດັ່ງກ່າວສາມາດເຮັດໄດ້ດີ ແລະ ຕໍ່ເນື່ອງ, ເປັນເຈົ້າພາບ ແລະ ເຂົ້າຮ່ວມກອງປະຊຸມໃນຫົວຂໍ້ຄວາມເປັນລະບຽບຮຽບຮອຍຕາມຊາຍແດນລາວ-ໄທ (ລະຫວ່າງ ບໍລິຄຳໄຊ-ບຶງການ, ບໍລິຄຳໄຊ-ໜອງຄາຍ); ຊາຍແດນລາວ-ຫວຽດ (ລະຫວ່າງບໍລິຄຳໄຊ-ຮາຕິ້ງ, ບໍລິຄຳໄຊ-ເຫງະອານ) ພັດປ່ຽນກັນເປັນເຈົ້າພາບ; ເຂົ້າຮ່ວມກອງປະຊຸມ 3 ປະເທດ 9 ແຂວງທີ່ນຳໃຊ້ທາງ ເລກ 8A ແລະ ເລກທີ 12; ນອກນັ້ນຍັງມີການພົວພັນຮ່ວມມືກັບບັນດາແຂວງຕ່າງໆຂອງ ສສ ຫວຽດນາມ, ເຂົ້າຮ່ວມກອງປະຊຸມອະນຸພາກພື້ນແມ່ນ້ຳຂອງ (GMS), ກອງປະຊຸມປະຊາຄົມເສດຖະກິດອາຊຽນ (AEC); ຮັບອາສາສະໝັກ ເຂົ້າຮ່ວມງານໃນຂົງເຂດຂະແໜງການຕ່າງໆ ພາຍໃນແຂວງ **ເຊັ່ນ:** ອາສາສະໝັກຍີ່ປຸ່ນ, ເກົາຫຼີ, ເຢັຍລະມັນ; ພິເສດແຂວງ ໄດ້ເປັນກຽດຕ້ອນຮັບການມາຢ້ຽມຢາມຂອງ ສະຫາຍ ຫງຽນ ຟູຈອງ ເລຂາທິການໃຫຍ່ພັກຄອມມູນິດຫວຽດນາມ ແລະ ໄດ້ໃຫ້ການຊ່ວຍເຫຼືອ 35 ຕື້ດົ່ງໃນນີ້; ສ້າງໂຮງຮຽນ ມສ ສີທະນາໄຊ ມູນຄ່າ 30 ຕື້ດົ່ງ, ຫໍສະໝຸດ 3 ຕື້ດົ່ງ, ເສັ້ນທາງ 2 ຕື້ດົ່ງ; ການມາຢ້ຽມຢາມເອກອັກຄະລະຖະທູດອັງກິດ ປະຈຳລາວ, ເອກອັກຄະລະຖະທູດ ອິດສະລາແອນ ປະຈຳລາວ ທີ່ມີສຳນັກຕັ້ງຢູ່ ຮ່າໂນ່ຍ ສສ ຫວຽດນາມ, ທູດອິນໂດນີເຊຍ, ທູດໄທ, ທູດຝຣັ່ງ...; ພິເສດອີກອັນໜຶ່ງກໍ່ຄື ການຈັດງານ ແລະ ຮ່ວມງານສະເຫຼີມສະຫຼອງ 2 ວັນປະຫວັດສາດ ລາວ-ຫວຽດນາມ ທີ່ແຂວງ ຮາຕິ້ງ (ວັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ-ຫວຽດນາມຄົບຮອບ 40 ປີ ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 55 ປີ); ການຮ່ວມມືກັບໂຄງການລາວ ລຸກຊຳບວກ ໄດ້ຮັບການພັດທະນາໄປດ້ວຍດີ ສາມາດເຊັນສັນຍາຕໍ່ຮອດປີ 2030; ນອກນັ້ນ ກໍ່ມີຫຼາຍໂຄງການທີ່ເປັນການລົງທຶນພາກເອກະຊົນ ຂອງຕ່າງປະເທດ ໂດຍສະເພາະການລົງທຶນຂອງ ສປຈີນ, ສສ ຫວຽດນາມ ແລະ ໄທ.

### 3.2 ເປົ້າໝາຍທີ 2: ພັດທະນາຊັບພະຍາກອນມະນຸດ ແລະ ຍົກລະດັບຄວາມສາມາດຂອງບຸກຄະລາກອນຈາກພາກລັດ ແລະ ກຳລັງແຮງງານຊ່ວຍໜູນຈາກພາກເອກະຊົນ; ຄວາມທຸກຍາກຂອງປະ ຊາຊົນບັນດາເຜົ່າໄດ້ຮັບການແກ້ໄຂ; ທຸກເຜົ່າຊົນ ແລະ ເພດໄວ ສາມາດເຂົ້າເຖິງການສຶກສາ ແລະ ການບໍລິການສາທາລະນະສຸກຢ່າງທົ່ວເຖິງ ແລະ ມີຄຸນນະພາບ; ພັດທະນາວັດທະນາທຳອັນດີ ງາມທີ່ເປັນເອກະລັກຂອງຊາດ ຂອງເຜົ່າໄດ້ຮັບການສົ່ງເສີມ, ປົກປັກຮັກສາ ແລະ ພັດທະນາຢ່າງຍືນຍົງ.

### 3.2.1 ສືບຕໍ່ພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນໃນທົ່ວແຂວງ.

ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໃນທົ່ວແຂວງ ຜ່ານມາໄດ້ສຸມໃສ່ປັບປຸງ ແລະ ສ້າງຮາກຖານການເມືອງໃຫ້ມີຄວາມໜັກແໜ້ນ ແລະ ພັດທະນາຊົນນະບົດຢ່າງຮອບດ້ານ ຕິດພັນກັບການສ້າງບ້ານພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍ; ສ້າງບ້ານໃຫຍ່ໃຫ້ກາຍເປັນໃຈກາງພັດທະນາ ແລະ ເປັນສີສັນຕົວເມືອງນ້ອຍໃນຊົນນະບົດ ໄດ້ 2 ບ້ານ; ຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ໃຫ້ແກ່ປະຊາຊົນຢ່າງມີຈຸດສຸມ ເປັນຕົ້ນໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳງຽບ1 (ບ້ານພູໂຮມໄຊ) ແລະ ນ້ຳເທີນ 1 (ບ້ານຫ້ວຍຫອຍ); ສືບຕໍ່ແກ້ໄຂຄວາມ

ທຸກຍາກຂອງປະຊາຊົນ ດ້ວຍການສົ່ງເສີມການຜະລິດເປັນສິນຄ້າ ແລະ ການບໍລິການຕາມທ່າແຮງ **ເຊັ່ນ:** ການປູກມັນຕົ້ນ, ປູກຢາງພາລາ, ກ້ວຍ, ໝາກນັດ, ລ້ຽງໝູ, ລ້ຽງປາ; ປະສານສົມທົບກັບອົງການເກັບກູ້ລະເບີດແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງດຳເນີນການກວດກູ້ ແລະ ທຳລາຍລະເບີດບໍ່ທັນແຕກອອກຈາກເຂດພື້ນທີ່ໂຄງການພັດທະນາ ໄດ້ 2 ເມືອງ **ຄື:** ຄຳເກີດ ແລະ ວຽງທອງ.

ໃນຂົງເຂດວຽກງານດັ່ງກ່າວນີ້ໄດ້ ຮັບການເອົາໃຈໃສ່ເປັນຢ່າງດີ ເຊັ່ນ: ປັບປຸງ, ສ້ອມແປງຊົນລະປະທານໃຫ້ນຳໃຊ້ໄດ້ດີກ່ວາເກົ່າດ້ວຍຄອງເບຕົງ, ໃຫ້ເງິນຊ່ວຍໜູນຄ່າໄຟຟ້າທີ່ນຳໃຊ້ເຂົ້າການຜະລິດນາແຊງ 20%, ໃຫ້ການປະກັນສຸຂະພາບ ໃນການປິ່ນປົວ 15.000 ກີບ/ຄົນ/ຄັ້ງ; ປຸກລະດົມໃນທຸກຂົງເຂດສັງຄົມຊ່ວຍເຫຼືອບັນເທົາທຸກແກ່ຜູ້ຖືກອຸທົກກະໄພ ທັງພາຍໃນແຂວງ ແລະ ຕ່າງແຂວງ, ການຊ່ວຍເຫຼືອໄພໜາວ; ການຊ່ວຍໜູນລາຄາສິນຄ້າ; ອັນທີ່ພົ້ນເດັ່ນ ແມ່ນການເຄື່ອນໄຫວລະດົມທຶນໃນການຊ່ວຍເຫຼືອສັງຄົມ ຂອງກອງທຶນໜຶ່ງດວງໃຈ ບໍລິຄຳໄຊຊ່ວຍເຫຼືອສັງຄົມ ໄດ້ 8,61 ຕື້ກ່ວາກີບ ເພື່ອກໍ່ສ້າງ ແລະ ສ້ອມແປງໂຮງຮຽນ, ຊື້ອຸປະກອນການຮຽນ, ຊ່ວຍຜູ້ດ້ອຍໂອກາດໄດ້ຮຽນໜັງສື, ຊື້ອຸປະກອນຊ່ວຍໂຮງໝໍ ມີມູນຄ່າທັງໝົດ 8,08 ຕື້ກວ່າກີບ; ນອກນັ້ນ ຍັງຂະຫຍາຍຕະຫຼາດ, ຂະຫຍາຍຕາງໜ່າງໄຟຟ້າ, ຫົນທາງ, ເຄືອຂ່າຍໂທລະລະຄົມ ທີ່ເປັນເງື່ອນໄຂ ໃຫ້ແກ່ນັກທຸລະກິດ, ປະຊາຊົນ ໄດ້ເຮັດການຜະລິດໃຫ້ຫຼາຍ ຂາຍເປັນສິນຄ້າ ເພື່ອຫຼຸດຜ່ອນຄວາມທຸກຍາກລົງເທື່ອລະກ້າວ; ພັກ-ລັດ ກໍ່ຄືການນຳຂອງແຂວງໄດ້ມີຫົວຄິດປະດິດສ້າງ ວາງຍຸດທະສາດ ແກ້ໄຂບັນຫາ 4 ເຖື່ອນ, ຈັດສຳມະນາໃນ 9 ຫົວຂໍ້ວິທະຍາສາດ ເພື່ອແກ້ໄຂຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**3.2.1.1 ການພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກ.**

ໂດຍອີງໃສ່ສະພາບເງື່ອນໄຂ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການພັດທະນາ, ຜ່ານຂະບວນການຫັນລົງກໍ່ສ້າງຮາກຖານ ແລະ ພັດທະນາຊົນນະບົດແຕ່ລະປີ, ແຂວງໄດ້ສືບຕໍ່ນຳພາປະຊາຊົນ ແກ້ໄຂຄວາມທຸກຍາກໄປພ້ອມກັບການຈັດສັນເຕົ້າໂຮມບ້ານ, ປະຕິບັດໂຄງການທີ່ເປັນບຸລິມາສິດຂອງລັດຖະບານ, ຂອງແຂວງ; ລະດົມທຶນຮອນການຊ່ວຍເຫຼືອລ້າຈາກອົງການຈັດຕັ້ງສາກົນ, ການປ່ອຍກູ້ສິນເຊື່ອຈາກທະນາຄານ, ການລົງທຶນຂອງປະຊາຊົນ ແລະ ການສ້າງຕັ້ງກອງທຶນພັດທະນາ ແລະ ສິນເຊື່ອຂັ້ນບ້ານຢ່າງຕັ້ງໜ້າ; ຜົນປະເມີນປີ 2018 ຕາມດຳລັດ 309/ນຍ ທົ່ວແຂວງມີ 6 ເມືອງພົ້ນທຸກ, 259 ບ້ານ, 51.203 ຄອບຄົວ ກວມ 98,2% ຂອງຄອບຄົວທັງໝົດທົ່ວແຂວງ, ຄອບຄົວທຸກຍາກ ຍັງເຫຼືອ 939 ຄອບຄົວ ເທົ່າກັບ 1,8%; ບ້ານພັດທະນາໄດ້ 205 ບ້ານ ເທົ່າກັບ 70,45%, ຄອບຄົວພັດທະນາ 46.422 ຄອບຄົວ ເທົ່າກັບ 89,03%; ຜົນປະເມີນ ປີ 2020 ຕາມດຳລັດ 348/ລບ ມີເມືອງພົ້ນທຸກ 5 ເມືອງ, ບ້ານພົ້ນທຸກ 249 ບ້ານ, 52.544 ຄອບຄົວ ກວມ 94%, ຄອບຄົວທຸກຍາກຍັງເຫຼືອ 3,172 ຄອບຄົວ ເທົ່າກັບ 5,6%, ບ້ານພັດທະນາໄດ້ 216 ບ້ານ ເທົ່າກັບ 76%, ຫຼຸດຄາດໝາຍ 9% (ແຜນໃຫ້ໄດ້ຫຼາຍກ່ວາ 85%) ຄອບຄົວພັດທະນາ 47.990 ຄອບຄົວ.

- ສ້າງແຂວງເປັນຫົວໜ່ວຍຍຸດທະສາດ 7 ດ້ານ ບັນລຸໄດ້ 2 ດ້ານຄື: (ດ້ານ 1 ແລະ 7); ບໍ່ບັນລຸມີດ້ານທີ 2,3,4,5,6.
- ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານມີ 5 ດ້ານ **ດັ່ງນີ້:**

+ ເມືອງທີ່ບັນລຸເງື່ອນໄຂ 5 ດ້ານ ມີ: 0 ເມືອງ
+ ເມືອງທີ່ບັນລຸເງື່ອນໄຂ 4 ດ້ານ ມີ: 5 ເມືອງຄື: (ປາກຊັນ, ທ່າພະບາດ, ປາກກະດິງ, ບໍລິຄັນ ແລະ ຄຳເກີດ).
+ ເມືອງທີ່ບັນລຸເງື່ອນໄຂ 3 ດ້ານ ມີ: 2 ເມືອງຄື: (ໄຊຈຳພອນ, ວຽງທອງ)

- ສ້າງບ້ານເປັນຫົວໜ່ວຍພັດທະນາ 4 ດ້ານ; ບ້ານທົ່ວແຂວງທັງໝົດ 291 ບ້ານ; ແຕ່ລະດ້ານບັນລຸໄດ້ ດັ່ງນີ້:

+ ບ້ານພັດທະນາ 4 ດ້ານ ມີ: 148 ບ້ານ.
+ ບ້ານພັດທະນາ 3 ດ້ານ ມີ: 26 ບ້ານ.
+ ບ້ານພັດທະນາ 2 ດ້ານ ມີ: 57 ບ້ານ.
+ ບ້ານພັດທະນາ 1 ດ້ານ ມີ: 30 ບ້ານ.
+ ບ້ານພັດທະນາ 0 ດ້ານ ມີ: 30 ບ້ານ.

**ຕາຕະລາງ 9: ການແກ້ໄຂຄວາມທຸຍຍາກ ແລະ ການພັດທະນາ.**

| ປີ | ຈຳນວນບ້ານທັງໝົດ | ຈຳນວນຄອບຄົວທັງໝົດ | ບ້ານພົ້ນທຸກ | ຄອບຄົວພົ້ນທຸກ | ບ້ານພັດທະນາ | ຄອບຄົວພັດທະນາ | ຈຳນວນບ້ານທຸກຍາກ | ຈ/ນ ຄອບຄົວທຸກຍາກ | ເປີເຊັນສົມທຽບ(%) ພັດທະນາ | | ພົ້ນທຸກ | | % ຄອບຄົວທຸກຍາກ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | | ບ້ານ | ຄອບຄົວ | ບ້ານ | ຄອບຄົວ | | |
| 2016 | 293 | 49.136 | 263 | 47.292 | 205 | 44.573 | 31 | 262 | 69,97 | 90,71 | 89,76 | 96,25 | 3,75 | |
| 2017 | 291 | 50.205 | 260 | 48.494 | 207 | 44.887 | 32 | 1.436 | 71,13 | 89,41 | 89,35 | 96,59 | 3,41 | ດຳລັດ 309/ນຍ |
| 2018 | 291 | 52.142 | 259 | 51.203 | 205 | 46.422 | 32 | 939 | 70,45 | 89,03 | 89,00 | 98,20 | 1,80 | |
| 2019 | 291 | 53.523 | 247 | 49.879 | 214 | 46.352 | 44 | 3.644 | 73,54 | 86,60 | 84,88 | 93,19 | 6,81 | ດຳລັດ 348/ລບ |
| 2020 | 284 | 55.716 | 249 | 52.544 | 216 | 47.990 | 35 | 3.172 | 76,06 | 86,13 | 87,68 | 94,31 | 5,69 | ດຳລັດ 348/ລບ |

**ແຫຼ່ງຂໍ້ມູນ: ຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ**

**- ວຽກງານກອງທຶນສິນເຊື່ອພັດທະນາບ້ານ:** ມີກອງທຶນຢູ່ 7 ເມືອງ, ມີສະມາຊິກ 2.097 ຄອບຄົວ, ມີທຶນທັງໝົດ 1,4 ຕື້ກີບ; ກອງທຶນຂອງແຂວງ ມີ 43 ບ້ານ ມີທຶນທັງໝົດ 3,2 ຕື້ກີບ, ດອກເບ້ຍ 473 ລ້ານກີບ; ກອງທຶນປະຊາຊົນສ້າງຕັ້ງຂຶ້ນເອງ ມີ 33 ບ້ານ ມີສະມາຊິກ 16.341 ຄົນ ມີທຶນທັງໝົດ 24,69 ຕື້ກີບ; ນອກນີ້ຍັງມີກອງທຶນອົງການຈັດຕັ້ງມະຫາຊົນມີທຶນທັງໝົດ 1,27 ຕື້ກີບ ມີສະມາຊິກ 985 ຄອບຄົວ ແລະ ກອງທຶນສິນເຊື່ອ ແລະ ພັດທະນາບ້ານ ທີ່ໃຫ້ການຊ່ວຍເຫຼືອລ້າຈາກອົງການຈັດຕັ້ງສາກົນ 171 ບ້ານ, ມີ 8.529 ຄອບຄົວ, ມີທຶນທັງໝົດ 3,06 ຕື້ກີບ.

### 3.2.1.2 ການຈັດຕັ້ງປະຕິບັດວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ (3 ສ້າງ).

ໄດ້ສຸມໃສ່ຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ໂດຍສະເພາະຢູ່ 3 ເມືອງເປົ້າໝາຍ ໃຫ້ເຂົ້າສູ່ລວງເລິກ ເປັນຕົ້ນການກໍ່ສ້າງສິ່ງສາທາລະນຸປະໂພກ **ເຊັ່ນ:** ເສັ້ນທາງ,ໄຟຟ້າ, ນໍ້າປະປາ ແລະ ການຜະລິດເປັນສິນຄ້າ; ການຈັດຕັ້ງປະຕິບັດບັນດາຂະແໜງການຂອງແຂວງ ແລະ ເມືອງໄດ້ມີນິຕິກຳໃນການແບ່ງຄວາມຮັບຜິດຊອບຢ່າງມີຈຸດສຸມ, ການແບ່ງວຽກ, ມອບສິດຄຸ້ມຄອງ, ການແບ່ງປັນຜົນປະໂຫຍດ ກ່ຽວກັບການຄຸ້ມຄອງຈັດເກັບລາຍຮັບ-ລາຍຈ່າຍ; ການຕັ້ງຄະນະຮັບຜິດຊອບຊີ້ນຳວຽກງານທົດລອງ 3 ສ້າງ; ຈັດສົ່ງພະນັກງານລົງຊ່ວຍຕິດຕາມ-ກວດກາການຈັດຕັ້ງປະຕິບັດຕົວຈິງຢູ່ຂັ້ນເມືອງ ແລະ ບ້ານເປົ້າໝາຍໃນແຕ່ລະໄລຍະ, ສ້າງຄວາມເຂັ້ມແຂງໃຫ້ອົງການປົກຄອງ ເຮັດໃຫ້ວຽກງານການປົກຄອງມີຄວາມຍຸຕິທຳ, ການຄຸ້ມຄອງການເງິນຂັ້ນເມືອງ ແລະ ບ້ານມີຄວາມໂປ່ງໃສ, ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ເຂົ້າເຖິງຕົວຈິງ; ຜ່ານການຈັດຕັ້ງປະຕິບັດ ເຫັນວ່າການຈັດເກັບລາຍຮັບທີ່ມອບຢູ່ໃນຄວາມຮັບຜິດຊອບຂອງອົງການປົກຄອງບ້ານ ມີຄວາມຈະແຈ້ງ ແລະ ພົ້ນເດັ່ນຂຶ້ນກວ່າເກົ່າ **ເຊັ່ນ:** ການຈັດເກັບລາຍຮັບ ບ້ານສີວິໄລ ເມືອງປາກຊັນ ກ່ອນການປະຕິບັດວຽກງານ 3 ສ້າງໄດ້ຈາກການເກັບທີ່ດິນ 29,8 ລ້ານກີບ/ປີ, ພາຍຫຼັງໄດ້ເປັນບ້ານ 3 ສ້າງສາມາດເກັບລາຍຮັບ ໄດ້ 166,3 ລ້ານກີບ (ປີ 2019); ບ້ານໃຫຍ່ຜາເມືອງ ເມືອງບໍລິຄັນ ກ່ອນການທົດລອງ 3 ສ້າງ ເກັບໄດ້ 49,4 ລ້ານກີບຕໍ່ປີ, ພາຍຫຼັງໄດ້ເປັນບ້ານ 3 ສ້າງ 161,6 ລ້ານກີບ; ບ້ານຈອມທອງເກັບລາຍຮັບໄດ້ 55 ລ້ານກີບທຽບໃສ່ກ່ອນບໍ່ທັນເປັນບ້ານ 3 ສ້າງ ເພີ່ມຂຶ້ນຫຼາຍເທົ່າຕົວ; ມາຮອດປະຈຸບັນ ບັນດາເມືອງ ແລະ ບ້ານເປົ້າໝາຍທົດລອງ 3 ສ້າງ ສາມາດບໍລິຫານໜ້າທີ່ວຽກງານ ຕາມການມອບໝາຍຄວາມຮັບຜິດຊອບ ແລະ ກາຍເປັນບົດຮຽນເພື່ອຜັນຂະຫຍາຍອອກສູ່ເມືອງ ແລະ ບ້ານ ອື່ນໆ.

### 3.2.1.3 ການຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ.

**1) ດ້ານປະຊາກອນ.**

ປີ 2020 ທົ່ວແຂວງ ມີພົນລະເມືອງທັງໝົດ 313.952 ຄົນ, ຍິງ 153.966 ຄົນ, ທຽບໃສ່ປີ 2016 ເພີ່ມຂຶ້ນ 25.360 ຄົນ, ສ່ວນຮ້ອຍການເພີ່ມ 1,9% ຕໍ່ປີ (ແຜນການ 1,8%ຕໍ່ປີ), ຂະໜາດຂອງຄົວເຮືອນ ສະເລ່ຍ 6 ຄົນ; ອັດຕາສ່ວນເພດ ຂອງປະຊາກອນ ເພດຊາຍ 51 ສ່ວນຮ້ອຍ, ເພດຍິງ 49 ສ່ວນຮ້ອຍ.

**ຕາຕະລາງ 10: ສັງລວມປະຊາກອນໄລຍະ 5 ປີ**

| ເມືອງ | ປີ | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|---|
| ປາກຊັນ | ລວມ | 48,901 | 49,076 | 9,368 | 50,359 | 51,994 |
| | ຍິງ | 24,232 | 24,941 | 25,024 | 24,766 | 25,582 |
| ປາກກະດິງ | ລວມ | 53,708 | 54,324 | 58,496 | 57,263 | 57,263 |
| | ຍິງ | 26,859 | 27,230 | 29,059 | 28,368 | 28,368 |
| ທ່າພະບາດ | ລວມ | 27,802 | 26,557 | 29,496 | 29,021 | 29,021 |
| | ຍິງ | 13,985 | 13,507 | 14,555 | 14,548 | 14,548 |
| ບໍລິຄັນ | ລວມ | 48,499 | 52,118 | 53,747 | 53,557 | 55,540 |
| | ຍິງ | 24,050 | 25,709 | 26,448 | 26,123 | 27,171 |
| ຄໍາເກີດ | ລວມ | 66,792 | 69,925 | 72,828 | 73,471 | 73,471 |
| | ຍິງ | 33,147 | 34,809 | 36,735 | 36,201 | 36,201 |
| ວຽງທອງ | ລວມ | 31,708 | 32,484 | 33,616 | 36,325 | 35,913 |
| | ຍິງ | 15,543 | 15,818 | 16,482 | 16,968 | 16,920 |
| ໄຊຈໍາພອນ | ລວມ | 11,182 | 11,711 | 10,584 | 10,719 | 10,750 |
| | ຍິງ | 5,436 | 5,522 | 5,154 | 5,161 | 5,176 |
| **ລວມ:** | **ລວມ** | **288,592** | **296,195** | **308,135** | **310,715** | **313,952** |
| | **ຍິງ** | **143,252** | **147,536** | **153,457** | **152,135** | **153,966** |

**ແຫຼ່ງຂໍ້ມູນ: ສູນສະຖິຕິປະຈໍາແຂວງ**

ໂຄງປະກອບໝວດອາຍຸຂອງປະຊາກອນ: ອາຍຸ 0-4 ປີ ກວມ 11,8%, 5-9 ປີ 11,4%, 10-14 ປີ 10,4%, 15-19 ປີ 10,1%, 20-24 ປີ 9,5%, 25-59 ປີ 8,6%, ອາຍຸ 60 ປີຂຶ້ນໄປ 38,2%; ຮູບທາດໄດ້ສະແດງໃຫ້ພວກເຮົາເຫັນວ່າຕະຫຼອດໄລ 4 ປີ ປະຊາກອນໃນເກນໝວດອາຍຸ 0-9 ປີ ແລະ 10-24 ປີ ຫຼາຍຂຶ້ນທັງຍິງ ແລະ ຊາຍ ຊຶ່ງພວກເຮົາໄດ້ເອົາໃຈໃສ່ພັດທະນາດ້ານການສຶກສາຊັ້ນມັດທະຍົມຕົ້ນ, ປາຍ ແລະ ສົ່ງເສີມພາກເອກະຊົນລົງທຶນໃສ່ອາຊີວະສຶກສາເພື່ອຮອງຮັບ, ສ່ວນໝວດອາຍຸ 15-49 ປີ ກວມຫຼາຍກວ່າໝູ່ ຊຶ່ງເປັນໄວກໍາລັງແຮງງານຫຼັກ ແລະ ໜຸ່ມແໜ້ນ.




**ແຫຼ່ງຂໍ້ມູນ: ສູນສະຖິຕິປະຈໍາແຂວງ**

**2) ການຈັດຕັ້ງປະຕິບັດເປົ້າໝາຍພັດທະນາແບບຍືນຍົງ (SDGs).**

ຜ່ານການຈັດຕັ້ງປະຕິບັດເປົ້າໝາຍດ້ານການພັດທະນາແບບຍືນຍົງ (**SDGs**) ໃນໄລຍະ 5 ປີ ສາມາດບັນລຸໄດ້ຄາດໝາຍ **ດັ່ງນີ້:**

**ກ. ຄາດໝາຍລຶບລ້າງຄວາມທຸກຍາກ ແລະ ໄພອຶດຫິວ.**

ອັດຕາຄວາມທຸກຍາກຂອງຄອບຄົວ(1) ຫຼຸດລົງຈາກ 3,7% ໃນປີ 2016 ມາເປັນ 1,8% ໃນປີ 2018 ແຜນ ປີ 2020 ໃຫ້ຕໍ່າກວ່າ 2% ຈາກຕົວຊີ້ວັດດັ່ງກ່າວສະແດງໃຫ້ເຫັນວ່າ ແຂວງພວກເຮົາບັນລຸໄດ້ຕາມຄາດໝາຍ (ຄາດໝາຍ SDGs ໜ່ອຍກວ່າ 10%); ຫຼຸດຜ່ອນການຂາດສານອາຫານ(2) ເດັກເຕ້ຍ ຫຼຸດລົງ 24% ໃນປີ 2016 ມາເປັນ 21% ໃນປີ 2019 ແລະ ຄາດວ່າ ປີ 2020 ຈະບັນລຸ 20% (ຄາດໝາຍ SDGs 32%), ເດັກນໍ້າໜັກຫຼຸດລົງມາດຕະຖານ ຫຼຸດລົງຈາກ 20% ໃນປີ 2016 ມາເປັນ 16% ໃນປີ 2019 ແລະ ຄາດວ່າ ປີ 2020 ຈະບັນລຸ 15% (ຄາດໝາຍ SDGs ບໍ່ເກີນ 20%), ຕົວຊີ້ວັດດັ່ງກ່າວສະແດງໃຫ້ເຫັນວ່າແຂວງພວກເຮົາ ບັນລຸໄດ້ຕາມຄາດໝາຍທີ່ໄດ້ກຳນົດໄວ້.

| ຄາດໝາຍ/ຕົວຊີ້ບອກ | ຄາດໝາຍ 2016-20 | ປະຕິບັດ | | | | ຄາດຄະເນ 2020 |
|---|---|---|---|---|---|---|
| | | 2016 | 2017 | 2018 | 2019 | |
| - ອັດຕາຄວາມທຸກຍາກຂອງຄອບຄົວ | % | 3,7% | 3,4% | 1,8% | % | % |
| - ເດັກສູງບໍ່ໄດ້ມາດຕະຖານ (1) | 21% | 39% | 24% | 23% | 20% | 21% |
| - ເດັກນໍ້າໜັກຫຼຸດມາດຖານ (2) | 15% | 20% | 18% | 15% | 16% | 15% |

**ຂ. ຄາດໝາຍຫຼຸດຜ່ອນອັດຕາການເສຍຊີວິດຂອງເດັກນ້ອຍ: (2)**

ອັດຕາການຕາຍຂອງເດັກລຸ່ມ 1 ປີ (3) ຈາກ 18 ຕໍ່ 1.000 ຄົນ ໃນປີ 2016 ມາເປັນ 14.1 ຕໍ່ 1.000 ຄົນ ໃນປີ 2019 ແລະ ຄາດວ່າປີ 2020 ຈະບັນລຸ 13 ຕໍ່ 1.000 ຄົນ (ຄາດໝາຍ SDGs ບໍ່ເກີນ 30 ຕໍ່ 1.000 ຄົນ), ອັດຕາການຕາຍຂອງເດັກລຸ່ມ 5 ປີ (4) ຈາກ 20 ຕໍ່ 1.000 ຄົນ ໃນປີ 2016 ມາເປັນ 17 ຕໍ່ 1.000 ຄົນ ໃນປີ 2019 ແລະ ຄາດວ່າປີ 2020 ຈະບັນລຸ 16 ຕໍ່ 1.000 ຄົນ (ຄາດໝາຍ SDGs ບໍ່ເກີນ 40 ຕໍ່ 1.000 ຄົນ); ອັດຕາການສັກຢາກັນໝາກແດງໃຫ້ເດັກນ້ອຍອາຍຸ 1 ປີ (5) ໄດ້ 96% ໃນປີ 2016 ມາເປັນ 95% ໃນປີ 2019 ແລະ ຄາດວ່າປີ 2020 ຈະບັນລຸ 95% (ຄາດໝາຍ SDGs 90%), ບັນດາຕົວຊີ້ວັດດັ່ງກ່າວ ແຂວງພວກເຮົາບັນລຸໄດ້ຢ່າງສົມບູນ ແຕ່ຕ້ອງສືບຕໍ່ຈັດຕັ້ງປະຕິບັດໃຫ້ເປັນຂະບວນການທີ່ກວ້າງຂວາງ ແລະ ພົ້ນເດັ່ນຂຶ້ນຕື່ມ.

| ຄາດໝາຍ/ຕົວຊີ້ບອກ | ຄາດໝາຍ 2016-20 | ປະຕິບັດ | | | | ຄາດຄະເນ 2020 |
|---|---|---|---|---|---|---|
| | | 2016 | 2017 | 2018 | 2019 | |
| ອັດຕາການຕາຍຂອງເດັກລຸ່ມ 1 ປີ | 13% | 16% | 16% | 12% | 14.1% | 13% |
| ອັດຕາການຕາຍຂອງເດັກລຸ່ມ 5 ປີ | 17% | 20% | 19% | 15% | 17% | 16% |
| ອັດຕາສັກຢາກັນໝາກແດງ ເດັກ 1 ປີ | 95% | 96% | 100% | 102% | 95% | 95% |

**ຄ. ຄາດໝາຍສົ່ງເສີມສຸຂະພາບຂອງແມ່.**

ອັດຕາການຕາຍຂອງແມ່ (6) ຫຼຸດລົງຈາກ 90 ຄົນຕໍ່ເດັກທີ່ເກີດມີຊີວິດ 100.000 ຄົນ ໃນປີ 2016 ໃສ່ເປັນ 28,6 ຄົນຕໍ່ເດັກທີ່ເກີດມີຊີວິດ 100.000 ຄົນ ໃນປີ 2019 ແລະ ຄາດວ່າ ປີ 2020 ຈະບັນລຸ 50 ຕໍ່ 100.000 ຄົນ (ຄາດໝາຍ SDGs ບໍ່ເກີນ 160 ຕໍ່ 100.000 ຄົນ), ອັດຕາການເກີດໂດຍມີແພດຊ່ວຍ (7) ເພີ່ມຂຶ້ນຈາກ 57% ໃນປີ 2016 ມາເປັນ 79% ໃນປີ 2019 ແລະ ຄາດວ່າ ປີ 2020 ຈະບັນລຸ 80% (ຄາດໝາຍ SDGs 80%), ອັດຕາຄຸມກຳເນີດຫຼຸດລົງຈາກ 55% ໃນປີ 2016 ມາເປັນ 40% ໃນປີ 2019 ແລະ ຄາດວ່າ ປີ 2020 ຈະບັນລຸ 60% (ຄາດໝາຍ SDGs 60%), ອັດຕາປົກຄຸມການຝາກທ້ອງ 1 ຄັ້ງ ເພີ່ມຂຶ້ນຈາກ 94% ໃນປີ 2016 ມາເປັນ 96% ໃນປີ 2019 ແລະ ຄາດວ່າ ປີ 2020 ຈະບັນລຸ 90% ຂຶ້ນໄປ (ຄາດໝາຍ SDGs 90%), ອັດຕາປົກຄຸມການຝາກທ້ອງ 4 ຄັ້ງ ເພີ່ມຂຶ້ນຈາກ 68% ໃນປີ 2016 ມາເປັນ 76% ໃນປີ 2019 ແລະ ຄາດວ່າ ປີ 2020 ຈະບັນລຸ 80% ຂຶ້ນໄປ (ຄາດໝາຍ SDGs 80%), ອັດຕາປົກຄຸມການກວດຫຼັງ

ການເກີດເພີ່ມຂຶ້ນຈາກ 56% ໃນປີ 2016 ມາເປັນ 79% ໃນປີ 2019 ແລະ ຄາດວ່າປີ 2020 ຈະບັນລຸ 80% (ຄາດໝາຍ SDGs 80%). ສັງລວມແລ້ວເຫັນວ່າ ການຈັດຕັ້ງປະຕິບັດມີບາງຕົວຊີ້ວັດຍັງຕໍ່າກ່ວາຄາດໝາຍທີ່ໄດ້ກຳນົດໄວ້ ຊຶ່ງເປັນສິ່ງທ້າທາຍໃຫ້ແກ່ແຂວງພວກເຮົາທີ່ຈະຕ້ອງໄດ້ເອົາໃຈໃສ່ສູ້ຊົນເພື່ອບັນລຸຕາມຄາດໝາຍ.

| ຄາດໝາຍ/ຕົວຊີ້ບອກ | ຄາດໝາຍ 2016-20 | ປະຕິບັດ | | | | ຄາດຄະເນ 2020 |
|---|---|---|---|---|---|---|
| | | 2016 | 2017 | 2018 | 2019 | |
| ອັດຕາການຕາຍຂອງແມ່ | 50/ແສນ | 90 | 61 | 90 | 28.6 | 50/ແສນ |
| ອັດຕາການເກີດມີແພດຊ່ວຍ | 80% | 57% | 75% | 54% | 79% | 80% |
| ອັດຕາຄຸມກຳເນີດ | 60% | 55% | 57% | 32% | 40% | 60% |
| ອັດຕາການຝາກທ້ອງ 1 ຄັ້ງ | 90% | 94% | 98% | 98% | 96% | 90% |
| ອັດຕາການຝາກທ້ອງ 4 ຄັ້ງ | 80% | 68% | 54% | 67% | 76% | 80% |
| ອັດຕາການກວດຫຼັງເກີດ | 80% | 56% | 70% | 73% | 79% | 80% |

**ໆ. ຄາດໝາຍສະກັດກັ້ນການແຜ່ລາມຂອງພະຍາດຕິດຕໍ່ (HIV/AIDs, ວັນນະໂລກ ແລະ ໄຂ້ຍຸງ).**

ອັດຕາການຕິດເຊື້ອ HIV ໃນກຸ່ມປະຊາກອນທົ່ວໄປ ຈາກ 0,98%ໃນ ປີ 2016 ມາເປັນ 0,53% ໃນປີ 2019 ແລະ ຄາດວ່າປີ 2020 ຈະບັນລຸຕາມຄາດໝາຍ (ຄາດໝາຍ SDGs ນ້ອຍກ່ວາ 1%), ອັດຕາການຕິດເຊື້ອໃນກຸ່ມທີ່ມີຄວາມສ່ຽງສູງ (ສາວບໍລິການ) ອາຍຸ 15-49 ປີ ໃນປີ 2019 ປະຕິບັດໄດ້ນ້ອຍກ່ວາ 1% (ຄາດໝາຍ SDGs ນ້ອຍກ່ວາ 5%), ສຳລັບໄຂ້ຍຸງ ແລະ ພະຍາດອື່ນໆ ມີຄວາມຄືບໜ້າ ແລະ ບັນລຸໄດ້ຕາມຄາດໝາຍ **ເຊັ່ນ:** ອັດຕາການຕາຍຍ້ອນໄຂ້ຍຸງຂອງປະຊາກອນ ເທົ່າ 0% (ຄາດໝາຍ SDGs 0%), ອັດຕາການເປັນພະຍາດໄຂ້ຍຸງກະລະນີໃໝ່ ຕໍ່ປະຊາກອນ 1.000 ຄົນ ຈາກ 0,30 ໃນ ປີ 2016 ມາເປັນ 0,003 ໃນປີ 2019 ແລະ ຄາດວ່າປີ 2020 ຈະບັນລຸຕາມຄາດໝາຍ (ຄາດໝາຍ SDGs ຕໍ່າກ່ວາ 1/1.000, ອັດຕາຄົ້ນພົບຄົນເປັນພະຍາດວັນນະໂລກໃໝ່ (BK+) ຈາກ 24% ໃນປີ 2016 ມາເປັນ 30% ໃນປີ 2019 ແລະ ຄາດວ່າປີ 2020 ຈະບັນລຸຄາດໝາຍ (ຄາດໝາຍ SDGs 70%), ອັດຕາການເປັນພະຍາດວັນນະໂລກ ຕໍ່ 100.000 ປະຊາກອນ ຈາກ 175 ຕໍ່ 100.000 ຄົນ ໃນປີ 2016 ມາເປັນ 153 ຕໍ່ 100.000 ຄົນ ໃນປີ 2019 ແລະ ຄາດວ່າປີ 2020 ຈະໄດ້ 150 ຕໍ່ 100.000 ຄົນ (ຄາດໝາຍ SDGs 170), ອັດຕາການຕາຍຍ້ອນວັນນະໂລກ ຕໍ່ປະຊາກອນ ຈາກ 5 ຕໍ່ 100.000 ຄົນ ໃນປີ 2016 ມາເປັນ 7 ຕໍ່ 100.000 ຄົນໃນປີ 2019 ແລະ ຄາດວ່າ ປີ 2020 ຈະບັນລຸ 5 ຕໍ່ 100.000 ຄົນ (ຄາດໝາຍ SDGs 5), ການປິ່ນປົວວັນນະໂລກຫາຍດີ ຈາກ 95% ໃນປີ 2016 ມາເປັນ 95% ໃນປີ 2019 ແລະ ຄາດວ່າ ປີ 2020 ຈະບັນລຸ 90%(ຄາດໝາຍ SDGs 90%).

| ຄາດໝາຍ/ຕົວຊີ້ບອກ | ຄາດໝາຍ 2016-20 | ປະຕິບັດ | | | | ຄາດຄະເນ 2020 |
|---|---|---|---|---|---|---|
| | | 2016 | 2017 | 2018 | 2019 | |
| ອັດຕາການຕິດເຊື້ອ HIV ໃນກຸ່ມປະຊາ ກອນທົ່ວໄປ | <1% | 0,98 | 3,04 | 4,44 | 0,98 | <1% |
| ອັດຕາການຕິດເຊື້ອໃນກຸ່ມທີ່ມີຄວາມສ່ຽງສູງ ອາຍຸ 15-49 ປີ | <5% | <5% | <5% | <5% | <5% | <5% |
| ອັດຕາການຕາຍຍ້ອນໄຂ້ຍຸງ | 0 | 0 | 0 | 0 | 0 | 0 |
| ອັດຕາການເປັນພະຍາດໄຂ້ຍຸງກໍລະນີໃໝ່ ຕໍ່ປະຊາກອນ 1.000 ຄົນ | <0,1 | 0,30 | 0,04 | 0,01 | 0,003 | <0.1 |
| ອັດຕາຄົ້ນພົບຄົນເປັນວັນນະໂລກໃໝ່(BK*) | % | % | % | % | % | % |
| ອັດຕາການເປັນວັນນະໂລກກໍລະນີໃໝ່ ຕໍ່ປະຊາກອນ 100.000 ຄົນ | 150 | 175 | 108 | 160 | 153 | 150 |
| ອັດຕາການຕາຍຍ້ອນວັນນະໂລກຕໍ່ປະຊາກອນ 100.000 ຄົນ | 5% | 5% | 8,5% | 0,33% | 7% | 5% |
| ສ່ວນຮ້ອຍການປິ່ນປົວວັນນະໂລກຫາຍດີ | 90% | 95% | 95% | 90% | 95% | 90% |

**ຈ. ຄາດໝາຍຮັບປະກັນຄວາມຍືນຍົງທາງດ້ານສິ່ງແວດລ້ອມ.**

ຕົວຊີ້ບອກທີ່ສໍາຄັນແມ່ນອັດຕາສ່ວນຂອງປະຊາກອນ (8) ທີ່ໄດ້ຊົມໃຊ້ນໍ້າສະອາດເພີ່ມຂຶ້ນຈາກ 91,9% ໃນປີ 2016 ມາເປັນ 95% ໃນປີ 2019 ແລະ ຄາດວ່າ ປີ 2020 ຈະບັນລຸ 95%(ຄາດໝາຍ SDGs 90%), ອັດຕາສ່ວນຂອງຄອບຄົວທີ່ຊົມໃຊ້ວິດຖ່າຍ (9) ເພີ່ມຂຶ້ນຈາກ 90% ໃນປີ 2016 ມາເປັນ 96,5% ໃນປີ 2019 ແລະ ຄາດວ່າ ປີ 2020 ຈະບັນລຸໄດ້ 97% (ຄາດໝາຍ SDGs 75%); ສ້າງບ້ານແບບຢ່າງດ້ານສາທາລະນະສຸກ (10) ຈາກ87,2% ໃນປີ 2016 ມາເປັນ 93,8% ໃນປີ 2019 ແລະ ຄາດວ່າ ປີ 2020 ຈະບັນລຸ 100% (ຄາດໝາຍ SDGs 80%); ອັດຕາປົກຄຸມປະກັນສຸຂະພາບທົ່ວປວງຊົນ ບັນລຸ 100% (11); ອັດຕາປົກຫຸ້ມຂອງປ່າໄມ້ ຈາກ 69% ໃນປີ 2019 ແລະ ຄາດວ່າ ປີ 2020 ຈະກວມ 70% ຄາດໝາຍດັ່ງກ່າວ ແຂວງໄດ້ສຸມທຶນຮອນເຂົ້າໃສ່ຢ່າງຕັ້ງໜ້າ ເຮັດໃຫ້ບັນດາຕົວຊີ້ວັດດ້ານສາທາລະນະສຸກ ໄດ້ບັນລຸຕາມຄາດໝາຍທີ່ວາງໄວ້, ສ່ວນຕົວຊີ້ວັດດ້ານການປົກຫຸ້ມຂອງປ່າໄມ້ຍັງບໍ່ທັນບັນລຸຕາມຄາດໝາຍ.

| ຄາດໝາຍ/ຕົວຊີ້ບອກ | ຄາດໝາຍ 2016-20 | ປະຕິບັດ | | | | ຄາດຄະເນ 2020 |
|---|---|---|---|---|---|---|
| | | 2016 | 2017 | 2018 | 2019 | |
| ອັດຕາສ່ວນປະຊາກອນຊົມໃຊ້ນໍ້າສະອາດ | 93% | 91,9% | 92,7% | 92,4% | 95% | 93% |
| ອັດຕາສ່ວນຄອບຄົວຊົມໃຊ້ວິດຖ່າຍ | 97% | 91,8% | 93% | 94,2% | 96% | 97% |
| ບ້ານແບບຢ່າງດ້ານສາທາລະນະສຸກ | 95,8% | 87,2% | 90% | 91,1% | 93,8% | 100% |
| ອັດຕາປົກຫຸ້ມຂອງປ່າໄມ້ | % | % | % | % | % | % |

**3.2.2 ທຸກຄົນໄດ້ຮັບການສຶກສາ ຢ່າງທົ່ວເຖິງ ແລະ ມີຄຸນນະພາບ.**

ໄດ້ເອົາໃຈໃສ່ຜັນຂະຫຍາຍຍຸດທະສາດການສຶກສາ ຢ່າງແຂງແຮງ **ເປັນຕົ້ນ:** ການພັດທະນາດ້ານອາຊີວະສຶກສາ, ວິຊາຊີບ ແລະ ການສຶກສາສາຍສາມັນ; ເລັ່ງໃສ່ການປັບປຸງຄຸນນະພາບການສຶກສາ, ການແກ້ໄຂບັນຫາການຂາດຄູ ແລະ ການສອນທີ່ບໍ່ໄດ້ມາດຖານ, ດ້ວຍການຝຶກອົບຮົມ, ຍົກລະດັບ, ປະຕິບັດນະໂຍບາຍຕໍ່ຄູ-ອາຈານຕາມລະບຽບການ ແລະ ຕາມຄວາມສາມາດຕົວຈິງ; ການປະຕິບັດຕົວຊີ້ບອກຫຼັກໃນຂົງເຂດວຽກງານສຶກສາ 15 ຕົວຊີ້ບອກ ປະຕິບັດໄດ້ຄາດໝາຍ 4 ຕົວຊີ້ບອກ, ບໍາລຸງຍົກລະດັບຊັ້ນມັດທະຍົມຕົ້ນໄດ້ 3.721 ຄົນ, ຊັ້ນມັດທະຍົມປາຍໄດ້ 1.064 ຄົນ ແລະ ໄດ້ປະກາດເປັນແຂວງຈົບຊັ້ນມັດທະຍົມຕົ້ນບໍາລຸງປະຊາຊົນເປັນອັນດັບ 5 ໃນປີ 2018; ການກໍ່ສ້າງໂຄງລ່າງ ນອກຈາກການລົງທຶນຂອງລັດແລ້ວ ພວກເຮົາໄດ້ລະດົມການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ແລະ ການສົມທົບທຶນທັງພາຍໃນ ແລະ ຕ່າງປະເທດ, ບັນດາໂຮງຮຽນໄດ້ຮັບການປັບປຸງ, ສ້ອມແປງ ແລະ ກໍ່ສ້າງໃໝ່ ທຽບໃສ່ປີ 2016 ມີຈໍານວນເພີ່ມຂຶ້ນຫຼາຍແຫ່ງ; ປີ 2019 ທົ່ວແຂວງມີສະຖານອາຊີວະສຶກສາທັງໝົດ 14 ແຫ່ງ ໃນນັ້ນໂຮງຮຽນເຕັກນິກວິຊາຊີບ 1 ແຫ່ງ, ວິທະຍາໄລເອກະຊົນ 3 ແຫ່ງ, ສູນຝຶກວິຊາຊີບເອກະຊົນ 10 ແຫ່ງ, ມີຈໍານວນນັກຮຽນທັງໝົດ 7.064 ຄົນ, ຍິງ 3.536 ຄົນ, ໃນນັ້ນ ພາກລັດ 2.898 ຄົນ, ຍິງ 1.407 ຄົນ, ມີຄູອາຈານທັງໝົດ 136 ຄົນ, ຄູອາຈານຮັບເຊີນ 48 ຄົນ; ໂຮງຮຽນລ້ຽງເດັກ ແລະ ອານຸບານ 83 ແຫ່ງ ເພີ່ມຂຶ້ນ 36 ແຫ່ງ, ເດັກຝາກ, ຊັ້ນອະນຸບານ ແລະຫ້ອງກຽມປະຖົມທັງໝົດ 9.280 ຄົນ, ຍິງ 4.502 ຄົນ, ເພີ່ມຂຶ້ນ 3.826 ຄົນ ສະເລ່ຍ 765 ຄົນຕໍ່ປີໃນນີ້: ຄູສອນໃນຊັ້ນລ້ຽງເດັກ, ອະນຸບານ ແລະ ຫ້ອງກຽມ 575 ຄົນ ເພີ່ມຂຶ້ນ 378 ຄົນ;ໂຮງຮຽນປະຖົມ 318 ແຫ່ງ ເພີ່ມຂຶ້ນ 7 ແຫ່ງ, ໂຮງຮຽນມັດທະຍົມ 66 ແຫ່ງ ເພີ່ມຂຶ້ນ 4 ແຫ່ງ; ທົ່ວແຂວງມີພະນັກງານຄູທັງໝົດ 3.473 ຄົນ, ຍິງ 1.969 ຄົນ ເພີ່ມຂຶ້ນ 127 ຄົນ, ຄູສອນຊັ້ນປະຖົມ 1.700 ຄົນ, ຍິງ 1.013 ຄົນ ເພີ່ມຂຶ້ນ 108 ຄົນ; ຄູສອນຊັ້ນມັດທະຍົມ 1.026 ຄົນ, ຍິງ 471 ຄົນ ຫຼຸດລົງ 317 ຄົນ; ມີນັກຮຽນສາມັນທັງໝົດ 64.551 ຄົນ, ຍິງ 30.997 ຄົນ, ຊັ້ນປະຖົມ 33.488 ຄົນ, ຍິງ 16.196 ຄົນ ຫຼຸດລົງ 4.026 ຄົນ ສະເລ່ຍ 805 ຄົນຕໍ່ປີ; ອັດຕາເຂົ້າຮຽນຂອງເດັກ 5 ປີ 85,70% (ບັນລຸ)(1), ຈໍານວນເມືອງທີ່ບັນລຸອັດຕາເຂົ້າຮຽນຂອງເດັກ 5 ປີ ສູງກວ່າ 60%, ໄດ້ 7 ເມືອງ (ບັນລຸ)(2), ອັດຕາປະລະ ປ1 ໄດ້ 4% (ບັນລຸ)(3), ອັດຕາຄ້າງຫ້ອງ ປ1 ໄດ້ 4,50% (ບໍ່ບັນລຸ) (4), ອັດຕາປະລະຊັ້ນປະຖົມ ໄດ້ 2,60% (ບໍ່ບັນລຸ) (5) ອັດຕາຄ້າງຫ້ອງຊັ້ນປະຖົມ ໄດ້ 3,10%(ບັນລຸ) (6), ອັດຕາລອດເຫຼືອຮອດ ປ5 ໄດ້ 89,10% (ບໍ່ບັນລຸ)

(7), ຈຳນວນເມືອງທີ່ບັນລຸອັດຕາເຂົ້າຮຽນລວມ ໃໝ່ຮອດ ປ5 ສູງກວ່າ 95% ໄດ້ 7 ເມືອງ(ບັນລຸ) (8), ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນໄດ້ 84,70% (ບໍ່ບັນລຸ) (9), ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍໄດ້ 53% (ບໍ່ບັນລຸ) (10), ອັດຕາປະລະຊັ້ນມັດທະຍົມຕອນຕົ້ນໄດ້ 11,20% (ບໍ່ບັນລຸ)(11), ອັດຕາປະລະຊັ້ນມັດທະຍົມຕອນປາຍໄດ້ 10,50% (ບໍ່ບັນລຸ) (12), ຈຳນວນເມືອງທີ່ບັນລຸອັດຕາເຂົ້າຮຽນຮອດ ມ4 ຂອງນັກຮຽນຍິງສູງກວ່າ 70% ໄດ້ 4 ເມືອງ (ບໍ່ບັນລຸ) (13), ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕົ້ນໄດ້ຮຽນຕໍ່ອາຊີວະສຶກສາ ແລະ ວິຊາຊີບ 4% ໄດ້ 0,98% ແລະ ຮຽນຕໍ່ຊັ້ນມັດທະຍົມຕອນປາຍ ແລະ ນັກຮຽນທີ່ຮຽນຈົບ ມ7 ໄດ້ຮຽນຕໍ່ໃນລະດັບຕ່າງໆ 80% ໄດ້ 25,2%(ບໍ່ບັນລຸ) (14) ໃຫ້ປະຊາຊົນລາວບັນດາເຜົ່າ ທຸກເພດທຸກໄວໄດ້ເຂົ້າຮ່ວມການຫັດກາຍຍະບໍລິຫານ, ອອກກຳລັງກາຍ, ຫຼິ້ນກິລາເພື່ອສຸຂະພາບ ແລະ ຂະບວນກິລາປະເພດຕ່າງໆ ໃຫ້ໄດ້ 30% ໄດ້ 18,70% (ບໍ່ບັນລຸ) (15); ບຳລຸງຍົກລະດັບຊັ້ນມັດທະຍົມຕົ້ນໄດ້ 3.721 ຄົນ, ຊັ້ນມັດທະຍົມປາຍໄດ້ 1.064 ຄົນ ແລະ ປະກາດເປັນແຂວງຈົບມັດທະຍົມຕົ້ນເປັນອັນດັບ 5 ຂອງປະເທດ ໃນປີ 2018 (ລາຍລະອຽດເປົ້າໝາຍ SDGs ດ້ານການສຶກສາມີຕາຕາລາງ ຊ້ອນທ້າຍ).

ຂະບວນການກິລາຂອງປວງຊົນໄດ້ຂະຫຍາຍຕົວຢ່າງກວ້າງຂວາງດ້ານປະລິມານ, ຄຸນນະພາບ ແລະ ມາດຕະຖານ ນັບມື້ນັບສູງຂຶ້ນ; ຈັດການແຂ່ງຂັນກິລາສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງຊາດ, ແຂ່ງຂັນກິລາມິດຕະພາບ, ແຂ່ງຂັນກິລາທົ່ວແຂວງ 555 ຄັ້ງ, ໄດ້ສົ່ງນັກກິລາປະເພດ: ມວຍສາກົນ, ມວຍລາຍລາວ, ເປຕັງ, ເຕະບານ, ດອກປີກໄກ່, ເຮືອຊ່ວງ ແລະ ອື່ນໆ ເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາລະດັບຊາດ 12 ຄັ້ງ ໄດ້ຮັບຫຼຽນຄຳ 12 ຫຼຽນ, ຫຼຽນເງິນ 9 ຫຼຽນ, ຫຼຽນທອງ 21 ຫຼຽນ.

### 3.2.3 ຮັບປະກັນການບໍລິການດ້ານສາທາລະນະສຸກໃຫ້ທົ່ວເຖິງ ແລະ ມີຄຸນນະພາບ.

ຖືເອົາວຽກງານກັນພະຍາດເປັນຕົ້ນຕໍ ເອົາການປິ່ນປົວທີ່ມີຄຸນນະພາບເປັນສຳຄັນ, ປະຈຸບັນຕາໜ່າງການບໍລິການດ້ານສາທາລະນະສຸກ ໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງ ແລະ ກວມເອົາ 100% ໃນທົ່ວແຂວງ, ປະຊາຊົນທຸກຄົນສາມາດເຂົ້າເຖິງການບໍລິການ ທີ່ມີຄຸນນະພາບ, ພື້ນຖານໂຄງລ່າງໄດ້ຮັບການປັບປຸງ, ສ້ອມແປງ, ກໍ່ສ້າງ ແລະ ຍົກລະດັບດີຂຶ້ນ; ໃນໄລຍະ 5 ປີ ໄດ້ສຳເລັດການສ້າງໂຮງໝໍແຂວງຫຼັງໃໝ່, ໂຮງໝໍຊຸມຊົນເມືອງປາກກະດິງ, ເມືອງບໍລິຄັນ, ເມືອງວຽງທອງ, ເມືອງໄຊຈຳພອນ ແລະ ໂຮງໝໍນ້ອຍ 10 ແຫ່ງ **ຄື:** ໂຮງໝໍນ້ອຍນາກຸນ, ຈອມທອງ, ທົ່ງແສນ, ຫົງໄຊ, ປາກກະດິງ, ນາຄຳ, ຊຳເຕີຍ, ໜອງກອກ, ພູຄຳ ແລະ ພູໂຮມໄຊ; ກຸ່ມບ້ານ ແລະ ບ້ານໃຫຍ່ມີໂຮງໝໍນ້ອຍ, ສູນບໍລິການ ເອກະຊົນ, ນອກໂມງການ, ຮ້ານຂາຍຢາ ແລະ ຖົງຢາປະຈຳບ້ານ; ປະຈຸບັນທົ່ວແຂວງ ມີຖົງຢາປະຈຳບ້ານ 87 ບ້ານ, ໂຮງໝໍນ້ອຍ 42 ແຫ່ງ, ໂຮງໝໍຊຸມຊົນ 7 ແຫ່ງ (ລວມທັງໂຮງໝໍຊຸມຊົນເມືອງໄຊຈຳພອນ ກໍ່ສ້າງສຳເລັດແລ້ວແຕ່ບໍ່ທັນໄດ້ນຳໃຊ້ເທື່ອ), ໂຮງໝໍແຂວງ 1 ແຫ່ງ, ມີພະນັກງານບໍລິຫານ ແລະ ແພດໝໍ 777 ຄົນ, ຍິງ 484 ຄົນ, ຂັ້ນແຂວງ ກວມ 25%, ຂັ້ນເມືອງ 50,5 % ແລະ ຂັ້ນໂຮງໝໍນ້ອຍ 24,5% ທຽບໃສ່ປີ 2016 ຫຼຸດລົງ 8 ຄົນ ໃນນີ້: ຊ່ຽວຊານ 34 ຄົນ, ປະລິນຍາໂທ 21 ຄົນ, ປະລິນຍາຕີ 192 ຄົນ, ຊັ້ນສູງ 126 ຄົນ, ຊັ້ນກາງ 332 ຄົນ, ຊັ້ນຕົ້ນ 69 ຄົນ; ພວກເຮົາໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຄາດໝາຍ ແມ່ ແລະ ເດັກ, ບໍລິການແບບເຊື່ອມສານ ສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ, ຍຸດທະສາດໂພຊະນາການ, ພັດທະນາບ້ານສາທາລະນະສຸກແບບຢ່າງ, ບ້ານ ແລະ ເມືອງ ຢຸດຕິການຖ່າຍຊະຊາຍ; ມາຮອດ ວັນທີ 31 ກໍລະກົດ 2020 ໄດ້ປະກາດຮັບຮອງແຂວງບໍລິຄຳໄຊເປັນແຂວງຢຸດຕິການຖ່າຍສະຊາຍແຂວງທີ I ຂອງ ສປປ ລາວ; ຕິດຕາມ-ເຝົ້າລະວັງອາການພະຍາດ, ຕ້ານ ແລະ ສະກັດກັ້ນພະຍາດຕິດຕໍ່ທີ່ມັກເກີດຂຶ້ນຕາມລະດູການ, ຕ້ານ ແລະ ສະກັດກັ້ນໄດ້ ການລະບາດຂອງພະຍາດອັກເສບປອດສາຍພັນໃໝ່ (COVID-19), ພະຍາດໄຂ້ຍຸງລາຍບໍ່ໃຫ້ລະບາດຮ້າຍແຮງ ແລະ ຂະຫຍາຍໄປສູ່ວົງກວ້າງ, ພັດທະນາ ແລະ ປັບປຸງການບໍລິການປິ່ນປົວສຸຂະພາບໃນສະຖານທີ່ບໍລິການຂອງລັດແຕ່ລະຂັ້ນ ໃຫ້ມີຄຸນນະພາບ ໂດຍເລັ່ງໃສ່ ວຽກງານ 5 ດີ 1 ພໍໃຈ ແລະ 10 ຄວາມຈຳເປັນພື້ນຖານໃນການບໍລິການສຸຂະພາບຢູ່ໂຮງໝໍແຂວງ, ໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍ, ປັບປຸງລະບົບຕິດຕາມ ແລະ ເຝົ້າລະວັງຄວາມປອດໄພ ຂອງອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ຈຳໜ່າຍ ແລະ ຈໍລະຈອນແຈກຢາຍໃນທົ່ວແຂວງ ພ້ອມທັງມີລະບົບແຈ້ງເຕືອນຮີບດ່ວນ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງຜູ້ບໍລິໂພກ, ປະຕິບັດນະໂຍບາຍປະກັນສຸຂະພາບ ທົ່ວປວງຊົນປົກຄຸມ 100% ໃນທົ່ວແຂວງ, ສູ້ຊົນປະຕິບັດອັດຕາການສັກຢາກັນພະຍາດໃຫ້ເດັກກຸ່ມ 1 ປີ ບັນລຸໄດ້ 95%, ອັດຕາການຕາຍຂອງເດັກກຸ່ມ 1 ປີ 14,1/1.000 ຄົນ,

ອັດຕາການຕາຍຂອງເດັກລຸ່ມ 5 ປີ 17/1.000 ຄົນ ແລະ ອັດຕາການຕາຍຂອງແມ່ 28,6/100.000 ຄົນ; ອັດຕາການຂາດສານອາຫານ: ເດັກຄວາມສູງຕໍ່າກວ່າມາດຖານ(ເຕ້ຍ) ປະຕິບັດໄດ້ 22%, ເດັກນໍ້າໜັກຫຼຸດມາດຖານ 16%, ອັດຕາຄຸມກໍາເນີດ 40%, ອັດຕາການຈະເລີນພັນ 2,8%, ອັດຕາປົກຄຸມການກວດກ່ອນການເກີດ ຄັ້ງທີ 1 ໄດ້ 96%,ອັດຕາປົກຄຸມການກວດກ່ອນການເກີດຄັ້ງທີ4 ໄດ້ 76%, ອັດຕາສ່ວນປະຊາກອນຊົມໃຊ້ນໍ້າສະອາດບັນລຸໄດ້ 95%, ການຊົມໃຊ້ວິດຖ່າຍ 96%, ຊົມໃຊ້ວິດຖ່າຍໃນໂຮງຮຽນ 96,9%, ອັດຕາການເກີດໂດຍມີແພດຊ່ວຍ 79%, ອັດຕາການຕິດເຊື້ອ HIV ໃນກຸ່ມປະຊາກອນທົ່ວໄປ 0,53%, ອັດຕາການເຈັບເປັນຍ້ອນພະຍາດໄຂ້ຍຸງ 0,003/1.000 ຄົນ, ອັດຕາການຕາຍຍ້ອນໄຂ້ຍຸງຂອງປະຊາກອນ 0/100.000 ຄົນ, ອັດຕາການເຈັບເປັນຍ້ອນພະຍາດໄຂ້ຍຸງລາຍ 3,8/1.000 ຄົນ, ອັດຕາຄົ້ນພົບວັນນະໂລກໃໝ່ປະຕິບັດໄດ້ 30%, ອາຍຸຍືນສະເລ່ຍຂອງປະຊາກອນ 66 ປີ, ສ້າງບ້ານແບບຢ່າງດ້ານສາທາລະນະສຸກໄດ້ 273 ບ້ານ ກວມ 93,8%, ຄອບຄົວແບບຢ່າງດ້ານສາທາລະນະສຸກ 45.918 ຄອບຄົວ ກວມ 88,4% ແລະ ປະກາດເປັນເມືອງແບບຢ່າງດ້ານສາທາລະນະສຸກ ແລະ ບ້ານຢຸດຕິການຖ່າຍຊະຊາຍໄດ້ 5 ເມືອງ,ກວມ 71,4%.

**3.2.4 ການບໍລິການທາງດ້ານສະຫວັດດີການສັງຄົມໄດ້ຮັບການຍົກລະດັບ ແລະ ທຸກຄົນໄດ້ເຂົ້າເຖິງຢ່າງກວ້າງຂວາງ.**

**3.2.4.1 ວຽກແຮງງານ ແລະ ສະຫວັດດີການສັງຄົມ.**

ພວກເຮົາໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ໃນການຈັດຕັ້ງຝຶກອົບຮົມວິຊາຊີບ ແລະ ພັດທະນາສີມືແຮງງານໃຫ້ແກ່ໄວໜຸ່ມທີ່ຮຽນຈົບມັດທະຍົມຕົ້ນ, ມັດທະຍົມປາຍ ແລະ ຜູ້ດ້ອຍໂອກາດໃນ 7 ສາຂາວິຊາຊີບ ຈໍານວນ 8.417 ຄົນ, ຍິງ 3.422 ຄົນ ສະເລ່ຍ 1.683 ຄົນຕໍ່ປີ ທຽບໃສ່ແຜນປະຕິບັດໄດ້ 120%, ຈັດຫາວຽກເຮັດງານທໍາໃຫ້ແກ່ແຮງງານລາວຢູ່ພາຍໃນ ແລະ ຕ່າງປະເທດໄດ້ 11.220 ຄົນ, ຍິງ 3.870 ຄົນ ສະເລ່ຍ 2.244 ຄົນຕໍ່ປີ ທຽບໃສ່ແຜນໄດ້ 160%; ເກັບກໍາ, ຕິດຕາມ ແລະ ກວດກາການເຄື່ອນຍ້າຍແຮງງານພາຍໃນ ແລະ ຕ່າງປະເທດໃຫ້ເຂົ້າສູ່ລະບຽບກົດໝາຍ, ຂຶ້ນທະບຽນ ແລະ ອອກບັດອະນຸຍາດໃຫ້ແຮງງານຕ່າງປະເທດ 1.148 ຄົນ, ຍິງ 161 ຄົນ ສະເລ່ຍ 230 ຄົນຕໍ່ປີ, ແຮງງານລາວທີ່ໄປເຮັດວຽກຢູ່ຕ່າງປະເທດແບບບໍ່ຖືກຕ້ອງທົ່ວແຂວງມີ 294 ຄົນ, ຍິງ 233 ຄົນ, ຈັດຕັ້ງເຜີຍແຜ່ກົດໝາຍແຮງງານໄດ້ 44 ຄັ້ງ ມີ 44 ຫົວໜ່ວຍ, ມີຜູ້ເຂົ້າຮ່ວມຟັງ 901 ຄົນ, ຍິງ 113 ຄົນ, ໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານແຮງງານໄດ້ 10 ກໍລະນີ; ໄດ້ລົງເກັບກໍາຂໍ້ມູນ ກວດກາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແຮງງານ ແລະ ໂຄງການຕ່າງໆພາຍໃນແຂວງໄດ້ 333 ຄັ້ງ ໄດ້ 352 ຫົວໜ່ວຍ ມີແຮງງານທັງໝົດ 19.172 ຄົນ ຍິງ 2.355 ຄົນ, ໃນນັ້ນມີແຮງງານລາວ 10.266 ຄົນ, ຍິງ 1.580 ຄົນ, ແຮງງານຕ່າງປະເທດ 8.906 ຄົນ, ຍິງ 775 ຄົນ; ໄດ້ສືບຕໍ່ປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຄຸນງາມຄວາມດີ, ວິລະຊົນແຫ່ງຊາດ, ພະນັກງານບໍານານ-ອາວຸໂສຢ່າງເໝາະສົມ ຈໍານວນ 790 ທ່ານ ທຽບໃສ່ແຜນປະຕິບັດໄດ້ 3 ເທົ່າ **ເຊັ່ນ:** ນະໂຍບາຍເງິນປ່ຽນແທນໂຄຕາລົດ 30 ທ່ານ, ຍິງ 5 ທ່ານ, ເປັນເງິນ 1,31 ຕື້ກີບ, ອຸດໜູນຜູ້ເສຍຊີວິດ 242 ທ່ານ, ຍິງ 12 ທ່ານ, ເປັນເງິນ 5,64 ຕື້ກີບ ແລະ ຜູ້ມີຊີວິດ 102 ທ່ານ ຍິງ 17 ທ່ານ, ເປັນເງິນ 1,96 ຕື້ກີບ; ສ້າງ ແລະ ສ້ອມແປງເຮືອນ ໃຫ້ພະນັກງານບໍານານ 20 ທ່ານ, ຍິງ 1 ທ່ານ, ມູນຄ່າ 600 ລ້ານກີບ, ອຸດໜູນເສຍອົງຄະຄືນໃໝ່ ຕາມດໍາລັດ 343/ນຍ ໄດ້ 217 ທ່ານ, ອຸດໜູນບໍານານຄືນຕາມລໍາລັດ 241/ນຍ ໄດ້ 179 ທ່ານ ຍິງ 35 ທ່ານ, ປະຕິບັດການສົງເຄາະຜູ້ທີ່ຖືກເຄາະຮ້າຍຈາກໄພພິບັດຕ່າງໆ **ເຊັ່ນ:** ພາຍຸ ແລະ ໄຟໄໝ້ 6 ຄັ້ງ ລວມມູນຄ່າ 333,80 ລ້ານກີບ; ໄດ້ສົ່ງເດັກເຂົ້າບ້ານ SOS ນະຄອນຫຼວງວຽງຈັນ ຈໍານວນ 2 ຄົນ, ໄດ້ມອບເງິນມູນຄ່າ 25 ລ້ານກີບ ໃຫ້ 5 ຄອບຄົວຖືກການຄ້າມະນຸດ ເພື່ອຊື້ງົວລ້ຽງ, ປະສານສົມທົບກັບອົງການເກັບກູ້ລະເບີດແຫ່ງຊາດ, ບໍລິສັດອຸບມາ, ກອງກວດກູ້ລະເບີດເພື່ອມະນຸດສະທໍາກອງທັບ (58) ແລະ ຄະນະກໍາມະການກວດກາມິ່ນສາກົນລັດເຊຍ ໄດ້ດໍາເນີນການກວດກູ້ ແລະ ທໍາລາຍລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ໃນເມືອງຄໍາເກີດ ແລະ ເມືອງປາກກະດິງ ໃນເນື້ອທີ່ 7.667 ເຮັກຕາ (ແຜນ 100 ເຮັກຕາ) ໃນນັ້ນ, ພົບລູກລະເບີດບໍ່ທັນແຕກ 381 ລູກ, ໄດ້ຂະຫຍາຍຕາໜ່າງການປົກຄຸ້ມການເຂົ້າປະກັນສັງຄົມ ຢ່າງກວ້າງຂວາງ.

**3.2.4.2 ວຽກງານກາແດງ.**

ເອົາໃຈໃສ່ປຸກລະດົມຂົນຂວາຍ, ຍາດແຍ່ງການຊ່ວຍເຫຼືອຈາກອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ, ສືບຕໍ່ຈັດຕັ້ງອາສາສະໝັກກາແດງ ແລະ ແມ່ຍິງກາແດງເພື່ອຕອບໂຕ້ອຸປະຕິໄພ, ຊ່ວຍເຫຼືອຜູ້ທຸກຍາກ

ປ່ຽວພອຍ, ຜູ້ດ້ອຍໂອກາດ ແລະ ບັນເທົາທຸກ; ສາມາດລະດົມການຊ່ວຍເຫຼືອໄດ້ທັງໝົດ 1.015.104.000 ກີບ ໃນນີ້: ຊ່ວຍເຫຼືອບັນເທົາທຸກໃຫ້ປະຊາຊົນຜູ້ທຸກຍາກ, ອານາຖາ, ດ້ອຍໂອກາດ, ຜູ້ເຄາະຮ້າຍຈາກໄຟໄໝ້ເຮືອນ ແລະ ຜູ້ເຄາະຮ້າຍຈາກໄພພິບັດ ມູນຄ່າ 816.418.000 ກີບ; ຊ່ວຍເຫຼືອອຸປະກອນ, ສ້ອມແປງໂຮງຮຽນ ມູນຄ່າ 198.686.000 ກີບ, ໄດ້ຮັບເຄື່ອງຊ່ວຍເຫຼືອບັນເທົາທຸກປະເພດເຄື່ອງນຸ່ງຫົ່ມຈາກອົງການ (JRCC) ທີ່ໂອສະກະ ປະເທດຍີປຸ່ນ ຈຳນວນ 200 ຫີບຫໍ່ ແລະ 30 ໂຕນ ມູນຄ່າ 299,20 ລ້ານກີບ, ຮັບບໍລິຈາກເລືອດໄດ້ທັງໝົດ 11.724 ຖົງ, ສະເລ່ຍ 2.345 ຖົງຕໍ່ປີ, ຈ່າຍເລືອດປອດໄພໃຫ້ຄົນເຈັບ 5.749 ຖົງ.

**3.2.5 ພັດທະນາ, ປົກປັກຮັກສາຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງເຜົ່າ ຕິດພັນກັບການທ່ອງທ່ຽວ.**

**3.2.5.1 ດ້ານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.**

**1) ຖະແຫຼງຂ່າວ:** ຄຸ້ມຄອງ, ຕິດຕາມການເຄື່ອນໄຫວວຽກງານຖະແຫຼງຂ່າວສື່ມວນຊົນຖືກຕ້ອງຕາມລະບຽບ, ກວດກາ ແລະ ອອກອະນຸຍາດສື່ສິ່ງພິມທີ່ມີການເຄື່ອນໄຫວພາຍໃນແຂວງໄດ້ 25 ຄັ້ງ, ເຄື່ອນໄຫວສາຍຮູບເງົາໃນວັນສຳຄັນຕ່າງໆ ໄດ້ 20 ຄັ້ງ, ປະຈຸບັນມີລະບົບໂທລະໂຄ່ງທັງໝົດ 278 ບ້ານ ເທົ່າກັບ 95,5% ຂອງຈຳນວນບ້ານທັງໝົດ.

- ລົງເກັບກຳຂ່າວ, ຂຽນຂ່າວໄດ້ 3.310 ຂ່າວ, ຮັບຂ່າວຈາກພະແນກອ້ອມຂ້າງ ແລະ ເມືອງ 1.535 ຂ່າວ, ແຟັກຂ່າວໃຫ້ວິທະຍຸກະຈາຍສຽງແຫ່ງຊາດໄດ້ 2.055 ຂ່າວ, ສົ່ງຂ່າວໃຫ້ໂທລະພາບແຫ່ງຊາດໄດ້ 3.005 ຂ່າວ, ສົ່ງຂ່າວໃຫ້ໂທລະພາບລາວສະຕຣາແຊນແນວ 355 ຂ່າວ, ຕັດຕໍ່ຂ່າວ ແລະ ອອກຂ່າວສື່ໂທລະພາບ ໄດ້ 4.640 ຂ່າວ, ອ່ານຂ່າວອອກທາງສື່ວິທະຍຸ ໄດ້ 4.635 ຂ່າວ, ອ່ານຂ່າວໜ້າໜັງສືພິມໄດ້ 2.400 ຂ່າວ, ໃນນັ້ນ: ຂ່າວຕ່າງປະເທດ 4.050 ຂ່າວ, ອອກທາງເຟສບຸກ ແລະ ຢູທູບໄດ້ 2.875 ຂ່າວ, ໄລ້ສົດທາງເຟສບຸກ 1.485 ຂ່າວ, ເຄື່ອນໄຫວຜະລິດຂ່າວໄດ້ 180 ບົດ, ລາຍງານຂ່າວເປັນພາສາມົ້ງໃຫ້ວິທະຍຸແຫ່ງຊາດໄດ້ 380 ຂ່າວ, ພາສາກຶມມຸໄດ້ 455 ຂ່າວ; ດ້ານເຕັກນິກແມ່ນເປີດເຄື່ອງສົ່ງອອກອາກາດທາງໂທລະພາບໄດ້ 8.820 ຊົ່ວໂມງ ກວມ 20% ຂອງພື້ນທີ່, ວິທະຍຸ 21.600 ຊົ່ວໂມງ ກວມ 50% ຂອງພື້ນທີ່; ຖ່າຍທອດສົດອອກອາກາດທາງວິທະຍຸແຂວງໃນກອງປະຊຸມສະໄໝສາມັນ ຂອງສະພາປະຊາຊົນແຂວງແຕ່ລະຄັ້ງ, ຈັດພິມໜັງສືພິມໄດ້ 75.000 ສະບັບ.

**2) ວັດທະນະທຳ:** ສາມາດສ້າງຄອບຄົວວັດທະນະທຳໄດ້ແລ້ວ 45.722 ຄອບຄົວ ເທົ່າກັບ 84,6% ຂອງຈຳນວນຄອບຄົວທົ່ວແຂວງ, ຫຼຸດແຜນ 0,4%, 5 ປີຜ່ານມາ ສ້າງບ້ານວັດທະນະທຳໄດ້ຕື່ມ 45 ບ້ານ(ແຜນ 72 ບ້ານ) ປະຕິບັດໄດ້ 62%, ມາຮອດປະຈຸບັນທົ່ວແຂວງມີບ້ານວັດທະນະທຳທັງໝົດ 265 ບ້ານ ກວມ 91,06%, ກໍ່ສ້າງເຮືອນຊົງລາວຂອງແຂວງບໍລິຄຳໄຊ ແລະ ແຂວງຄຳມ່ວນ ສ ປປ ລາວ ສຳເລັດແລ້ວ 100% ໃນມູນຄ່າ 1.586.469.473 ກີບ, ສຳເລັດສ້າງສວນສາທາລະນະ ທ່ານສີສົມພອນ ລໍວັນໄຊ, ຈັດງານປະກວດນາງສັງຂານ ແລະ ທ້າວທຳມະບານກຸມມານ, ແຫ່ນາງສັງຂານ 1 ຄັ້ງ, ປະກວດສາວງາມແຂວງບໍລິຄຳໄຊ 1 ຄັ້ງ, ອາພອນເພດຊົງລາວ 1 ຄັ້ງ, ນັກຮ້ອງ-ໝໍລຳສຽງດີ 2 ຄັ້ງ, ນຳພາສິນລະປະພາຍໃນແຂວງຈຳນວນໜຶ່ງໄປສະແດງຢູ່ຕ່າງແຂວງ 3 ຄັ້ງ, ຕ່າງປະເທດ 9 ຄັ້ງ, ປະກວດຂັບໝາກເບັງ 2 ຄັ້ງ, ຈັດງານປະກວດນັກຮ້ອງສຽງດີທົ່ວເມືອງທ່າພະບາດ 5 ຄັ້ງ, ປຸກລະດົມຊຸກຍູ້ຄະນະສິນລະປະໂຮງຮຽນ, ບ້ານວັດທະນະທຳເຂົ້າສະແດງໃນງານສຳຄັນຂອງແຂວງໄດ້ 86 ຄັ້ງ ມີ 413 ລາຍການ, ຂຶ້ນທະບຽນພະພຸດທະຮູບທີ່ເກົ່າແກ່ແລະຫຼໍ່ຂຶ້ນໃໝ່ໄດ້ 178 ອົງ, ກຳນົດປັກຫຼັກເຂດມໍລະດົກຂອງແຂວງໄດ້ 3 ວັດ (ວັດພະບາດ, ວັດໂພນສັນ ແລະ ວັດທາດພູວຽງ) ໄດ້ 28 ຫຼັກ.

**3) ທ່ອງທ່ຽວ:** ຮອດປີ 2020 ມີນັກທ່ອງທ່ຽວ 666.104 ເທື່ອຄົນ, ພັດທະນາແຫຼ່ງທ່ອງທ່ຽວໄດ້ 5 ແຫ່ງລື່ນຄາດໝາຍ 25%, ປັບປຸງ ແລະ ພັດທະນາສະຖານທີ່ທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ທີ່ມີການບໍລິການອະນຸລັກ ແລະ ປະຊາຊົນມີສ່ວນຮ່ວມໄດ້ 3 ແຫ່ງ ໄດ້ຕາມຄາດໝາຍ 100%, ປັບປຸງແຫຼ່ງທ່ອງທ່ຽວທີ່ມີການບໍລິການແລ້ວໄດ້ 5 ແຫ່ງ.

**3.2.6 ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ໝັກແໜ້ນ, ສັງຄົມມີຄວາມສະ ຫງົບ, ເປັນລະບຽບຮຽບຮ້ອຍ, ຍຸດຕິທຳ ແລະ ໂປ່ງໃສ.**

**3.2.6.1 ການພັດທະນາຕິດພັນກັບວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ.**

**1) ວຽກງານປ້ອງກັນຊາດ.**

ໄດ້ປະຕິບັດນະໂຍບາຍຂອງກະຊວງວາງອອກຢ່າງເຂັ້ມງວດເປັນຕົ້ນວຽກປະຈຳວັນຄື 7 ລະບອບ 18 ວຽກ

ແລະ ຍຸດທະສາດ 4 ໜ້າທີ່ໃຫຍ່ 26 ແຜນງານ, ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງ ໂດຍສະເພາະເຂດຫຼໍ່ແຫຼມຂອງແຂວງ, ສຶກສາອົບຮົມການເມືອງ-ແນວຄິດ ເປັນປົກກະຕິ, ເປີດຊຸດອົບຮົມທິດສະດີການເມືອງ-ການປົກຄອງໄລຍະສັ້ນ 45 ວັນ ໄດ້ 4 ຊຸດ ຈຳນວນພົນເຂົ້າຮ່ວມ 278 ສະຫາຍ; ສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປົດປ່ອຍປະຊາຊົນລາວ ຄົບຮອບ 70 ປີ ຢ່າງຍິ່ງໃຫຍ່ ແລະ ມີຄວາມໝາຍ; ອົບຮົມ-ຫັດແອບ ສ້າງບ້ານປ້ອມໝັ້ນສູ້ຮົບຕິດລ່ຽນໄດ້ 18 ບ້ານ, ກຸ່ມບ້ານ ສູ້ຮົບຕິດລ່ຽນ ໄດ້ 9 ກຸ່ມບ້ານ; ເຂົ້າຮ່ວມປັກຫຼັກໝາຍ ແລະ ບູລະນະຫຼັກ ໝາຍຊາຍແດນ ລະຫວ່າງ ແຂວງບໍລິຄຳໄຊ-ແຂວງຮາຕິ້ງ- ແຂວງເຫງະອານ 63 ຫຼັກໝາຍ; ຮ່ວມກັນຊອກ, ຂຸດຄົ້ນ-ຈັດສົ່ງອັດຖິທະຫານອາສາສະໝັກ ແລະ ຊ່ຽວຊານຫວຽດນາມ ທີ່ເສຍສະຫຼະຊີວິດ ຢູ່ແຂວງບໍລິຄຳໄຊໃນປາງສົງຄາມໄດ້ 58 ອັດຖິ; ແຂວງຮ່າຕິ່ງ ໄດ້ຊ່ວຍເຫຼືອເອົານາຍທະຫານຂອງແຂວງບໍລິຄຳໄຊ ໄປຝຶກອົບຮົມວິຊາສະເພາະໄລຍະສັ້ນ 120 ສະຫາຍ, ຊ່ວຍສ້ອມແປງ ຟື້ນຟູພາຫະນະເປ່ເພໄດ້ 8 ຄັນ ແລະ ສ້ອມແປງອາວຸດໄດ້ 634 ກະບອກ, ກວດກາລາດຕາເວັນຕາມບໍລິເວນຊາຍແດນບໍລິຄຳໄຊ-ບຶງການ-ໜອງຄາຍ ແລະ ນະຄອນພະນົມ ລາດຊະອານາຈັກໄທ; ປັບປຸງ-ກໍ່ສ້າງພື້ນຖານໂຄງລ່າງ 103 ໂຄງການ ມູນຄ່າ 42.614.595.111 ກີບ ປະຕິບັດໄດ້ແລ້ວ 39 ໂຄງການ ມູນຄ່າ 7,08 ຕື້ກີບ; ເຮັດນາ ໄດ້ 29,4 ຮຕ ຜົນຜະລິດ ໄດ້ 58.736 ກິໂລ/ປີ, ປູກຜັກ 12,5 ຮຕ ຜົນຜະລິດ 264.773 ກິໂລ/ປີ, ປູກຕົ້ນໄມ້ ອຸດສາຫະກຳໄດ້ 28.453 ຕົ້ນ, ຕົ້ນໄມ້ກິນໝາກ ແລະ ຕົ້ນໄມ້ປະດັບ 3.528 ຕົ້ນ; ມີງົວ 638 ໂຕ, ໝູ ແລະ ແບ້ 204 ໂຕ, ເປັດ ແລະ ໄກ່ 4.646 ໂຕ, ໜອງປາ 23 ໜອງ ມີປາ 198.000 ໂຕ ສ້າງລາຍຮັບຈາກການຂາຍຜົນຜະລິດດັ່ງກ່າວໄດ້ 4.181.971.000 ກີບ.

**2) ວຽກງານປ້ອງກັນຄວາມສະຫງົບ.**

ໄດ້ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ແລະ ກົມກອງຕາມຄຳສັ່ງ ເລກທີ 27/ນຍ, ຄຳສັ່ງ ເລກທີ 22/ກມສພ ແລະ ແຜນງານໃຫຍ່ 41 ໂຄງການ, ປັບປຸງກຳລັງປ້ອງກັນຄວາມສະຫງົບ ມີຄວາມເຕີບໃຫຍ່ເຂັ້ມແຂງ ສາມາດປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍ່ຄືແຂວງ, ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ, ຕອບຕ້ານອາດສະຍາກຳ, ແກ້ໄຂກຸ່ມແກ້ງກໍ່ການກະທຳຜິດ ແລະ ລົງໂທດຕາມກົດໝາຍທັນເວລາ; ໄດ້ສຶກສາອົບຮົມປະຊາຊົນ ແລະ ໄວໜຸ່ມ ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ; ໄດ້ເອົາໃຈໃສ່ກວດກາຄຸ້ມຄອງຊາຍແດນ, ຕ້ານ ແລະ ສະກັດກັ້ນແກ້ໄຂຢາເສບຕິດຢ່າງເຂັ້ມງວດ, ຄຸ້ມຄອງກວດກາການຈາລະຈອນ ເພື່ອຫຼຸດຜ່ອນອຸບັດຕິເຫດຕາມທ້ອງຖະໜົນ; ຊຶ່ງການນຳຂອງແຂວງໄດ້ມີຫົວຄິດປະສ້າງ ໃນການຄຸ້ມຄອງວຽກງານດັ່ງກ່າວ ດ້ວຍການວາງ 9 ຫົວຂໍ້ ສຳມະນາວິທະຍາສາດ ແລະ ມາດຕະການແກ້ໄຂບັນຫາ 4 ເງື່ອນ.

**3.2.6.2 ສະກັດກັ້ນປະກົດການຫຍໍ້ທໍ້ທາງສັງຄົມ.**

ໄດ້ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ແຕ່ຫົວທີ, ຖືກຈຸດ, ກັບທີ່, ຖືກເປົ້າໝາຍ ແລະ ສຶກສາອົບຮົມວຽກງານການເມືອງແນວຄິດ ຕິດພັນກັບການນຳໃຊ້ລະບຽບກົດໝາຍ, ຜ່ານການຈັດຕັ້ງປະຕິບັດເຮັດໄດ້ຄື: ແກ້ໄຂຄະດີຢາເສບຕິດໄດ້ 594 ເລື່ອງ, ກັກຜູ້ຖືກຫາ 778 ຄົນ, ຍິງ 94 ຄົນ, ຄົນຕ່າງປະເທດ 31 ຄົນ; ຢຶດຂອງກາງປະເພດຕ່າງໆ: ຢາບ້າ 3.900.826 ເມັດ, ຢາໄອ 305 ກິໂລ, ເຮໂລອິນ 154 ແທ່ງ, ກັນຊາແຫ້ງ 6.867 ກິໂລ, ຢາຝິ່ນ 7,3 ກິໂລ, ສານເຄມີຂັ້ນຕົ້ນ 14 ຟຸຍ, ອາວຸດເສິກ 21 ກະບອກ, ປືນລ່າເນື້ອ 61 ກະບອກ, ລູກປືນ 286 ລູກ, ໝາກແຕກ 2 ໜ່ວຍ, ທາດລະເບີດ 4,5 ກິໂລ, ລົດໃຫຍ່ 55 ຄັນ, ລົດຈັກ 103 ຄັນ ແລະ ອື່ນໆ.

**3.3. ເປົ້າໝາຍທີ 3: ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ຮັບການປົກປັກຮັກສາ, ນຳໃຊ້ຢ່າງມີປະສິດທິຜົນ ແລະ ຮັບປະກັນຄວາມຍືນຍົງ, ກຽມພ້ອມຮັບມືກັບໄພພິບັດຢ່າງທັນການ ແລະ ຟື້ນຟູຄືນສິ່ງທີ່ຖືກຜົນກະທົບຈາກທຳມະຊາດໃຫ້ດີກວ່າເກົ່າ.**

**3.3.1 ການປົກປັກຮັກສາສະພາບແວດລ້ອມ ແລະ ຊັບພະຍາກອນທຳມະຊາດໃຫ້ຍືນຍົງ.**

ໄປຄຽງຄູ່ກັບການພັດທະນາເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ມີຄຸນນະພາບ ຜ່ານມາພວກເຮົາໄດ້ເລັ່ງໃສ່ ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ (ດິນ, ປ່າໄມ້, ແຮ່ທາດ, ນ້ຳ ແລະ ຊີວະນາໆພັນ) ຢ່າງປະຢັດ ແລະ ມີປະສິດທິຜົນ ໂດຍສະເພາະການປະຕິບັດ ຄຳສັ່ງ ເລກທີ 15/ນຍ ກ່ຽວກັບທຸລະກິດໄມ້ຢ່າງເຂັ້ມງວດ; ປະຕິບັດຫຼັກການ ການພັດທະນາຕາມທິດສີຂຽວ, ການລົງທຶນເຂົ້າໃສ່ການຜະລິດເປັນມິດກັບສິ່ງແວດລ້ອມ, ມີຄວາມສະອາດ ແລະ ສວຍງາມ, ສາມາດບັນລຸຄາດໝາຍໄດ້ຄື:

- ປົກປັກຮັກສາຊັບພະຍາກອນທຳມະຊາດ ປ່າໄມ້, ທີ່ດິນແຮ່ທາດ ແລະ ເຂດອານຸລັກ ພ້ອມທັງຟື້ນຟູໃຫ້ຍືນຍົງ; ສ້າງໃຫ້ມີຄຸນຄ່າເພີ່ມຂຶ້ນ ແລະ ຮັບໃຊ້ຜົນປະໂຫຍດສູງສຸດຕໍ່ປະເທດຊາດ ແລະ ປະຊາຊົນ ປະຈຸບັນ

ແຂວງເຮົາ ມີເນື້ອທີ່ປ່າໄມ້ປົກຫຸ້ມກວມ 70,4% ອີງຕາມຂໍ້ຕົກລົງລັດທະມົນຕີກະຊວງກະສິກຳ-ປ່າໄມ້ສະບັບເລກທີ 3822/ປກ ລົງວັນທີ 18 ສິງຫາ 2017 ໂດຍການຖ່າຍດາວທຽມ ເຊັ່ນເຄີເນວ 2 ປີ 2019 ຕາມຂໍ້ມູນຂອບເຂດ ເອເລັກໂຕນິກ ຂອງກົມແຜນທີ່ແຫ່ງຊາດ.

- ການຈັດສັນ, ຄຸ້ມຄອງ, ກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ເປັນວຽກຂອງທົ່ວປວງຊົນ ແລະ ຕິດພັນກັບຊີວິດການເປັນຢູ່ທີ່ໝັ້ນຄົງ.

- ໄດ້ເອົາການປະສົມປະສານການພັດທະນາຊັບພະຍາກອນທຳມະຊາດ ໃຫ້ມີຄວາມກົມກຽວເຂົ້າກັບການພັດທະນາດ້ານອື່ນໆ, ຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມໃຫ້ໜ້ອຍລົງ ແລະ ຖືສຳຄັນໃນການປະຕິບັດລະບຽບ-ກົດໝາຍ ຢ່າງເຂັ້ມງວດ.

- ປີ 2016-2020 ສຳຫຼວດ ແລະ ຂຶ້ນທະບຽນໃບຕາດິນ ໄດ້ 28.000 ຕອນ(ແຜນ 27.720 ຕອນ) ເພີ່ມຂຶ້ນ 3%, ໃນນີ້ ຂຶ້ນສຳມະໂນຕອນດິນໄດ້ 15.000 ຕອນ (ແຜນ 13.610) ເພີ່ມຂຶ້ນ 10%.

**3.3.2 ການຮັບມືກັບຜົນກະທົບຈາກໄພພິບັດຕ່າງໆ ແລະ ການປ່ຽນແປງດິນຟ້າອາກາດ.**

ໄດ້ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດການຄຸ້ມຄອງນຳໃຊ້ຊັບພະຍາກອນ ໃນໂຄງການພັດທະນາຕ່າງໆ ທີ່ກ່ຽວຂ້ອງ ກັບການນຳໃຊ້ນໍ້າ, ບຸກເບີກປ່າຕົ້ນນໍ້າ, ຖາງປ່າເຮັດໄຮ່ຢ່າງເຂັ້ມງວດ ດ້ວຍວິທີມອບການຄຸ້ມຄອງນຳໃຊ້ໃຫ້ບ້ານ ເປັນຜູ້ຈັດຕັ້ງປະຕິບັດໂດຍກົງ, ຈາກການຈັດຕັ້ງປະຕິບັດຜ່ານມາສູ່ຊຶ່ງໄດ້ດັ່ງນີ້:

- ມີສະຖານີອຸຕຸນິຍົມ 2 ແຫ່ງ ສາມາດແຈ້ງຜົນອຸຕຸນິຍົມ ອຸທົກກະສາດໃຫ້ສັງຄົມຮັບຮູ້ເປັນປົກກະຕິ.

- ແຂວງບໍລິຄຳໄຊເປັນເຂດທີ່ມີນໍ້າຝົນໂດຍສະເລ່ຍ 2.800-3.000 ມມ, ແຕ່ລະເມືອງ ມີບ່ອນເກັບມ້ຽນຂີ້ເຫຍື້ອ ເມືອງລະ 1 ແຫ່ງ.

**- ວຽກຊັບພະຍາກອນນໍ້າ-ອຸຕຸນິຍົມ ແລະ ອຸທົກກະສາດ.**

ສຳເລັດການຮ່າງແຜນຄຸ້ມຄອງອ່າງຮັບນໍ້າເທີນ-ກະດິງ ໄດ້ 100%; ສຳຫຼວດ ແລະ ສ້າງຈຸດຕິດຕາມກວດກາ ຄຸນນະພາບນໍ້າຈຳນວນ 21 ຈຸດ ພາຍໃນສາຍນໍ້າຫຼັກຂອງແຂວງ, ສຳເລັດການເກັບກຳຂໍ້ມູນສິ່ງແວດລ້ອມໂຮງງານໄດ້ 80%, ຂຶ້ນບັນຊີດິນບໍລິເວນນໍ້າໄດ້ 12 ເຂດ ດ້ວຍການແຕ້ມຈາກໂປແກມ ArcMap ຄື: ຫ້ວຍປີງ, ໜອງຫຍ້າ, ອ່າງຫ້ວຍສຽດ, ອ່າງນໍ້າກະດັນ ແລະ ນໍ້າສາ, ໜອງຫຼົ່ມ, ທົ່ງແສນ, ກຸດຟ້າແມບ, ອ່າງນໍ້າກາບ, ອ່າງນໍ້າເລີກ, ໜອງມາລັກສາ, ໜອງນາແຊງ ແລະ ໜອງຫ້ວຍປາຄູນ; ສຳເລັດການປັບປຸງສະຖານີອຸຕຸນິຍົມ ຈຳນວນ 2 ສະຖານີຄື: ສະຖານີປາກຊັນ ແລະ ເມືອງວຽງທອງ, ສຳເລັດການສ້າງຕັ້ງສະຖານີອຸທົກກະສາດໃໝ່ຢູ່ເມືອງ ບໍລິຄັນ ບ້ານສົມມຸງຄຸນ ຈຳນວນ 1 ຈຸດ, ປັບປຸງຫຼາວັດແທກລະດັບນໍ້າ ບ້ານຫາດຊຽງຕອມ 1 ຈຸດ ແລະ ບ້ານຊຶມຊື່ນ 1 ຈຸດ, ສຳເລັດດຳເນີນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ການເກັບກຳຂໍ້ມູນ, ການເຝົ້າລະວັງການປ່ຽນແປງຂອງດິນຟ້າອາກາດໃນແຕ່ລະໄລຍະ ຢູ່ 7 ເມືອງ.

**3.3.3 ຫຼຸດຜ່ອນຄວາມບໍ່ມີສະຖຽນລະພາບຂອງຜົນຜະລິດກະສິກຳ ທີ່ເກີດຈາກຜົນກະທົບຂອງໄພພິບັດ (ຮັບປະກັນໄດ້ທາງດ້ານຕະຫຼາດ ແລະ ລາຄາຜົນຜະລິດກະສິກຳ).**

ໄດ້ມີຄວາມພ້ອມ ກະກຽມ ແລະ ພະຍາກອນລ່ວງໜ້າ ກ່ຽວກັບສະພາບແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ ເພື່ອສະໜອງເງື່ອນໄຂໃຫ້ແກ່ການຜະລິດກະສິກຳທັນກັບເວລາ ແລະ ລະດູການ; ຜ່ານມາສາມາດສູ້ຊົນໄດ້ **ດັ່ງນີ້:**

- ກະກຽມແນວພັນ, ຢາປາບສັດຕູພືດ, ວິຊາການ ແລະ ອຸປະກອນ ຈຳນວນໜຶ່ງຮອງຮັບ,

- ກະກຽມສ້ອມແປງຊົນລະປະທານ ເພື່ອຮອງຮັບການຟື້ນຄືນພື້ນທີ່ທຳການຜະລິດ,

- ຊຸກຍູ້, ສົ່ງເສີມ, ຄຸ້ມຄອງການຜະລິດ ແລະ ການຂາຍຜະລິດຕະພັນກະສິກຳ ສະໜອງໄດ້ຕາມຄວາມຕ້ອງການ.

- ຕອບສະໜອງຂໍ້ມູນຂ່າວສານ ແລະ ສະກັດກັ້ນ ພະຍາດລະບາດສັດໄດ້ທັນເວລາ.

**3.4. ບັນດາວຽກຈຸດສຸມປິ່ນອ້ອມທີ່ພົວພັນກັບຫຼາຍຂະແໜງການ.**

**3.4.1 ສົ່ງເສີມຄວາມຮູ້ພູມປັນຍາໃນການນຳໃຊ້ຜົນຂອງການຄົ້ນຄ້ວາ, ຄຸ້ມຄອງ ແລະ ນຳໃຊ້ວິທະຍາສາດ, ເຕັກໂນໂລຊີ ແລະ ການສື່ສານ.**

**3.4.1.1 ການຄຸ້ມຄອງນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ.**

- ກວດສອບເຄື່ອງຊັ່ງຜອງ ໄດ້ 5 ພັນກວ່າເທື່ອກວດ (ກວດປົກປະຕິ, ກວດຕາມການສະເໜີ, ສຸ່ມກວດ);

ກວດສອບຫົວຈ່າຍນ້ຳມັນໄດ້ 2.835 ເທື່ອກວດ.

- ໄດ້ກວດສອບອັດຕາການໄຫຼຂອງນ້ຳ ຄິດເປັນບໍລິມາດຜ່ານກົງເຕີນ້ຳປະປາ 13.118 ໜ່ວຍ ໄດ້ຢັ້ງຢືນຄວາມຖືກຕ້ອງ 32.795 ເທື່ອ; ກົງເຕີໄຟຟ້າ 66.158 ໜ່ວຍ ຢັ້ງຢືນຄວາມຖືກຕ້ອງ 165.395 ເທື່ອ.

- ກວດສອບຄຸນນະພາບ ແລະ ມາດຕະຖານນ້ຳມັນເຊື້ອໄຟນຳເຂົ້າ ຈຳນວນ 9 ບໍລິສັດ ມີ 14.400 ຖັງວຈຳນວນ 576.000.000 ລິດ.

- ກວດການມາດຕະຖານ ແລະ ຄຸນນະພາບດິນຈີ່, ດິນບ໊ອກ, ຫຼໍ່ເສົາໄດ້ 72 ໂຮງງານ ຢັ້ງຢືນຄວາມຖືກຕ້ອງໄດ້ 144 ເທື່ອກວດ;

- ສົມທົບກັບພາກສ່ວນກ່ຽວຂ້ອງລົງກວດກາເຄື່ອງປອມແປງ, ເຄື່ອງໝົດອາຍຸການນຳໃຊ້.

- ສົມທົບກັບພະແນກກະສິກຳ ແລະ ປ່າໄມ້ຂຽນໂຄງການປູກເຂົ້າໜຽວອິນຊີ ກ້າກົບດຽວ.

**3.4.1.2 ຄຸ້ມຄອງ ແລະ ນຳໃຊ້ການສື່ສານ.**

ຕາໜ່າງໄປສະນີ-ໂທລະຄົມມະນາຄົມ ໄດ້ຮັບການພັດທະນາ ຢ່າງຕໍ່ເນື່ອງ ຈາກລະບົບ 2G ໄປສູ່ 3G ແລະ 4G, ສັນຍານໂທລະສັບກວມເອົາ 96% ຂອງພື້ນທີ່ທົ່ວແຂວງອອກສູ່ເຂດຊົນນະບົດຫ່າງໄກສອກຫຼີກ; ມີສູນກາງການບໍລິການໄປສະນີ ແລະ ສາຂາບໍລິສັດໂທລະຄົມຕັ້ງຢູ່ເທດສະບານແຕ່ລະເມືອງ ສາມາດຕິດຕໍ່-ພົວພັນທັງພາຍໃນ ແລະ ຕ່າງປະເທດໄດ້ສະດວກ ວ່ອງໄວ, ມີຫ້ອງການໄປສະນີແຂວງ 1 ແຫ່ງ, ເມືອງ 3 ເມືອງ ແລະ 2 ຈ່າມ, ສະຖາບັນເງິນຝາກປະຢັດ 1 ແຫ່ງ, ມີຍອດເງິນຝາກ 6.763.688.944 ກີບ, ໄປສະນີພັນພາຍໃນ 4.942 ສະບັບ, ສິ່ງຂອງຫໍ່ນ້ອຍ 750 ຫໍ່, ໃບເງິນຝາກ 9.973 ໃບ, ໄປສະນີພັນຕ່າງປະເທດ 2.759 ສະບັບ, ສິ່ງຂອງຫໍ່ນ້ອຍ 777 ຫໍ່, ສ້າງລາຍຮັບໄດ້ 2.055.664.523 ກີບ, ມອບພັນທະ 48.484.447 ກີບ. ມີເສົາ BTS ມີ 272 ເສົາຂະຫຍາຍເຄື່ອງ ຮັບ-ສົ່ງສັນຍານໂທລະສັບ 621 ເຄື່ອງ, ສາຍກາບໄຍແສງ ເພີ່ມຂຶ້ນ 3.959 km ກວມ 7 ຕົວເມືອງ, ໂທລະສັບຕັ້ງໂຕະມີສາຍ ແລະ ບໍ່ມີສາຍ 23.299 ເລກໝາຍ, ATA ມີ 10 ເລກໝາຍ, ໂທລະສັບລາຍເດືອນ ແລະ ເຕີມເງິນ 158.686 ເລກໝາຍ, ອິນເຕີເນັດ 63.409 ລູກຄ້າ ແລະ ສັນຍານ 3 G ກວມ 227 ບ້ານ ເທົ່າກັບ 78% ສັນຍານ 2 G ກວມ 285 ບ້ານ ເທົ່າກັບ 97,93% ສັນຍານ 4 G ກວມ 173 ບ້ານເທົ່າກັບ 59,45% ຂອງບ້ານທົ່ວແຂວງ, ສະເລ່ຍຜູ້ນຳໃຊ້ໂທລະສັບ 67 ເລກໝາຍ/100 ຄົນ ສ້າງລາຍຮັບໄດ້ 455.617.259.460 ກີບ ມອບພັນທະ 80.964.187.246 ກີບ, ສຳເລັດການອອກອະນຸຍາດເລກໝາຍພິເສດສາຍດ່ວນພາຍໃນແຂວງໄດ້ 5 ພາກສ່ວນ.

**3.4.2. ວຽກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ພັດທະນາເຍົາວະຊົນ, ຊາວໜຸ່ມ, ແມ່ຍິງ ແລະ ກຳມະບານ.**

**3.4.2.1 ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ວຽກງານແມ່ແລະເດັກ.**

ໄດ້ລົງໂຄສະນາເຜີຍແຜ່ ແຜນຍຸດທະສາດເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ສົນທິສັນຍາວ່າດ້ວຍການລຶບລ້າງຄວາມຮຸນແຮງ ທຸກຮູບການຈຳແນກຕໍ່ແມ່ຍິງໃຫ້ບັນດາເມືອງ ແລະ ບ້ານ ໄດ້ 8 ຄັ້ງ ມີຜູ້ເຂົ້າຮ່ວມ 813 ຄົນ, ເຜີຍແຜ່ສົນທິສັນຍາວ່າດ້ວຍສິດທິເດັກ ແລະ ຈັດກິດຈະກຳຢູ່ໂຮງຮຽນ ມສ ວຽງຄຳ ແລະ ມສ ຜາເມືອງ ມີຜູ້ເຂົ້າຮ່ວມ 1.815 ຄົນ, ຈັດກອງປະຊຸມປະກອບຄຳຄິດຄຳເຫັນຂອງເດັກ ຕໍ່ບົດລາຍງານແຫ່ງຊາດ ໄດ້ 4 ຄັ້ງ ມີເດັກນັກຮຽນເຂົ້າຮ່ວມ 286 ຄົນ ແລະ ກອງປະຊຸມປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ ໄດ້ 4 ຄັ້ງ; ຮັບຮອງຄອບຄົວພັດທະນາ ຕິດພັນກັບການປະຕິບັດສິດສະເໝີພາບຍິງ-ຊາຍ, ປັດສະຈາກການນຳໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໄດ້ 149 ບ້ານ ກວມ 51%, ຊຸກຍູ້ສົ່ງເສີມໃຫ້ແມ່ຍິງ-ເດັກ ມີໂອກາດ ແລະ ເງື່ອນໄຂເຂົ້າເຖິງການສຶກສາ, ການບໍລິການດ້ານສາທາລະນະສຸກ, ການສ້າງວຽກເຮັດງານທຳໃຫ້ເທົ່າທຽມກັບເພດຊາຍເທື່ອລະກ້າວ; ຊຸກຍູ້ສົ່ງເສີມແມ່ຍິງໄດ້ຮັບການຍົກລະດັບທາງດ້ານຄວາມຮູ້-ຄວາມສາມາດ, ມີສ່ວນຮ່ວມເຂົ້າໃນບັນດາຕຳແໜ່ງງານ ແລະ ການຕັດສິນບັນຫາຂັ້ນຕ່າງໆຂອງເມືອງ ແລະ ແຂວງ; ແມ່ຍິງເປັນສະມາຊິກສະພາແຫ່ງຊາດເຂດເລືອກຕັ້ງທີ 11 ຈຳນວນ 11 ທ່ານ, ກຳມະການພັກແຂວງ 3 ທ່ານ, ຄະນະປະຈຳພັກເມືອງ 5 ທ່ານ, ກຳມະການພັກເມືອງ 10 ທ່ານ, ເລຂາພັກບ້ານ 14 ທ່ານ ເພີ່ມຂຶ້ນ 1,09%, ຮອງເລຂາພັກບ້ານ 18 ທ່ານ, ຮອງນາຍບ້ານ 72 ທ່ານ ເພີ່ມຂຶ້ນ 2,4%; ຫົວໜ້າພະແນກ ແລະ ທຽບເທົ່າ 2 ທ່ານ, ຮອງຫົວໜ້າພະແນກ ແລະ ທຽບເທົ່າ 25 ທ່ານ, ແມ່ຍິງທີ່ເປັນລັດຖະກອນລະດັບວິຊາສະເພາະ: ປະລິນຍາໂທ 51 ທ່ານ, ເໜືອປະລິນຍາຕີ 20 ທ່ານ, ປະລິນຍາຕີ 1.202 ທ່ານ, ຊັ້ນສູງ 1.398 ທ່ານ, ຊັ້ນກາງ 779 ທ່ານ, ຊັ້ນຕົ້ນ 39 ທ່ານ ແລະ ບໍ່ມີຊັ້ນ ຍິງ 5 ທ່ານ; ໄດ້ຮັບຕຳແໜ່ງ

ບໍລິຫານ: ປະເພດ I 1 ທ່ານ, ປະເພດ II 2 ທ່ານ, ປະເພດ III 6 ທ່ານ, ປະເພດ IV 30 ທ່ານ, ປະເພດ V 108 ທ່ານ, ປະເພດ VI 239 ທ່ານ, ປະເພດ VII 141 ທ່ານ, ປະ ເພດ VIII 149 ທ່ານ.

**3.4.2.2 ການພັດທະນາເຍົາວະຊົນ, ຊາວໜຸ່ມ, ແມ່ຍິງ, ກຳມະບານ.**

**1) ຊາວໜຸ່ມປະຊາຊົນປະຕິວັດລາວ:** ໄດ້ເອົາໃຈໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂໍ້ແຂ່ງຂັນ 4 ບຸກ ເປັນຂະບວນການກວ້າງຂວາງໃນໄວໜຸ່ມ, ສົ່ງເສີມການບໍາລຸງ ຍົກລະດັບທາງດ້ານທິດສະດີ ແລະ ວິຊາສະເພາະຢ່າງຕັ້ງໜ້າ, ສໍາເລັດກອງປະຊຸມໃຫຍ່ຂັ້ນຂອງຕົນ; ທົ່ວແຂວງມີຮາກຖານຊາວໜຸ່ມ 145 ຮາກຖານ, 335 ໜ່ວຍ ມີໄວໜຸ່ມໃນເກນອາຍຸ 15-35 ປີ 75.944 ຄົນ, ຍິງ 36.837 ຄົນ, ເພີ່ມຂຶ້ນ 18.2% ໃນນີ້ເປັນ ຊປປລ 23.116 ສະຫາຍ, ຍິງ 11.742 ສະຫາຍ; ເຍົາວະຊົນ 21.833 ນ້ອງ, ຍິງ 10.038 ນ້ອງ ກວມ 70,3% ຂອງເຍົາວະຊົນເກນອາຍຸ, ໄດ້ເປີດຂະບວນການແຂ່ງຂັນ 3 ດີ 4 ຮູ້ເຍົາວະຊົນທັນອາທົ່ວແຂວງໄດ້ 100%, ຮັບຮອງເປັນເມືອງ 3 ດີ 4 ຮູ້ໄດ້ 2 ເມືອງ **ຄື:** ເມືອງ ປາກຊັນ, ເມືອງ ໄຊຈໍາພອນ.

**2) ສະຫະພັນແມ່ຍິງ:** ໄດ້ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກແມ່ຍິງ ແລະ ແມ່ຍິງບັນດາເຜົ່າ 873 ຄັ້ງ ມີຜູ້ເຂົ້າຮ່ວມ 82.670, ຍິງ 41.820 ຄົນ, ຝຶກອົບຮົມວິຊາຊີບຕັດຫຍິບ, ປຸງແຕ່ງອາຫານ, ເສີມສວຍ ມີຜູ້ຍິງເຂົ້າຮ່ວມ 44 ຄົນ; ຈັດງານປະກວດອາຫານ ມີຜູ້ເຂົ້າຮ່ວມ 1.231 ຄົນ; ເຜີຍແຜ່ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວໄດ້ 365 ຄັ້ງ ມີຜູ້ເຂົ້າຮ່ວມ 33.792 ຄົນ; ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງໃນວຽກງານນໍາພາ - ຄວາມສະເໝີພາບ ຍິງ-ຊາຍ ໄດ້ 41 ຄົນ, ຍິງ 21 ຄົນ; ຂະບວນແຂ່ງຂັນ 3 ດີ ສາມາດຄັດເລືອກພົນລະເມືອງດີ ໄດ້ 31.291 ຄົນ, ພັດທະນາດີ 29.540 ຄົນ, ຄອບຄົວດີ 26.360 ຄົນ; ສະພັນແມ່ຍິງບ້ານ 3 ດີ ໄດ້ 280 ບ້ານ ກວມ 96,21% ເມືອງ 3 ດີ ກວມ 100% ແລະ ປະກາດເປັນສະຫະພັນແມ່ຍິງແຂວງ 3 ດີ; ຊຸກຍູ້ໜ່ວຍບໍລິການຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກເພື່ອພັດທະນາແມ່ຍິງ ແລະ ຄອບຄົວ **ຄື:** ເມືອງທ່າພະບາດ 28 ບ້ານ ມີສະມະຊິກກູ້ຢືມ 639 ຄົນ, ຍອດເງິນກູ້ 3.864.224.000 ກີບ; ເມືອງບໍລິຄັນ ມີ 18 ບ້ານ, ສະມາຊິກທັງໝົດ 2.376 ຄົນ ຜູ້ກູ້ຢືມ 477 ຄົນ ຍອດເງິນກູ້ 3.212.656.000 ກີບ; ໄດ້ຊຸກຍູ້ສົ່ງເສີມມູນເຊື້ອວັດທະນາທໍາອັນດີງາມຂອງຊາດ, ຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວ ໂດຍຜ່ານວິທະຍຸ, ໜັງສືພິມ; ຈັດຕັ້ງການໂຄສະນາຕ້ານການຄ້າມະນຸດ ໄດ້ 136 ຄັ້ງ ມີຜູ້ເຂົ້າຮ່ວມ 11.835 ຄົນ ຍິງ 9.275 ຄົນ; ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກໃນທຸກຮູບແບບດ້ວຍການເຂົ້າຮ່ວມໃຫ້ຄໍາປຶກສາ ແລະ ແກ້ໄຂບັນ ຫາກັບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຊ່ວຍເຫຼືອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງແມ່ຍິງ ແລະ ເດັກນ້ອຍ 533 ຄັ້ງ, 239 ກໍລະນີ, ຊ່ວຍເຫຼືອແມ່ຍິງ-ເດັກ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ 37 ຄົນ, ຍິງ 24 ຄົນ.

**3) ສະຫະພັນກໍາມະບານ:** ໄດ້ເອົາໃຈໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂໍ້ແຂ່ງຂັນ 5 ເປັນເຈົ້າຢ່າງຕັ້ງໜ້າ, ເຜີຍແຜ່ແນວທາງນະໂຍບາຍຂອງພັກ ລະບຽບກົດໝາຍຂອງລັດ **ເປັນຕົ້ນ:** ກົດໝາຍວ່າດ້ວຍກໍາມະບານລາວ ແລະ ມະຕິຄໍາສັ່ງຕ່າງໆ ມີຜູ້ເຂົ້າຮ່ວມ 800 ກ່ວາເທື່ອຄົນ; ບັນດາສະມາຊິກໍາມະບານ-ກໍາມະກອນຢູ່ແຕ່ລະຂົງເຂດ, ໂຮງຈັກ-ໂຮງງານ, ແຕ່ລະໜ່ວຍຮາກຖານ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຕາມກົດໝາຍທີ່ໄດ້ກໍານົດໄວ້; ທົ່ວແຂວງມີ 7 ສະຫະພັນກໍາມະບານເມືອງ, 4 ສະຫະພັນກໍາມະບານພະແນກການ, 43 ຮາກຖານກໍາມະບານທີ່ຂຶ້ນກັບສະຫະພັນກໍາມະບານແຂວງ 214 ຮາກຖານທີ່ຂຶ້ນກັບເມືອງ ແລະ 160 ໜ່ວຍ, ມີສະມາຊິກທັງໝົດ 9.198 ສະຫາຍ, ຍິງ 4.220 ສະຫາຍ, ຂະຫຍາຍກໍາມະບານໃໝ່ໄດ້ 1.669 ສະຫາຍ; ຂຶ້ນທະບຽນກໍາມະກອນລາວ ໄດ້ 1.700 ກ່ວາຄົນ; ຮັບຄໍາຮ້ອງຂໍຄວາມເປັນທໍາ 38 ເລື່ອງ, ທວງເງິນຄືນໄດ້ 845 ລ້ານກວ່າກີບ; ມີສະມາຊິກກອງທຶນທັງໝົດ 8.736 ຄົນ, ມີເງິນກອງທຶນ 2,45 ຕື້ກວ່າກີບ ແລະ ໄດ້ປະຕິບັດນະໂຍບາຍເຈັບເປັນ, ຜ່າຕັດ, ເກີດລູກ, ແຕ່ງງານ, ໄຟໄໝ້ ແລະ ເສຍຊີວິດ ລວມທັງໝົດ 2,01 ຕື້ກວ່າກີບ; ປະຈຸບັນກອງທຶນຍັງເຫຼືອ 523 ລ້ານກວ່າກີບ; ລະດົມທຶນແກ້ໄຂຄວາມທຸກຍາກໄດ້ 18 ລ້ານກວ່າກີບ; ສະເໜີການຍ້ອງຍໍຂັ້ນຕ່າງໆ ໃຫ້ສະມາຊິກກໍາມະບານທີ່ມີຜົນງານໄດ້ເປັນຢ່າງດີ ແລະ ປະກາດເປັນສະຫະພັນກໍາມະບານແຂວງ 5 ເປັນເຈົ້າ.

**3.4.3 ເພີ່ມທະວີປະສິດທິພາບຂອງການຄຸ້ມຄອງ ແລະ ບໍລິຫານລັດ.**

**3.4.3.1 ວຽກສະພາແຫ່ງຊາດ ເຂດເລືອກຕັ້ງທີ 11.**

ສະພາປະຊາຊົນແຂວງໄດ້ເພີ່ມທະວີໃນການຈັດຕັ້ງປະຕິບັດຕາມພາລະບົດບາດຂອງຕົນໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ **ເປັນຕົ້ນ:** ໄດ້ເອົາໃຈໃສ່ໃນການຄົ້ນຄວ້າພິຈາລະ

ນາຕົກລົງບັນຫາສຳຄັນຂອງທ້ອງຖິ່ນ, ຕິດຕາມ ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງອົງການລັດຂັ້ນທ້ອງຖິ່ນຢ່າງແຂງແຮງ, ມີຈຸດສຸມ ແລະ ແທດເຖິງ; ລົງໂອ້ລົມກັບປະຊາຊົນບັນດາເຜົ່າ ແລະ ລົງໂຄສະນາເຜີຍແຜ່ບັນດາແນວທາງ, ນະໂຍບາຍ, ລະບຽບກົດໝາຍ, ມະຕິ, ຄຳສັ່ງຂອງພັກ - ລັດວາງອອກ ຢ່າງເປັນປົກກະຕິ, ເຊິ່ງໃນໄລຍະຜ່ານມາສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ປະສານສົມທົບກັບຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ສາມາດຈັດຕັ້ງປະຕິບັດໄດ້ **ດັ່ງນີ້:**

- ໄດ້ເຂົ້າຮ່ວມຄົ້ນຄວ້າພິຈາລະນາ, ປະກອບຄຳເຫັນເຂົ້າໃນການສ້າງ ແລະ ປັບປຸງຮ່າງກົດໝາຍໃນກອງປະຊຸມສະໄໝສາມັນເທື່ອທີ 2 ຫາ ກອງປະຊຸມສະໄໝສາມັນເທື່ອທີ 9 ສະພາແຫ່ງຊາດຊຸດ ທີ VIII ຈຳນວນ 87 ສະບັບ, ໃນນີ້ ມີກົດໝາຍສ້າງໃໝ່ 34 ສະບັບ, ປັບປຸງ 53 ສະບັບ; ຄົ້ນຄວ້າພິຈາລະນາ ແລະ ຮັບຮອງນິຕິກຳທີ່ສຳຄັນຂອງແຂວງໃນກອງປະຊຸມສະໄໝສາມັນແຕ່ລະຄັ້ງຂອງສະພາປະຊາຊົນແຂວງ ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ໄດ້ທັງໝົດ 16 ສະບັບ.

- ເອົາໃຈໃສ່ເຄື່ອນໄຫວປະຕິບັດໜ້າທີ່ການເມືອງຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ເສີມຂະຫຍາຍຄວາມຮູ້ຄວາມສາມາດເຂົ້າໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຕໍ່ກັບບັນຫາທີ່ສຳຄັນຂອງທ້ອງຖິ່ນ ທີ່ໄດ້ນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ ເຊັ່ນ: ໄດ້ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຂວງໃນແຕ່ລະໄລຍະ, ແຜນດັດແກ້ງົບປະມານໂຄງການລົງທຶນຂອງລັດ; ຮັບຮອງເອົາການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ, ສານປະຊາຊົນແຂວງ; ການເຄື່ອນໄຫວວຽກງານໃນແຕ່ລະໄລຍະຂອງສະພາປະຊາຊົນແຂວງບໍລິຄຳໄຊ, ຮັບຮອງເອົາການຍົກຍ້າຍ, ແຕ່ງຕັ້ງບຸກຄະລາກອນຂອງອົງການປົກຄອງແຂວງຕາມການສະເໜີຂອງເຈົ້າແຂວງ, ຮັບຮອງເອົາການປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງບຸກຄະລາກອນດຳລົງຕຳແໜ່ງທີ່ສະພາປະຊາຊົນແຂວງເລືອກຕັ້ງ, ຮັບຮອງເອົາການແຕ່ງຕັ້ງ ແລະ ກຳນົດເຂດແດນເຊື່ອມຕໍ່ບ້ານແກ້ວແສນຄຳ ລະຫວ່າງເມືອງໄຊຈຳພອນ ກັບ ເມືອງຄຳເກີດ.

- ເອົາໃຈໃສ່ໃນການຕິດຕາມ ກວດກາ ແລະ ຊຸກຍູ້ບັນດາພະແນກການກ່ຽວຂ້ອງໃນການຈັດຕັ້ງປະຕິບັດມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດທີ VIII, ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງຊຸດທີ I ແລະ ມະຕິຂອງກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ ແຕ່ລະຄັ້ງຢ່າງເຂັ້ມງວດ, ຕິດຕາມ ກວດກາ ແລະ ຊຸກຍູ້ການສ້າງ ແລະ ປັບປຸງນິຕິກຳຂອງແຂວງ ຕາມມະຕິສະບັບເລກທີ 103/ຄປຈ.ປຊ ລົງວັນທີ 24 ກໍລະກົດ 2017 ຢ່າງເປັນປົກກະຕິ, ພ້ອມນັ້ນຍັງໄດ້ປະສານສົມທົບກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11, ສະມາຊິກປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ພາກສ່ວນທີ່ກ່ຽວຂ້ອງ ລົງຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດທີ່ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງຮັບຮອງເອົາ **ຄື:** ຕິດຕາມການຈັດຕັ້ງປະຕິບັດວຽກງານການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ຖືກຜົນກະທົບຈາກໂຄງການລົງທຶນຂອງລັດ, ຕິດຕາມກວດກາການເຊົ່າ ແລະ ສຳປະທານເນື້ອທີ່ດິນເພື່ອທຳການຜະລິດຂອງນັກລົງທຶນ ແລະ ບັນຫາອື່ນໆ.

- ເອົາໃຈໃສ່ປະສານສົມທົບກັບອົງການປົກຄອງແຂວງ, ຂະແໜງການທີ່ກ່ຽວຂ້ອງໃນການຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງທຸກຂອງປະຊາຊົນ ເຊິ່ງໃນໄລຍະຜ່ານມາ ມີຄຳຮ້ອງທຸກທີ່ຍື່ນຜ່ານສະພາປະຊາຊົນແຂວງ ທັງໝົດ 187 ເລື່ອງ, ໃນນີ້ ເປັນຄຳຮ້ອງຂໍຄວາມເປັນທຳ 96 ເລື່ອງ, ຄຳສະເໜີ 91 ເລື່ອງ ມາຮອດປະຈຸບັນແມ່ນໄດ້ຄົ້ນຄວ້າແກ້ໄຂ ແລະ ສົ່ງໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂສຳເລັດແລ້ວ, ບັນຫາທີ່ພົ້ນເດັ່ນແມ່ນ ບໍ່ພໍໃຈຕໍ່ຄຳຕັດສິນຂອງສານ ຫຼື ຄຳພິພາກສາຂອງສານ, ຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ຂໍ້ຂັດແຍ່ງກ່ຽວກັບຜົນກະທົບຈາກການລົງທຶນຂອງລັດ, ເອກະຊົນ ແລະ ບັນຫາອື່ນໆ ພ້ອມນີ້ ຍັງໄດ້ຕ້ອນຮັບ ແລະ ໃຫ້ຄຳປຶກສາທາງດ້ານກົດໝາຍແກ່ປະຊາຊົນ ຈຳນວນ 180 ຄັ້ງ, 280 ເທື່ອຄົນ, ຍິງ 80 ຄົນ.

- ລົງໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງບໍລິຄຳໄຊແຕ່ລະຄັ້ງ ຕິດພັນກັບການນຳເອົາແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ໄດ້ 447 ຈຸດ, ໃນນີ້: 6 ສຳນັກງານອ້ອມຂ້າງແຂວງ, 29 ຈຸດອ້ອມຂ້າງເມືອງ, 17 ກົມກອງ, 5 ໂຮງຮຽນ 390 ເທື່ອບ້ານ, ມີຄຳສະເໜີຂອງປະຊາຊົນທີ່ສະເໜີຜ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງໃນເວລາລົງເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດເທື່ອ 2 ຫາ ເທື່ອທີ 8, ສະພາປະຊາຊົນແຂວງທັງໝົດ 1.061 ຂໍ້ ແລະ ໄດ້ສັງລວມສະເໜີໃຫ້ອົງການ

ປົກຄອງແຂວງຄົ້ນຄວ້າພິຈາລະນາ, ແກ້ໄຂ ແລະ ລົງຊີ້ແຈງໃຫ້ເຈົ້າຂອງຄໍາສະເໜີແລ້ວ, ບັນຫາທີ່ປະຊາຊົນໃຫ້ຄວາມສົນໃຈຫຼາຍແມ່ນ ກ່ຽວກັບບັນຫາການກໍ່ສ້າງພື້ນຖານໂຄງລ່າງ (ຫົນທາງ, ຂົວ, ໂຮງຮຽນ, ສຸກສາລາ); ການພື້ນຟູຊີວິດການເປັນຢູ່ຂອງປະຊາຊົນ; ບັນຫາຜົນກະທົບຈາກໂຄງການລົງທຶນຂອງລັດ, ເອກະຊົນ; ບັນຫາດູອາສາສະໝັກ, ການຊອກຫາວຽກເຮັດງານທໍາໃຫ້ແກ່ປະຊາຊົນ, ພ້ອມນີ້ ບັນດາທ່ານສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ່ປະຈໍາຢູ່ສູນກາງ ແລະ ທ້ອງຖິ່ນຍັງໄດ້ລະດົມທຶນຮອນຈາກພາກລັດ ແລະ ເອກະຊົນເພື່ອນໍາໄປມອບໃຫ້ບັນດາອົງການລັດ ແລະ ປະຊາຊົນພາຍໃນແຂວງຜູ້ທີ່ທຸກຍາກອະນາຖາ ມູນຄ່າ ເປັນເງິນ 293 ລ້ານກວ່າກີບ.

**3.4.3.2 ອົງການຕຸລາການ.**

**1) ສານປະຊາຊົນ:** ເອົາໃຈໃສ່ພັດທະນາພື້ນຖານໂຄງລາງ, ປັບປຸງການຈັດຕັ້ງ ແລະ ແບບແຜນວິທີເຄື່ອນໄຫວຂອງສານປະຊາຊົນໃຫ້ສອດຄ່ອງກັບສິດພາລະບົດບາດ, ຖືກຕ້ອງກັບລະບຽບກົດໝາຍ, ຄົ້ນຄວ້າພິຈາລະນາ ຄະດີຄວາມຕ່າງໆ ດ້ວຍຄວາມຮັບຜິດຊອບສູງ, ຮັບປະກັນການຕັດສິນມີຄວາມຍຸຕິທໍາ ແລະ ຖືກຕ້ອງ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຢ່າງເປັນເຈົ້າການ; ສານປະຊາຊົນແຂວງ ແລະ ເຂດ ໄດ້ຮັບຄະດີທັງໝົດ 1.783 ເລື່ອງ, ໃນນັ້ນ: ຄະດີເຂົ້າໃໝ່ 1.706 ເລື່ອງ, ຄະດີຄ້າງມາແຕ່ປີ 2014 ມີ 77 ເລື່ອງ, ພິຈາລະນາແກ້ໄຂດ້ວຍຮູບການຕ່າງໆໄດ້ 1.713 ເລື່ອງ ເທົ່າກັບ 96,07%, ຍັງຄ້າງ 70 ເລື່ອງ; ປະເພດຄະດີທີ່ພົ້ນເດັ່ນ ແລະ ເກີດຂຶ້ນຫຼາຍກວ່າໝູ່ **ແມ່ນ:**

- ຄະດີອາຍາ ແມ່ນຄ້າຂາຍຢາເສບຕິດ.
- ຄະດີແພ່ງ ແມ່ນສັນຍາກູ້ຢືມ.
- ຄະດີການຄ້າ ແມ່ນສັນຍາກູ້ຢືມເງິນທະນາຄານ.
- ຄະດີຄອບຄົວ ແມ່ນສາຍຜົວ-ເມັຍຂໍຢ່າຮ້າງ.
- ຄະດີເດັກ ແມ່ນຢາເສບຕິດ.

**2) ອົງການໄອຍະການປະຊາຊົນ:** ຕັ້ງໜ້າເຄື່ອນໄຫວຕິດຕາມ, ກວດກາການປະຕິບັດກົດໝາຍຂອງເຈົ້າໜ້າທີ່ໃນການສືບສວນ-ສອບສວນ ແລະ ການເຄື່ອນໄຫວຂອງພົນລະເມືອງທີ່ປະຕິບັດຜິດຕໍ່ລະບຽບກົດໝາຍ; ປັບປຸງກົງຈັກການຈັດຕັ້ງພາຍໃນອົງການໄອຍະການປະຊາຊົນ ມີຄວາມໜັກແໜ້ນເຂັ້ມແຂງ ແລະ ຍົກລະດັບອົງການໄອຍະການປະຊາຊົນຂັ້ນເມືອງ ຂຶ້ນເປັນໄອຍະການເຂດ 2 ເຂດໃນທົ່ວແຂວງ, ປະຕິບັດໜ້າທີວຽກງານຕາມສິດພາລະບົດບາດຢ່າງຖືກຕ້ອງ ເປັນທໍາ ແລະ ມີປະສິດທິຜົນ; ທົ່ວແຂວງມີຄະດີທັງໝົດ 2.258 ເລື່ອງ, ແກ້ໄຂແລ້ວ 2.228 ເລື່ອງ ເທົ່າກັບ 98,54%,ໃນນັ້ນ: ຄະດີອາຍາ 1.928 ເລື່ອງ ແລະ ຄະດີແພ່ງ 300 ເລື່ອງ, ໄດ້ຖະແຫຼງສັ່ງຟ້ອງສົ່ງສານ 1.355 ເລື່ອງ, ຄຸນນະພາບການແກ້ໄຂຄະດີອາຍາຂັ້ນແຂວງບັນລຸໄດ້ 98,37%, ເຂດບັນລຸໄດ້ 99,43%.

**3) ວຽກງານຍຸດຕິທໍາ:** ໂຄສະນາເຜີຍແຜ່ກົດໝາຍຊຶ່ມນອນຊົນ ແລະ ກົດໝາຍ ຢູ່ສະຖານທີ່ຕ່າງໆຂອງແຂວງ **ເຊັ່ນ:** ຫ້ອງການ, ໂຮງຮຽນ ແລະ ບ້ານໄດ້ 1.265 ຄັ້ງ ມີຜູ້ເຂົ້າຟັງທັງໝົດ 139.839 ເທື່ອຄົນ, ຍິງ 60.700 ເທື່ອຄົນ, ແຈກປຶ້ມກົດໝາຍໄດ້ 450 ຫົວ, ໂຄສະນາຜ່ານໜັງສືພິມ 319 ສະບັບ, ຂຶ້ນຫ້ອງສອນກົດໝາຍ 1.209 ຄັ້ງ; ໃຫ້ຄໍາປຶກສາທາງດ້ານກົດໝາຍແກ່ປະຊາຊົນໄດ້ 750 ຄົນ, ປະຕິບັດຄໍາຕັດສິນຂອງສານ ໄດ້ 1,264 ເລື່ອງ ສໍາເລັດ 286 ເລື່ອງ, ການຄຸ້ມຄອງທະບຽນສານ, ອອກໃບຢັ້ງຢືນຄວາມຖືກຕ້ອງຂອງເອກະສານ, ບໍາລຸງຝຶກອົບຮົມຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານໄດ້ 493 ເທື່ອໜ່ວຍ, ມີບຸກຄະລາກອນເຂົ້າຮ່ວມ 2.465 ເທື່ອຄົນ; ເປີດຊຸດອົບຮົມກົດໝາຍ 45 ວັນ ໄດ້ 5 ຊຸດ ມີຜູ້ເຂົ້າຮ່ວມ 186 ຄົນ; ຂໍ້ຂັດແຍ່ງຂັ້ນບ້ານເກີດຂຶ້ນ 370 ກໍລະນີ ແກ້ໄຂສໍາເລັດ 272 ກໍລະນີ, ໃນນີ້: ຂໍ້ຂັດແຍ່ງເດັກ 89 ກໍລະນີ ແກ້ໄຂໄດ້ 37 ກໍລະນີ, ມອບໃບຢັ້ງຢືນຄອບຄົວແບບຢ່າງ ປະຕິບັດກົດໝາຍ 678 ເທື່ອໃບ.

**3.4.3.3 ການປົກຄອງ ແລະ ຄຸ້ມຄອງລັດຖະກອນ.**

**1) ການປົກຄອງ.**

ໂດຍປະຕິບັດຕາມກົດໝາຍການປົກຄອງທ້ອງຖິ່ນ, ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ໄດ້ເຮັດໃຫ້ກົງຈັກຊ່ວຍວຽກດ້ານວິຊາການ ແລະ ດ້ານບໍລິຫານມີພາລະບົດບາດໜ້າທີ່ຈະແຈ້ງ, ຄົ້ນຄວ້າຕໍາແໜ່ງງານລະອຽດ ແລະ ຄົບຊຸດ; ບັນດາພະແນກການ, ຫ້ອງການ, ເມືອງ ປະຕິບັດພາລະບົດບາດຄຸ້ມຄອງມະຫາພາກເປັນຕົ້ນຕໍ, ມີກົງຈັກຊ່ວຍວຽກຕາມທິດກະທັດຮັດ, ສົມເຫດສົມຜົນ ແລະ ມີປະສິດທິພາບ; ປັບປຸງລະບົບການ

ບໍລິຫານ, ຄຸ້ມຄອງພະນັກງານລັດຖະກອນເປັນລະບົບຄົບຊຸດ ແລະ ເຂັ້ມແຂງຂຶ້ນ, ຊັບຊ້ອນຈັດວາງພະນັກງານໃຫ້ແທດເໝາະສອດຄ່ອງກັບຕຳແໜ່ງງານ ແລະ ວິຊາສະເພາະທີ່ຮຽນມາ; ຜ່ານມາສາມາດສູ້ຊົນໄດ້ **ດັ່ງນີ້:**

- ໄດ້ຍຸບໂຮມບັນດາຫ້ອງການຕ່າງໆ ຄື: ຍຸບຫ້ອງການປັບປຸງວິສາຫະກິດ ໂຮມກັບ ພະແນກອຸດສາຫະກຳ ແລະ ການຄ້າ ແລະ ພະແນກການເງິນ; ຍຸບຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ໂຮມກັບສະພັນແມ່ຍິງ; ຍຸບຫ້ອງການພັດທະນານາຊົນນະບົດ ໂຮມກັບ ພະແນກກະສິກຳ ແລະ ປ່າໄມ້ ແລະ ຫ້ອງວ່າການແຂວງ; ຍຸບຫ້ອງການຢາເສບຕິດ ໂຮມກັບ ປກສ.

- ປັບປຸງກົງຈັກການຈັດຕັ້ງຂອງບັນດາຂະແໜງການ, ຫ້ອງການຂັ້ນເມືອງໄດ້ສຳເລັດ, ຊັບຊ້ອນ, ເລືອກເຟັ້ນບຸກຄະລາກອນໃຫ້ແທດເໝາະກັບມາດຖານຂອງອົງການບໍລິຫານລັດ.

- ບຳລຸງກໍ່ສ້າງພະນັກງານສືບທອດປ່ຽນແທນທາງດ້ານທິດສະດີແລະ ວິຊາສະເພາະໄດ້ 157 ທ່ານ.

- ຊັບຊ້ອນຈັດວາງພະນັກງານເຂົ້າໃສ່ພະແນກການ, ຫ້ອງການ ແລະ ເມືອງ ທີ່ມີຄວາມຈຳເປັນຕາມການອະນຸມັດຂອງສູນກາງ.

- ສະເໜີຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນໃນ 4 ປີຜ່ານມາໄດ້ 14.177 ທ່ານ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດກົດລະບຽບລັດຖະກອນ 78 ຄົນ.

- ຄຸ້ມຄອງການຍົກຍ້າຍເຂົ້າ-ອອກຂອງພົນລະເມືອງ, ຄຸ້ມຄອງຊົນເຜົ່າ, ສາສະໜາ, ການຈົດທະບຽນແຕ່ງງານໃຫ້ຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ.

**2) ການພັດທະນາ ແລະ ຄຸ້ມຄອງບຸກຄະລາກອນ.**

ໄດ້ເອົາໃຈໃສ່ຈັດຕັ້ງໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດໃຫ້ແກ່ພະນັກງານ-ລັດຖະກອນ ແລະ ປະຊາຊົນຕິດພັນກັບການປັບປຸງພາລະບົດບາດ, ສິດ, ໜ້າທີ່ ແລະ ກຳນົດຕຳແໜ່ງງານຄືນໃໝ່ໃນ 15 ພະແນກການ, ຫ້ອງການທີ່ຂຶ້ນກັບສາຍຕັ້ງ, 12 ຫ້ອງການທີ່ຂຶ້ນກັບສາຍຂວາງ, 3 ຫ້ອງການທີ່ຂຶ້ນກັບກະຊວງ ແລະ 5 ໜ່ວຍງານຂອງບ້ານ ໃຫ້ແທດເໝາະກັບສະພາບຕົວຈິງຂອງແຕ່ລະພາກສ່ວນ ຕາມທິດ 3 ສ້າງ, ຕິດຕາມການຄຸ້ມຄອງລັດຖະກອນໃນກົງຈັກລັດເປັນປົກກະຕິ, ບຳລຸງ-ກໍ່ສ້າງ, ເລືອກເຟັ້ນ, ບັນຈຸ, ຊັບຊ້ອນ, ຈັດວາງພະນັກງານເຂົ້າໃສ່ແຕ່ລະຕຳແໜ່ງງານ ແຕ່ລະຂັ້ນຢ່າງເໝາະສົມ, ສົ່ງໄປຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງ ແລະ ວິຊາສະເພາະທັງພາຍໃນ ແລະ ຕ່າງປະເທດ ທັງໝົດ 525 ຄົນ, ຍິງ 96 ຄົນ; ຖັນແຖວພະນັກງານມີຄວາມເຕີບໃຫຍ່ທາງດ້ານປະລິມານ ແລະ ຄຸນນະພາບ, ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ຍຶດໝັ້ນອຸດົມການສັງຄົມນິຍົມ, ມີຄວາມບໍລິສຸດຕໍ່ພັກ, ຕໍ່ປະເທດຊາດ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ; ທົ່ວແຂວງມີພະນັກງານທັງໝົດ 7.443 ຄົນ, ຍິງ 3.494 ຄົນ ເພີ່ມຂຶ້ນ 1,04%; ລະດັບວິຊາສະເພາະ: ປະລິນຍາເອກ 11 ຄົນ, ຍິງ 1 ຄົນ; ປະລິນຍາໂທ 273 ຄົນ, ຍິງ 51 ຄົນ; ເໜືອປະລິນາຍາຕີ 58 ຄົນ, ຍິງ 20 ຄົນ; ປະລິນຍາຕີ 2.925 ຄົນ, ຍິງ 1.202 ຄົນ; ຊັ້ນສູງ 2.750 ຄົນ, ຍິງ 1.398 ຄົນ; ຊັ້ນກາງ 1.343 ຄົນ, ຍິງ 779 ຄົນ; ຊັ້ນຕົ້ນ 77 ຄົນ, ຍິງ 39 ຄົນ ແລະ ບໍ່ມີຊັ້ນ 5 ຄົນ, ຍິງ 5 ຄົນ; ແກ້ໄຂສິ່ງຫຍໍ້ທໍ້ທີ່ເກີດຂຶ້ນຈາກການບໍລິຫານ, ບໍລິການຂອງລັດຖະກອນ ແລະ ເຈົ້າໜ້າທີ່ປົກປ້ອງກົດໝາຍຈຳນວນໜຶ່ງ ທີ່ເປັນການກົດໜ່ວງອຸດຕັນການດຳລົງຊີວິດຂອງປະຊາຊົນ, ການຜະລິດ-ທຸລະກິດ ເປັນຕົ້ນ: ການອອກນິຕິກຳ, ການເກັບຄ່າທຳນຽມຕ່າງໆ, ກວດກາເກັບກຳຂໍ້ມູນຜູ້ເຊື່ອຖືສາສະໜາຕ່າງໆ, ເກັບກຳຂໍ້ມູນພົນລະເມືອງ ແລະ ການຍົກຍ້າຍເຂົ້າ-ອອກເມືອງ.

**3.4.3.4 ການເຕົ້າໂຮມຄວາມສາມັກຄີ ແລະ ການພັດທະນາອົງການຈັດຕັ້ງມະຫາຊົນ.**

**1) ແນວລາວສ້າງຊາດ.**

ໄດ້ເອົາໃຈໃສ່ປະຕິບັດຂໍ້ແຂ່ງຂັນໃນການສ້າງຄອບຄົວສາມັກປອງດອງໄດ້ 44.264 ຄອບຄົວ ເທົ່າກັບ 82,61% ແລະ ບ້ານສາມັກຄີປອງດອງໄດ້ 121 ບ້ານ ເທົ່າກັບ 75,95%; ນຳເອົາແນວທາງຂອງພັກ-ລະບຽບກົດໝາຍຂອງລັດລົງເຜີຍແຜ່ໄດ້ 510 ຄັ້ງ ມີຜູ້ເຂົ້າຮ່ວມ 30,900 ເທື່ອຄົນ, ເອົາໃຈໃສ່ຊີ້ນຳ-ຄຸ້ມຄອງວຽກງານສາສະໜາຢ່າງຕັ້ງໜ້າ; ປຸກລະດົມຂົນຂວາຍ, ຕ້ານ ແລະ ສະກັດກັ້ນ, ແກ້ໄຂທຸກຮູບການຂອງບຸກຄົນທີ່ບໍ່ຫວັງດີ, ສວຍໃຊ້ບັນຫາເຜົ່າ, ສາສະໜາ ແລະ ເຄື່ອນໄຫວໂດຍຖືເອົາບັນຫາດັ່ງກ່າວເປັນສາກບັງໜ້າ ຕອບຕ້ານແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ສ້າງຄວາມວຸ້ນວາຍ ກໍ່ຄວາມບໍ່ສະຫງົບໃນສັງຄົມ; ໄດ້ຈັດຕັ້ງສະເຫຼີມສະຫຼອງຫວນຄືນມູນເຊື້ອແນວລາວສ້າງຊາດ, ເຜີຍແຜ່ຜົນສຳເລັດກອງປະຊຸມສາມັນຄົບຄະນະກຳມະການສູນກາງແນວລາວສ້າງຊາດຄັ້ງທີ 4 ສະໄໝທີ IX ຕິດພັນກັບການຄົ້ນຄວ້າພິຈາລະນາ ໃນການຄັດເລືອກບ້ານເປົ້າໝາຍສ້າງ

ເປັນບ້ານສາມັກຄີ; ນຳເອົາເຄື່ອງບັນເທົາທຸກໄປຊ່ວຍເຫຼືອປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ມູນຄ່າ 66 ລ້ານກີບ, ສ້າງຕັ້ງກອງທຶນແກ້ໄຂຄວາມທຸກຍາກເຂດຫ່າງໄກສອກຫຼີກ ມູນຄ່າ 23 ລ້ານກີບ; ສ້າງຄອບຄົວ ແລະ ບ້ານສາມັກຄີປອງດອງ ສຳເລັດ 2 ເມືອງ (ເມືອງປາກຊັນ, ເມືອງທ່າພະບາດ) ແລະ 224 ບ້ານ ກວມ 76%.

**2) ສະຫະພັນນັກຮົບເກົ່າ.**

- ໄດ້ລົງເຄື່ອນໄຫວປາຖະກະຖາໃນວັນປະຫວັດສາດ ທີ່ສຳຄັນຕ່າງໆ ຂອງພັກ, ຂອງຊາດ ແລະ ນຳເອົາເອກະສານຂອງພັກ ແລະ ກົດໝາຍ ຂອງນັກຮົບເກົ່າລາວ ລົງເຜີຍແຜ່ໃຫ້ ສະມາຊິກນັກຮົບເກົ່າ ແຕ່ລະຂັ້ນໃນທົ່ວແຂວງ ໄດ້ 07 ຄັ້ງ ມີຜູ້ເຂົ້າຮ່ວມ 10.466 ຄົນ, ຍິງ 542 ຄົນ.

- ມີຕາໜ່າງຂ່າວ ຢູ່ສະຫະພັນນັກຮົບເກົ່າ 07 ເມືອງ ແລະ ໄດ້ເຄື່ອນໄຫວເກັບກຳ, ອອກຂ່າວທາງໂທລະໂຄ່ງຂອງເມືອງ ແລະ ວິທະຍຸ, ໂທລະພາບ ຂັ້ນແຂວງ ແລະ ສູນກາງ 1.714 ຂ່າວ, ແຈກຢາຍໜັງສືພິມຈາກສູນກາງສົ່ງລົງເມືອງໄດ້ 714 ສະບັບ, ວາລະສານ ຫຼື ຊື່ສິ່ງພິມຕ່າງໆ 1.230 ຫົວ.

- ລົງຊຸກຍູ້ປຸກລະດົມແຂ່ງຂັນ 3 ດີ 6 ຮັກສາເພີ່ມຂຶ້ນ, ທົ່ວແຂວງມີຜູ້ເຂົ້າຮ່ວມ ຈຳນວນ 3.883 ສະຫາຍ ແລະ ກວມ 83,72%, ທຽບໃສ່ສະໄໝທີ II ເພີ່ມຂຶ້ນ 58,60% ແລະ ມີ 138 ກົມກອງ, ກວມ 73,40% ຂອງຈຳນວນໜ່ວຍ (ບ້ານ).

- ທົ່ວແຂວງມີນັກຮົບເກົ່າທັງໝົດ 4.638 ສະຫາຍ, ຍິງ 353 ສະຫາຍ, ບຳນານ 588 ສະຫາຍ, ຍິງ 93 ສະຫາຍ; ໄດ້ຮັບອຸດໜູນ 1.304 ສະຫາຍ, ຍິງ 109 ສະຫາຍ; ບໍ່ໄດ້ອຸດໜູນ 2.578 ສະຫາຍ, ຍິງ 149 ສະຫາຍ (ຈຳນວນຫຼາຍແມ່ນບໍ່ມີເງື່ອນໄຂຮັບອຸດໜູນ ຕາມດຳລັດ 272/ລບ).

### 3.5. ສັງເກດຕີລາຄາຜົນສຳເລັດຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016 - 2020).

### 3.5.1 ສັງລວມຜົນສຳເລັດ.

ໂດຍລວມແລ້ວເສດຖະກິດຂອງແຂວງ ໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ, ຂະແໜງກະສິກຳ, ອຸດສາຫະກຳ-ການກໍ່ສ້າງ ແລະ ການບໍລິການ ເຖິງວ່າການຂະຫຍາຍຕົວຂອງບໍ່ສົມສ່ວນ, ແຕ່ການດຳລົງຊີວິດຂອງປະຊາຊົນດີຂຶ້ນ; ໂດຍສະເພາະເສດຖະກິດຄົວເຮືອນສາມາດຮັບປະກັນການດຳລົງຊີບໄດ້ດີສົມຄວນ, ຊຶ່ງມັນສະແດງໃຫ້ເຫັນວ່າ ມີການທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ, ມີອຸປະກອນຮັບໃຊ້ຄົວເຮືອນຄົບຖ້ວນ ແລະ ດີຂຶ້ນ; ການປູກຝັງລ້ຽງສັດສາມາດກຸ້ມຕົນເອງໄດ້, ປະຊາຊົນສ່ວນຫຼາຍໄດ້ເຂົ້າເຖິງລະບົບສາທາລະນາສຸກ, ມີການປຸງແຕ່ງ ແລະ ການຜະລິດສິນຄ້າກະສິກຳຮັບໃຊ້ພາຍໃນ ແລະ ສົ່ງອອກ, ອຸດສາຫະກຳ ແລະ ການບໍລິການ ເຖິງວ່າບໍ່ຂະຫຍາຍຕົວໃນດ້ານປະລິມານ ແຕ່ ກໍ່ສາມາດປັບປຸງໂຕເອງໃຫ້ສາມາດແຂ່ງຂັນໄດ້ບາງດ້ານ.

ການກໍ່ສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມ ຢູ່ຕົວເມືອງ ແລະ ຊົນນະບົດ ໄດ້ຮັບການພັດທະນາ ທົ່ວແຂວງມີເສັ້ນທາງເຂົ້າເຖິງທຸກບ້ານ ແລະ ສ່ວນໃຫ່ຍສາມາດທຽວໄດ້ຕະຫຼອດປີ, ຈຳນວນບ້ານໄດ້ຊົມໃຊ້ໄຟຟ້າຖາວອນ, ມີລະບົບໂທລະສັບຕັ້ງໂຕະ ແລະ ສັນຍານໂທລະສັບມືຖື ກວມ 97%, ບ້ານທີ່ບໍ່ມີສັນຍານໂທລະສັບ 9 ບ້ານ ກວມ 3%; ພື້ນຖານດ້ານການຄ້າ ການບໍລິການ ແລະ ທ່ອງທ່ຽວ ຂະຫຍາຍຕົວໄປດ້ວຍປະລິມານ ແລະ ຄຸນນະພາບ, ການສຶກສາຂອງໄວໜຸ່ມມີຄຸນນະພາບດີຂຶ້ນ, ການລຶບລ້າງການກົກໜັງສື ແລະ ການສຶກສານອກໂຮງຮຽນ ໄດ້ຮັບການເອົາໃຈໃສ່, ຕາໜ່າງດ້ານສາທາລະນະສຸກໄດ້ຮັບການປັບປຸງນັບມື້ນັບກວ້າງຂວາງ.

ບັນດາພະແນກການ, ຫ້ອງການອ້ອມຂ້າງແຂວງ ໄດ້ເອົາໃຈໃສ່ຫັນລົງຮາກຖານຢ່າງຕັ້ງໜ້າ, ຊ່ວຍເມືອງໃນການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ຕິດພັນກັບການພັດທະນາຊົນນະບົດຮອບດ້ານ ແລະ ລຶບລ້າງຄວາມທຸກຍາກ ຈຳນວນບ້ານ ແລະ ຄອບຄົວທຸກຍາກໄດ້ຫຼຸດລົງ ປະຈຸບັນຍັງເຫຼືອ 1,8%; ອັນພົ້ນເດັ່ນ ພວກເຮົາໄດ້ຈັດຕັ້ງປະຕິບັດວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ສຳເລັດ ຢູ່ 3 ເມືອງ ແລະ 6 ບ້ານ ເຮັດໃຫ້ ບ້ານເປົ້າໝາຍທົດລອງມີຄວາມເຂັ້ມແຂງ ແລະ ໜັກແໜ້ນ ສາມາດບໍລິຫານວຽກງານການປົກຄອງໄດ້ເປັນຢ່າງດີ.

### 3.5.2 ດ້ານອ່ອນຂໍ້ຄົງຄ້າງ.

- ການປະຕິບັດຄາດໝາຍສູ້ຊົນຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016-2020) **ເປັນຕົ້ນ:** ການຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ, ການສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ຍັງບໍ່ບັນລຸຜົນສຳເລັດເທົ່າທີ່ຄວນ ເຖິງວ່າໄດ້ກວດກາ, ຕີລາຄາ ແລະ ປະກາດລຶບລ້າງໄປແລ້ວກໍ່ຕາມ; ຄາດ

ໝາຍດ້ານສັງຄົມ ມີບາງຕົວຊີ້ວັດຍັງບໍ່ບັນລຸໄດ້ຕາມແຜນການທີ່ໄດ້ກຳນົດໄວ້ **ຄື:** ການຈັດຕັ້ງປະຕິບັດບັນດາຕົວເລກຊີ້ວັດໃນແຕ່ລະຄາດໝາຍ ຂອງເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (SDGs) **ເຊັ່ນ:** ດ້ານການສຶກສາທິການ ແລະ ດ້ານສາທາລະນະສຸກ: ອັດຕາການເຂົ້າຮຽນລວມຂອງເດັກອາຍຸ 3-5 ປີ, ອັດຕາຫຼອດເຫຼືອຊັ້ນປະຖົມ, ດັດສະນີຄວາມສະເໝີພາບລະຫວ່າງ ຍິງ-ຊາຍ, ອັດຕາການສັກຢາກັນພະຍາດ ແລະ ຕົວຊີ້ວັດອື່ນໆ ອີກຍັງບໍ່ທັນບັນລຸ.

- ອັດຕາການຂະຫຍາຍຕົວຂອງເສດຖະກິດ 5 ປີ ຢູ່ໃນລະດັບສະເລ່ຍ 6,5% ເຫັນວ່າບໍ່ໄດ້ຕາມແຜນທີ່ວາງໄວ້ (ແຜນ 7,8%) ລວມຍອດຜະລິດຕະພັນພາຍໃນ (GPP) ສະເລ່ຍໃສ່ຫົວຄົນ 2.131 ໂດລາ (ແຜນ 2.730 ໂດລາ); ການພັດທະນາເສດຖະກິດ ລະຫວ່າງຕົວເມືອງ ແລະ ຊົນນະບົດບໍ່ທັນສົມສ່ວນ.

- ການຫັນປ່ຽນໂຄງປະກອບເສດຖະກິດ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝຍັງເຮັດບໍ່ທັນໄດ້ ການຜະລິດກະສິກຳບໍ່ໄດ້ເຂົ້າສູ່ຂອດລະບົບການປຸງແຕ່ງ ເຮັດໃຫ້ການສ້າງມູນຄ່າເພີ່ມບໍ່ທັນຫຼາຍ; ສະນັ້ນ, ເບື້ອງບໍລິການຈຶ່ງເພີ່ມດ້ວຍຈັງວະທີ່ຊ້າ ແລະ ບາງດ້ານກໍ່ມີທ່າອ່ຽງຫຼຸດລົງ.

- ການຫັນປ່ຽນໂຄງປະກອບແຮງງານ ຕາມທິດພັດທະນາສີມືແຮງງານ ແລະ ການຍົກປະສິດທິພາບຂອງແຮງງານ ຂະຫຍາຍຕົວຊ້າ, ຊຶ່ງສະແດງໃຫ້ເຫັນວ່າ: ອັດຕາສ່ວນແຮງງານໃນຂະແໜງກະສິກຳ ຍັງກວມເປັນສ່ວນໃຫຍ່ ສະເລ່ຍ 52%ຕໍ່ປີ, ອັດຕາສ່ວນກວມແຮງງານດ້ານອຸດສາຫະກຳ-ກໍ່ສ້າງ ເພີ່ມຂຶ້ນສະເລ່ຍ 22,7%ຕໍ່ປີ ແລະ ອັດຕາສ່ວນກວມແຮງງານ ດ້ານການບໍລິການ ເພີ່ມຂຶ້ນສະເລ່ຍ 13,9%ຕໍ່ປີ; ໝາຍຄວາມວ່າອັດຕາສ່ວນແຮງງານໃນຂະແໜງກະສິກຳຍັງກວມເປັນສ່ວນຫຼາຍ ແລະ ການຫັນປ່ຽນແບບວິທີການຜະລິດ ໄປສູ່ເຕັກນິກວິທະຍາສາດຍັງບໍ່ທັນເຂົ້າສູ່ລວງເລິກ, ການສົ່ງເສີມທີ່ຕິດພັນກັບຕະຫຼາດຮອງຮັບຍັງໜ້ອຍລວມທັງການຫັນປ່ຽນຮູບແບບການຜະລິດຂອງປະຊາຊົນກໍ່ຍັງບໍ່ທັນການ.

- ເຖິງວ່າການສົ່ງອອກສິນຄ້າມີທ່າອ່ຽງເພີ່ມຂຶ້ນໃນແຕ່ລະປີ ແຕ່ການສ້າງມູນຄ່າເພີ່ມຂອງສິນຄ້າທີ່ສົ່ງອອກຍັງຈຳກັດ ສ່ວນໃຫຍ່ແມ່ນວັດຖຸດິບ, ຕະຫຼາດສົ່ງອອກບໍ່ກ້ວາງຂວາງ ຍັງໝູນວຽນຢູ່ນຳບັນດາປະເທດອ້ອມຂ້າງ, ມີຄວາມສ່ຽງຖ້າຕະຫຼາດມີບັນຫາ ຫຼື ວິກິດການ, ການຊອກຫາຕະຫຼາດ ແລະ ຄຸ້ມຄອງລາຄາສິນຄ້າຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ; ສິນຄ້າທີ່ນຳເຂົ້າ ຍັງບໍ່ແມ່ນສິນຄ້າຕໍ່ຍອດຜະລິດຕະພັນ ສ່ວນໃຫຍ່ເປັນສິນຄ້າເພື່ອການຊົມໃຊ້ທີ່ມູນຄ່າສູງ; ສະນັ້ນ, ຈຶ່ງເຮັດໃຫ້ການນຳເຂົ້າບໍ່ສາມາດກະຕຸ້ນການຜະລິດພາຍໃນໄດ້ ແລະ ເຮັດໃຫ້ແຂວງຂາດດູນການຄ້າໃນແຕ່ລະປີ.

- ການລົງທຶນຂອງລັດໃນໄລຍະຜ່ານມາບໍ່ໄດ້ຈັດຕັ້ງປະຕິບັດໄປຕາມແຜນທີ່ວາງໄວ້ ສ່ວນໃຫ່ຍມີແຕ່ສຸມໃສ່ການຊຳລະໜີ້ສິນ, ບັນດາໂຄງການທີ່ມີມູນຄ່າສູງ ສ່ວນຫຼາຍປະຕິບັດບໍ່ສຳເລັດ ແລະ ການສະສາງບໍ່ໄປຕາມກອບສັນຍາທີ່ກຳນົດ, ເພດານທີ່ຂັ້ນເທິງມອບໃຫ້ມີທ່າຫຼຸດລົງໃນແຕ່ລະປີ ເຮັດໃຫ້ມີໜີ້ສິນຄຸມເຄືອ, ຄວາມຕ້ອງການໃນການພັດທະນາມີຫຼາຍ ແຕ່ການສະໜອງທຶນພັດມີຈຳກັດ, ການປະຕິບັດລະບຽບກົດໝາຍວ່າດ້ວຍການລົງທຶນຂອງລັດຍັງບໍ່ທັນເຂັ້ມງວດ, ໂຄງການຈັດຕັ້ງປະຕິບັດກ່ອນແລ້ວບໍ່ສາມາດນຳເຂົ້າແຜນໄດ້ຢ່າງຄົບຖ້ວນ.

- ການລົງທຶນພາກເອກະຊົນເຫັນວ່າມີບັນຍາກາດດີ ແຕ່ການຄຸ້ມຄອງຍັງບໍ່ເປັນໄປຕາມແຜນບົດວິພາກເສດຖະກິດ-ເຕັກນິກ ແລະ ຍັງບໍ່ທັນຕິດພັນກັບການສ້າງລາຍຮັບໃຫ້ແກ່ປະຊາຊົນເທົ່າທີ່ຄວນ.

- ການພັດທະນາ ແລະ ການແກ້ໄຂຄວາມທຸກຍາກຍັງບໍ່ທັນເຂົ້າສູ່ລວງເລິກ ແລະ ຮັບປະກັນຄວາມຍືນຍົງເພື່ອເຮັດໃຫ້ແຂວງຫຼຸດພົ້ນອອກຈາກຄວາມທຸກຍາກ ຕາມມະຕິຂອງພັກທີ່ໄດ້ກຳນົດໄວ້, ພວກເຮົາຍັງບໍ່ທັນໄດ້ວິເຄາະ-ວິໃຈ ແລະ ສ້າງຄວາມເຂົ້າໃຈກ່ຽວກັບມາດຖານ, ເງື່ອນໄຂ ໃນການແກ້ໄຂຄວາມທຸກຍາກ ແລະ ກ້າວໄປສູ່ການພັດທະນາຢ່າງແທ້ຈິງ, ບໍ່ທັນສ້າງເປັນແຜນແມ່ບົດ, ວິໄສທັດ ແລະ ຍຸດທະສາດໃນການພັດທະນາເສດຖະກິດ-ສັງຄົມ ເພື່ອເປັນບ່ອນອີງໃນການວາງແຜນຈັດຕັ້ງປະຕິບັດໃນແຕ່ລະປີ.

- ການກະກຽມຄວາມພ້ອມໃນການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ຍັງເຮັດໄດ້ໜ້ອຍ, ການສ້າງຄວາມສາມາດແຂ່ງຂັນທາງດ້ານການຄ້າ, ການຍາດແຍ່ງກາລະໂອກາດ ເພື່ອເສີມສ້າງຮາກຖານການຜະລິດ ແລະ ການເຂົ້າເຖິງຕະຫຼາດສິນຄ້າ, ການນຳໃຊ້ໂອກາດການໃຫ້ສິດທິພິເສດທາງດ້ານການຄ້າ ແລະ ການນຳໃຊ້ທີ່ຕັ້ງຍຸດທະສາດຂອງແຂວງ ໃນການບໍລິການທາງຜ່ານ ໃນຂອບເຂດການຄ້າເສລີອາຊ່ຽນ (AFTA) ໂດຍສະເພາະປະ ເທດໄທຜ່ານແແຂວງເຮົາໄປ ສສ ຫວຽດນາມ ແລະ ສສ ຫວຽດນາມ ຜ່ານແຂວງເຮົາ ໄປປະເທດໄທຍັງເຮັດບໍ່ທັນໄດ້ດີ.

- ເມືອງ ແລະ ຂະແໜງການຈຳນວນໜຶ່ງ ເກັບລາຍຮັບບໍ່ບັນລຸຕາມຄາດໝາຍ ເນື່ອງຈາກການຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ວາງມາດຕະການແກ້ໄຂຍັງບໍ່ທັນຈະແຈ້ງ.

- ການສ້າງບ້ານໃຫຍ່ໃຫ້ກາຍສີສັນເປັນຕົວເມືອງນ້ອຍເຊັ່ນ: ບ້ານທ່າສີ-ນາກຸມ, ບ້ານພູຄຳ, ບ້ານທົ່ງນາມີ, ບ້ານວຽງຄຳ, ບ້ານຫ້ວຍຄູນ, ບ້ານໜອງກອກ ບໍ່ສາມາດປະຕິບັດໄດ້ຄົບຕາມມາດຖານເງື່ອນໄຂທີ່ກຳນົດໄວ້ ຈຶ່ງເຮັດໃຫ້ບໍ່ບັນລຸຕາມແຜນການ 5 ປີທີ່ຜ່ານມາ.

- ການທົດແທນຄ່າເສັຍຫາຍ, ຈັດສັນ, ຍົກຍ້າຍ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ທີ່ຖືກຜົນກະທົບຈາກໂຄງການພັດທະນາຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ.

**3.5.3 ບາງບົດຮຽນຖອດຖອນໄດ້.**

- ຕ້ອງຫັນບັນດາມະຕິຂອງຄະນະບໍລິຫານງານພັກແຂວງໃຫ້ເປັນຍຸດທະສາດໃນການພັດທະນາເສດຖະກິດ-ສັງຄົມ ເປັນແຜນການຈັດຕັ້ງປະຕິບັດເປັນປີ, ເປັນງວດ; ຜັນຂະຫຍາຍໃຫ້ເປັນໂຄງການ, ແຜນວຽກ, ແຜນງົບປະມານ, ແຜນຄົນ ແລະ ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ ພ້ອມທັງມີການກວດກາຕິດຕາມຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດທິດທາງ ແລະ ຄາດໝາຍສູ້ຊົນຂອງແຕ່ລະພະແນກການ, ຫ້ອງການ ແລະ ເມືອງ.

- ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຕ້ອງຍຶດໝັ້ນແນວທາງ, ຄາດໝາຍສູ້ຊົນ ແລະ ຈຸດສຸມ ຂອງແຜນການທີ່ໄດ້ກຳນົດໄວ້; ໃນໄລຍະກາງສະໄໝຄວນມີການສັງເກດຕີລາຄາ ເຖິງຄວາມສາມາດເປັນໄປໄດ້ໃນການຈັດຕັ້ງປະຕິບັດ ເພື່ອບັນລຸຄາດໝາຍທີ່ໄດ້ກຳນົດໄວ້ ແຕ່ບາງຄັ້ງອາດຈະບໍ່ບັນລຸຜົນ ດັ່ງນັ້ນ: ຕ້ອງມີການດັດປັບເພື່ອ ໃຫ້ສອດຄ່ອງກັບເງື່ອນໄຂ ສະພາບແວດລ້ອມພາຍໃນແຂວງໃນແຕ່ລະປີ.

- ການເລັ່ງລັດໃນການພັດທະນາໂດຍມີເປົ້າໝາຍເຮັດໃຫ້ເສດຖະກິດເຕີບໂຕໄວ ໂດຍອາໃສການຂຸດຄົ້ນ ແລະ ນຳໃຊ້ທ່າແຮງທີ່ໄດ້ປຽບທາງດ້ານຊັບພະຍາກອນທຳມະຊາດ, ທີ່ຕັ້ງ ແລະ ພູມສັນຖານ, ແຕ່ຄຽງຄູ່ກັນນັ້ນໂຄງປະກອບເສດຖະກິດທີ່ມີການຂະຫຍາຍຕົວໃນຈັງຫວະຕ່ຳ (ຂະແໜງກະສິກຳ); ດັ່ງນັ້ນ, ຕ້ອງໄດ້ຊຸກຍູ້ສົ່ງເສີມການສ້າງວຽກເຮັດງານທຳ, ສ້າງແຫຼ່ງລາຍຮັບໃຫ້ປະຊາຊົນເຂດຫ່າງໄກສອກຫຼີກ ແລະ ມີຄວາມຍືນຍົງ, ພັດທະນາຂະແໜງການດັ່ງກ່າວ ດ້ວຍການນຳໃຊ້ເຕັກນິກວິທະຍາສາດ ແລະ ວິຊາການເຂົ້າຊ່ວຍ ເພື່ອເພີ່ມຜົນຜະລິດ ແລະ ປະສິດທິພາບສູງຂຶ້ນ.

- ການຊຸກຍູ້ສົ່ງເສີມກຳລັງແຮງບົ່ມຊ້ອນຈາກທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນເຂົ້າໃນການສ້າງສາ ແລະ ພັດທະນາແຂວງຢ່າງຕັ້ງໜ້ານັ້ນ ມັນແມ່ນການຢັ້ງຢືນເຖິງການພົວພັນ-ຮ່ວມມືກັບຕ່າງປະເທດຢ່າງຖືກຕ້ອງສອດຄ່ອງ; ການຂົນຂວາຍ-ຍາດແຍ່ງທຶນຊ່ວຍເຫຼືອ, ການດຶງດູດການລົງທຶນຈາກພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງໃນແຕ່ລະປີ ມີຜົນສຳເລັດເປັນກ້າວໆມາ.

- ການປັບປຸງກົນໄກ, ລະບຽບການ ແລະ ວິທີການເຮັດວຽກ ຕາມບາດກ້າວບຸກທະລຸທັງສີ່ດ້ານ, ການປັບປຸງລູລະນະກົງຈັກການຈັດຕັ້ງ ແລະ ອົງການປົກຄອງແຕ່ລະຂັ້ນໃຫ້ມີຄວາມໜັກແໜ້ນ-ເຂັ້ມແຂງ ແລະ ຄຸ້ມຄອງບໍລິຫານລັດຕາມລະບຽບກົດໝາຍ, ມີຄວາມສັກສິດ, ໂປ່ງໃສ, ວ່ອງໄວ ເຮັດໃຫ້ສັງຄົມທົ່ວແຂວງມີຄວາມສະເໝີພາບຕໍ່ໜ້າກົດໝາຍ, ຄວາມຍຸດຕິທຳ.

- ການສ້າງ ແລະ ການປະຕິບັດວິໄສທັດຮອດປີ 2030, ຍຸດທະສາດການພັດທະນາ ໄລຍະ 10 ປີ (2016-2025), ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IV (2016-2020) ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຕ່ລະປີຂອງແຂວງ ຕ້ອງຕິດພັນກັບວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ, ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ຕິດພັນກັບການປົກປັກຮັກສາສະພາບພາບແວດລ້ອມແບບຍືນຍົງ.

# ພາກທີ II
# ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V ຂອງແຂວງ (2021 - 2025)

ແຂວງບໍລິຄຳໄຊ ສ້າງຕັ້ງຂຶ້ນໃນວັນທີ 6 ມີນາ ປີ 1984 ມີເນື້ອທີ່ 15.977 ກິໂລຕາແມັດ, ຕັ້ງຢູ່ພາກກາງ ແລະ ເປັນບ່ອນທີ່ກິ່ວສຸດຂອງປະເທດ ມີລວງຍາວ ແຕ່ຊາຍແດນດ້ານຕາເວັນອອກ-ຕາເວັນຕົກ 150 ກິໂລແມັດ, ທິດຕາເວັນອອກຕິດກັບ 2 ແຂວງ ສສ ຫວຽດນາມ, ທິດຕາເວັນຕົກ ຕິດກັບ 3 ແຂວງ ຂອງລາດຊະອານາຈັກໄທ, ລັກສະນະພູມສັນຖານ ເປັນທົ່ງພຽງ 36% ແລະ ພູດອຍ 64%; ດິນ, ນ້ຳ, ອາກາດ, ແຮ່ທາດ, ປ່າໄມ້ຍັງປົກຫຸ້ມ ກວມ 74%; ເໝາະແກ່ການພັດທະນາດ້ານກະສິກຳ, ອຸດສາຫະກຳ, ດ້ານບໍລິການ ແລະ ການທ່ອງທ່ຽວ ເປັນຕົ້ນ: ການປູກ, ການລ້ຽງ, ການຂົນສົ່ງ (Logistic); ລະບົບການປົກຄອງ ມີ 291 ບ້ານ, 7 ເມືອງ, ມີ 18 ເຜົ່າ ດຳລົງຊີວິດຢູ່ຮ່ວມກັນ; ເປັນແຂວງໜຶ່ງທີ່ມີທີ່ຕັ້ງຍຸດທະສາດດ້ານວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບທີ່ຫຼໍ່ແຫຼມ ໃນອັນ 2 ຂອງປະເທດ, ສັດຕູ ແລະ ກຸ່ມຄົນບໍ່ດີຍັງສືບຕໍ່ ນຳໃຊ້ກົນອຸບາຍຫັນປ່ຽນໂດຍສັນຕິເພື່ອຫວັງມ້າງເພທຳລາຍຢ່າງບໍ່ລົດລະ; ແຜນ 5 ປີ ຄັ້ງທີ V ຖືເປັນບາດກ້າວທີ່ສຳຄັນເພື່ອສ້າງພື້ນຖານການຫັນເສດຖະກິດຈາກປະສິດທິຜົນຕ່ຳໄປສູ່ໂຄງສ້າງທີ່ມີຄຸນນະພາບສູງ ຕາມທິດສົມສ່ວນ, ສີຂຽວ ແລະ ຍືນຍົງ ພ້ອມທັງສ້າງເງື່ອນໄຂພັດທະນາໃຫ້ມີລາຍຮັບປານກາງ-ສູງໃນປີ 2030. ດ້ານທິດຕາເວັນອອກ ມີດ່ານສາກົນ 1 ແຫ່ງ ມີດ່ານ ປະເພນີ 3 ແຫ່ງ **ພິເສດ**: ເຂດເສດຖະກິດນ້ຳຫາງາງ ຈະສ້າງເປັນຈຸດຄ່ຽນຖ່າຍສິນຄ້າທີ່ທັນສະໄໝ (Logistic) ດ້ານທິດຕາເວັນຕົກ ໄດ້ມີດ່ານສາກົນ 1 ແຫ່ງ, ດ່ານປະເພນີ 3 ແຫ່ງ, ພິເສດລັດຖະບານໄດ້ອະນຸມັດສ້າງຂົວນ້ຳຂອງແຫ່ງທີ 5 ປາກຊັນ-ບຶງການ.

ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V ຂອງແຂວງ ຍັງເປັນແຜນສືບຕໍ່ແຜນພັດທະນາເສດ ຖະກິດ-ສັງຄົມ ຄັ້ງທີ IV ຂອງແຂວງ, ຜັນຂະຫຍາຍຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ (2016-2025) ແລະ ວິໄສທັດຮອດປີ 2030, ມະຕິກອງປະຊຸມໃຫຍ່ຂອງພັກປະຊາຊົນປະຕິວັດລາວ ຄັ້ງທີ XI; ທັງເປັນແຜນການຜັນຂະຫຍາຍຜົນສຳເລັດ ແລະ ແກ້ໄຂຈຸດອ່ອນ ແລະ ຂໍ້ຄົງຄ້າງຂອງ ແຜນການ 5 ປີ ຄັ້ງທີ IV (2016-2020); ການວາງແຜນການ 5 ປີ ຄັ້ງທີ V ແມ່ນອີງໃສ່ຈຸດພິເສດ, ທ່າແຮງ ແລະ ສະພາບເສດຖະກິດຕົວຈິງຂອງແຂວງ, ຖືເປັນບາດກ້າວທີ່ສຳຄັນເພື່ອສ້າງພື້ນຖານການຫັນເສດຖະກິດຈາກປະສິດທິຜົນຕ່ຳໄປສູ່ໂຄງສ້າງທີ່ມີຄຸນນະພາບສູງຕາມທິດສົມສ່ວນ, ສີຂຽວ ແລະ ຍືນຍົງ.

ໂດຍລວມແລ້ວ ໃນໄລຍະ 5 ປີ ທີ່ຜ່ານມາ ເຖິງວ່າແຂວງບໍລິຄຳໄຊ ໄດ້ປະເຊີນກັບສະພາບຄວາມຫຍຸ້ງຍາກທັງພາຍໃນ ແລະ ພາຍນອກ ແຕ່ກໍ່ຍັງສາມາດບັນລຸໄດ້ຫຼາຍຄາດໝາຍ, ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສະເພາະຢູ່ເຂດຊົນນະບົດກໍ່ໄດ້ຮັບການປັບປຸງ ແລະ ແກ້ໄຂ ຊຶ່ງສະແດງອອກໃນອັດສ່ວນຄວາມທຸກຍາກຢູ່ໃນທ່າອ່ຽງຫຼຸດລົງ.

### 1. ສະພາບແວດລ້ອມທີເອື້ອອຳນວຍ ແລະ ສິ່ງທ້າທາຍ.

### 1.1. ສະພາບພາກພື້ນ ແລະ ສາກົນ.

**ການເຕີບໂຕເສດຖະກິດໂລກ**: ຕາມການຕີລາຄາຂອງທະນາຄານໂລກ ການເຕີບໂຕ GDP ປີ 2019 ຄາດວ່າຈະບັນລຸປະມານ 2,6% (ຕ່ຳກວ່າຄາດໝາຍທີ່ວາງໄວ້ 0.3%) ແລະ ຄາດວ່າຈະຢູ່ໃນລະດັບ 2,8% ໃນປີ 2021 ຍ້ອນການປັບປຸງສະພາບການເງິນສາກົນ ແລະ ການຟື້ນຕົວຂອງປະເທດກຳລັງພັດທະນາ; ແຕ່ການຂະຫຍາຍຕົວເສດຖະກິດຂອງປະເທດ ກຳລັງພັດທະນາຍັງຈະມີຂໍ້ຫຍຸ້ງຍາກຫຼາຍຢ່າງຍ້ອນການສະລໍຕົວຂອງການລົງທຶນ, ຄວາມເປັນໄປໄດ້ການຂັດແຍ່ງການຄ້າລະຫວ່າງຫຼາຍປະເທດທີ່ອາດແກ່ຍາວ ແລະ ການເຕີບໂຕຂອງເສດຖະກິດມະຫາອຳນາດບາງປະເທດອາດຈະຢູ່ໃນຈັງຫວະທົດຖອຍ.

**ສົງຄາມການຄ້າ ຈີນ - ອາເມລິກາ ແລະ ຜົນກະທົບຕໍ່ການລົງທຶນຂອງ ຈີນ ໃນ ສປປ ລາວ ແລະ ປະເທດອາຊຽນ**: ສົງຄາມການຄ້າ ຈີນ-ອາເມລິກາ ໄດ້ສືບຕໍ່ແກ່ຍາວເປັນເວລາດົນພໍສົມຄວນ ແລະ ອີງຕາມການຕີລາຄາຂອງສະຖາບັນສາກົນຕ່າງໆ ເຫັນວ່າບັນຫານີ້ຍັງຈະບໍ່ມີການຍຸດຕິໃນໄວໆນີ້ ເຊິ່ງຜົນກະທົບຕໍ່ລະບົບເສດຖະກິດ, ການຜະລິດ ແລະ ການຊົມໃຊ້ທົ່ວໂລກ ເຮັດໃຫ້ບັນຍາກາດການລົງທຶນສະລໍຕົວ ຍ້ອນນັກ

ລົງທຶນຂາດຄວາມໝັ້ນໃຈກັບສະພາບທີ່ບໍ່ໝັ້ນທ່ຽງດັ່ງກ່າວ; ອາຊຽນ ແລະ ສປປ ລາວ ກໍ່ເຊັ່ນດຽວກັນ ໄດ້ຮັບຜົນກະທົບຈາກການຂັດແຍ່ງນີ້ **ເປັນຕົ້ນ:**

- ມູນຄ່າການຄ້າ ລາວ ຕໍ່ ກັບ ຈີນ ແລະ ຕໍ່ກັບ ອາເມລິກາ ເຫັນວ່າບໍ່ຄ່ອງຕົວ; ການຄ້າກັບ ຈີນ ຄາດວ່າຈະບໍ່ມີຜົນກະທົບຫຼາຍ ເພາະເປັນການຄ້າຊາຍແດນ ແຕ່ສິ່ງທີ່ອາດຕ້ອງເປັນກັງວົນແມ່ນການລົງທຶນຂອງ ຈີນ ທີ່ຢູ່ໃນ ສປປ ລາວ ອາດຫຼຸດລົງ ຍ້ອນການຂະຫຍາຍໂຕ GDP ແລະ ລາຍຮັບຂອງ ຈີນ ອາດຫຼຸດລົງ ສາເຫດຍ້ອນການສົ່ງອອກສິນຄ້າສູ່ອາເມລິກາ ທີ່ຫຼຸດລົງ; ສະນັ້ນ, ອາດມີບາງໂຄງການລົງທຶນຂອງຈີນ ໃນ ສປປ ລາວ ທີ່ອາດໄດ້ຮັບຜົນກະທົບ ໃນເວລາດຽວກັນ, ຈີນ ສົ່ງສິນຄ້າກະສິກຳໄປອາເມລິກາ ເປັນປະລິມານ ແລະ ມູນຄ່າທີ່ສູງ, ການເຮັດສົງຄາມທາງການຄ້າ ຈະເຮັດໃຫ້ ຈີນ ຕ້ອງຊອກຊ່ອງທາງໃນການສົ່ງອອກສິນຄ້າຂອງຊາວກະສິກອນ ແລະ ເປັນໄປໄດ້ທີ່ຈະເພີ່ມການສົ່ງອອກ ໃນຂົງເຂດໃກ້ຄຽງລວມທັງອາຊຽນ, ການເພີ່ມຂຶ້ນຂອງສິນຄ້າ ຈີນ ໃນ ສປປ ລາວ ກໍ່ຕ້ອງມີຜົນກະທົບ ຍ້ອນສິນຄ້າຂອງຈີນແມ່ນມີທ່າແຮງທີ່ສູງ, ມີເຕັກໂນໂລຢີທີ່ທັນສະໄໝໃນການຜະລິດ, ສິນຄ້າມີຄວາມຫຼາກຫຼາຍ ແລະ ຕົ້ນທຶນການຂົນສົ່ງໃນອານາຄົດກໍ່ຈະຫຼຸດລົງພາຍຫຼັງສຳເລັດໂຄງການລົດໄຟ ລາວ-ຈີນ.

- ສົງຄາມການຄ້າ ສປ ຈີນ - ສະຫະລັດອາເມລິກາ ພາໃຫ້ຄ່າເງິນຢວນອ່ອນ ເຮັດໃຫ້ເສດຖະກິດຂອງສປຈີນ ຂະຫຍາຍຕົວໃນຈັງຫວະທີ່ຊ້າ, ການບໍລິໂພກ ແລະ ຊົມໃຊ້ພາຍໃນຫຼຸດລົງ; ພ້ອມກັນນີ້, ຍັງໄດ້ສົ່ງຜົນກະທົບຕໍ່ການທ່ອງທ່ຽວໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້ໂດຍກົງ ໂດຍສະເພາະໃນໄລຍະຫຼັງມານີ້ ນັກທ່ອງທ່ຽວຈີນ ທີ່ໄປທ່ຽວປະເທດໄທ, ຫວຽດນາມ ແລະ ອິນໂດເນເຊຍໄດ້ຫຼຸດລົງຊຶ່ງສົ່ງຜົນກະທົບຕໍ່ການທ່ອງທ່ຽວ ສປປ ລາວ ລວມທັງການລົງທຶນຂອງ ສປ ຈີນ ໃນ ລາວ ເພາະຄາດວ່າ ເສດຖະກິດ ສປ ຈີນ ຍັງຈະຢູ່ໃນຈັງຫວະຂະຫຍາຍຕົວຊ້າໃນ 2-3 ປີຕໍ່ໜ້າ; ໃນຊຸມປີຕໍ່ໜ້ານີ້ ເປັນໄລຍະຂອງການພັດທະນາອຸດສະຫະກຳ 4.0 ຊຶ່ງເປັນຂະບວນວິວັດທະນາການພັດທະນາອຸດສະຫະກຳນັບຕັ້ງແຕ່ໄລຍະທຳອິດ ໃນທ້າຍສັດຕະວັດທີ 18 ຈາກອຸດສາຫະກຳ ນຳໃຊ້ຈັກອາຍນໍ້າ ມາເປັນໄຟຟ້າເພື່ອນຳໃຊ້ເຂົ້າໃນການຜະລິດໃນຕົ້ນສັດຕະວັດທີ່ 20 ແລະ ໃນຕົ້ນຊຸມປີ 1970 ຍົກລະດັບປັດໄຈການຜະລິດມາເປັນ ເຄື່ອງໄຟຟ້າ ແລະ ເຕັກໂນໂລຢີ ເພື່ອເພີ່ມທະວີການຜະລິດອຸດສະຫະກຳ, ຍ້ອນການພັດທະນາ ແລະ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ແລະ ໄວວາຂອງເຕັກໂນໂລຢີ, ປັດຈຸບັນຈຶ່ງໄດ້ກ້າວເຂົ້າສູ່ ໄລຍະອຸດສະຫະກຳ 4.0 (ຫຼືເອີ້ນວ່າ ເສດຖະກິດ 4.0) ຊຶ່ງມີຄວາມໝາຍວ່າ ການນຳໃຊ້ອິນເຕີເນັດໃນການເຮັດທຸລະກຳ ແລະ ໜ້າວຽກຕ່າງໆ ຊຶ່ງອຸດສະຫະກຳ 4.0 ມີປະໂຫຍດຢ່າງໃຫຍ່ຫຼວງ ໂດຍສະເພາະກັບປະເທດຮັ່ງມີ ທີ່ມີຄວາມສາມາດດ້ານທຶນຮອນ, ຊັບພະຍາກອນມະນຸດ, ລະບຽບການ ແລະ ເຕັກໂນໂລຢີ ໃນການຮອງຮັບ ແລະ ຈັດຕັ້ງປະຕິບັດໃນເວລາດຽວກັນ ບັນດາປະເທດທີ່ມີຄວາມສ່ຽງ ທີ່ຈະໄດ້ຮັບຜົນກະທົບດ້ານລົບຫຼາຍກ່ອນດ້ານບວກ ແມ່ນປະເທດດ້ອຍພັດທະນາ ຍ້ອນຊ່ອງຫວ່າງດ້ານເຕັກໂນໂລຢີທີ່ນັບມື້ນັບແຕກໂຕນ (Digital gap); ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງສຶກສາ ທັງຄວາມສ່ຽງ ແລະ ໂອກາດ ໂດຍສະເພາະໃນໄລຍະຍາວ ຍ້ອນບາງສາຂາອາຊີບຈະໝົດໄປ, ຖານການຜະລິດທີ່ເຄີຍໃຊ້ແຮງງານອັດຕາທີ່ຕໍ່າຢູ່ປະເທດດ້ອຍພັດທະນາ ສ່ວນໜຶ່ງຈະຖືກຍ້າຍໄປຂົງເຂດອື່ນ ເປັນຕົ້ນບາງປະເທດໃນເອີລົບທີ່ສາມາດນຳໃຊ້ IOT (Internet of thing) ແລະ AI (Artificial Intelligence) ເຂົ້າໃນການບວກການຜະລິດທີ່ບໍ່ຈຳເປັນຕ້ອງໃຊ້ແຮງງານມະນຸດ ເຊັ່ນ: ການຜະລິດແຜ່ນແພ, ເຄື່ອງນຸ່ງຂອງຖື; ສຳລັບໂອກາດຂອງອຸດສະຫະກຳ 4.0 ທີ່ປະເທດກຳລັງພັດທະນາ ແລະ ປະເທດດ້ອຍພັດທະນາສາມາດຍາດແຍ່ງໄດ້ ລວມມີ: ການຜະລິດກະສິກຳສະອາດ, ການລ້ຽງສັດທີ່ໃຊ້ຕົ້ນທຶນຕໍ່າ, Unseen Tourism... ແຕ່ຢາກສາມາດບັນລຸໄດ້ເປົ້າໝາຍເຫຼົ່ານັ້ນ ຕ້ອງມີການກະກຽມ ໂດຍສະເພາະ ສປປ ລາວ ຕ້ອງພັດທະນາຊັບພະຍາກອນມະນຸດໃຫ້ເຂັ້ມແຂງ, ໃຫ້ສັງຄົມມີຄວາມເຂົ້າໃຈ ແລະ ຈິງໃຈໃນການມີສ່ວນຮ່ວມຢ່າງຕັ້ງໜ້າ ແລະ ເປັນເຈົ້າການ.

ການລະບາດຂອງໂລກໄວລັດໂຄໂລນາ ໃນຕົ້ນປີ 2020 ໄດ້ຜົນກະທົບຕໍ່ເສດຖະກິດ-ສັງຄົມຂອງໂລກ **ເປັນຕົ້ນ:** ຂະແໜງທ່ອງທ່ຽວຫຼຸດລົງ 55% ເມື່ອທຽບໃສ່ ໄລຍະດຽວກັນຂອງປີຜ່ານມາ, ໂຮງງານຜະລິດພາຫານະຫຼຸດລົງປະມານ 15% ໃນໄຕມາດທຳອິດຂອງ ປີ 2020, ການໃຊ້ຈ່າຍສິນຄ້າຟຸມເຟືອຍກໍ່ຫຼຸດລົງ, ອົງການອະນາໄມໂລກກຳນົດແຜນຕອບຮັບ ແລະ ສ້າງຄວາມພ້ອມໃນການຮັບມືຊຶ່ງຄາດວ່າຈະ ໃຊ້ທຶນຮອນປະມານ 675 ລ້ານໂດລາສະຫະລັດ.

**1.2. ສະພາບພາຍໃນ.**

ດ້ວຍຄວາມເອົາໃຈໃສ່ຂອງພັກ-ລັດຖະບານ, ອົງການປົກຄອງທຸກຂັ້ນ, ການຮ່ວມແຮງຮ່ວມໃຈຂອງປະຊາຊົນລວມທັງການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ແລະ ປະເທດເພື່ອນມິດ, ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມ ດໍາເນີນໄປໄດ້ປົກກະຕິ ແຕ່ໃນໄລຍະ 5 ປີຕໍ່ໜ້າ (2021-2025) ສປປ ລາວ ຍັງຈະສືບຕໍ່ພະເຊີນໜ້າກັບສິ່ງທ້າທາຍທີ່ນັບມື້ນັບຫຼາຍຂຶ້ນ ເປັນຕົ້ນ ຄວາມສ່ຽງຂອງເສດຖະກິດ ແລະ ການຄ້າໂລກທີ່ມີການປ່ຽນແປງແບບຄາດເດົາໄດ້ຍາກ, ຄວາມຂັດແຍ່ງກັນທາງດ້ານການເມືອງ ແລະ ການຊ່ວຍເຫຼືອເພື່ອການພັດທະນາທີ່ຢູ່ໃນທ່າອ່ຽງຫຼຸດລົງ, ອັດຕາການຫຼຸດລົງຂອງຊັບພະຍາກອນທໍາມະຊາດໄດ້ສົ່ງຜົນກະທົບຕໍ່ສະພາບການປ່ຽນແປງດິນຟ້າອາກາດ ເຊິ່ງນໍາມາຍັງຜົນເສຍຫາຍທັງດ້ານເສດຖະກິດ, ສັງຄົມ ແລະ ຕໍ່ລະບົບນິເວດວິທະຍາ; ການເພີ່ມຂຶ້ນຂອງການຊົມໃຊ້ຊັບພະຍາກອນ ແລະ ການຫຼຸດລົງຂອງສິ່ງແວດລ້ອມແມ່ນຍ້ອນຫຼາຍສາເຫດເຊັ່ນ: ການເພີ່ມຂຶ້ນຂອງປະຊາກອນ, ການບໍລິໂພກ ແລະ ການຜະລິດທີ່ບໍ່ຍືນຍົງ, ຜົນກະທົບສະສົມຈາກການພັດທະນາອຸດສະຫະກໍາໜັກ ແລະ ການຕັດໄມ້ທໍາລາຍປ່າ, ການເພີ່ມຂຶ້ນຂອງປະຊາກອນ ໝາຍເຖິງການເພີ່ມຂຶ້ນຄວາມຕ້ອງການການບໍລິໂພກຊັບພະຍາກອນ ແລະ ສິ່ງແວດລ້ອມ. ເພື່ອຮັບປະກັນໃຫ້ ແຜນ 5 ປີ ຄັ້ງທີ V ສາມາດດໍາເນີນໄປຕາມຈຸດປະສົງ ແລະ ເປົ້າໝາຍທີ່ກໍານົດ ພວກເຮົາຕ້ອງມີມາດຕະການແກ້ໄຂບັນຫາທັງໄລຍະສັ້ນ, ໄລຍະກາງ, ໄລຍະຍາວ, ເຮັດໃຫ້ແຜນ 5 ປີ ຄັ້ງທີ V ເປັນແຜນການທີ່ແນໃສ່ສ້າງຜົນປະໂຫຍດສູງສຸດຕໍ່ແຂວງ ແລະ ປະຊາຊົນເປັນສ່ວນໃຫຍ່ຕາມເງື່ອນໄຂທີ່ຍືນຍົງ, ຕາມທິດສີຂຽວ ແລະ ຫຼຸດຜ່ອນຕົ້ນທຶນການພັດທະນາທີ່ບໍ່ຈໍາເປັນ, ສ້າງໃຫ້ເປັນແຜນທີ່ເຕົ້າໂຮມທິດສະດີ ແລະ ພຶດຕິກໍາ ຂອງທຸກພາກສ່ວນ ແລະ ທຸກຂະແໜງການຂອງການພັດທະນາ; ສະນັ້ນ, ແຜນ 5 ປີ ຄັ້ງທີ V ແມ່ນສຸມໃສ່ການພັດທະນາເສດຖະກິດທີ່ມີຜົນປະໂຫຍດຕໍ່ປະຊາຊົນດ້ວຍການສ້າງວຽກເຮັດງານທໍາໃຫ້ລາຍຂຶ້ນ,ສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (SME), ປັບປຸງຄ່າຄອງຊີບໃຫ້ເໝາະສົມກັບລາຍໄດ້, ທຸກຄົນມີສິດສະເໝີພາບ ແລະ ມີສ່ວນຮ່ວມໃນທຸກຂະບວນການພັດທະນາ, ເສດຖະກິດຂະຫຍາຍຕົວ, ການລົງທຶນເອກະຊົນຂະໜາດໃຫຍ່ມີຄຸນນະພາບ ແລະ ມີຄວາມຍືນຍົງ ພ້ອມທັງມີສະຖຽນລະພາບດ້ານການເງິນ; ປັດໄຈສໍາຄັນຕ້ອງໄດ້ເພີ່ມທະວີຄວາມສາມາດໃນການຜະລິດ ແລະ ການສົ່ງເສີມນະວັດຕະກໍາໃໝ່ ແລະ ພູມປັນຍາເພື່ອເປັນປັດໄຈຂັບເຄື່ອນໃນການຂຸດຄົ້ນທ່າແຮງບົ່ມຊ້ອນ, ກາລະໂອກາດ ແລະ ສ້າງຄວາມພ້ອມໃນການຮັບມືກັບສະພາບການພັດທະນາອຸດສະຫະກໍາ 4.0 ສ້າງໃຫ້ມີຄວາມກົມກຽວກັບຍຸດທະສາດ, ບັນດາແຜນງານ ແລະ ໂຄງການ, ແຜນການ ເປັນປັດໄຈສໍາຄັນບັນລຸເປົ້າໝາຍການພັດທະນາ.

**2. ຈຸດໝາຍລວມ.**

ຈຸດໝາຍລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V (2021-2025) ແມ່ນເພື່ອສຸມໃສ່ພັດທະນາເສດຖະກິດ-ສັງຄົມຕາມທ່າແຮງທີ່ມີຢ່າງເຕັມສ່ວນ ເພື່ອພັດທະນາແຂວງບໍລິຄໍາໄຊ ບັນລຸເງື່ອນໄຂການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາຢ່າງໜັກແໜ້ນ ດ້ວຍການເຕີບໂຕທີ່ມີຄຸນນະພາບຕາມທິດສົມດຸນ ແລະ ສີຂຽວ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ໃນປີ 2030 ຄື: ***"“ສ້າງແຂວງບໍລິຄໍາໄຊເປັນປະຕູເສດຖະກິດ, ແຫຼ່ງຜະລິດພະລັງງານ, ບໍລິການທາງຜ່ານ ແລະ ຄຸ້ມຄອງສິ່ງແວດລ້ອມແບບຍືນຍົງ ”***" ຕິດພັນກັບການປັບປຸງແບບແຜນດໍາລົງຊີວິດໃໝ່ ທີ່ກ່າວໜ້າ ເປັນຕົ້ນການຫັນປ່ຽນແນວຄິດທີ່ອາໃສແຕ່ການບໍລິໂພກເປັນຕົ້ນຕໍ ໃນໄລຍະຜ່ານມາ, ຫັນມາເຮັດການຜະລິດກຸ້ມຕົນເອງ ແລະ ກາຍເປັນສິນຄ້າທີ່ຍືນຍົງ ພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກຂອງປະຊາຊົນໃນເຂດຊົນນະບົດພູດອຍໃຫ້ເປັນເຈົ້າການທໍາການຜະລິດໃຫ້ກຸ້ມກິນ, ມີໃຊ້ກຸ້ມຕົນເອງເພິ່ງຕົນເອງ, ຕິຖອຍແນວຄິດຄອງຄອຍລໍຖ້າ ແລະ ສ້າງວິຖີຊີວິດໃໝ່ ວິທີທໍາມາຫາກິນແບບໃໝ່, ພັດທະນາພື້ນຖານໂຄງລ່າງທີ່ຈໍາເປັນຢູ່ໃນເຂດຫ່າງໄກສອກຫຼີກ ບັນດາເຂດຈຸດສຸມ ເພື່ອເຮັດໃຫ້ປະຊາຊົນ ໄດ້ຮັບການບໍລິການຂັ້ນພື້ນຖານຂອງລັດ ແລະ ໄດ້ສົ່ງສິນຄ້າອອກສູ່ຕະຫຼາດໃຫ້ຫຼາຍຂຶ້ນ, ໂດຍເລີ່ມຈາກການຫັນປ່ຽນແນວຄິດຂອງພະນັກງານ, ສະມາຊິກພັກ, ຜູ້ປະກອບການ ແລະ ປະຊາຊົນບັນດາເຜົ່າຢ່າງເປັນເອກະພາບທົ່ວເຖິງ, ປະຕິບັດຢ່າງມີຈຸດສຸມ ແລະ ມີຜູ້ຮັບຜິດຊອບຢ່າງແທ້ຈິງ.

**3. ທິດທາງ ແລະ ໜ້າທີ່ຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V (2021-2025).**

ແຂວງໄດ້ກໍານົດທິດທາງ ແລະ ໜ້າທີ່ລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ V (2021-2025) **ດັ່ງນີ້:**

1) ເຮັດໃຫ້ເສດຖະກິດຂອງແຂວງຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ, ມີຄຸນນະພາບ ແລະ ເຕີບໂຕໄປຕາມທິດສີມດຸນເທື່ອລະກ້າວ, ດຸ່ນດ່ຽງລະຫວ່າງການພັດທະນາ ແລະ ການສະໜອງທຶນ ໂດຍໃຫ້ສອດຄ່ອງກັບເງື່ອນໄຂໃໝ່ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໂດຍຖືເອົາການຜະລິດກະສິກຳເປັນພື້ນຖານໃຫ້ແກ່ການຂະຫຍາຍຕົວຂອງອຸດສາຫະກຳ.

2) ພັດທະນາເສດຖະກິດເປັນໃຈກາງ ແລະ ຍືນຍົງ (SDGs), ຮັບປະກັນໃຫ້ມີຄວາມສອດຄ່ອງກົມກຽວລະຫວ່າງການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມເປັນສຳຄັນ ແລະ ການປົກປັກຮັກສາສະພາບແວດລ້ອມເປັນວຽກຈຳເປັນ, ການພັດທະນາຊັບພະຍາກອນມະນຸດເປັນຂອດຕັດສິນ, ທັງເປັນເຈົ້າການຮັບມືກັບໄພພິບັດທຳມະຊາດຢ່າງທັນການ ແລະ ຮັບປະກັນການພັດທະນາຊົນນະບົດຮອບດ້ານຕິດພັນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ.

3) ສ້າງການຫັນປ່ຽນຈາກສັງຄົມທີ່ຕິດພັນກັບການບໍລິໂພກເປັນສ່ວນຫຼາຍ, ມາເປັນການຜະລິດກຸ້ມຕົນເອງເທື່ອລະກ້າວ ແລະ ຂາຍເປັນສິນຄ້າ **(New Normal)** ໃຫ້ມີຄຸນນະພາບ ແລະ ກາຍເປັນປັດໄຈຕັດສິນ ການພັດທະນາ, ສ້າງກຳລັງແຮງງານໃຫ້ມີສີມື, ມີລະບຽບວິໄນ ແລະ ດຸໝັ່ນ, ອົດທົນ, ສ້າງໃຫ້ໄດ້ຊ່ຽວຊານສະເພາະດ້ານວິຊາການ ແລະ ເຕັກນິກ, ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານລັດ, ວິສາຫະກິດ ແລະ ຜູ້ປະກອບການ, ຍົກສູງຄວາມສາມາດໃນການແຂ່ງຂັນກັບພາກພື້ນ.

4) ຮັກສາສະຖຽນລະພາບທາງດ້ານການເມືອງ, ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ້ນ, ສ້າງສັງຄົມໃຫ້ສີວິໄລ ແລະ ຍຸຕິທຳ.

5) ເປີດກ້ວາງການຮ່ວມມືກັບສາກົນດ້ວຍຫຼາຍຮູບແບບ ຢ່າງເປັນເຈົ້າການຕາມທິດຕ່າງຝ່າຍຕ່າງມີຜົນປະໂຫຍດ; ສ້າງເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ການເຊື່ອມໂຍງ, ເຊື່ອມຈອດກັບພາກພື້ນ ແລະ ສາກົນ, ບາງບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ IV ແລະ ການສະຫຼຸບຕີລາຄາ, ວິເຄາະ, ວິໄຈ, ບັນຫາຕ່າງໆທີ່ກ່ຽວຂ້ອງໄດ້ກ່າວມາຂ້າງເທິງ ລວມທັງກາລະໂອກາດ ທີ່ເປັນທ່າແຮງໃຫ້ແຂວງ ມີການພັດທະນາຢ່າງຕໍ່ເນື່ອງນັ້ນ ຈຶ່ງໄດ້ກຳນົດບັນດາເປົ້າໝາຍ ແລະ ວຽກງານຈຸດສຸມດັ່ງຕໍ່ໄປນີ້:

## 4. ເປົ້າໝາຍ ແລະ ວຽກງານຈຸດສຸມຂອງແຜນການ 5 ປີ ຄັ້ງທີ V (2021-2025)

### 4.1. ເປົ້າໝາຍທີ 1: ເສດຖະກິດຂອງແຂວງເຕີບໂຕຢ່າງມີຄຸນນະພາບ ແລະ ຕາມທິດສົມດຸນເທື່ອລະກ້າວ.

ປັບປຸງຫັນປ່ຽນໂຄງປະກອບ ແລະ ສ້າງຄວາມຫຼາກຫຼາຍຂອງເສດຖະກິດ ແນໃສ່ເພີ່ມທະວີຄວາມສາມາດ ແລະ ສະມັດຕະພາບໃນການຜະລິດ ຄຽງຄູ່ກັບການຫຼຸດຜ່ອນຄວາມບອບບາງດ້ານເສດຖະກິດ ເພື່ອຮັບປະກັນການເຕີບໂຕຕາມທິດສີຂຽວ ແລະ ສົມດູນ, ພະຍາຍາມເຮັດໃຫ້ທຸກຄົນໄດ້ຮັບຜົນປະໂຫຍດຈາກການພັດທະນາ; ໃນໄລຍະ 5 ປີຕໍ່ໜ້າ ການເຕີບໂຕຂອງເສດຖະກິດຄາດວ່າຈະຂະຫຍາຍຕົວຢູ່ໃນລະຫວ່າງ 4-5%, ຊຶ່ງການຂະ ຫຍາຍຕົວນີ້ ສ່ວນໃຫຍ່ແມ່ນມາຈາກການລົງທຶນພາກເອກະຊົນພາຍໃນ ແລະ ຕ່າງປະເທດ ໂດຍສະເພາະຈາກຂະແໜງໄຟຟ້າ, ກໍ່ສ້າງ, ຂະແໜງກະສິກຳ ແລະ ບໍລິການ... ຈາກຜົນການສຳຫຼວດສະຖິຕິກະສິກຳທົ່ວປະເທດ ປີ 2010 ແຂວງບໍລິຄຳໄຊ ມີຄອບຄົວກະສິກຳ 35.000 ຄອບຄົວ ກວມເອົາ 80,83%; ສະນັ້ນ, ແຂວງພວກເຮົາຈຶ່ງໄດ້ທົບທວນ ແລະ ອອກມາດຕາການ ແລະ ນະໂຍບາຍທີ່ຈຳເປັນ **ຄື:** ການສົ່ງເສີມການຜະລິດ ສ້າງລາຍຮັບຂອງປະຊາຊົນ ແລະ ກຸ່ມການຜະລິດ ໄປຕາມຫຼັກການວິທະຍາການ, ເອົາເຕັກນິກວິຊາການເຂົ້າຊ່ວຍ, ຕິດພັນກັບຕະ ຫຼາດ ເພື່ອເຮັດໃຫ້ສັດສ່ວນຂອງກຳລັງແຮງງານ ສາມາດປະກອບສ່ວນເຂົ້າໃນການຜະລິດ ແລະ ສ້າງລາຍຮັບໃນຂະແໜງດັ່ງກ່າວ.

- ລວມຍອດຜະລິດຕະພັນພາຍໃນ(GPP) ຮອດປີ 2025 ໃຫ້ບັນລຸ 8.815,36 ຕື້ກີບ, ໂຄງປະກອບເສດ ຖະກິດຂະແໜງກະສິກຳໃຫ້ ກວມ 26%; ຂະແໜງອຸດສາຫະກຳ ແລະ ກໍ່ສ້າງ ກວມ 46%; ຂະແໜງບໍລິການໃຫ້ ກວມ 28%; ລາຍໄດ້ຕໍ່ຫົວຄົນໃຫ້ບັນລຸ 24,87 ລ້ານກີບ ຫຼືເທົ່າກັບ 2.734 ໂດລາສະຫະລັດ, ຈະສາມາດສ້າງວຽກເຮັດງານທຳໃຫ້ໄດ້ຈຳນວນ 6.000 ຄົນ ແນ່ໃສ່ເຮັດໃຫ້ການຫັນປ່ຽນຈາກຂະແໜງການທີ່ໃຊ້ແຮງງານຫຼາຍ ແຕ່ມູນຄ່າເພີ່ມບໍ່ສູງ ໄປສູ່ຂະແໜງທີ່ນຳໃຊ້ແຮງງານຄຸນນະພາບ ແລະ ມີຄວາມຮູ້, ຂຶ້ນທະບຽນແຮງງານຜູ້ຕ້ອງການມີວຽກເຮັດງານທຳໃຫ້ໄດ້ 7.000 ຄົນ ສະເລ່ຍ 1.400 ຕໍ່ປີ.

- ຕ້ອງສືບຕໍ່ປັບປຸງພັດທະນາແຫຼ່ງທ່ອງທ່ຽວທີ່ມີ ເພື່ອອຳນວຍຄວາມສະດວກ ແລະ ບໍລິການທ່ອງທ່ຽວ ໂດຍສະເພາະສົ່ງເສີມການທ່ອງທ່ຽວພາຍໃນ ດ້ວຍການສະໜັບສະໜູນຄວາມສະດວກໃນການຄົມມະນາຄົມເປັນພື້ນຖານ **ເຊັ່ນ:** ເສັ້ນທາງເຂົ້າເຖິງ, ຄຸ້ມຄອງດ້ານລາຄາອາຫານ, ເຮືອນພັກ, ໂຮງແຮມ... ສາມາດໃຫ້ຜູ້ມີລາຍຮັບຕ່ຳ ແລະ ປານກາງໃຊ້ບໍລິການໄດ້.

- ສ້າງສິ່ງເອື້ອອຳນວຍຄວາມສະດວກ ໃນການແຂ່ງຂັນຂອງບັນດາທຸລະກິດ, ໂດຍມີຈຸດລວມສູນດ້ານບໍລິການຂອງພາກລັດໃນຈຸດດຽວ ເພື່ອສ້າງບັນຍາກາດໃນການດຶງດູດການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ດ້ວຍກົນໄກສ້າງຕັ້ງຫ້ອງການບໍລິການດ້ານເອກະສານຜ່ານລະບົບປະຕູດຽວຂອງແຂວງ.

### 4.1.1 ວຽກຈຸດສຸມທີ 1: ສະຖຽນລະພາບທາງດ້ານເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ.

#### 4.1.1.1 ການສ້າງຄວາມຫຼາກຫຼາຍຂອງເສດຖະກິດ.

ເພື່ອຫຼຸດຜ່ອນຄວາມບອບບາງດ້ານເສດຖະກິດ ໂດຍສະເພາະຜົນກະທົບທີ່ມາຈາກການປ່ຽນແປງຂອງສະພາບແວດລ້ອມພາຍໃນ ແລະ ພາຍນອກ; ພວກເຮົາສຸມໃສ່ການຜະລິດກະສິກຳ ແລະ ອາຫານສະອາດ ເບິ່ງແລ້ວແຂວງບໍລິຄຳໄຊພວກເຮົາ ມີທ່າແຮງຫຼາຍພໍສົມຄວນ ໂດຍສະເພາະທີ່ຕັ້ງພູມສັນຖານ ແລະ ສະພາບແວດລ້ອມທີ່ສະອາດ ເປັນຕົ້ນຜະລິດພືດຜັກ ແລະ ໝາກໄມ້ປອດສານພິດ ເຊິ່ງຍັງມີໂອກາດສູງໃນການແຂ່ງຂັນ; ແຕ່ສິ່ງທ້າທາຍແມ່ນການຄຸ້ມຄອງນຳໃຊ້ສານເຄມີ ຫຼື ການປູກຝັງທີ່ທຳລາຍສິ່ງແວດລ້ອມ, ໃນໄລຍະຜ່ານມາ ກະສິກຳມີການຂະຫຍາຍຕົວ ຍ້ອນການຂະຫຍາຍເນື້ອທີ່ປູກຝັງ ແຕ່ບໍ່ແມ່ນການເພີ່ມຂຶ້ນຂອງສະມັດຕະພາບການຜະລິດ ຫຼື ຕົ້ນທຶນການຜະລິດຕ່ຳ, ຂໍ້ຈຳກັດ ແລະ ຂໍ້ຫຍຸ້ງຍາກຫຼາຍຢ່າງເຮັດໃຫ້ການຜະລິດຂະແໜງກະສິກຳມີກຳໄລໜ້ອຍ, ຄວາມອຸດົມສົມບູນຂອງດິນປູກຝັງທີ່ຫຼຸດລົງ, ຄວາມຈຳກັດໃນການເຂົ້າເຖິງຊົນລະປະທານ, ການນຳໃຊ້ເຕັກນິກວິທະຍາສາດ ແລະ ບັນຫາການຈັດສັນ-ຄຸ້ມຄອງທີ່ດິນທຳການຜະລິດ.

#### 4.1.1.2 ເສດຖະກິດມະຫາພາກ.

ສ້າງຄວາມເຂັ້ມແຂງພື້ນຖານເສດຖະກິດ ໂດຍເລັ່ງໃສ່ຊຸກຍູ້ບັນດາຈຸນລະວິສາຫະກິດ, ທຸລະກິດຂະໜາດນ້ອຍ, ກາງ (MSMEs) ໃຫ້ເຂົ້າເຖິງແຫຼ່ງທຶນ ແລະ ສົ່ງເສີມຜູ້ຜະລິດໃຫ້ເຂົ້າເຖິງຕະຫຼາດຢ່າງກວ້າງຂວາງ ເພື່ອຮັບປະກັນການເຕີບໂຕທີ່ຍືນຍົງ, ຮັບປະກັນສະຖຽນລະພາບດ້ານລາຄາ, ອັດຕາແລກປ່ຽນ, ອັດຕາເງິນເຟີ້ ແລະ ເງິນສະສົມ (Savings) ເພື່ອເປັນແຫຼ່ງທຶນໃນການພັດທະນາ; ລັດຖະບານໄດ້ສົ່ງເສີມການບໍລິໂພກພາກເອກະຊົນຢ່າງມີຄວາມຮັບຜິດຊອບ ຄຽງຄູ່ກັບການສົ່ງເສີມການລົງທຶນພາກເອກະຊົນໃນຂະແໜງກະສິກຳ, ອຸດສະຫະກຳປຸງແຕ່ງ ແລະ ການບໍລິການ ເພື່ອຂັບເຄື່ອນການເຕີບໂຕເສດຖະກິດ ແລະ ເພີ່ມທະວີການສົ່ງອອກ ດ້ວຍການປັບປຸງຄຸນນະພາບ ແລະ ຄວາມສາມາດແຂ່ງຂັນຂອງຜະລິດຕະພັນທີ່ເປັນທ່າແຮງ ແລະ ເອກະລັກ ພ້ອມທັງຂະຫຍາຍຄູ່ຮ່ວມມືດ້ານການຄ້າ ເພື່ອຂະຫຍາຍຕະຫຼາດສົ່ງອອກ, ຄົ້ນຄວ້າທ່າແຮງບົ່ມຊ້ອນຂອງສະມັດຕະພາບການຜະລິດດ້ວຍການສ້າງຄວາມເຂັ້ມແຂງການບໍລິການພາກລັດ ແລະ ປັບປຸງລະບຽບນິຕິກຳທີ່ສຳຄັນ ແລະ ຈຳເປັນ; ສົ່ງເສີມການຄົ້ນຄວ້າວິໄຈຢ່າງເປັນລະບົບ ໂດຍສະເພາະສຶກສາການສ້າງຄວາມຊຳນິຊຳນານໃນແຕ່ລະຂົງເຂດການຜະລິດ ຄຽງຄູ່ກັບການປະເມີນຜົນ ການຈັດຕັ້ງປະຕິບັດຕົວຈິງຂອງຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການ.

**1) ການເງິນສາທາລະນະ.**

- ແກ້ໄຂບັນຫາໜີ້ສິນການລົງທຶນຂອງລັດໃຫ້ສົມດູນກັບລາຍຮັບທີ່ມີ.
- ຊຸກຍູ້ສົ່ງເສີມໃຫ້ມີການລະດົມເງິນຝາກໃຫ້ຫຼາຍຂຶ້ນ ເພື່ອເພີ່ມການເຕີບໂຕຂອງສິນເຊື່ອ.
- ຊຸກຍູ້ການນຳໃຊ້ເງິນກີບ ເພື່ອໃຫ້ມີການສະໜອງເງິນທີ່ພຽງພໍເພື່ອສາມາດດັດສົມອັດຕາແລກປ່ຽນ.

**2) ງົບປະມານແຫ່ງລັດ.**

- ສູ້ຊົນການເກັບລາຍຮັບ: 5 ປີຄາດວ່າຈະບັນລຸ 3.460 ຕື້ກີບ, ຮັບປະກັນການຂາດດຸນງົບປະມານໃນແຕ່ລະປີ ໃຫ້ຢູ່ໃນລະດັບບໍ່ເກີນ 5% ຂອງ GPP. ໃນນັ້ນ; ຮັບຈາກອາກອນ (ອາກອນປົກກະຕິ, ສັບຊົນ, ທີ່ດິນ) 829 ຕື້ກີບ, ພາສີ 2.630 ຕື້ກີບ; ເພີ່ມປະສິດທິພາບການຈັດເກັບລາຍຮັບ ໂດຍສົ່ງເສີມການຊຳລະຜ່ານທະນາຄານ.
- ສູ້ຊົນລະດົມແຫຼ່ງທຶນເພື່ອການພັດທະນາໃນ 5 ປີ ໃຫ້ກວມປະມານ 20% ຂອງ GPP.

**3) ໂຄງການລົງທຶນ.**

- ເລືອກເຟັ້ນໂຄງການລົງທຶນທີ່ມີປະສິດທິພາບ ປະສິດທິຜົນທາງດ້ານເສດຖະກິດ-ສັງຄົມ.

**4) ງົບປະມານບໍລິຫານ.**

- ຈຳກັດລາຍຈ່າຍງົບປະມານດ້ານການບໍລິຫານ ເນັ້ນໃສ່ແຕ່ລາຍຈາຍທີ່ຈຳເປັນເທົ່ານັ້ນ ແລະ ຫັນເອົາເງິນໄປໃສ່ການລົງທຶນໃຫ້ມີປະສິດທິຜົນ.

**4.1.1.3 ຜົນຜະລິດ ແບ່ງຕາມຂະແໜງການ:** ໃນ 5 ປີຕໍ່ໜ້າ 2021-2025 ສູ້ຊົນເຮັດໃຫ້ຂະແໜງກະສິກຳຂະຫຍາຍຕົວ 2,5%, ອຸດສະຫະກຳຂະຫຍາຍຕົວ 4,4% ແລະ ບໍລິການ ຂະຫຍາຍຕົວ 6,5%.

**1) ກະສິກຳ ການປູກ-ລ້ຽງ.**

➢ **ດ້ານການຜະລິດສະບຽງອາຫານເພື່ອບໍລິໂພກ.**

ເພື່ອຮັບປະກັນດ້ານໂພຊະນາການ ຂອງປະຊາຊົນໃຫ້ໄດ້ຮັບພະລັງງານ 2.600 - 2.700 ກິໂລກາລໍຣີ ຕໍ່ຄົນຕໍ່ວັນ, ໃນນີ້ ເຂົ້າ ແລະ ທາດແປ້ງ ກວມປະມານ 64%, ຊີ້ນ, ໄຂ່ ແລະ ປາ ປະມານ 9%, ປະເພດ ພືດຜັກ, ໝາກໄມ້ ແລະ ປະເພດຖົ່ວ ກວມປະມານ 3,5% ແລະ ປະເພດໄຂມັນ, ນ້ຳຕານ ແລະ ນ້ຳນົມ ກວມປະມານ 23,5% ຕ້ອງຮັບປະກັນດ້ານສະບຽງອາຫານແຕ່ລະປະເພດ ເພື່ອບໍລິໂພກໃນແຕ່ລະປີ.

**ກ)** ສະເພາະຄາດໝາຍສູ້ຊົນຜະລິດເຂົ້າໃນປີ 2025 ໃຫ້ໄດ້ 160.212 ໂຕນ ສະເລ່ຍ 452 ກິໂລ/ຄົນ/ປີ ຊຶ່ງປະກອບມີລາຍລະອຽດໃນການຊົມໃຊ້ **ຄື:**

- ຫັກຜົນເສຍຫາຍຫຼັງເກັບກ່ຽວ 10% ປະມານ 16.021 ໂຕນ.
- ເຂົ້າບໍລິໂພກ 99.265 ໂຕນ (ເຂົ້າເປືອກ) (ພົນລະເມືອງ 354.520 ຄົນ x 280 ກິໂລເຂົ້າເປືອກ/ຄົນ/ປີ).
- ແນວພັນເຂົ້າປະມານ 2.399 ໂຕນ.

**ຂ) ຜົນຜະລິດພືດ, ຖົ່ວ ແລະ ໝາກໄມ້**: ໃຫ້ໄດ້ປະມານ 52.288 ໂຕນ, ໃນນັ້ນ ສາລີຫວານ 4.102 ໂຕນ, ເຜືອກ-ມັນ ໃຫ້ໄດ້ປະມານ 10.474 ໂຕນ, ປະເພດໄມ້ໃຫ້ໝາກ ໃຫ້ໄດ້ປະມານ 1.535 ໂຕນ ແລະ ພືດຜັກອື່ນໆ ໃຫ້ໄດ້ປະມານ 36.177 ໂຕນ.

**ຄ) ສັດລ້ຽງ:** ຄວາຍ 37.836 ໂຕ, ງົວ 99.851 ໂຕ, ໝູ 106.372 ໂຕ, ແບ້ 34.235 ໂຕ, ສັດປີກ 1.129.838 ໂຕ, ໄຂ່ (16 ໜ່ວຍຕໍ່ກິໂລ) 1.774 ໂຕນ.

➢ **ດ້ານການຜະລິດກະສິກຳປັນສິນຄ້າ:**

**ກ) ຜະລິດເຂົ້າເປັນສິນຄ້າ:** ສຸມໃສ່ເນື້ອທີ່ປູກເຂົ້າໃຫ້ໄດ້ປະມານ 13.105 ເຮັກຕາ; ຜົນຜະລິດ 57.027 ໂຕນ; ຂະຫຍາຍເນື້ອທີ່ ຢາງພາລາໃຫ້ໄດ້ຕື່ມ 1.000 ເຮັກຕາ ຊຸກຍູ້ຜົນພະລິດທີ່ມີໃນປະຈຸບັນໃຫ້ດີຂຶ້ນ, ປູກສາລີແຂງ 883 ເຮັກຕາ, ຜົນຜະລິດ 5.298 ໂຕນ; ຜັກທຸກສະນິດ 5.197ເຮັກຕາ, ຜົນຜະລິດ 28.577ໂຕນ; ອ້ອຍ 726 ເຮັກຕາ, ຜົນຜະລິດ 21.314ໂຕນ; ຢາສູບ 695 ເຮັກຕາ, ຜົນຜະລິດ 1.050 ໂຕນ; ກ້ວຍ 2.310 ເຮັກຕາ, ຜົນຜະລິດ 27.722 ໂຕນ; ມັນຕົ້ນ 11.604 ເຮັກຕາ, ຜົນຜະລິດ 197.752 ໂຕນ; ໝາກຫຸ່ງ 368 ເຮັກຕາ, ຜົນຜະລິດ 4.049 ໂຕນ; ໝາກນັດ 1.494 ເຮັກຕາ, ຜົນຜະລິດ 17.455 ໂຕນ.

**ຂ) ການລ້ຽງສັດ ແລະ ການປະມົງເປັນສິນຄ້າໃຫ້ໄດ້ປະມານ:** ຄວາຍ 8.528 ໂຕ ມູນຄ່າ 51.150 ລ້ານກີບ; ງົວ 31.606 ໂຕ ມູນຄ່າ 158.030 ລ້ານກີບ; ໝູ 41.527 ໂຕ ມູນຄ່າ 74.708 ລ້ານກີບ; ແບ້ 13.123 ໂຕ ມູນຄ່າ 9.842 ລ້ານກີບ, ສັດປີກ 1.090.280 ໂຕ ມູນຄ່າ 32.708 ລ້ານກີບ, ໄຂ່ 1.718 ໂຕນ ມູນຄ່າ 27.498 ລ້ານກີບ; ປານິນກະຊັງ 2.602ໂຕ່ນ ມູນຄ່າ 52.040 ລ້ານກີບ; ປາລ້ຽງໃສ່ໜອງ 6.608 ໂຕນ ມູນຄ່າ 99.125 ລ້ານກີບ.

**2) ອຸດສະຫະກຳການຜະລິດ (ໄຟຟ້າ, ແຮ່ທາດ, ສິນຄ້າກະສິກຳ ສົ່ງອອກ) ແລະ ຫັດຖະກຳ.**

- ສຸມໃສ່ອຸດສາຫະກຳທີ່ສາມາດຂັບເຄື່ອນການເຕີບໂຕເສດຖະກິດ, ການຜະລິດເພື່ອຫຼຸດຜ່ອນການນຳເຂົ້າ, ການຜະລິດເພື່ອສົ່ງອອກ, ການຜະລິດທີ່ເປັນຕ່ອງໂສ້ມູນຄ່າຂອງພາກພື້ນ ແລະ ການສ້າງວຽກງານທຳໃຫ້ປະຊາຊົນຫຼາຍຂຶ້ນ **ເປັນຕົ້ນ:** ອຸດສາຫະກຳປຸງແຕ່ງທີ່ຕິດພັນກັບການນຳໃຊ້ຜົນຜະລິດກະສິກຳ-ປ່າໄມ້, ການປຸງແຕ່ງແຮ່ທາດ ແລະ ການຜະລິດຫັດຖະກຳທີ່ເປັນມູນເຊື້ອ ແລະ ເອກະລັກດ້ານພູມປັນຍາ ທີ່ຕິດພັນການທ່ອງທ່ຽວ.

- ສູ້ຊົນໃຫ້ການນຳເຂົ້າ-ສົ່ງອອກ ແລະ ສິນຄ້າຜ່ານແດນ **ຄື:** ຮອດປີ 2025 ສູ້ຊົນການສົ່ງອອກສິນຄ້າໃຫ້ໄດ້ 367,48 ລ້ານໂດລາສະຫະລັດ, ສິນຄ້ານຳເຂົ້າ 2.169,81 ລ້ານໂດລາສະຫະລັດ ແລະ ສິນຄ້າຜ່ານແດນໃຫ້ໄດ້ 149,86 ລ້ານໂດລາສະຫະລັດ ເປັນຕົ້ນ: ກະທິງແດງ, ໝາກໄມ້ ແລະ ປະເພດສັດລ້ຽງຈຳນວນໜຶ່ງ, ໃນນີ້ ສິນຄ້າແຂວງສົ່ງອອກໃຫ້ໄດ້ 115,99 ລ້ານໂດລາສະຫະລັດ **ເຊັ່ນ:** ຢາງພາລາ, ມັນຕົ້ນ, ໝາກກ້ວຍ, ໝາກມ່ວງ; ສິນຄ້າແຂວງນຳເຂົ້າ 59,43 ລ້ານໂດລາສະຫະລັດ **ເຊັ່ນ:** ເຄື່ອງມືຮັບໃຊ້ການຜະລິດ, ວັດຖຸອຸປະກອນທີ່ບໍ່ສາມາດຜະລິດໄດ້.
- ສົ່ງເສີມການລົງທຶນໃນເຂດເສດຖະກິດສົ້ນຂົວແມ່ນ້ຳຂອງແຫ່ງທີ 5, ເຂດນ້ຳຫາງງເມືອງຄຳເກີດ ເພື່ອສ້າງໃຫ້ເປັນຖານການຜະລິດສິນຄ້າເພື່ອສົ່ງອອກ ໂດຍສຸມໃສ່ຂະແໜງການຜະລິດທີ່ຕິດພັນກັບວິສາຫະກິດຂະໜາດນ້ອຍ, ກາງ ແລະ ເຄືອຂ່າຍການຜະລິດຂອງສາກົນ.
- ສົ່ງເສີມດ້ານພະລັງງານ ແລະ ບໍ່ແຮ່ ໃຫ້ມີປະສິດທິຜົນກວ່າເກົ່າໂດຍສະເພາະການປຸງແຕ່ງກ່ອນການສົ່ງອອກ ແລະ ຮັບປະກັນຕະຫຼາດຈຳໜ່າຍ, ຍົກສູງພື້ນຖານໂຄງລ່າງດ້ານຄົມມະນາຄົມເພື່ອເຊື່ອມຈອດກັບພາກພື້ນ ແລະ ສາກົນ ເປັນຕົ້ນ: ທາງເລກ 8, ທາງດ່ວນວຽງຈັນ-ຮ່າໂນ້ຍ, ທາງດ່ວນວຽງຈັນ-ປາກຊັນ-ທ່າແຂກ, ເສີມຂະຫຍາຍ, ອະນຸລັກ ແລະ ປະຢັດພະລັງງານ.

**3) ບໍລິການທີ່ຕິດພັນກັບການບໍລິໂພກ (ການຄ້າຂາຍຍົກ, ການຄ້າຂາຍຍ່ອຍ, ທີ່ພັກອາໄສ, ອາຫານ, ເຄື່ອງດື່ມ, ຂົນສົ່ງ, ເຕັກໂນໂລຢີ).**

- ຍົກລະດັບການບໍລິການດ້ານໂຮງແຮມ, ຮ້ານອາຫານ ແລະ ການທ່ອງທ່ຽວ ໃຫ້ມີຄຸນນະພາບສູງ ແລະ ທັນສະໄໝ.
- ປັບປຸງ ແລະ ພັດທະນາແຫຼ່ງທ່ອງທ່ຽວ ໂດຍສຸມໃສ່ ພັດທະນາການທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ຕິດພັນກັບການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມ, ພ້ອມທັງໃຫ້ຕິດພັນກັບການສ້າງຜະລິດຕະພັນຮັບໃຊ້ການທ່ອງທ່ຽວ, ການນຳໃຊ້ວັດຖຸດິບພາຍໃນ, ຜັກປອດສານພິດໃຫ້ຫຼາຍຂຶ້ນເພື່ອທົດແທນການນຳເຂົ້າຈາກເພື່ອນບ້ານ, ສ້າງເງື່ອນໄຂອຳນວຍຄວາມສະດວກ ແລະ ດຶງດູດນັກທ່ອງທ່ຽວ.
- ສົ່ງເສີມການບໍລິການຂາຍຍົກ-ຂາຍຍ່ອຍ ແລະ ສ້ອມແປງ ທີ່ຕິດພັນກັບການສົ່ງເສີມການຜະລິດພາຍໃນ.
- ຍົກລະດັບວຽກງານໂທລະຄົມມະນາຄົມ, ການຂົນສົ່ງໂລຈິສຕິກ ແລະ ໄປສະນີ ໃຫ້ມີຄວາມວ່ອງໄວ ແລະ ທັນສະໄໝ ເພື່ອຊຸກຍູ້ການດຳເນີນທຸລະກຳທາງການຄ້າ, ການຊຳລະສະສາງ ແລະ ອື່ນໆ ເຄື່ອນໄຫວຢ່າງມີປະສິດທິພາບ.
- ສືບຕໍ່ພັດທະນາພື້ນຖານໂຄງລ່າງ ເພື່ອຮອງຮັບໃຫແກ່ການຄົມມະນາຄົມ-ຂົນສົ່ງ ໃຫ້ມີຄວາມໂລ່ງລ່ຽນ ແລະ ເຊື່ອມຈອດບັນດາປະເທດໃກ້ຄຽງເປັນຕົ້ນ: ປັບປຸງຂະຫຍາຍຫນ້າທາງເລກທີ 13 ໃຕ້, ກໍ່ສ້າງຂົວມິດຕະພາບລາວ-ໄທ ແຫ່ງທີ 5 ປາກຊັນ-ບຶງການ, ສ້ອມແປງຍົກລະດັບທາງທ້ອງຖິ່ນນຳໃຊ້ທຶນພາຍໃນ ແລະ ສາກົນ, ກໍ່ສ້າງທາງປູແຮ່ແຕ່ ເມືອງໄຊຈຳພອນ-ບ້ານນ້ຳອ້ອນ-ຊາຍແດນແຫ່ງທຸຍ ຕິດພັນກັບຜັງເມືອງໃຫມ່(ນ້ຳອ້ອນ); ຄຸ້ມຄອງຫົວຫນ່ວຍທຸລະກິດ, ຂົນສົ່ງ ໃຫ້ດຳເນີນໄປຕາມລະບຽບ-ກົດໝາຍຢ່າງເຂັ້ມງວດ, ພັດທະນາຈຸດບໍລິການທາງຜ່ານເຂດຂົວນ້ຳຂອງແຫ່ງທີ V ປາກຊັນ-ບຶງການ, ໂຄສະນາເຜີຍແຜ່ ປູກຈິດສຳນຶກກ່ຽວກັບຄວາມປອດໄພຕາມທ້ອງຖະຫນົນ; ສຸມໃສ່ແກ້ໄຂ້ການປ້ອງກັນຕາຝັ່ງເຈື່ອນຕາມແຄມນ້ຳຂອງໃຫ້ໄດ້ 5 ກມ ຈາກຈຸດທີ່ມີຄວາມສ່ຽງ, ສືບຕໍ່ກໍ່ສ້າງດ່ານນ້ຳອ້ອນໃຫ້ສຳເລັດ; ຄຸ້ມຄອງການປຸກສ້າງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ, ສືບຕໍ່ໂຄງການພັດທະນາຕົວເມືອງ ປາກຊັນ ຕາມແລວທາງອານຸພາກພື້ນແມ່ນ້ຳຂອງງວດທີ່ 4 ໃຫ້ສຳເລັດ; ປັບປຸງຊຸກຍູ້ ແລະ ສົ່ງເສີມໃຫ້ 2 ວິສາຫະກິດ ນ້ຳປະປາ ແລະ ຂົວທາງ ດຳເນີນທຸລະກິດ ສາມາດໃຫ້ມີກຳໄລເພີ່ມ ແລະ ມອບພັນທະເຂົ້າລັດຢ່າງເປັນປົກກະຕິ.

**4.1.1.4 ການຄ້າສາກົນ ແລະ ດຸນຊຳລະ (BOP).**

- ສູ້ຊົນໃຫ້ມູນຄ່າການສົ່ງອອກຂະຫຍາຍຕົວສະເລ່ຍໃນແຕ່ລະປີ ຢູ່ໃນລະດັບບໍ່ຫຼຸດ 12% ແລະ ເຮັດໃຫ້ມູນຄ່າການຄ້າຂາອອກ-ຂາເຂົ້າທຽບໃສ່ GPP ຫຼາຍກວ່າ 70% ໃນປີ 2025.
- ການສົ່ງອອກສ່ວນໃຫຍ່ແມ່ນມາຈາກຂະແໜງກະສິກຳ ແລະ ຄວາມຮ່ວມມືການຄ້າໃນປັດຈຸບັນມີ 3 ປະເທດ, ມີມູນຄ່າທັງໝົດ 115 ລ້ານໂດລາສະຫະລັດ ເຊິ່ງໃນນັ້ນ: ປະເທດ ວຽດນາມ ກວມ 48% ຂອງການສົ່ງອອກທັງໝົດ ທັດລົງມາແມ່ນໄທ ແລະ ຈີນ.

**4.1.1.5 ການປັບປຸງສະພາບແວດລ້ອມດຳເນີນທຸລະກິດ, ການພັດທະນາ ແລະ ສົ່ງເສີມ SME**: ສ້າງສະພາບແວດລ້ອມໃນການດຳເນີນທຸລະກິດຕາມຄຳສັ່ງເລກທີ 02/ນຍ ແກ້ໄຂບັນດາສິ່ງກີດຂວາງທີ່ເປັນການກີດໜ່ວງຖ່ວງດຶງການຂະຫຍາຍຕົວຂອງບັນດາຫົວໜ່ວຍທຸລະກິດ ໃຫ້ມີຄວາມຄ່ອງຕົວ, ສາມາດເຂົ້າເຖິງຂໍ້ມູນຂ່າວສານ, ການຊອກຫາຕະຫຼາດ ທັງພາຍໃນ ແລະ ຕ່າງປະເທດ, ການເຂົ້າຫາແຫຼ່ງທຶນ ແລະ ຮັບປະກັນການເຂົ້າຫາຕະຫຼາດແຮງງານ ໂດຍການປັບປຸງບັນດານິຕິກຳ, ລະບຽບການ, ກົດໝາຍ, ສະຖາບັນ, ບຸກຄະລະກອນ ແລະ ພື້ນຖານໂຄງລ່າງຢ່າງຮອບດ້ານ, ພ້ອມກັນນີ້ ຫຼຸດຜ່ອນຕົ້ນທຶນ ແລະ ຄ່າໃຊ້ຈ່າຍໃນການດຳເນີນທຸລະກິດ ດ້ວຍການສະໜອງສິ່ງຈູງໃຈທີ່ອີງໃສ່ຜົນງານຕົວຈິງ ແນໃສ່ສົ່ງເສີມກິດຈະກຳດ້ານເສດຖະກິດພູມປັນຍາ ແລະ ມີມູນຄ່າເພີ່ມສູງ.

**1) ປັບປຸງກົນໄກການອຳນວຍຄວາມສະດວກດ້ານການຄ້າ ແລະ ຫຼຸດຜ່ອນຄ່າສິ້ນເປືອງຂອງຫົວໜ່ວຍທຸລະກິດ: 1.** ສົ່ງເສີມການນຳໃຊ້ລະບົບຂໍ້ມູນຂ່າວສານ ICT ໃນການບໍລິຫານ, ພົວພັນ ແລະ ບໍລິການທາງດ້ານວິຊາການຕ່າງໆ ເຊັ່ນ: E-Licensing, E-co ແລະ E-trade ເພື່ອສ້າງລະບົບເຊື່ອມຕໍ່ດ້ານຂໍ້ມູນຂ່າວສານທີ່ໄດ້ມາດຕະຖານ ແລະ ສະດວກສະບາຍຍິ່ງຂຶ້ນ ເຊິ່ງຈະຊ່ວຍໃຫ້ພາກທຸລະກິດສາມາດຫຼຸດຜ່ອນຄ່າສິ້ນເປືອງໃນການພົວພັນທຸລະກິດໃນດ້ານຕ່າງໆ; **2.** ປັບປຸງນິຕິກຳທີ່ຈຳເປັນທີ່ພົວພັນກັບການຜະລິດ, ການຄ້າ, ການແຂ່ງຂັນທີ່ເປັນທຳ ແລະ ການບໍລິການທີ່ໄດ້ມາດຖານສາກົນ ໂດຍສະເພາະ ບັນດາສົນທິສັນຍາທີ່ໄດ້ໃຫ້ສັກຕະຍາບັນ ຫຼື ເປັນພາຄີ ໃນກອບການຮ່ວມມືດ້ານການຄ້າຕ່າງໆ ພາຍໃນພາກພື້ນ ແລະ ສາກົນ; **3.** ປັບປຸງຄຸນນະພາບຂອງບຸກຄະລະກອນ ໃຫ້ມີຄວາມຊຳນານງານ ມີລະບຽບວິໄນ ແລະ ສະຖານທີ່ການບໍລິການ ໃຫ້ມີຄວາມສະດວກສະບາຍ ແລະ ລວມສູນທຸກວຽກງານ; ສ້າງໜ່ວຍງານຮັບຄຳສະເໜີ, ຄຳຄິດຄຳເຫັນ ແລະ ເຄົາເຕີໃຫ້ຄຳປຶກສາແກ່ພາກທຸລະກິດ ເພື່ອແກ້ໄຂຂອດຫຍຸ້ງຍາກ ແລະ ອຳນວຍຄວາມສະດວກໃຫ້ພາກທຸລະກິດສາມາດລິເລີ່ມທຸລະກິດໄດ້.

**2) ການຄຸ້ມຄອງ ແລະ ກວດກາຜູ້ປະກອບການ: ລະບົບ ເອອິໂອ ຕາມດ່ານພາສີ ເພື່ອສ້າງເງື່ອນໄຂດ້ານການຄ້າຂອງ ສປປ ລາວ ໃຫ້ມີຄວາມສະດວກ ແລະ ສອດຄ່ອງກັບລະບົບສາກົນ.**

- ສົ່ງເສີມໃຫ້ຫົວໜ່ວຍທຸລະກິດທີ່ມີລາຍຮັບ 400 ລ້ານຂຶ້ນໄປໃຫ້ຖືລະບົບບັນຊີ.

**ກ. ການເຂົ້າຫາແຫຼ່ງທຶນ ແລະ ອຳນວຍຄວາມສະດວກທາງດ້ານການເງິນ ແລະ ຕະຫຼາດໃຫ້ທຸລະກິດຂະໜາດຈຸນລະວິສາຫະກິດ, ນ້ອຍ ແລະ ກາງ:** ພັດທະນາອຸດສາຫະກຳຂະໜາດນ້ອຍ ແລະ ກາງ ໃຫ້ມີຄຸນນະພາບ ດ້ວຍການຍົກລະດັບດ້ານການບໍລິຫານທຸລະກິດ, ການເຂົ້າເຖິງຕະຫຼາດ, ການເຂົ້າເຖິງແຫຼ່ງທຶນ, ດ້ານເຕັກນິກ-ວິທະຍາສາດ-ນະວັດຕະກຳພູມປັນຍາ-ເຕັກໂນໂລຊີ, ມີການຫຸ້ມຫໍ່ ແລະ ຕິດກາໝາຍສິນຄ້າ ເພື່ອຍົກສູງຄຸນນະພາບຂອງສິນຄ້າ ແລະ ຄວາມສາມາດໃນການແຂ່ງຂັນ ດ້ວຍການ: 1) ຍົກລະດັບຄວາມຮັບຮູ້ດ້ານວິຊາການໃຫ້ແກ່ຜູ້ປະກອບການ ແລະ ຜູ້ທີ່ມີແນວຄິດຢາກລິເລີ່ມດຳເນີນທຸລະກິດ ໃຫ້ສາມາດເຂົ້າເຖິງລະບຽບການ ແລະ ເງື່ອນໄຂຕ່າງໆ ເພື່ອໃຫ້ສາມາດເຂົ້າເຖິງແຫຼ່ງທຶນຈາກສະຖາບັນການເງິນຢ່າງສະດວກ ແລະ ຫຼຸດຜ່ອນຄວາມສ່ຽງໃນການເຂົ້າຫາແຫຼ່ງທຶນນອກລະບົບ; 2) ປັບປຸງຂັ້ນຕອນການເຂົ້າຫາແຫຼ່ງທຶນໃຫ້ກະທັດຮັດ, ງ່າຍດາຍ ແລະ ເປັນທຳ ເພື່ອສົ່ງເສີມຜູ້ປະກອບການທີ່ມີຄວາມຈຳກັດດ້ານທຶນ ແຕ່ມີສັກກະຍະພາບໃນການລິເລີ່ມທຸລະກິດສາມາດເຂົ້າຫາທຶນໄດ້ ດ້ວຍຮູບແບບເງິນກູ້ດອກເບ້ຍຕໍ່າ ພ້ອມທັງ ມີກົນໄກ ແລະ ມາດຕະການໃນການຄວບຄຸມການນຳໃຊ້ສິນເຊື່ອໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມາດຕະການເດັດຂາດຕໍ່ຜູ້ລະເມີດລະບຽບການຂອງການໃຫ້ສິນເຊື່ອ; 3) ຊຸກຍູ້ໃຫ້ ຫົວໜ່ວຍ SME ສາມາດເຂົ້າຮ່ວມຕ່ອງໂສ້ການຜະລິດ ແລະ ຕະຫຼາດສາກົນ ໃຫ້ຫຼາຍຂຶ້ນ ເພື່ອຍົກລະດັບສະມັດຕະພາບສີມືແຮງງານ, ສະມັດຕະພາບການຜະລິດ, ເຂົ້າເຖິງເຕັກໂນໂລຊີ-ນະວັດຕະກຳໃໝ່.

**ຂ. ການຈັດລຳດັບຄວາມງ່າຍດາຍໃນການເຮັດທຸລະກິດ:** ແມ່ນຢູ່ລຳດັບທີ 154 ໃນ 190 ປະເທດຕາມການຕີລາຄາຂອງທະນາຄານໂລກ ໃນປີ 2019 ຍ້ອນບັນຫາສິ່ງກີດຂວາງ ແລະ ສະພາບທີ່ບໍ່ເອື້ອອຳນວຍ ສິ່ງຜົນກະທົບຕໍ່ການເຊື່ອມໂຍງການຄ້າພາກພື້ນ ແລະ ຫຼຸດຜ່ອນການດຶງດູດການລົງທຶນ; ອີງຕາມບົດລາຍງານບັນຫາຕົ້ນຕໍແມ່ນສະພາບແວດລ້ອມທີ່ບໍ່ສອດຄ່ອງ, ບໍ່ມີຄວາມຊັດເຈນ ແລະ ມີຈຳນວນບໍລິສັດພຽງແຕ່ 2,9% ທີ່ມີການສົ່ງອອກໂດຍກົງ ແລະ ບໍລິສັດເອກະຊົນພາຍໃນກໍ່ບໍ່ມີການລົງທຶນ ຫຼື ມີນາວັດຕະກຳໃໝ່ໃນລະດັບຕໍ່າ.

- ການບໍລິການປະຕູດຽວ.
- ການຮ່ວມມືພາກລັດ ແລະ ເອກະຊົນ.
- ຊຸກຍູ້ສົ່ງເສີມທຸລະກິດທີ່ເປັນທຸລະກິດສ້າງຕັ້ງໃໝ່ **(Start-up).**

**ຄ. ໂຄງການຂະໜາດໃຫຍ່.**

- ໂຄງການກໍ່ສ້າງຂົວແຫ່ງທີ 5 ຄາດວ່າປີ 2021 ຈະໄດ້ລົງມືຈັດຕັ້ງປະຕິບັດ (ກິດຈະກຳປັ່ນອ້ອມສົ້ນຂົວ).
- ໂຄງການເຂື່ອນໄຟຟ້ານໍ້າເທີນ 1.
- ໂຄງການພັດທະນາແຫຼ່ງທ່ອງທ່ຽວອ່າງຫ້ວຍສຽດ.
- ໂຄງການພັດທະນາຕະຫຼາດປາກຊັນ.
- ໂຄງການທາງດ່ວນວຽງຈັນ - ປາກຊັນ - ທ່າແຂກ.
- ໂຄງການພັດທະນາເຂດນໍ້າຫງາງເມືອງຄຳເກີດ.

**4.1.2 ວຽກຈຸດສຸມທີ 2: ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃນການສ້າງ ແລະ ດຳເນີນທຸລະກິດໃຫ້ມີຄວາມໂປ່ງໃສ ແລະ ວ່ອງໄວ.**

- ໃຫ້ອົງການບໍລິຫານຕ່າງໆ ອີງໃສ່ກົດໝາຍກໍ່ຕັ້ງ ແລະ ອີງໃສ່ກົດໝາຍດຳເນີນພາລະບົດບາດຕາມຂອບເຂດສິດໜ້າທີ່ຂອງຕົນ, ການບໍລິຫານຢ່າງຖືກກົດໝາຍປະກອບມີ 3 ເງື່ອນໄຂຄື: (1) ທຸກສິດອຳນາດການປົກຄອງຕ້ອງດຳເນີນໄປຕາມຂອບເຂດຂອງກົດໝາຍ, (2) ທຸກການປະຕິບັດຂອງອຳນາດການປົກຄອງ ຕ້ອງອີງໃສ່ກົດໝາຍ ແລະ ເຄົາລົບກົດໝາຍ, (3) ການແຕ່ງຕັ້ງ, ມອບໝາຍ ແລະ ນຳໃຊ້ອຳນາດການບໍລິຫານຕ້ອງມີບ່ອນອີງ ແລະ ຖືກຕ້ອງຕາມເງື່ອນໄຂ, ບໍ່ອອກຂໍ້ກຳນົດ ທີ່ເປັນການກະທົບຕໍ່ສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງອື່ນໆ.

- ໃຫ້ມີລະບຽບ ແລະ ຂັ້ນຕອນຖືກຕ້ອງ: ໝາຍເຖິງການລວມຕົວຂອງບັນດາເງື່ອນໄຂອົງປະກອບຕ່າງໆ **ເຊັ່ນ:** ຮູບແບບ, ວິທີການ, ຂັ້ນຕອນ ແລະ ກຳນົດເວລາໃນການນຳໃຊ້ສິດ ລັກສະນະສຳຄັນຂອງລະບຽບຂັ້ນຕອນສາມາດຮັບປະກັນຄວາມຍຸດຕິທຳຢ່າງເປັນຮູບປະທຳ, ລະບຽບຂັ້ນຕອນຕ້ອງເປີດເຜີຍ, ຍຸດຕິທຳ ແລະ ສົມເຫດສົມຜົນ, ບຸກຄົນທີ່ເຮັດຜິດຕໍ່ລະບຽບຂັ້ນຕອນຕ້ອງຮັບຜິດຊອບ ອົງການບໍລິຫານ ຕ້ອງໄດ້ຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ; ສຳລັບບັນດາຂໍ້ມູນທີ່ກ່ຽວພັນເຖິງຄວາມລັບຂອງຊາດ, ຄວາມລັບທາງທຸລະກິດທີ່ໄດ້ຮັບການຄຸ້ມຄອງທາງກົດໝາຍ ແລະ ຄວາມລັບສ່ວນບຸກຄົນແມ່ນຍົກເວັ້ນ, ສ່ວນບັນດາຂໍ້ມູນອື່ນໆ ໃຫ້ປະຕິບັດຕາມການເປີດເຜີຍຢ່າງຊັດເຈນ; ພ້ອມທັງຕິດຕາມການຮັບຟັງຄວາມຄິດເຫັນຈາກປະຊາຊົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງອື່ນໆ...

- ອຳນວຍຄວາມສະດວກໃຫ້ແກ່ປະຊາຊົນຢ່າງມີປະສິດທິພາບສູງ; ການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງອົງການບໍລິຫານຕ້ອງປະຕິບັດຕາມກຳນົດເວລາ, ຕາມໜ້າທີ່, ຂອງກົດໝາຍກຳນົດໄວ້, ຍົກສູງປະສິດທິພາບ ໃນການເຮັດວຽກເພື່ອອຳນວຍຄວາມສະດວກແກ່ຄູ່ຮ່ວມງານ.

- ມີຄວາມສັດຊື່ ແລະ ຄວາມໜ້າເຊື່ອຖື: ໝາຍວ່າອົງການບໍລິຫານ ຕ້ອງດຳເນີນການຕັດສິນໃຈທາງບໍລິຫານທີ່ເກີດຜົນບັງຄັບໃຊ້ແລ້ວ; ໃນກໍລະນີມີຄວາມຈຳເປັນຕ້ອງມີການຍົກເລີກ ແລະ ການປ່ຽນແປງການຕັດສິນໃຈທາງບໍລິຫານເນື່ອງຈາກມີເຫດກ່ຽວພັນເຖິງຜົນປະໂຫຍດຂອງຊາດ, ຜົນປະໂຫຍດສ່ວນລວມ ແລະ ເຫດນິກຳອື່ນໆຕ້ອງໄດ້ດຳເນີນພາຍໃຕ້ຂອບເຂດສິດອຳນາດ ແລະ ຂັ້ນຕອນຕາມກົດໝາຍກຳນົດໄວ້.

- ມີຄວາມເປັນເອກະພາບດ້ານສິດ ແລະ ຄວາມຮັບຜິດຊອບ; ການດຳເນີນໜ້າທີ່ຄຸ້ມຄອງວຽກງານເສດຖະກິດ-ສັງຄົມ ແລະ ວັດທະນະທຳ ຕ້ອງອີງຕາມກົດໝາຍ ແລະ ກົດລະບຽບ, ອົງການບໍລິຫານຫາກລະເມີດຕໍ່ກົດໝາຍ ຫຼື ນຳໃຊ້ສິດໜ້າທີ່ບໍ່ຖືກຕ້ອງ; ອົງການບໍລິຫານຕ້ອງຮັບປະກັນ, ຮັບຜິດຊອບ, ໄດ້ຮັບການສືບສວນສອບສວນ, ເຮັດໃຫ້ການຈັດຕັ້ງປະຕິບັດການປົກຄອງດ້ວຍກົດໝາຍ ສາມາດຮັບປະກັນໃຫ້ການບໍລິຫານ ບໍ່ຫັນເຫໄປຈາກເປົ້າໝາຍຂອງບໍລິການເພື່ອປະຊາຊົນ; ຮັບປະກັນຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ມີຄວາມໝັ້ນຄົງຍາວນານ, ຮັບປະກັນໃຫ້ປະຊາຊົນສາມາດທຳການຜະລິດ ແລະ ດຳລົງຊີວິດຢ່າງມີຄວາມສຸກ; ມີປະໂຫຍດຕໍ່ການສ້າງຕັ້ງສາຍສຳພັນອັນດີ ລະຫວ່າງ ລັດກັບມະຫາຊົນ ແລະ ພະນັກງານກັບມະຊາຊົນ, ເພີ່ມທະວີຄວາມໄວ້ເນື້ອເຊື່ອໃຈຊຶ່ງກັນ ແລະ ກັນ ລະຫວ່າງ ລັດຖະບານກັບສາທາລະນະຊົນ; ສ້າງສູນກາງການບໍລິການແບບລວມສູນໃນບາງວຽກທີ່ສາມາດເອົາເຂົ້າລວມກັນໄດ້, ທົດລອງປະຕິບັດ 3 ໃຫຍ່ **ຄື:** ຢູ່ຮ່ວມກັນໃນຫ້ອງໃຫຍ່, ໄປນຳກັນດ້ວຍລົດໃຫຍ່ ແລະ ຮ່ວມກັນກິນໃນພາເຂົ້າໃຫຍ່.

### 4.1.3 ວຽກຈຸດສຸມທີ 3: ສືບຕໍ່ພັດທະນາຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄປສູ່ຄຸນນະພາບໃໝ່ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ.

- ພັດທະນາຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໄປສູ່ຄຸນະພາບໃໝ່ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ, ພັດທະນາ SME ໃຫ້ຍືນຍົງດ້ວຍນະວັດຕະກໍາ ແລະ ຊັບສິນທາງປັນຍາ ໝາຍວ່າ ຕ້ອງປັບຕົວໃຫ້ສອດຄ່ອງກັບສະພາບແວດລ້ອມທາງທຸລະກິດທີ່ປ່ຽນໄປຈາກກິດຈະການທີ່ເນັ້ນການຮັບຈ້າງຜະລິດ ແລະ ໃຊ້ແຮງງານເປັນຫຼັກປະກອບກັບການເຂົ້າສູ່ AEC ທີ່ເຮັດໃຫ້ມີຄູ່ແຂ່ງເພີ່ມຂຶ້ນ ສິ່ງເຫຼົ່ານີ້ເຮັດໃຫ້ SME ຕ້ອງປະເຊີນກັບອຸປະສັກຫຼາຍຢ່າງ ໂດຍສະເພາະ ເລື່ອງຂອງລາຄາ ໃນສະພາບທີ່ຕົ້ນທຶນເພີ່ມຂຶ້ນເລື້ອຍໆ ແລະ ອຸປະສັກຊະນິດໃໝ່ **ເຊັ່ນ:** ການໃຊ້ກົນລະຍຸດທາງຊັບສິນທາງປັນຍາເພື່ອກີດກັນຄູ່ແຂ່ງ ຊຶ່ງສິ່ງເຫຼົ່ານີ້ ບໍ່ແມ່ນເປັນພຽງອຸປະສັກແຕ່ກໍ່ເປັນໂອກາດໄດ້, ໂອກາດໃນການຍົກລະດັບທຸລະກິດ ການຂະຫຍາຍທຸລະກິດສູ່ຕ່າງປະເທດ ການຮຽນຮູ້ກົນລະຍຸດໃໝ່ໆ ແລະ ນໍາມາໃຊ້ປະໂຫຍດເຊິ່ງພາກລັດໄດ້ມີນະໂຍບາຍອອກມາສະໜັບສະໜູນໄດ້ແກ່ກົດໝາຍ SME ແລະ ກອງທຶນ. …

- ການພັດທະນາຂະບວນການສ້າງສັນນະວັດຕະກໍາ ທີ່ມີທັງສາດ ແລະ ສິນ ເພື່ອໃຫ້ນະວັດຕະກໍາມີສັກກາຍະພາບທີ່ສູງຂຶ້ນໂດຍສະເພາະນະວັດຕະກໍາດ້ານເຕັກໂນໂລຊີ ທີ່ຈະເຮັດໃຫ້ຜະລິດຕະພັນມີມູນຄ່າເພີ່ມຂຶ້ນ ຊຶ່ງບາງຄັ້ງເຕັກໂນໂລຊີເຫຼົ່ານີ້ມີອໍານາດຕໍ່ລອງຫຼາຍກ່ວາເງິນ **ເຊັ່ນ:** ເຕັກໂນໂລຊີຫຼຸດຜ່ອນຕົ້ນທຶນການຜະລິດຫົວອາຫານ, ອັດເມັດປຸຍ, ເຄື່ອງຈັກຜະລິດເຄື່ອງໃຊ້ຄົວເຮືອນຂະໜາດນ້ອຍ ໄດ້ແກ່: ເຄື່ອງເຮັດໄມ້ຈີ້ມແຂ້ວຈາກໄມ້ປ່ອງ, ເຄື່ອງຈັກຕອກ, ເຄື່ອງອັດກະປອງ, ເຄື່ອງເປົ່າກວດປະລັດສະຕິກ.

- ການພັດທະນາຮູບແບບທຸລະກິດ ໃຫ້ມີຄວາມໄດ້ປຽບໂດຍມີການວາງແຜນໄວ້ລ່ວງໜ້າຢ່າງຮັດກຸມເພາະຫາກວາງແຜນໄວ້ບໍ່ດີອາດຈະເຮັດໃຫ້ເສຍໂອກາດທາງທຸລະກິດ ແລະ ມາດຕະການສະນັບສະໜູນທີ່ລັດມີ; ສະນັ້ນ, ແນວທາງການພັດທະນາ ທີ່ອາດຈະເລີ່ມຕົ້ນດ້ວຍການສຶກສາຕະຫຼາດ ແລະ ວິເຄາະປັດໄຈແວດລ້ອມຕາມ SWOT ເຂົ້າມາປະຍຸກໃຊ້, ສໍາລັບແຂວງບໍລິຄໍາໄຊ ການພັດທະນາໃນດ້ານນີ້ ຕ້ອງເລີ່ມຈາກການເຮັດເປັນຕົວແບບ ດ້ວຍພາກເອກະຊົນ **ເຊັ່ນ:** ຮ້ານຄ້າຜັກສະອາດ ຢູ່ປໍ້ານໍ້າມັນເຊື້ອໄຟ, ງານຕະຫຼາດນັດຜະລິດຕະພັນສິນຄ້າພູມປັນຍາຊາວບ້ານ ແລະ ງານທ່ອງທ່ຽວປະຈໍາປີ ຂອງບັນດາເມືອງ, ຮ້ານຕົວແບບຫັດຖະກໍາ, ການບໍລິການ.

### 4.1.4 ວຽກຈຸດສຸມທີ 4: ປັບປຸງໂຄງການເສດຖະກິດໄປຕາມທິດການຫັນເປັນອຸດສາຫະກາ ແລະ ທັນສະໄໝ ດ້ວຍການນໍາໃຊ້ເຕັກນິກວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາໃໝ່ເຂົ້າໃນການຜະລິດ-ການບໍລິການ.

- ປັບປຸງໂຄງການເສດຖະກິດໄປຕາມທິດການເປັນອຸດສາຫະກໍາ ແລະ ທັນສະໄໝ ດ້ວຍການນໍາໃຊ້ ກຸ່ມອຸດສາຫະກໍາຕໍ່ຍອດ ແລະ ອຸດສາຫະກໍາໃໝ່ **ຄື:**

- ອຸດສາຫະກໍາຕໍ່ຍອດ: ອຸດສາຫະກໍາທ່ອງທ່ຽວ ລັກສະນະພັກຜ່ອນ ແລະ ສຶກສາຄົ້ນຄວ້າ, ການກະເສດ ແລະ ເຕັກໂນໂລຊີຊີວະພາບ ແລະ ອຸດສາຫະກໍາການແປຮູບອາຫານ, ກຸ່ມນີ້ພວກເຮົາມີທ່າແຮງພຽງແຕ່ເຮົາຕໍ່ຍອດການລົງທຶນໃນຜະລິດຕະພັນໃໝ່ໆ ໃຫ້ມີການວິໄຈ ແລະ ພັດທະນາເພື່ອຍົກອຸດສາຫະກໍາສູ່ລະດັບນາໆຊາດ.

- ອຸດສາຫະກໍາໃໝ່: ໃນກຸ່ມນີ້ພວກເຮົາມີຄວາມສາມາດໃນການແຂ່ງຂັນ **ເຊັ່ນ:** ອຸດສາຫະກໍາຂົນສົ່ງໂລຈິດສະຕິກ ເພາະອີງໃສ່ທີ່ຕັ້ງພູມສັນຖານຂອງແຂວງພວກເຮົາມີທີ່ຕັ້ງຢູ່ຊ່ວງກິ່ວສຸດຂອງປະເທດ ມີໄລຍະທາງຈາກຕາເວັນຕົກ-ຕາເວັນອອກ-ຕາເວັນຕົກສັ້ນສຸດຄື 150 ກິໂລແມັດ ແລະ ຍັງສາມາດກະຈາຍການຂົນສົ່ງເຂົ້າສູ່ນະຄອນຫຼວງຂອງປະເທດ, ໄປສູ່ແຂວງພາກໃຕ້ຂອງລາວ ແລະ ສິ່ງສໍາຄັນອີກອັນໜຶ່ງກໍ່ມີໂຄງການທາງດ່ວນວຽງຈັນ-ປາກຊັນ-ທ່າແຂກ ຜ່ານແຂວງບໍລິຄໍາໄຊ ແລະ ເປັນແລວທາງເສດຖະກິດຕາເວັນອອກ-ແລວທາງເສດຖະກິດຕາເວັນຕົກ.

- ສໍາລັບການບໍລິການ ໃນບາງກິດຈະກໍາຈະນໍາໃຊ້ການຊໍາລະສະສາງຜ່ານ E-pay ເຊັ່ນ: ໃບຂັບຂີ່ເຂດພາສີ, ອາກອນ, ໄຟຟ້າ, ນໍ້າປະປາ, ປໍ້ານໍ້າມັນ (ບາງປໍ້າ), ຮ້ານສະດວກຊື້, ຮ້ານອາຫານ, ໂຮງແຮມ, ເຮືອນພັກ, ສະຖານທີ່ທ່ອງທ່ຽວ (ບາງຈຸດຂອງ 6 ເມືອງ).

- ສັງລວມແລ້ວໃນເປົ້າໝາຍ 1 ນີ້ແມ່ນການສຸມໃສ່ສ້າງສິ່ງອຳນວຍຄວາມສະດວກໃນການແຂ່ງຂັນທຸລະກິດ, ການກະສິກຳ-ປຸ່ງແຕ່ງ ແລະ ພັດທະນາການທ່ອງທ່ຽວ, ເນັ້ນການປະຕິບັດແຜນລາຍຮັບ-ລາຍຈ່າຍງົບປະມານໃຫ້ມີຈຸດສຸມ ແລະ ຂົນຂວາຍແຫຼ່ງທຶນໃຫ້ໄດ້ຫຼາຍ.

**4.2. ເປົ້າໝາຍທີ 2: ຊັບພະຍາກອນມະນຸດມີຄຸນນະພາບດີຂຶ້ນ, ທັງມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ແລະ ພູມປັນຍາເພື່ອສົ່ງເສີມການຜະລິດ ແລະ ການບໍລິ ການໃຫ້ຫຼາກຫຼາຍ ແລະ ມີມູນຄ່າເພີ່ມສູງຂຶ້ນ.**

ຮອດປີ 2025 ທົ່ວແຂວງຄາດວ່າພົນລະເມືອງເຖິງ 354.520 ຄົນ, ຍິງ 176.438 ຄົນ, ເພີ່ມຂຶ້ນ 2% ຕໍ່ປີ, ຂະໜາດຂອງຄົວເຮືອນ ສະເລ່ຍ 6 ຄົນ; ອັດຕາສ່ວນເພດ ຂອງປະຊາກອນ ເພດຊາຍ 50,3%, ເພດຍິງ 49,7%.

ໂຄງປະກອບໝວດອາຍຸຂອງປະຊາກອນ: ອາຍຸ 0-4 ປີ ກວມ 10%, 5-9 ປີ ກວມ 11,7%, ອາຍຸ 10-14 ປີ ກວມ 10,5 %, ອາຍຸ 15-54 ປີ ກວມ 57,7%, ອາຍຸ 55 ປີຂຶ້ນໄປ ກວມ 10,9%; ອີກ 5 ປີຕໍ່ໜ້າປະຊາກອນໃນເກນໝວດອາຍຸ  15-24 ປີ ຫຼາຍຂຶ້ນ ກຳລັງແຮງງານເພີ່ມຂຶ້ນ ແລະ ກຸ່ມຜູ້ສູງອາຍຸກໍ່ທ່າອ່ຽງເພີ່ມຂຶ້ນ ໝາຍຄວາມວ່າອາຍຸຍືນສະເລ່ຍສູງຂຶ້ນດ້ານໂພສະນາການກໍ່ດີຂຶ້ນ.




**4.2.1 ວຽກຈຸດສຸມທີ 1: ສຸມໃສ່ເງື່ອນໄຂການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (ດັດຊະນີຊັບສິນມະນຸດ) ດ້ວຍການປັບປຸງລະບົບການສຶກສາໃຫ້ມີຄຸນນະພາບ, ພັດທະນາວຽກງານສາທາລະນະສຸກໃຫ້ທັນສະໄໝ, ສ້າງ ແລະ ປັບປຸງໂຮງຮຽນວິຊາຊີບ (TVET), ສູນພັດທະນາສີມືແຮງງານ ແລະ ຍົກລະດັບຄູໃຫ້ມີຄຸນນະພາບສູງຂຶ້ນ.**

ເປົ້າໝາຍຫຼັກໃນການພັດທະນາເງື່ອນໄຂດັ່ງກ່າວກໍ່ຄືບັນຫາຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາ (LDCs) ໂດຍສະເພາະ ແມ່ນເປົ້າໝາຍລາຍໄດ້ຕໍ່ຫົວຄົນ 1) ພັດທະນາຄວາມສາມາດ ເພື່ອຍົກສູງສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ, ພະລັງງານ, ວິທະຍາສາດ-ເຕັກໂນໂລຊີ ແລະ ນະວັດຕະກຳ, ການພັດທະນາພາກເອກະຊົນ; 2) ພັດທະນາ ຂະແໜງກະສິກຳ, ການຄ້ຳປະກັນສະບຽງອາຫານ ແລະ ການພັດທະນາຊົນນະບົດ;

3) ພັດທະນາການຄ້າຕ່າງປະເທດໃຫ້ໄດ້ຫຼາຍຂຶ້ນ; 4) ຜະລິດສິນຄ້າ ແລະ ການບໍລິການໃຫ້ມີຄວາມຫຼາກຫຼາຍຂຶ້ນ; 5) ພັດທະນາຂະແໜງສັງຄົມ ແລະ ຊັບພະຍາກອນມະນຸດ ໂດຍສະເພາະການສຶກສາ, ການຝຶກອົບຮົມໄວໜຸ່ມ, ບົດບາດຍິງ-ຊາຍ, ແມ່ຍິງ, ການປະກັນສັງຄົມ ແລະ ການກິນດື່ມສະອາດ; 6) ແກ້ໄຂບັນຫາວິກິດການ ແລະ ສິ່ງທ້າທາຍຕ່າງໆ ເປັນຕົ້ນແມ່ນວິກິດການທາງດ້ານເສດຖະກິດແບບກະທັນຫັນ, ພະຍາດລະບາດ, ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ; 7) ການຈັດຫາແຫຼ່ງທຶນສຳລັບການພັດທະນາ ແລະ ການຝຶກອົບຮົມຍົກລະດັບຂີດຄວາມສາມາດ; 8) ສ້າງຄວາມເຂັ້ມແຂງລະບົບການບໍລິຫານ-ການປົກຄອງໃນທຸກລະດັບ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານ ດັ່ງນີ້:**

1) ສຸມໃສ່ປະຕິບັດບັນດາເງື່ອນໄຂເພື່ອບັນລຸເປົ້າໝາຍຫຼຸດພົ້ນອອກຈາກສະຖານະພາບຄວາມດອຍພັດທະນາ (LDCs) ໂດຍສຸມໃສ່ຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດຖະແຫຼງການ ແລະ ແຜນງານອິສແຕນບູນ ສຳລັບປະເທດດອຍພັດທະນາໃນໄລຍະ 2016-2020 ໂດຍສຸມໃສ່ 8 ວຽກບູລິມະສິດທີ່ກ່າວມາຂ້າງເທິງນັ້ນຢ່າງມີຈຸດສຸມ.

2) ສຸມໃສ່ ແລະ ໃຫ້ບູລິມະສິດພັດທະນາຂອງຂະແໜງການຕ່າງໆທີ່ກ່ຽວຂ້ອງ ກັບການປະຕິບັດທຸກເປົ້າໝາຍການພັດທະນາແບບຍືນຍົງ (SDGs).

**ກ. ປັບປຸງລະບົບການສຶກສາໃຫ້ມີຄຸນນະພາບສູງ.**

**1. ພັດທະນາລະບົບການສຶກສາ.**

- ປັບປຸງ ແລະ ຍົກສູງຄຸນນະພາບການຮຽນ-ການສອນ ດ້ວຍກິດຈະກຳ **ຄື:**

+ ສຸມໃສ່ພັດທະນາພື້ນຖານໂຄງລ່າງດ້ານການສຶກສາ ໂດຍສະເພາະຂະຫຍາຍໂຮງຮຽນອະນຸບານ, ໂຮງຮຽນປະຖົມຢູ່ບ້ານທີ່ຍັງບໍ່ທັນມີໂຮງຮຽນຖາວອນ, ໂຮງຮຽນມັດທະຍົມຕົ້ນ ແລະ ມັດທະຍົມຕອນປາຍ ບ່ອນທີ່ມີເງື່ອນໄຂ, ສ້າງໂຮງຮຽນວິຊາຊີບໃຫ້ໄດ້ມາດຕະຖານຂອງກະຊວງສຶກສາທິການ ແລະ ກິລາ.

+ ປັບປຸງຄຸນນະພາບການຮຽນ-ການສອນ ໂດຍການເອົາໃຈໃສ່ຍົກລະດັບຄຸນນະພາບຂອງຄູ ດ້ວຍການຝຶກອົບຮົມ, ພັດທະນາການຮຽນ ແລະ ການສອນ ດ້ວຍການນໍາໃຊ້ທິດສະດີ ຄວບຄູ່ກັບການປະຕິບັດຕົວຈິງ.

+ ການສ້າງນິຕິກຳ ເພື່ອລະດົມທຶນຈາກພາກສ່ວນອື່ນ ເຂົ້າໃສ່ການພັດທະນາການສຶກສາໃຫ້ແທດເໝາະກັບເງື່ອນໄຂຕົວຈິງຂອງແຕ່ລະໄລຍະ.

+ ຈັດກິດຈະກຳ ສອນດີ-ຮຽນເກັ່ງ ລະດັບສາກົນເພື່ອເປັນຕົວແທນໃຫ້ແກ່ໂຮງຮຽນ, ເມືອງ, ແຂວງ ໄປແຂ່ງຂັນລະດັບປະເທດ.

- ເອົາໃຈໃສ່ເຮັດໃຫ້ຂະບວນການແຂ່ງຂັນສອນດີ ແລະ ຮຽນເກັ່ງໃນໂຮງຮຽນສາຍສາມັນເປັນຂະບວນ ແລະ ມີຄຸນນະພາບສູງ.

- ຊຸກຍູ້ສົ່ງເສີມພາກເອກະຊົນເຂົ້າຮ່ວມການພັດທະນາການສຶກສາສາຍສາມັນ ແລະ ວິຊາຊີບ, ອັດຕາການເຂົ້າຮຽນຂອງເດັກສາຍສາມັນເພີ່ມຂຶ້ນ ແລະ ອັດຕາການປະລະການຮຽນຫຼຸດລົງ, ສືບຕໍ່ປຸກລະດົມປະຊາຊົນໃຫ້ເຂົ້າຮ່ວມຂະບວນການປະຊາສຶກສາຊັ້ນປະຖົມ ແລະ ມັດທະຍົມ ໃຫ້ບັນລຸຕາມເປົ້າໝາຍ, ເອົາໃຈໃສ່ປະຕິບັດນະໂຍບາຍຕໍ່ນັກຮຽນ ແລະ ຄູ ເປັນປົກກະຕິ; ສ້າງຂະບວນການກິລາກາຍຍະກຳໃຫ້ເປັນຂະບວນການທີ່ຟົດຟື້ນ ແລະ ກວ້າງຂວາງ, ໃນນີ້ ໄດ້ຈັດການແຂ່ງຂັນກິລາປະເພດຕ່າງໆ ຕາມແຕ່ລະຊັ້ນ, ແຕ່ລະຫ້ອງຮຽນ, ໂຮງຮຽນກັບໂຮງຮຽນ, ເມືອງກັບເມືອງ, ກິລາທົ່ວແຂວງ ແລະ ເຂົ້າຮ່ວມກິລາແຫ່ງຊາດ;

- ການສຶກສາກ່ອນໄວຮຽນ ອັດຕາເຂົ້າຮຽນຂອງເດັກ 5 ປີ ໃຫ້ໄດ້ 89,3%.

- ປະຖົມສຶກສາ ອັດຕາເຂົ້າຮຽນໃໝ່ສຸດທິ ປ1 ໃຫ້ໄດ້ 99,3%.

- ປະຖົມສຶກສາ ອັດຕາເຂົ້າຮຽນໃໝ່ລວມ ປ5 ໃຫ້ໄດ້ 100%.

- ປະຖົມສຶກສາ ອັດຕາປະລະ ປ1 4,0% ປີ 2020 ໃຫ້ເຫຼືອ 2,0% ໃນປີ 2025.

- ປະຖົມສຶກສາ ອັດຕາປະລະລວມ 2,4% ປີ 2020 ໃຫ້ເຫຼືອ 1,0% ໃນປີ 2025.

- ປະຖົມສຶກສາ ອັດຕາຈົບຊັ້ນປະຖົມ 96,6% ປີ 2020 ໃຫ້ເຫຼືອ 98,6% ໃນປີ 2025.

- ຊັ້ນມັດທະຍົມຕົ້ນ ອັດຕາການເລື່ອນຊັ້ນຂຶ້ນ ມ1 ທຽບໃສ່ນັກຮຽນຈົບ ປ5 92,7% ປີ 2020 ໃຫ້ເຫຼືອ 96,3% ໃນປີ 2025.

- ຊັ້ນມັດທະຍົມຕົ້ນ ດັດສະນີຄວາມສະເໝີພາບຍິງ-ຊາຍ ອັດຕາການເລື່ອນຊັ້ນຂຶ້ນ ປ5 ຫາ ມ1 0,8% ປີ 2020 ໃຫ້ໄດ້ 1,2% ໃນປີ 2025.

- ຊັ້ນມັດທະຍົມຕົ້ນ ອັດຕາເຂົ້າຮຽນໃໝ່ ມ4  74% ປີ 2020 ໃຫ້ໄດ້ 75% ໃນປີ 2025.

- ຊັ້ນມັດທະຍົມຕົ້ນ ອັດຕາປະລະລວມ ມໍຕົ້ນ 11,2% ປີ 2020 ໃຫ້ເຫຼືອ 5,6% ໃນປີ 2025.

- ການສຶກສານອກໂຮງຮຽນ ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນໃຫ້ໄດ້ບຳລຸງ ຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ  ໃຫ້ໄດ້ 3.612 ຄົນ ໃນປີ 2025.

- ອະຊີວະສຶກສາ ສົ່ງເສີມນັກຮຽນທີ່ຮຽນຈົບມັດທະຍົມຕົ້ນ ແລະ ມັດທະຍົມປາຍເຂົ້າຮຽນໂຮງຮຽນເຕັກນິກວິຊາຊີບຂອງແຂວງ ໃຫ້ໄດ້ 900 ຄົນ ໃນປີ 2025.

- ອະຊີວະສຶກສາ ສູ້ຊົນໃຫ້ມີນັກຮຽນທີ່ຮຽນຈົບມັດທະຍົມພາຍໃນແຂວງໄດ້ສືບຕໍ່ຮຽນລະດັບມະຫາວິທະຍາໄລທັງພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ 982 ຄົນ ໃນປີ 2025.

- ສູ້ຊົນເມືອງທີ່ບັນລຸດັດສະນີຄວາມສຳພັນລະຫວ່າງຄູ ແລະ ນັກຮຽນ ($R^2$ >=0,8) ໃຫ້ໄດ້ 7ເມືອງ.

- ສົ່ງເສີມມວນຊົນທຸກປະເພດ, ທຸກໄວເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາເພື່ອສຸຂະພາບ, ເຂົ້າຮ່ວມການສ້າງຂະບວນການ ເພື່ອເຄື່ອນໄຫວຈັດກິດຈະກຳການແຂ່ງຂັນປະຈຳປີ ແລະ ວັນສຳຄັນຕ່າງໆ  18% ປີ 2020 ໃຫ້ໄດ້ 33,8% ປີ 2025.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ປັບປຸງ ແລະ ຍົກສູງຄຸນນະພາບການຮຽນ-ການສອນ ດ້ວຍກິດຈະກຳເອົາໃຈໃສ່ເຮັດໃຫ້ຂະບວນການແຂ່ງຂັນສອນດີ ແລະ ຮຽນເກັ່ງໃນໂຮງຮຽນສາຍສາມັນເປັນຂະບວນ ແລະ ມີຄຸນນະພາບສູງ, ປະຕິບັດຕາມ ດຳລັດຂອງນາຍົກລັດຖະມົນຕີ ນະໂຍບາຍຕໍ່ຜູ້ດ້ອຍໂອກາດ ແລະ ຄອບຄົວທຸກຍາກໃຫ້ເຂົ້າເຖິງການສຶກສາຢ່າງທົ່ວເຖິງ.

2) ຊຸກຍູ້ສົ່ງເສີມພາກເອກະຊົນເຂົ້າຮ່ວມການພັດທະນາການສຶກສາສາຍສາມັນ ແລະ ວິຊາຊີບ, ອັດຕາການເຂົ້າຮຽນຂອງເດັກສາຍສາມັນເພີ່ມຂຶ້ນ ແລະ ອັດຕາການປະລະການຮຽນຫຼຸດລົງ.

**2. ພັດທະນາວຽກງານສາທາລະນະສຸກໃຫ້ທັນສະໄໝ.**

- ສູ້ຊົນຈັດຕັ້ງປະຕິບັດ ຕົວຊີ້ວັດດ້ານສາທາລະນະສຸກ ໃຫ້ບັນລຸຄາດໝາຍທີ່ວາງໄວ້ໂດຍສະເພາະ 11 ຕົວຊີ້ວັດທີ່ສະເໜີສະພາຮັບຮອງເຊັ່ນ:

- ✓ ລຸດຜ່ອນການຂາດສານອາຫານໃນເດັກນ້ອຍ ລຸ່ມ 5 ປີ.
- ✓ ສູງບໍ່ໄດ້ມາດຖານ ໃຫ້ຍັງເຫຼືອ 15%, ນໍ້າໜັກຕໍ່າກວ່າມາດຕະຖານ ໃຫ້ຍັງເຫຼືອ 10%.
- ✓ ອັດຕາການຕາຍຂອງເດັກລຸ່ມ 1 ປີ ໃຫ້ລຸດລົງເຫຼືອ  10/1.000 ເດັກເກີດມີຊີວິດ.
- ✓ ອັດຕາການຕາຍຂອງ ເດັກລຸ່ມ 5 ປີ ໃຫ້ລຸດລົງເຫຼືອ  15/1.000 ເດັກເກີດມີຊີວິດ.
- ✓ ອັດຕາສ່ວນການຕາຍຂອງແມ່ ໃຫ້ລຸດລົງເຫຼືອ 45/100.000 ເດັກເກີດມີຊີວິດ.
- ✓ ອັດຕາການເກີດລູກມີແພດຊ່ວຍ ໃຫ້ໄດ້ 85 %.
- ✓ ອັດຕາສັກຢາກັນພະຍາດໃນເດັກລຸ່ມ 1 ປີ ໃຫ້ໄດ້ຫຼາຍກ່ວາ 95%.
- ✓ ອັດຕາການຊົມໃຊ້ນໍ້າສະອາດ ໃຫ້ໄດ້ຫຼາຍກ່ວາ 97%.
- ✓ ອັດຕາການຊົມໃຊ້ວິດຖ່າຍຄອບຄົວ ໃຫ້ໄດ້ 98%.
- ✓ ອັດຕາການປົກຄຸມການປະກັນສຸຂະພາບ 100%.
- ✓ ອັດຕາບ້ານສາທາລະນະສຸກແບບຢ່າງ ໃຫ້ໄດ້ 100%.

➢ **ຈຸດສຸມໃນການຈັດຕັ້ງປະຕິບັດ.**

- ພັດທະນາຄຸນນະພາບພະນັກງານ ໃຫ້ໄດ້ມາດຕະຖານຕາມຍຸດທະສາດໃນແຕ່ລະຂັ້ນ ດ້ວຍການອົບຮົມບຳລຸງຍົກລະດັບແຕ່ລະດ້ານໃຫ້ມີຄຸນນະພາບສູງແຕ່ລະວິຊາກາຍເປັນມືອາຊີບ ແລະ ທັນເປັນວິຊາສະເພາະ.

- ປັບປຸງລະບົບການເງິນສາທາລະນະສຸກ ຕາມທິດທີ່ຍືນຍົງ ແນໃສ່ການປົກຄຸມສຸຂະພາບທົ່ວປວງຊົນ (ຄຸນນະພາບ, ປະສິດທິພາບ, ຄວາມສະເໝີພາບ, ຄວາມຮັບຜິດຊອບໃຫ້ບໍລິການ-ລະບົບຄຸ້ມຄອງການເງິນໂຮງໝໍກຸ້ມຕົນເອງເທື່ອລະກ້າວ, ການປະກັນສຸຂະພາບ ກໍຄືນະໂຍບາຍບໍ່ເສຍຄ່າ, ກສທ, ກປສຊ, ອປສ, ອປລ ແລະ ເອກະຊົນ).

- ປັບປຸງຄຸນນະພາບຂອງຕາໜ່າງບໍລິການ ປະຕິບັດນະໂຍບາຍ 5 ດີ 1 ພໍໃຈນຳໃຊ້ອຸປະກອນ ແລະ ເທັກໂນໂລຊີທັນສະໄໝ, ບົ່ງມະຕິ/ຮູ້ສາຍເຫດການຕາຍ ຢູ່ໃນສະຖານທີ່ບໍລິການທຸກລະດັບ (ເອກະຊົນ) ຢ່າງເປັນລະບົບ

(ສິ່ງຕໍ່) ສ້າງຄວາມສາມາດປິ່ນປົວ ແລະ ແກ້ໄຂສາຍເຫດການຕາຍ ໂດຍສະເພາະ ເພື່ອຫຼຸດຜ່ອນການຕາຍຂອງແມ່ ແລະ ເດັກ ແລະ ປ້ອງກັນການຂາດສານອາຫານໃນເດັກນ້ອຍລຸ່ມ 2 ປີ ແລະ ລຸ່ມ 5 ປີ.

- ສ້າງຄວາມເຂັ້ມແຂງ ໃຫ້ແກ່ການຮັກສາສຸຂະພາບຂັ້ນຕົ້ນ ໃນທຸກທ້ອງຖິ່ນຫ່າງໄກ ຈັດຕັ້ງປະຕິບັດວຽກງານ ຮສຂ, ພັດທະນາບ້ານສາທາລະນະສຸກແບບຢ່າງ ແລະ ໂພຊະນາການ ໃຫ້ມີມາດຕະຖານສູງຂຶ້ນ.

- ປັບປຸງຄຸນນະພາບ ຂອງການກວດກາອາຫານ ແລະ ຢາໃຫ້ຊັດເຈນ-ວ່ອງໄວ, ພ້ອມທັງສົ່ງເສີມການຜະລິດ ແລະ ນໍາໃຊ້ຢາພື້ນເມືອງ.

- ປັບປຸງລະບົບຂໍ້ມູນສາທາລະນະສຸກ ໃຫ້ເປັນລະບົບດຽວ ດ້ວຍລະບົບເອເລັກໂຕຣນິກ ຢູ່ໃນສະຖານທີ່ບໍລິການ ໃຫ້ເຂັ້ມແຂງ ກາຍເປັນສູນຂໍ້ມູນສາທາລະນະສຸກ.

- ມີຄວາມກຽມພ້ອມຮັບມື-ຕອບໂຕ້ໄວກັບໄພພິບັດ, ສະກັດກັ້ນບໍ່ໃຫ້ພະຍາດລະບາດ ລວມທັງວຽກຊາຍແດນ (IHR).

- ປັບປຸງແບບແຜນວິທີເຮັດວຽກ-ການຈັດຕັ້ງນໍາພາ ຕາມແຜນງານ, ລະບຽບ-ຫຼັກການລວມສູນ, ເພີ່ມການປະສານງານ ແລະ ຮ່ວມມືກັບເອກະຊົນ, ເພີ່ມຂີດຄວາມສາມາດຄຸ້ມຄອງບໍລິຫານຢ່າງເປັນລະບົບ (ວາງແຜນ, ຕິດຕາມ, ສະຫຼຸບ).

- ຈັດຕັ້ງເຄື່ອນໄຫວຕາມ 8 ແຜນງານ, 48 ແຜນງານຍ່ອຍ ແລະ 138 ໂຄງການຂອງກະຊວງສາທາລະນະສຸກວາງອອກ.

➢ **ຄາດໝາຍສູ້ຊົນຕົວຊີ້ວັດ.**

| ລ/ດ | ຕົວຊີ້ວັດ | ຫົວໜ່ວຍ | 2020 | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|---|---|---|
| 1 | ຂາດອາຫານຊໍາເຮື້ອເດັກຕໍ່າກ່ວາ 5 ປີ | % | 21 | 20 | 19 | 18 | 17 | 18 |
| 2 | ນໍ້າໜັກຕໍ່າກ່ວາມາດຖານເດັກຕໍ່າກວ່າ 5ປີ | % | 15 | 14 | 13 | 12 | 11 | 10 |
| 3 | ອັດຕາເດັກຕາຍ ເດັກລຸ່ມ 1 ປີ | /1,000 | 12 | 11.6 | 11.2 | 10.8 | 10.4 | 10 |
| 4 | ອັດຕາເດັກຕາຍ ເດັກລຸ່ມ 5 ປີ | /1,000 | 18 | 15.8 | 15.6 | 15.4 | 15.2 | ≤15 |
| 5 | ອັດຕາເດັກຕາຍ ຂອງແມ່ | /1000,000 | 50 | 49 | 48 | 47 | 48 | 45 |
| 6 | ອັດຕາການເກີດລູກມີແພດຊໍານານຊ່ວຍເກີດ | % | 80 | 81 | 82 | 83 | 84 | 85 |
| 7 | ອັດຕາສັກຢາກັນພະຍາດ Panta 3 | % | 96 | ≥95 | ≥96 | ≥97 | ≥98 | >97 |
| 8 | ອັດຕາການຊົມໃຊ້ນໍ້າສະອາດ | % | >93 | 94 | 95 | 96 | 97 | >97 |
| 9 | ອັດຕາການຊົມໃຊ້ວິດຖ່າຍຄອບຄົວ | % | 97 | 97.2 | 97.4 | 97.8 | 97.8 | 97.8 |
| 10 | ອັດຕາສ່ວນການປະກັນສຸຂະພາບທົ່ວໜ້າ | % | 100 | 100 | 100 | 100 | 100 | 100 |

**1) ແຜນງານ ອະນາໄມ ແລະ ສົ່ງເສີມສຸຂະພາບ.**

- ເລັ່ງຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານ ສໍາລັບການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ແລະ ຍຸດທະສາດໂພຊະນາການ (ໃຫ້ບັນລຸຄາດໝາຍແມ່ ແລະ ເດັກ ແລະ ໂພຊະນາການ), ສຸມໃສ່ບັນດາແຂວງ, ເມືອງ ແລະ ໂຮງໝໍນ້ອຍ ທີ່ຍັງບໍ່ທັນບັນລຸ ໂດຍທັນວິຊາການ ແລະ ສະໜອງອຸປະກອນ-ຢາ ທີ່ຈໍາເປັນ ພ້ອມທັງໂຄສະນາຂົນຂວາຍປຸກລະດົມການເປັນເຈົ້າການຂອງຊຸມຊົນ ກໍ່ຄືອໍານາດການປົກຄອງ.

- ສືບຕໍ່ປັບປຸງ ແລະ ຂະຫຍາຍການບໍລິການສຸຂະພາບແມ່ ແລະ ເດັກໃຫ້ທົ່ວເຖິງ ໂດຍປະຕິບັດນະໂຍບາຍການເກີດລູກ ແລະ ປິ່ນປົວເດັກບໍ່ເສຍຄ່າ ໃຫ້ມີຄຸນນະພາບ ແລະ ປົກຄຸມທົ່ວປະເທດ ໂດຍສຸມໃສ່ຕົວຊີ້ວັດທີ່ຍັງຄ້າງຄາ ເປັນຕົ້ນແມ່ນການນໍາໃຊ້ວັກຊິນ, ການເກີດລູກມີແພດຊ່ວຍ, ໂພຊະນາການ, ການຊົມໃຊ້ນໍ້າ ແລະ ວິດຖ່າຍ.

- ປະຕິບັດບັນດາໂຄງການປິ່ນອ້ອມ ແລະ ສະໜັບສະໜູນວຽກແມ່ ແລະ ເດັກ, ໂພຊະນາການ: ຕິດຕາມກວດກາ ຕີລາຄາຄວາມຄືບໜ້າຮ່ວມກັບຜູ້ໃຫ້ທຶນ.

- ປັບປຸງລະບົບຂໍ້ມູນການບໍລິການສຸຂະພາບ ແມ່ ແລະ ເດັກ ໃຫ້ເປັນເອກະພາບ ແລະ ມີຄຸນນະພາບ (DHIS2) ສາມາດເກັບກໍານໍາໃຊ້ຂໍ້ມູນ ເພື່ອຕິດຕາມລາຄາ ການບໍລິການຂອງຕົນ ໃນແຕ່ລະຂັ້ນທົ່ວແຂວງ.

- ສືບຕໍ່ປຸກລະດົມຊຸມຊົນ ເຂົ້າຮ່ວມວຽກ ຮສຂ ໃນການສ້າງບ້ານສາທາລະນະສຸກແບບຢ່າງ ໃຫ້ກາຍເປັນ

ພາລະກິດຂອງຊຸມຊົນໂດຍຊຸມຊົນ ເພື່ອຊຸມຊົນຢ່າງແທ້ຈິງ ປະກອບສ່ວນໂດຍກົງໃຫ້ແກ່ວຽກງານ 3 ສ້າງ ຕາມທິດຂອງການຂະຫຍາຍ ໃຫ້ບັນລຸຕາມຄາດໝາຍ (ຄຳສັ່ງເລກທີ 34/ນຍ).

**2) ແຜນງານ ກັນພະຍາດ ແລະ ຄວບຄຸມພະຍາດຕິດຕໍ່.**

- ເຜີຍແຜ່ກົດໝາຍ CDC, ປະຕິບັດຕົວຊີ້ວັດ ໃຫ້ສາມາດບັນລຸຕາມເງື່ອນໄຂກົດລະບຽບຂອງສາທາລະນະສຸກສາກົນ (IHR) ທີ່ຍັງຄົງຄ້າງໃຫ້ສຳເລັດ, ປະກອບສ່ວນໂດຍກົງໃຫ້ແກ່ 5 ດີ 1 ພໍໃຈ (IPC) ໂດຍຈັດການປະເມີນຄືນ.

- ເພີ່ມຄວາມສາມາດຄົ້ນຫາພະຍາດລະບາດ ແລະ ເຫດສຸກເສີນດ້ານສຸຂະພາບໃຫ້ໄວ ປະເມີນຄວາມສ່ຽງ ແລະ ຕອບໂຕ້ທັນເວລາ ດ້ວຍລະບົບເຝົ້າລະວັງ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

- ສ້າງຄວາມເຂັ້ມແຂງດ້ານວິເຄາະແຕ່ລະຂັ້ນ ຊ່ວຍບົ່ງມະຕິບັນດາພະຍາດຕິດຕໍ່ໃຫ້ໄວ ແລະ ຊັດເຈນໂດຍສະເພາະບັນດາແຂວງ ແລະ ເມືອງຊາຍແດນ ປະກອບສ່ວນໃຫ້ແກ່ 5 ດີ 1 ພໍໃຈ.

- ສືບຕໍ່ໂຄສະນາຂະຫຍາຍການໃຫ້ຄຳປຶກສາ ທັງກວດເລືອດ ແລະ ປິ່ນປົວ HIV/AIDS ແຕ່ຫົວທີ, ປັບປຸງຍົກລະດັບການບົ່ງມະຕິ ແລະ ປິ່ນປົວ ພ້ອມທັງຄວບຄຸມໄຂ້ຍຸງໃນແຕ່ລະຂັ້ນ ຊຸກຍູ້ຊຸມຊົນເປັນເຈົ້າການ, ຮັບປະກັນໃຫ້ປະຊາຊົນ ໄດ້ເຂົ້າເຖິງບໍລິການປິ່ນປົວວັນນະໂລກຢ່າງຖືກຕ້ອງ.

- ເພີ່ມຄວາມເຂັ້ມແຂງໃນການກັນ ແລະ ເຝົ້າລະວັງບັນດາພະຍາດ: ໄຂ້ເລືອດອອກ, ໄຂ້ຫວັດສັດປີກ, ໄຂ້ເລືອດດຳ, ໄຂ້ຍ່ຽວໜູ, ພະຍາດວໍ້, ຊິກາ ແລະ ໂຄວິດ19.

| ບັນດາຕົວຊີ້ວັດ | ຄາດໝາຍແຕ່ລະປີ | | | | |
|---|---|---|---|---|---|
| | 2021 | 2022 | 2023 | 2024 | 2025 |
| ອັດຕາການຕິດເຊື້ອມາເລເລຍ/ປະຊາກອນ1.000 ຄົນ | 0.2 | 0.02 | 0.02 | 0.02 | 0.02 |
| ອັດຕາການຕາຍຍ້ອນໄຂ້ມາເລເລຍ | 0 | 0 | 0 | 0 | 0 |
| ອັດຕາການເຈັບຍ້ອນໄຂ້ເລືອດອອກ | <10 | <10 | <10 | <10 | <10 |
| ອັດຕາການຕາຍຍ້ອນໄຂ້ເລືອດອອກ | <1 | <1 | <1 | <1 | <1 |
| ອັດຕາການຕິດເຊື້ອເອັສໄອວີ | <1 | <1 | <1 | <1 | <1 |
| ຈຳນວນຜູ້ຕິດເຊື້ອ ເອັສໄອວີ ໃໝ່ | 10 | 11 | 12 | 13 | 14 |
| ທັງໝົດ | 20 | 22 | 25 | 28 | 32 |
| ຊາຍ | 13 | 14 | 16 | 18 | 20 |
| ຍິງ | 7 | 8 | 9 | 10 | 12 |
| ອັດຕາປະຊາກອນທີ່ທີ່ບົ່ງມະຕິວ່າຕິດເຊື້ອ ເອັສໄອວີ ໄດ້ຮັບຢາ ART (%) | 90 | 90 | 90 | 90 | 90 |
| ອັດຕາການຕິດເຊື້ອ ເອັສໄອວີ ໃນກຸ່ມສ່ຽງ ອາຍຸ 15-24 ປີ | 0.5 | 0.5 | 0.5 | 0.5 | 0.5 |
| ອັດຕາການຕິດເຊື້ອ ເອັສໄອວີ ໃນກຸ່ມສາວບໍລິການ ອາຍຸ 15-49 ປີ | 25 | 25 | 25 | 25 | 25 |
| ການເຈັບເປັນຍ້ອນພະຍາດວັນນະໂຣກ | 140 | 134 | 128 | 122 | 117 |
| ພະຍາດວັນນະໂຣກທີ່ຖືກກວດພົບ DOTS | 62 | 64 | 66 | 68 | 70 |
| ພະຍາດວັນນະໂຣກທີ່ຖືກປິ່ນປົວ DOTS | ≥85 | ≥85 | ≥85 | ≥85 | ≥85 |
| ການປິ່ນປົວວັນນະໂຣກດ້ວຍ DOTS ສຳເລັດ | ≥90 | ≥90 | ≥90 | ≥90 | ≥90 |
| ອັດຕາວັນນະໂຣກດື້ຢາ | ≤2 | ≤3 | ≤3 | ≤3 | ≤3 |
| ອັດຕາການຕິດເຊື້ອວັນນະໂຣກກໍລະນີໃໝ່/ປະຊາກອນ 100.000 ຄົນ | 275 | 273 | 268 | 263 | 260 |

**3) ແຜນງານ ບໍລິການສຸຂະພາບ.**

- ປັບປຸງ ແລະ ຂະຫຍາຍຕາໜ່າງບໍລິການໃຫ້ທົ່ວເຖິງ ແລະ ຮັບປະກັນໃຫ້ມີຄຸນນະພາບ ຕາມມາດຕະຖານໃນແຕ່ລະຂັ້ນ ໂດຍແນໃສ່ເປົ້າໝາຍແມ່ຍິງ ແລະ ເດັກນ້ອຍ ກໍຄືປະຊາຊົນທີ່ຢູ່ເຂດຫ່າງໄກສອກຫຼີກ.

- ຍົກລະດັບໂຮງໝໍແຂວງ ໃຫ້ທັນສະໄໝ ໃນການນຳໃຊ້ເຕັກໂນໂລຊີ ເຂົ້າໃນການບໍລິການວິຊາການ, ສ້າງເງື່ອນໄຂຫັນກຸມຕົນເອງເທື່ອລະກ້າວ, ບໍລິຫານໂຮງໝໍໃຫ້ໂປ່ງໃສສາມາດກວດສອບໄດ້.

- ຍົກລະດັບໂຮງໝໍແຂວງໃຫ້ໄດ້ຕາມມາດຕະຖານ ເພື່ອສາມາດຊີ້ນຳ ດ້ານວິຊາການໃຫ້ບັນດາໂຮງໝໍຊຸມຊົນ ໃນການຜ່າຕັດສຸກເສີນຊ່ວຍເກີດຢ່າງຮັບປະກັນ, ເຮັດໃຫ້ໂຮງໝໍນ້ອຍຮັບປະກັນໃຫ້ບໍລິການຊ່ວຍເກີດກໍລະນີແມ່ສ່ຽງໄພຕ້ອງຮູ້ສົ່ງຕໍ່ໃຫ້ວ່ອງໄວ.

- ປະເມີນຕີລາຄາການບໍລິການໃນແຕ່ລະຂັ້ນ ໂດຍຖືເອົາເປັນມາດຕະຖານຂອງວຽກງານ 3 ສ້າງ ຂອງຂະແໜງການ.

- ສ້າງແຜນຈັດຕັ້ງປະຕິບັດການ ກັນ ແລະ ຄວບຄຸມພະຍາດບໍ່ຕິດຕໍ່ ແບບມີສ່ວນຮ່ວມ ທັງໃນ ແລະ ນອກຂະແໜງການ ພ້ອມທັງເພີ່ມທະວີວຽກຄຸ້ມຄອງການບໍລິການຂອງເອກະຊົນໃຫ້ຮັດກຸມ.

**4) ແຜນງານປົກປ້ອງຜູ້ບໍລິໂພກອາຫານ, ຢາ ແລະ ຜະລິດຕະພັນການແພດ.**

- ປັບປຸງລະບົບຕິດຕາມ ແລະ ເຝົ້າລະວັງຄວາມປອດໄພ ຂອງອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ຈຳໜ່າຍ ແລະ ຈໍລະຈອນແຈກຢາຍໃນທົ່ວແຂວງ ພ້ອມທັງມີລະບົບແຈ້ງເຕືອນຮີບດ່ວນ ເພື່ອຮັບປະກັນຄຸນນະພາບ ແລະຄວາມປອດໄພ ໂດຍສະເພາະ ກວດກາການຜະລິດນໍ້າດື່ມໃຫ້ໄດ້ຮັບການກວດກາ ແລະ ຂຶ້ນທະບຽນເພີ່ມຂຶ້ນ.

- ເພີ່ມທະວີ ແລະ ສ້າງຄວາມສາມາດ ໃນການຄຸ້ມຄອງອາຫານ ແລະ ຢາ ດ້ວຍລະບຽບກົດໝາຍ ເພື່ອສ້າງໄດ້ຮັບຄວາມເຊື່ອຖື ແລະ ເຊື່ອໝັ້ນຂອງສັງຄົມ.

- ຈັດຕັ້ງປະຕິບັດ ການນຳໃຊ້ຢາ ສົມເຫດສົມຜົນ ຢູ່ໂຮງໝໍແຕ່ລະຂັ້ນ, ປັບປຸງຄະນະກຳມະການຢູ່ແຕ່ລະໂຮງໝໍ ເຮັດໜ້າທີ່ເປັນເຈົ້າການ ໃນການຕິດຕາມການໃຊ້ຢາຢ່າງສົມເຫດສົມຜົນ ໃນການໃຫ້ບໍລິການ ພ້ອມທັງຜົນສະທ້ອນ ຫຼື ຜົນຂ້າງຄຽງ, ສົ່ງເສີມການນຳໃຊ້ສົມທົບຢາພື້ນເມືອງ.

- ປັບປຸງລະບົບການສະໜອງຢາໃນແຕ່ລະຂັ້ນ ໃຫ້ສອດຄ່ອງຕາມກົດໝາຍເປັນເອກະພາບ ແລະ ໂປ່ງໃສ ໂດຍຂະຫຍາຍຮູບແບບການຈັດຊື້ຮ່ວມກັນ, ມີການປະມູນ ຫຼື ສົມທຽບລາຄາ ແລະ ຊື້ຢາທີ່ໄດ້ຂຶ້ນທະບຽນຕາມບັນຊີຢາຈຳເປັນພື້ນຖານ ເພື່ອຮັບປະກັນຄຸນນະພາບ ແລະ ລາຄາສົມເຫດສົມຜົນຮັບປະກັນການເຂົ້າເຖິງຢາທຸກທົ່ວໜ້າ.

- ຂະຫຍາຍລະບົບລາຍງານການມີຢາ ລະຫວ່າງ ຂັ້ນເມືອງ ແລະ ແຂວງ ໂດຍນຳໃຊ້ໂປຣແກຼມທັນສະໄໝ (MSupply) ເຊື່ອມຕໍ່ກັບລະບົບຖານຂໍ້ມູນ DHIS2 ເພື່ອຮັບປະກັນບໍ່ໃຫ້ຢາຂາດສາງ ພ້ອມທັງປັບປຸງລະບົບສາງຢາແຂວງ ແລະ ສາງຢາຂອງເມືອງ ກ້າວສູ່ເປັນລະບົບທີ່ໄດ້ມາດຕະຖານ.

| ແຜນງານປົກປ້ອງຜູ້ບໍລິໂພກອາຫານ, ຢາ ແລະ ຜະລິດຕະພັນການແພດ | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|
| ຮ້ານຂາຍຢາຂັ້ນ 1 | 51 | 52 | 56 | 58 | 59 |
| ຮ້ານຂາຍຢາຂັ້ນ 2 | 55 | 59 | 62 | 65 | 70 |
| ຮ້ານຂາຍຢາຂັ້ນ 3 | 23 | 20 | 15 | 13 | 0 |
| ຈຳນວນໂຮງງານຜະລິດຢາຫຼວງ | 0 | 0 | 0 | 0 | 1 |
| ຈຳນວນໂຮງງານຜະລິດຢາຫຼວງ | 0 | 0 | 0 | 0 | 1 |
| ຈຳນວນຕູ້ຢາປະຈຳບ້ານ | 85 | 83 | 80 | 78 | 75 |
| ຈຳນວນໂຮງງານນໍ້າດື່ມ | 58 | 60 | 62 | 64 | 65 |
| ຈຳນວນໂຮງງານຜະລິດອາຫານ | 5 | 6 | 6 | 7 | 8 |

**ຂ. ສ້າງ ແລະ ຍົກລະດັບສີມືແຮງງານໃນຫຼາຍສາຂາວິຊາຊີບທີສອດຄ່ອງກັນກັບຄວາມຕ້ອງການຕະຫຼາດ.**

- ປັບປຸງລະບົບການແກ້ໄຂຂໍ້ຂັດແຍ່ງແຮງງານ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານເພດຍິງ, ແຮງງານໄວໜຸ່ມ, ແຮງງານເດັກ, ຜູ້ພິການ ແລະ ຜູ້ດ້ອຍໂອກາດອື່ນໆ ໂດຍໃຫ້ເຄົາລົບຕໍ່ຄວາມສະເໝີພາບ ແລະ ບໍ່ຈຳແນກໃນສະຖານທີ່ເຮັດວຽກ ລວມທັງການຫຼຸດຜ່ອນການນຳໃຊ້ແຮງງານເດັກ;

- ປະສານສົມທົບລະຫວ່າງພາກສ່ວນທີ່ກ່ຽວຂ້ອງແຕ່ແຂວງລົງຮອດຂັ້ນເມືອງ ໃນການປົກປ້ອງ ແລະ ຄຸ້ມຄອງແຮງງານລາວທີ່ເຮັດວຽກຢູ່ຕ່າງປະເທດ ແລະ ແຮງງານຕ່າງປະເທດທີ່ເຮັດວຽກຢູ່ລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງມີປະສິດທິຜົນ.

- ຊຸກຍູ້ການດຸ່ນດ່ຽງໂຄງປະກອບກຳລັງແຮງງານໃຫ້ສອດຄ່ອງກັບຂະແໜງການເສດຖະກິດ ໂດຍຄາດວ່າແຮງງານໃນຂະແໜງກະສິກຳຈະຫຼຸດລົງ, ອຸດສາຫະກຳເພີ່ມຂຶ້ນ ແລະ ການບໍລິການກໍ່ມີການເພີ່ມຂຶ້ນ.

- ຊຸກຍູ້ຂະແໜງການເສດຖະກິດ ທັງພາກລັດ ແລະ ເອກະຊົນ ໃຫ້ມີການສ້າງວຽກເຮັດງານທຳໃຫ້ຫຼາຍຂຶ້ນ ໂດຍສະເພາະແມ່ນກຸ່ມວ່າງງານ, ກຸ່ມຜູ້ທີ່ເຮັດວຽກບໍ່ເຕັມເວລາ ແລະ ເຮັດວຽກໃຫ້ຕົນເອງ ເຂົ້າສູ່ຕະຫຼາດແຮງງານເພື່ອຫຼຸດຜ່ອນອັດຕາວ່າງງານ ໃຫ້ຢູ່ໃນລະດັບໜ້ອຍທີ່ສຸດ.

- ສືບຕໍ່ສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານໃຫ້ສຳເລັດໂດຍພື້ນຖານ, ສາມາດນຳໃຊ້ ແລະ ສະໜອງຂໍ້ມູນໃນການຄິດໄລ່ໂຄງປະກອບກຳລັງແຮງງານ, ການຝຶກສີມືແຮງງານ ແລະ ການຈັດຫາວຽກເຮັດງານທຳ.

- ພັດທະນາສີມືແຮງງານຈາກປະລິມານໄປສູ່ຄຸນນະພາບເພື່ອສະໜອງໃຫ້ແກ່ການພັດທະນາຕາໜ່າງໂຄງປະກອບເສດຖະກິດໃຫ້ໄດ້ 5.000 ຄົນ (ສະເລ່ຍປີລະ 1,000 ຄົນ), ໃນນີ້ ຂົງເຂດກະສິກຳ-ປ່າໄມ້ ແລະ ການປະມົງ 200 ຄົນ, ຂົງເຂດອຸດສາຫະກຳ-ກໍ່ສ້າງ 300 ຄົນ ແລະ ຂົງເຂດບໍລິການ-ການຄ້າ 500 ຄົນຕໍ່ປີ.

- ການຈັດຫາວຽກເຮັດງານທຳໃຫ້ແຮງງານລາວທັງພາຍໃນ ແລະ ຕ່າງປະເທດ ໂດຍຜ່ານຈຸດບໍລິການຈັດຫາງານຂອງພະແນກ ແລະ ບໍລິສັດຈັດຫາງານຂອງລັດ ແລະ ເອກະຊົນ ໃຫ້ໄດ້ 6.000 ຄົນ (ສະເລ່ຍປີລະ 1.200 ຄົນ) ຂຶ້ນທະບຽນຜູ້ຕ້ອງການມີວຽກເຮັດງານທຳ ໃຫ້ໄດ້ 7.000 ຄົນ ( 1.400 ຄົນຕໍ່ປີ ).

- ໂຄສະນາ, ເຜີຍແຜ່, ຕິດຕາມ ແລະ ກວດກາການປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບແຮງງານຢູ່ຫົວໜ່ວຍແຮງງານຕ່າງໆໃນພາຍໃນແຂວງໃຫ້ໄດ້ 50 ຫົວໜ່ວຍ ແລະ ໄກ່ເກ່ຍຂໍ້ຂັດແຍ່ງແຮງງານໃຫ້ໄດ້ 70% ຂອງຂໍ້ຂັດແຍ່ງທັງໝົດທີ່ໄດ້ຮັບໃນແຕ່ລະປີ;

- ຫົວໜ່ວຍແຮງງານ ທີ່ມີຜູ້ອອກແຮງງານແຕ່ 5 ຄົນຂຶ້ນໄປ ໃຫ້ໄດ້ຂຶ້ນທະບຽນ 50 ແຫ່ງ ແລະ ໃຫ້ມີຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ, ຊຸກຍູ້ໃຫ້ຫົວໜ່ວຍແຮງງານໄດ້ມາດຕະຖານແຮງງານ 10 ແຫ່ງ, ຫົວໜ່ວຍແຮງງານທີ່ມີຜູ້ອອກແຮງງານແຕ່ 5 ຄົນຂຶ້ນໄປໃຫ້ມີສັນຍາແຮງງານ 10 ແຫ່ງ, ຊຸກຍູ້ຫົວໜ່ວຍແຮງງານທີ່ມີກົດລະບຽບນຳໃຊ້ແຮງງານພາຍໃນ 25 ແຫ່ງ ແລະ ຊຸກຍູ້ການລົບລ້າງການນຳໃຊ້ແຮງງານເດັກໃຫ້ຫຼຸດລົງ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານ ດັ່ງນີ້:**

1) ສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານໃຫ້ສຳເລັດໂດຍພື້ນຖານ, ພັດທະນາສີມືແຮງງານຈາກປະລິມານໄປສູ່ຄຸນນະພາບ ເພື່ອສະໜອງໃຫ້ແກ່ການພັດທະນາຕາມໂຄງປະກອບເສດຖະກິດ.

2) ຊຸກຍູ້ສົ່ງເສີມພາກເອກະຊົນເຂົ້າຮ່ວມການພັດທະນາການສຶກສາວິຊາຊີບໃຫ້ຫຼາຍຂຶ້ນ.

**ຄ. ສ້າງ ແລະ ປັບປຸງ ໂຮງຮຽນວິຊີບ Technical Vocational Educational and Training (TVET) ແລະ ສູນພັດທະນາສີມືແຮງງານ ລວມທັງຍົກລະດັບຄູໃຫ້ມີຄຸນນະພາບ ເພື່ອຜະລິດສີມືແຮງງານໃຫ້ມີປະສິດທິພາບສູງຂຶ້ນ.**

- ເຮັດໃຫ້ຊັບພະຍາກອນມະນຸດມີຄຸນນະພາບ ແລະ ສີມືແຮງງານ ສາມາດແຂ່ງຂັນໄດ້ກັບບັນດາປະເທດໃນພາກພື້ນ ແລະ ສາກົນເທື່ອລະກ້າວ; ການພັດທະນາອາຊີວະສຶກສາ ຕ້ອງເປັນວຽກງານໃຈກາງໃນການພັດທະນາຊັບພະຍາກອນມະນຸດ ໃຫ້ໄດ້ຮັບການຂະຫຍາຍຕົວຮອບດ້ານ, ມີຄຸນນະພາບດີຂຶ້ນ ແລະ ມີໂອກາດຮຽນຮູ້ຕະຫຼອດໄປ ເພື່ອພັດທະນາເສດຖະກິດ-ສັງຄົມໃຫ້ຍືນຍົງ **ເປັນຕົ້ນ:** ສາຂາໄຟຟ້າຄົວເຮືອນ, ສ້ອມແປງອີເລັກໂຕຣນິກ, ຊ່າງໄມ້, ແກະສະລັກ (ໄມ້, ໂລຫະ, ດິນຜີວ), ຕັດຫຍິບ, ປຸງແຕ່ງອາຫານ, ເຮັດຫົວອາຫານ, ເຮັດປຸຍ, ປູກຝັງ, ລ້ຽງສັດ.

- ສ້າງສີມືແຮງງານໃຫ້ມີຄວາມຊຳນານງານ ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງຜູ້ປະກອບອາຊີບໃນແຕ່ລະໄລຍະທັງດ້ານປະລິມານ ແລະ ຄຸນນະພາບ, ພັດທະນາຊັບພະຍາກອນມະນຸດຕ້ອງຍຶດໝັ້ນທັດສະນະຄະຕິດ້ານວິທະຍາສາດເຕັກນິກ, ເຕັກໂນໂລຊີ, ຂໍ້ມູນຂ່າວສານ, ການສື່ສານໃຫ້ຮັບປະກັນທາງດ້ານຄຸນນະພາບ.

- ສ້າງວິຊາການໃຫ້ມີຄວາມຮູ້ຄວາມສາມາດຮອບດ້ານປະຕິບັດສອງໜ້າທີ່ຍຸດທະສາດ **ຄື:** ປົກປັກຮັກສາ ແລະ ສ້າງສາພັດທະນາ, ປະຊາຊົນລາວບັນດາເຜົ່າຂອງແຂວງຫຼຸດພົ້ນຈາກຄວາມທຸກຍາກ, ປະເທດຊາດເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ເພື່ອກຽມພ້ອມປະຕິບັດຕາມເປົ້າໝາຍ 4 ບຸກທະລຸຂອງອາຊຽນ (ວິໄສທັດດຽວ, ເອກະລັກດຽວ, ປະຊາຄົມດຽວ ແລະ ອີງການຄ້າໂລກ).

- ຂະຫຍາຍການສຶກສາວິຊາຊີບ ແລະ ເຂົ້າເຖິງການຝຶກອົບຮົມໃຫ້ໄດ້ເຖິງ 5% ຂອງຈຳນວນນັກຮຽນຜູ້ທີ່ຮຽນຈົບສາມັນສຶກສາ, ໃຫ້ລົງທະບຽນເຂົ້າຮຽນສາຍວິຊາຊີບ 0,5%, ເປີດຮັບນັກຮຽນມັດທະຍົມຕອນຕົ້ນທີ່ຕົກຫຼົ່ນ ເພື່ອເຂົ້າຮຽນຫຼັກສູດວິຊາຊີບລະດັບ 1, ລະດັບ 2 ແລະ ລະດັບ 3 ໃຫ້ໄດ້ 1% ຂອງປະຊາກອນພາຍໃນແຂວງ.

- ພັດທະນາໂຮງຮຽນເຕັກນິກ-ວິຊາຊີບ ແລະ ອົບຮົມວິຊາຊີບ ຕ້ອງອີງໃສ່ສະພາບຄວາມເປັນຈິງຂອງທ້ອງຖິ່ນ, ຂອງຂະແໜງການກໍ່ຄືປະເທດ ແລະ ຜົນຮັບທີ່ຕ້ອງການຂອງຂະແໜງການສຶກສາ 2021-2025 ປະກອບດ້ວຍ: 5 ຍຸດທະສາດ ແຕ່ລະກິດຈະກຳແມ່ນມີຕົວຊີ້ບອກຂອງມັນເອງ, ຄາດຄະເນງົບປະມານ, ອົງການຈັດຕັ້ງທີ່ຮັບຜິດຊອບ ພ້ອມທັງໄລຍະເວລາຈັດຕັ້ງປະຕິບັດໃນແຜນ 5 ປີ **ຄື:**

1) ກໍ່ສ້າງ, ປັບປຸງ ແລະ ຂະຫຍາຍຄວາມອາດສາມາດຂອງໂຮງຮຽນເຕັກນິກ-ວິຊາຊີບແຂວງບໍລິຄຳໄຊ.

2) ປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງຂອງວິຊາຮຽນ ກັບວຽກຕົວຈິງຂອງສັງຄົມ.

3) ພັດທະນາບຸກຄະລາກອນຄູອາຈານພາຍໃນໂຮງຮຽນໃຫ້ເກັ່ງ.

4) ສົ່ງເສີມການຮ່ວມມືພາກລັດ, ເອກະຊົນ ແລະ ສາກົນ.

5) ສ້າງຄວາມເຂັ້ມແຂງໃຫ້ການບໍລິຫານ-ຄຸ້ມຄອງໂຮງຮຽນອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ການພັດທະນາອາຊີວະສຶກສາ ຕ້ອງເປັນວຽກງານໃຈກາງໃນການພັດທະນາຊັບພະຍາກອນມະນຸດ ໃຫ້ໄດ້ຮັບການຂະຫຍາຍຕົວຮອບດ້ານ, ມີຄຸນນະພາບດີຂຶ້ນ ແລະ ມີໂອກາດຮຽນຮູ້ເພື່ອພັດທະນາ ເສດຖະກິດ-ສັງຄົມ ໃຫ້ຍືນຍົງ.

2) ສ້າງສີມືແຮງງານໃຫ້ມີຄວາມຊຳນານງານ ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງຜູ້ປະກອບອາຊີບໃນແຕ່ລະໄລຍະທັງດ້ານປະລິມານ ແລະຄຸນນະພາບ.

3) ການພັດທະນາຊັບພະຍາກອນມະນຸດຕ້ອງເນັ້ນໃສ່ດ້ານວິທະຍາສາດເຕັກນິກ, ເຕັກໂນໂລຊີ, ຂໍ້ມູນຂ່າວສານ, ການສື່ສານ ໃຫ້ຮັບປະກັນທາງດ້ານຄຸນນະພາບ.

4) ສ້າງວິຊາການໃຫ້ມີຄວາມຮູ້ຄວາມສາມາດຮອບດ້ານ.

### 4.2.2. ວຽກຈຸດສຸມທີ 2: ການສົ່ງເສີມ ແລະ ນຳໃຊ້ການຄົ້ນຄ້ວາ-ຜົນການຄົ້ນຄ້ວາວິທະຍາສາດ, ເຕັກນິກວິຊາການ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເຂົ້າໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ.

- ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນເປັນເຄືອຂ່າຍໃນການແລກປ່ຽນພູມປັນຍາ, ເສີມສ້າງກຸ່ມ ແລະ ອົງກອນຊຸມຊົນທີ່ມີຂີດຄວາມສາມາດໃນການແຂ່ງຂັນ ມີຂະບວນການຮຽນຮູ້ ແລະ ເຮັດແຜນຊຸມຊົນ ເພື່ອໃຫ້ເປັນຖານໃນການຜະລິດຍືນຍົງ ໂດຍສະເພາະຂົງເຂດ ກະສິກຳ-ປ່າໄມ້, ຂົງເຂດອຸດສາຫະກຳ ແລະ ການຄ້າ, ຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ ສາມາດເປັນທີ່ປຶກສາທີ່ເຂັ້ມແຂງທາງດ້ານພັດທະນາເສດຖະກິດ-ສັງຄົມ.

- ເລັ່ງໃສ່ພັດທະນາຄຸນນະພາບ ແລະ ປະສິດທິພາບຂອງການຜະລິດ (ກະສິກຳ, ຫັດຖະກຳ ແລະ ອຸດສາຫະກຳເບົາ) ດ້ວຍການນຳໃຊ້ນະວັດຕະກຳທີ່ຫຼາກຫຼາຍທາງຊີວະພາບ ມາໃຊ້ສະໜັບສະໜູນງານວິໄຈ ແລະ ພັດທະນາ ຄວາມສາມາດປະຍຸກໃຊ້ກັບເທັກໂນໂລຊີທີ່ທັນສະໄໝ **ເຊັ່ນ:** ການຜະລິດທົ່ວອາຫານສັດເພື່ອຫຼຸດຜ່ອນຕົ້ນທຶນ, ການເພາະພັນສັດເພື່ອຫຼຸດຜ່ອນການນຳເຂົ້າ **ເປັນຕົ້ນ:** ທົ່ວອາຫານປານິນ, ປາດຸກ, ໝູ, ໄກ່; ລູກປາ, ລູກກົບ, ລູກໄກ່; ການປັບປຸງດິນ, ການຜະລິດແນວພັນ.

- ພາກລັດຊ່ວຍເສີມສ້າງ ແລະ ຊ່ວຍສະໜັບສະໜູນຊຸມຊົນໃຫ້ມີການຈ້າງງານ, ສ້າງອາຊີບໃຫ້ຄົນໃນທ້ອງຖິ່ນ ແລະ ເປີດປະຕູໄປສູ່ການເປັນແຫຼ່ງຜະລິດສະບຽງອາຫານທີ່ປອດໄພຂອງສັງຄົມ. ໂດຍສະເພາະ ພືດຜັກກະສິກຳ ອໍແກນິກທີ່ຕອບສະໜອງໄດ້ທາງດ້ານປະລິມານ ແລະ ຄຸນນະພາບ **ເຊັ່ນ:** ຜັກອໍແກນິກຢູ່ສູນທ່າກົກຄູນເມືອງປາກຊັນ; ການລ້ຽງໝູພັນຊີ້ນໃນຫ້ອງປອດເຊື້ອ ຢູ່ບ້ານາສົ້ມມໍ ເມືອງປາກຊັນ; ແລະ ການປູກ ການລ້ຽງ ຢູ່ແຕ່ລະເມືອງ ທີ່ສາມາດຕອບໂຈດ ທາງດ້ານການຕະຫຼາດໄດ້ດີ.

- ຟື້ນຟູຊັບພະຍາກອນທຳມະຊາດ **ເປັນຕົ້ນ:** ດິນ, ແຫຼ່ງນ້ຳ, ປ່າໄມ້, ໃຫ້ມີຄວາມອຸດົມສົມບູນ ແລະ ຮັກສາໄດ້ຄວາມຫຼາກຫຼາຍທາງຊີວະພາບ ເພື່ອຮັກສາຄວາມສົມດູນຂອງລະບົບນິເວດ ພ້ອມທັງເປີດໂອກາດໃຫ້ປະຊາຊົນ ມີສ່ວນຮ່ວມໃນການຟື້ນຟູ ຊຶ່ງເປັນປັດໄຈພື້ນຖານໃນການຜະລິດທີ່ສຳຄັນ ແລະ ເປັນການເສີມສ້າງຈິດສຳນຶກໃນການດຳລົງຮັກສາໄວ້ຊັບພະຍາກອນທຳມະຊາດ, ວັດທະນາທຳ ແລະ ພູມປັນຍາທ້ອງຖິ່ນ ອັນເປັນຮາກຖານຂອງສັງຄົມກະສິກຳ **ເປັນຕົ້ນ:** ການທ່ອງທ່ຽວຕິດພັນກັບຄົ້ນຄ້ວາຂອງນັກສຶກສາ, ການທ່ອງທ່ຽວຕິດພັນກັບການກະເສດ, ການຜະລິດຕິດພັນກັບການຮ່ວມມື ແລະ ອື່ນໆ **ເຊັ່ນ:** ສວນໄມ້ເປັນຢາ ຢູ່ບ້ານສົມສະຫວາດ ເມືອງປາກ

ຊຸ້ນ, ປ່າກ້ວຍໄມ້ ຢູ່ຕາດຊາຍ, ວັງສະຫງວນ ຢູ່ກຸດຟ້າແມບ ເມືອງທ່າພະບາດ ແລະ ແຕ່ລະເມືອງຕ້ອງມີເຂດສະຫງວນ ໂດຍມອບໃຫ້ບ້ານມີສ່ວນຮ່ວມໃນການຄຸ້ມຄອງນຳໃຊ້.

- ລັດຕ້ອງເຮັດການສຶກສາ, ພິຈາລະນານະໂຍບາຍ ແລະ ເພີ່ມຂີດຄວາມສາມາດໃນການບໍລິຫານຈັດການ ການວາງແຜນ ເປັນຕົ້ນການຜະລິດ, ການແປຮູບ, ການຕະຫຼາດ, ການຈັດການທາງການເງິນ ແລະ ບັນຫາຕ່າງໆ ໃຫ້ສາມາດ ດຳເນີນການຢ່າງເຂັ້ມແຂງ.

- ເຜີຍແຜ່ ແລະ ປະຊາສຳພັນຜ່ານຂະບວນການສື່ສານຕ່າງໆ ເພື່ອໃຫ້ທຸກພາກສ່ວນມີຄວາມເຂົ້າໃຈ ແລະ ເບິ່ງເຫັນຄວາມສຳຄັນໃນການຜະລິດແບບຍືນຍົງ.

- ສົ່ງເສີມຂີດຄວາມສາມາດການເຂົ້າເຖິງແຫຼ່ງທຶນຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ, ກາງ **(Micro, Small & Medium Enterprise),** ຜ່ານສື່ສັງຄົມອອນລາຍຢ່າງມີປະສິດທິຜົນ ແລະ ຖືກລູກຄ້າກຸ່ມເປົ້າໝາຍ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ການເສຍພາສີທີ່ດິນຜ່ານລະບົບທະນາຄານ.
2) ການເກັບ-ຊຳລະພາສີອາກອນຫັນໄປສູ່ລະບົບທັນສະໄໝ.
3) ການເສຍຄ່າທຳນຽມທາງດ້ວຍມືຖື.
4) ຊຸດຄຳສັ່ງ **(Application)** ເທິງມືຖື ທີ່ຊ່ວຍໃນການໂອນເງິນຊື້-ຂາຍ ເຄື່ອງ.
5) ການສຳລະເງິນຄ່າສິນຄ້າ ແລະ ບໍລິການຜ່ານການສະແກນ **QR code.**
6) ພາກລັດຕ້ອງໄດ້ຄຸ້ມຄອງການນຳໃຊ້ແຫຼ່ງທຶນ ໃຫ້ບັນລຸເປົ້າໝາຍທີ່ກຳນົດໄວ້.
7) ສັງລວມແລ້ວໃນເປົ້າໝາຍນີ້ ແມ່ນເລັ່ງໃສ່ຊັບພະຍາກອນມະນຸດໃຫ້ມີຄວາມຮູ້ຄວາມສາມາດ, ຊຸກຍູ້ສົ່ງເສີມໃຫ້ຜູ້ປະກອບການລະດັບຕ່າງໆ ໃຫ້ເຂົ້າເຖິງແຫຼ່ງທຶນ SME ເພື່ອບັນລຸຄວາມທຸກຍາກລົງເທື່ອລະກ້າວ.

### 4.3. ເປົ້າໝາຍທີ 3: ຊີວິດການເປັນຢູ່ດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະ ດັບໃຫ້ດີຂຶ້ນເທື່ອລະກ້າວ.

#### 4.3.1 ວຽກຈຸດສຸມ 1: ປັບປຸງ ແລະ ສະໜອງການບໍລິການໃຫ້ປະຊາຊົນຢ່າງທົ່ວເຖິງ, ພັດທະນາພື້ນຖາໂຄງລ່າງ ທີ່ຈຳເປັນ ແລະ ອຳນວຍຄວາມສະດວກດ້ານສາລະນຸປະໂພກຕ່າງໆ.

+ ພັດທະນາພື້ນຖານໂຄງລ່າງທີ່ຈຳເປັນ ແລະ ສິ່ງອຳນວຍຄວາມສະດວກດ້ານສາທາລະນຸປະໂພກໃຫ້ຄົບຊຸດ ເຊັ່ນ: ລະບົບໄຟຟ້າ, ນໍ້າປະປາ, ການສື່ສານ, ເສັ້ນທາງ, ປັບປຸງກໍ່ສ້າງໂຮງຮຽນ, ໂຮງໝໍ, ຕະຫຼາດ ຢູ່ບັນດາເມືອງ ແລະ ເຂດຈຸດສຸມພັດທະນາ.

+ ດ້ານກະສິກຳ: ກໍ່ສ້າງພະນັກງານກະສິກຳ ໃຫ້ມີຄວາມສຳນິສຳນານດ້ານການປູກ-ການລ້ຽງ ພ້ອມທັງຈັດຕັ້ງການຝຶກອົບຮົມເຕັກນິກດ້ານວິຊາການດ້ານກະສິກຳ ໃຫ້ແກ່ພະນັກງານຂອງແຂວງ, ເມືອງ, ບ້ານ ແລະ ຊາວກະສິກອນ ໃຫ້ກາຍເປັນຜູ້ທີ່ມີຄວາມຮູ້-ຄວາມສາມາດ ກາຍເປັນຊາວກະສິກອນອາຊີບ ມີສີມືແຮງງານ, ມີວຽກເຮັດງານທຳ, ມີຄຸນສົມບັດ-ສິນລະທຳຕໍ່ອາຊີບນີ້ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການພັດທະນາເສດຖະກິດ-ສັງຄົມ ເຮັດໃຫ້ແຂວງຫັນເປັນສູ່ອຸດສາຫະກຳ ແລະ ທັນສະໄໝ.

+ ດ້ານອຸດສາຫະກຳ: ເລັ່ງໃສ່ໂຮງງານອຸດສາຫະກຳປຸງແຕ່ງ, ອຸດສາຫະກຳຕໍ່ຍອດ, ອຸດສາຫະກຳ ທີ່ມີທ່າແຮງທາງດ້ານວັດຖຸດິບ, ອຸດສາຫະກຳທີ່ມີຄວາມຈຳເປັນໃນການພັດທະນາ ແລະ ຫັດຖະກຳສີມືປະດິດ; ຊຸກຍູ້ໃຫ້ມີອຸດສາຫະກຳທີ່ເປັນຜະລິດຕະພັນພາຍໃນ ເພື່ອຫຼຸດຜ່ອນການນຳເຂົ້າໂດຍສະເພາະ: ເຄື່ອງບໍລິໂພກ, ເຄື່ອງໃຊ້ຄົວເຮືອນ ແລະ ເຄື່ອງນຸ່ງຫົ່ມ.

+ ດ້ານບໍລິການ: ເລັ່ງໃສ່ການບໍລິການທີ່ດີ, ມີຄຸນນະພາບ, ຮັບປະກັນຄວາມເພິ່ງພໍໃຈຂອງສັງຄົມ; ຊຸກຍູ້ໃຫ້ເປັນການບໍລິການ ທີ່ນຳໃຊ້ເຕັກໂນໂລຊີ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ຂະຫຍາຍພື້ນຖານໂຄງລ່າງຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ ຕິດພັນກັບການສົ່ງເສີມການຜະລິດເປັນສິນຄ້າ ສ້າງລາຍໄດ້ຂອງຄອບຄົວ ແລະ ກຸ່ມການຜະລິດ ໃຫ້ທົ່ວເຖິງ.

2) ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ໂດຍພື້ນຖານ.

3) ສ້າງແຜນຮັບມືກັບການປ່ຽນແປງດິນຟ້າອາກາດ ຊຶ່ງເປັນບັນຫາຫຼັກທີ່ທ່ວງດຶງການພັດທະນາ; ຍົກສູງສະມັດຕະພາບການຜະລິດ ແລະ ເພີ່ມລາຍຮັບຈາກການພັດທະນາ.

4) ຮັບປະກັນບັນດາປັດໄຈສຳຄັນດ້ານພື້ນຖານ ກ່ຽວກັບການກຳນົດຄວາມປອດໄພທາງສັງຄົມ.

5) ພັດທະນາຕົວເມືອງ ໃຫ້ມີຄວາມຍືນຍົງ ເພື່ອລົບລ້າງຄວາມທຸກຍາກ ແລະ ມີສ່ວນຮ່ວມຈາກສັງຄົມ.

### 4.3.2 ວຽກຈຸດສຸມທີ 2: ສືບຕໍ່ແກ້ໄຂຄວາມທຸກຍາກຂອງປະຊາຊົນ ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກດ້ວຍມາດຕະການສົ່ງເສີມການພະລິດກະສິກຳ ແລະ ອື່ນໆ.

ແຜນພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ແມ່ນເລັ່ງໃສ່ໃຫ້ປະຊາຊົນບັນດາເຜົ່າມີທີ່ຕັ້ງພູມລຳເນົາ, ມີອາຊີບ ແລະ ມີແຫຼ່ງລາຍຮັບຄົງທີ່, ສາມາດເຂົ້າເຖິງການບໍລິການທາງດ້ານສາທາລະນະປະໂຫຍດ ແລະ ມີຄຸນນະພາບຊີວິດທີ່ດີ, ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ປະກອບສ່ວນອັນສຳຄັນເຂົ້າໃນການສ້າງທ່າແຮງ ເພື່ອເຊື່ອມໂຍງກັບເສດຖະກິດສາກົນ ຈາກການຜະລິດກະສິກຳ ຕິດພັນກັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ຄວາມທຸກຍາກຕ້ອງໄດ້ຮັບການແກ້ໄຂ ຕາມຄຳສັ່ງເລກທີ 010/ນຍ, ລົງວັນທີ 25 ມິຖຸນາ 2001 ແລະ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ໃນການແກ້ໄຂຄວາມທຸກຍາກ ໃຫ້ບັນລຸຕາມຄາດໝາຍຕົວຊີ້ວັດ ທີ່ລັດຖະບານໄດ້ກຳນົດ ຢູ່ໃນດຳລັດເລກທີ 348/ລບ **ໂດຍຈະເລັ່ງໃສ່:**

- ຕ້ອງສືບຕໍ່ຍຸດທະສາດຫັນລົງກໍ່ສ້າງຮາກຖານການເມືອງ ຕິດພັນກັບການພັດທະນາຊົນນະບົດຮອບດ້ານ ແລະ ແກ້ໄຂຄວາມທຸກຍາກຢ່າງແຂງແຮງ, ມີປະສິດທິຜົນກວ່າເກົ່າ ໂດຍສຸມໃສ່ສ້າງບ້ານພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍຢູ່ເຂດຫ່າງໄກໃຫ້ທົ່ວເຖິງ ຢ່າງສະເໝີຕົ້ນສະເໝີປາຍ ແລະ ໜັກແໜ້ນ, ສ້າງໃຫ້ປະຊາຊົນຮັ່ງມີຜາສຸກ.
- ຊຸກຍູ້ສົ່ງເສີມໃຫ້ວິສາຫະກິດ, ຜູ້ປະກອບການຕ່າງໆ ມາລົງທຶນ ແລະ ສົ່ງເສີມປະຊາຊົນຜະລິດສິນຄ້າ ໂດຍມີການຜູກພັນສອງສົ້ນກັບກຸ່ມຜູ້ຜະລິດ, ເຂົ້າເຖິງຕະຫຼາດ ແລະ ຮັບປະກັນທາງດ້ານລາຄາ.
- ທະນາຄານນະໂຍບາຍ, ເປັນໃຈກາງສະໜອງສິນເຊື່ອຕາມເປົ້າໝາຍຢ່າງມີຈຸດສຸມ ເພື່ອສ້າງເງື່ອນໄຂໃຫ້ຜູ້ທຸກຍາກ ເຂົ້າເຖິງແຫຼ່ງທຶນດອກເບ້ຍຕໍ່າໃນການຜະລິດ, ນຳພາສ້າງຕັ້ງກຸ່ມຫ້ອນເງິນ ແລະ ກອງທຶນບ້ານ.
- ຄົ້ນຄວ້າອອກນະໂຍບາຍ ແລະ ມາດຕະການສົ່ງເສີມແບບເປັນພິເສດ ຕໍ່ຜູ້ປະກອບການທີ່ລົງທຶນເຮັດການປຸງແຕ່ງ, ການແປຮູບຜົນຜະລິດ ແລະ ບໍລິການເກັບຊື້, ໃນການຜູກພັນສອງສົ້ນກັບກຸ່ມຜະລິດ ໂດຍຜ່ານກົນໄກການຄຸ້ມຄອງຂອງລັດ, ເອົາໃຈໃສ່ຊຸກຍູ້ສົ່ງເສີມບັນດາຕົວແບບການຜະລິດເປັນສິນຄ້າໃຫ້ຂະຫຍາຍຕົວ ແລະ ຍືນຍົງ ຕິດພັນກັບການສ້າງໃຫ້ໄດ້ ໜຶ່ງເມືອງໜຶ່ງຜະລິດຕະພັນ ເພື່ອເປັນບ່ອນສາທິດຖ່າຍທອດເປັນບົດຮຽນ ແລະ ຂະຫຍາຍກວ້າງອອກໄປສູ່ບ່ອນອື່ນ.
- ສຸມທຶນຮອນໃສ່ການປັບປຸງ ແລະ ພັດທະນາໂຄງລ່າງພື້ນຖານດ້ານເສດຖະກິດ ແລະ ການຜະລິດທີ່ຈຳເປັນ ເພື່ອຕອບສະໜອງການຜະລິດ ແລະ ການດຳລົງຊີວິດຂອງຊາວຊົນນະບົດບ່ອນທີ່ຍັງມີຄວາມຫຍຸ້ງຍາກ **ເຊັ່ນ:** ເສັ້ນທາງ, ໄຟຟ້າ, ຊົນລະປະທານ.
- ເອົາໃຈໃສ່ກໍ່ສ້າງ ແລະ ຂະຫຍາຍຕະຫຼາດໄປສູ່ເຂດຊົນນະບົດ, ບັນດາຈຸດສຸມ ແລະ ບ້ານໃຫຍ່ທີ່ເປັນໃຈກາງ ເພື່ອເປັນບ່ອນຈໍລະຈອນຜົນຜະລິດຂອງປະຊາຊົນ ຢູ່ເຂດຊົນນະບົດເຊື່ອມຈອດກັບຕະຫຼາດໃນເມືອງໃຫຍ່.
- ແກ້ໄຂຄອບຄົວທຸກຍາກໃຫ້ເຫຼືອ 1,26%
- ແກ້ໄຂບ້ານທຸກຍາກໃຫ້ເຫຼືອ 5,98%
- ສູ້ຊົນສ້າງຄອບຄົວພັດທະນາໃຫ້ໄດ້ 3.823 ຄອບຄົວ ເທົ່າກັບ 92,99%.
- ສູ້ຊົນສ້າງບ້ານພັດທະນາໃຫ້ໄດ້ 31 ບ້ານ ເທົ່າກັບ 86,97% ຂອງຈຳນວນບ້ານທັງໝົດ.
- ສູ້ຊົນສ້າງຊົນນະບົດໃໝ່ ແລະ ບ້ານໃຫຍ່ກາຍເປັນສີສັນຕົວເມືອງນ້ອຍເຊັ່ນ: ເຂດທົ່ງແສນ, ໜອງກອກ, ຈອມທອງ, ບ້ານບໍ່.
- ສູ້ຊົນປະກາດເປັນເມືອງພົ້ນທຸກ ໃຫ້ໄດ້ 2 ເມືອງຄື : ວຽງທອງ ແລະ ໄຊຈຳພອນ.
- ສູ້ຊົນປະກາດເປັນເມືອງພັດທະນາ ໃຫ້ໄດ້ 2 ເມືອງຄື : ປາກຊັນ ແລະ ທ່າພະບາດ.
- ເສີມຂະຫຍາຍມູນເຊື້ອ ວັດທະນະທຳບັນດາເຜົ່າ ທີ່ເປັນວັດຖຸ ແລະ ບໍ່ເປັນວັດຖຸໃຫ້ຍືນຍົງ, ສ້າງບ້ານຕົວແທນຕິດພັນກັບການທ່ອງທ່ຽວໃຫ້ໄດ້ 7 ບ້ານ  ສ້າງບ້ານວັດທະນຳທຳໃຫ້ໄດ້ຕື່ມ 19 ບ້ານ, ຄອບຄົວວັດທະ

ນະທຳໃຫ້ໄດ້ຕື່ມ 6.643 ຄອບຄົວ, ປົກປັກຮັກສາເອກະລັກວັດທະນະທຳ, ສະຖານ-ວັດຖຸບູຮານ ແລະ ປັບປຸງຊີວິດ, ວັດທະນະທຳບັນດາເຜົ່າ ຄຽງຄູ່ການພັດທະນາເສດຖະກິດ ແລະ ຫັນໄປສູ່ວິຖີຊີວິດທີ່ກ້າວໜ້າ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ແກ້ໄຂຄວາມທຸກ ຂອງປະຊາຊົນໃຫ້ໄດ້ໂດຍພື້ນຖານ.

2) ພັດທະນາພື້ນຖານໂຄງລ່າງທີ່ຈຳເປັນ ແລະ ສິ່ງອຳນວຍຄວາມສະດວກດ້ານສາທາລະນຸປະໂພກໃຫ້ຄົບຊຸດ.

3) ປັບປຸງ ກະສິກຳ, ອຸດສາຫະກຳ ແລະ ການບໍລິການໃຫ້ສົມສ່ວນກັນ.

4) ສຸມໃສ່ການຈັດສັນອາຊີບຄົງທີ່ໃຫ້ປະຊາຊົນ ແລະ ກໍ່ສ້າງສິ່ງອຳນວຍຄວາມສະດວກໃນການຜະລິດ.

### 4.3.3 ວຽກຈຸດສຸມທີ 3: ພັດທະນາພື້ນຖານໂຄງລ່າງທາງດ້ານເສດຖະກິດຂອງຕົວເມືອງຕາມວິໄສທັດທີ່ກຳນົດໄວ້ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ, ຫຼຸດຜ່ອນຄວາມແຕກໂຕນລະຫວ່າງຕົວເມືອງ ແລະ ຊົນນະບົດ.

#### 4.3.3.1 ພັດທະນາພື້ນຖານໂຄງລ່າງທາງດ້ານເສດຖະກິດຂອງຕົວເມືອງຕາມວິໄສທັດທີ່ກຳນົດໄວ້ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ.

ເພື່ອຮັບປະກັນໃນການເຄື່ອນໄຫວດຳລົງຊີວິດ ແລະ ເປັນການຮັກສາຊັບສົມບັດຂອງຊາດ, ປະຊາຊົນບັນດາ ເຜົ່າໃຫ້ມີຄວາມປອດໄພ ດ້ວຍຜົນກະທົບອາດຈະເກີດຂຶ້ນຈາກສິ່ງແວດລ້ອມ ຫຼື ມະນຸດສ້າງຂຶ້ນມາ ແລະ ສ້າງໃຫ້ຕົວເມືອງມີຄວາມສວຍສົດງົດງາມ ເປັນລະບຽບຮຽບຮ້ອຍທຽບທັນກັນບັນດາແຂວງຂອງປະເທດທີ່ໄດ້ຮັບການພັດທະນາແລ້ວ ພວກເຮົາຈະຕ້ອງສຸມໃສ່ບັນດາໜ້າວຽກຕົ້ນຕໍ:

1. ມີການວາງແຜນ ຈັດສັນລະບົບຜັງເມືອງຄືນໃໝ່.

2. ບັນດາລະບຽບ ກົດໝາຍ ກົນໄກການຄຸ້ມຄອງສັງຄົມໃຫ້ສອດຄ່ອງ ແລະ ເຂັ້ມງວດ.

3. ພັດທະນາພື້ນຖານໂຄງລ່າງໃຫ້ຄົບສຸດ **ເຊັ່ນ:** ໄຟຟ້າ, ນ້ຳປະປາ, ລະບົບສື່ສານ, ຖະໜົນ, ໂຮງຮຽນ, ໂຮງໝໍ, ຮ້ານຄ້າ, ຕະຫຼາດ.

4. ສ້າງພື້ນຖານການຜະລິດ ທາງດ້ານກະສິກຳ, ອຸດສາຫະກຳ-ການກໍ່ສ້າງ-ຫັດຖະກຳ ແລະ ການບໍລິການໃຫ້ພຽງພໍກັບຄວາມຕ້ອງການສັງຄົມ.

5. ສ້າງໃຫ້ບ້ານ, ເມືອງ, ແຂວງສະອາດງາມຕາ, ເຮືອນຊານບ້ານຊ່ອງ, ຖະໜົນ, ສະຖານທີ່ຕ່າງໆ ສະອາດມີການປະດັບປະດາປູກຕົ້ນໄມ້, ປູກດອກໄມ້, ສ້າງສວນສາທາ, ສະຖານທີ່ທ່ອງທ່ຽວ ຫຼື ສະຖານທີ່ພັກຜ່ອນ.

6. ສ້າງລະບົບປ້ອງກັນໄພພິບັດທີ່ອາດຈະເກີດຂຶ້ນໃນທຸກກໍລະນີ.

7. ສ້າງຄົນໃຫ້ເປັນຄົນຍຸກໃໝ່ (ເຂົ້າໃຈນະໂຍບາຍພັກ-ລັດຖະບານ ນັບຖືລະບຽບ, ກົດໝາຍ, ມີຄຸນສົມບັດສົມທຳປະຕິວັດ, ມີມາລະຍາດດີ, ມີວິໄນ ໃສ່ໃຈສິ່ງແວດລ້ອມ ພ້ອມພັດທະນາຕົນເອງໃຫ້ກ້າວໜ້າ).

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານ ດັ່ງນີ້:**

1) ໃຫ້ການພັດທະນາມາຈາກການມີສ່ວນຮ່ວມຂອງສັງຄົມ **ຄື:** ການມີສ່ວນຮ່ວມການປົກປັກຮັກສາ ແລະ ສ້າງທາງ, ການເຮັດຄວາມສະອາດ, ການປະດັບປະດາ, ການກໍ່ສ້າງ.

2) ເປັນເຈົ້າການໃນການປົກຮັກສາສິ່ງແວດລ້ອມ **ເຊັ່ນ:** ຖິ້ມຂີ້ເຫຍື້ອ, ຖອກເທນ້ຳເປື້ອນ, ການຮັກສາມົນລະພິດທາງສຽງ, ການຈູດ, ການເຜົາ...

3) ເປັນເຈົ້າ ແລະ ມີສ່ວນຮ່ວມ ກ່ຽວກັບຄວາມເປັນເຈົ້າການຮັກສາຄວາມປອດໄພທາງສັງຄົມ.

#### 4.3.3.2 ຫຼຸດຜ່ອນຄວາມແຕກໂຕນລະຫ່ວາງຕົວເມືອງແລະ ຊົນນະບົດ.

ຕົວເມືອງແມ່ນບ່ອນທີ່ໄດ້ຮັບການພັດທະນາ ທີ່ມີລັກສະນະຮອບດ້ານຢ່າງເປັນລະບົບ ຕາມໂຄງສ້າງມາດຕະຖານຂອງຕົວເມືອງ, ຊົນນະບົດ ແມ່ນບ່ອນຫ່າງໄກສອກຫຼີກ ທີ່ໄດ້ຮັບການພັດທະນາບາງສ່ວນ, ການດຳລົງຊີວິດຂອງປະຊາຊົນຍັງອາໄສທຳມະຊາດເປັນພື້ນຖານ ເພື່ອເຮັດໃຫ້ປະຊາຊົນຢູ່ເຂດຊົນນະບົດມີລາຍໄດ້ທີ່ໝັ້ນຄົງ, ສາມາດເຂົ້າເຖິງພື້ນຖານໂຄງລ່າງດ້ານເສດຖະກິດ ແລະ ການບໍລິການຕ່າງໆ ໄດ້ຢ່າງສະດວກ ຕ້ອງສຸມໃສ່ບັນດາໜ້າວຽກຕົ້ນຕໍ **ດັ່ງນີ້:**

1) ກ່ອນອື່ນໝົດ ຕ້ອງຮັບຮູ້ ແລະ ຖືເອົາການພັດທະນາຊົນນະບົດ ເປັນສະໜາມຮົບຮົບອັນດັບໜຶ່ງ ໃນການພັດທະນາໄລຍະໃໝ່, ກຳນົດເປັນເຂດຈຸດສຸມເປົ້າໝາຍບູລິມະສິດ ໃນການພັດທະນາບ່ອນທີ່ທຸກຍາກ ແລະ

ບ່ອນຍັງບໍ່ທັນໄດ້ຮັບການພັດທະນາ, ສຸມໃສ່ການສ້າງບ້ານພັດທະນາໃຫ້ເປັນລະບົບ, ລັກສະນະເປັນສີສັນຕົວເມືອງນ້ອຍຢູ່ໃນຊົນນະບົດຕາມມາດຕະຖານດຳລັດເລກທີ 348/ລບ, ລົງວັນທີ 16 ພະຈິກ 2017.

**2)** ທຸກຂະແໜງການ ຕ້ອງມີຄວາມເປັນເອກະພາບ ສຸມກຳລັງແຮງ ແລະ ຄວາມສາມາດຮອບດ້ານ ລວມທັງພະນັກງານ, ທຶນຮອນ, ງົບປະມານ, ລົງສູ່ຮາກຖານຊົນນະບົດ ຕາມທິດສ້າງຊົນນະບົດໃໝ່ ດ້ວຍຄວາມຮັບຜິດຊອບ, ມີແຜນການ ແລະ ມີຈຸດສຸມ, ຖືເອົາປະຊາຊົນເປັນເປົ້າໝາຍບູລິມະສິດ ໃນການແກ້ໄຂຄວາມທຸກຍາກ, ເອົາຊົນນະບົດເປັນໃຈກາງໃນການພັດທະນາ ຕິດພັນກັບການສ້າງຊຸມຊົນຢ່າງຮອບດ້ານ, ສິ່ງສຳຄັນຕ້ອງໄດ້ນຳເອົາຄວາມກ້າວໜ້າ ທາງດ້ານເຕັກນິກວິທະຍາສາດ ແລະ ວິທະຍາການທີ່ທັນສະໄໝ ລົງສູ່ຊາວກະສິກອນຢູ່ເຂດຊົນນະບົດເພື່ອຫັນປ່ຽນການຜະລິດແບບດັ່ງເດີມຂອງຊາວກະສິກອນ ໂດຍຜ່ານສະຖານີສົ່ງເສີມການຜະລິດກະສິກຳເປັນສິນຄ້າ, ຊຸກຍູ້ສົ່ງເສີມ ແລະ ນະໂຍບາຍໃຫ້ຫົວໜ່ວຍທຸລະກິດ, ການຜະລິດ ໃຫ້ມີບົດບາດໃນການບໍລິການສອງສົ້ນ ແລະ ຮັບປະກັນດ້ານການຕະຫຼາດ ທັງຊຸກຍູ້ສົ່ງເສີມປະຊາຊົນ ໃຫ້ມີຄວາມຫ້າວຫັນໃນການທຳມາຫາກິນ, ການຜະລິດສິນຄ້າ ແລະ ເຮັດການບໍລິການ ສ້າງລາຍໄດ້ເຂົ້າຄອບຄົວທີ່ຍືນຍົງ.

3) ສຸມໃສ່ການຂະຫຍາຍ ແລະ ກໍ່ສ້າງພື້ນຖານໂຄງລ່າງຮັບໃຊ້ການຜະລິດ ແລະ ການດຳລົງຊີວິດໃຫ້ທົ່ວເຖິງ, ເປັນລະບົບຄົບຖ້ວນ ຕາມມາດຕະຖານຂອງການສ້າງບ້ານພັດທະນາ ໃຫ້ມີຄຸນນະພາບສູງຂຶ້ນເລື້ອຍໆ **ເປັນຕົ້ນ:** ແມ່ນບ້ານຈຸດສຸມໃຈກາງ, ບ້ານໃຫຍ່ ແລະ ບ້ານທີ່ທຸກຍາກ, ສ້າງສິ່ງເອື້ອອຳນວຍຄວາມສະດວກໃຫ້ແກ່ຊົນນະບົດ ສາມາດເຂົ້າເຖິງການບໍລິການດ້ານສາທາລະນຸປະໂຫຍດ ທີ່ຈຳເປັນໃຫ້ມີຄວາມສະດວກ **ຄື:**

- ກໍ່ສ້າງຜັງບ້ານ ແລະ ຍົກລະດັບທາງຊອຍພາຍໃນບ້ານ, ກໍ່ສ້າງເສັ້ນທາງໃຫ້ເຊື່ອມຈອດກັບຕົວເມືອງ ແລະ ບ້ານອ້ອມຂ້າງ ໃຫ້ສາມາດທຽວໄດ້ສະດວກຕະຫຼອດປີ, ກໍ່ສ້າງຕະຫຼາດ ແລະ ຂະຫຍາຍໄຟຟ້າໃຫ້ທົ່ວເຖິງ.
- ກໍ່ສ້າງສະຖານີເຕັກນິກກະສິກຳ ທີ່ມີການບໍລິການຝຶກອົບຮົມເຕັກນິກການຜະລິດ ແລະ ສະໜອງແນວພັນພືດ, ແນວພັນສັດລ້ຽງ ມີປະສິດທິຜົນ, ປັບປຸງກໍ່ສ້າງຊົນລະປະທານ, ຄອງເໝືອງໃຫ້ຮັບປະກັນສະໜອງ ນ້ຳເຂົ້າໃສ່ການຜະລິດ ແລະ ມີການຈັດສັນ ແລະ ຄຸ້ມຄອງປ່າໄມ້ ໃນ 3 ປະເພດປ່າຢ່າງເປັນລະບົບ.
- ປັບປຸງລະບົບບໍລິການໂຮງໝໍນ້ອຍ, ກໍ່ສ້າງລະບົບນ້ຳປະປາ ຢູ່ບ້ານໃຈກາງ ແລະ ກໍ່ສ້າງລະບົບນ້ຳລິນໃຫ້ມີຄວາມປອດໄພ.
- ກໍ່ສ້າງໂຮງຮຽນອະນຸບານ, ໂຮງຮຽນປະຖົມ, ໂຮງຮຽນມັດທະຍົມຕອນຕົ້ນ, ຕອນປາຍ ແລະ ໂຮງຮຽນມັດທະຍົມສົມບູນ.
- ກໍ່ສ້າງຫ້ອງການບ້ານ, ສະໂມສອນ, ຫ້ອງສະມຸດ, ຫໍຂ່າວ, ສະໜາມກິລາ ແລະ ສະຖານທີ່ສາທາລະນະປະໂຫຍດອື່ນໆ ທີ່ຈຳເປັນ.

4) ຊຸກຍູ້ສົ່ງເສີມທະນາຄານ ເຂົ້າໄປມີບົດບາດເຮັດໜ້າທີ່ບໍລິການປ່ອຍສິນເຊື່ອດອກເບ້ຍຕ່ຳໃຫ້ແກ່ຊາວກະສິກອນ ຢູ່ເຂດຊົນນະບົດ ສາມາດເຂົ້າເຖິງແຫຼ່ງທຶນໄດ້ຢ່າງສະດວກ, ພຽງພໍ ແລະ ສ້າງເງື່ອນໄຂຮອບດ້ານເພື່ອໄປຕັ້ງໜ່ວຍບໍລິການກັບທີ່ຢູ່ເຂດຊົນນະບົດ, ສືບຕໍ່ພັດທະນາເງິນກອງທຶນບ້ານທີ່ມີແລ້ວ ໃຫ້ມີການເຄື່ອນໄຫວສະໜອງທຶນໃນການສ້າງກິດຈະກຳຂອງຄອບຄົວໃຫ້ມີປະສິດທິຜົນສູງ (ຄັດຈາກແຜນພັດທະນາຊົນນະບົດ ປີ 2016-2020).

5) ປຸກລະດົມຂົນຂວາຍແຫຼ່ງທຶນເຂົ້າໃນການພັດທະນາເຂດຊົນນະບົດດ້ວຍການນຳໃຊ້ນະໂຍບາຍໄມ້ງັດເສດຖະກິດ ເພື່ອຍູ້ແຮງການຜະລິດ ແລະ ການບໍລິການຢູ່ໃນເຂດເປົ້າໝາຍທີ່ທຸກຍາກໃຫ້ຫຼາຍຂຶ້ນ, ທຶນລັດ ແລະ ທຶນຊ່ວຍເຫຼືອຕ້ອງສຸມໃສ່ການພັດທະນາພື້ນຖານໂຄງລ່າງທີ່ສຳຄັນຈຳເປັນ ພ້ອມນັ້ນກໍ່ສົ່ງເສີມພາກທຸລະກິດເຂົ້າໄປຊ່ວຍເຮັດບົດບາດບໍລິການສອງສົ້ນຄື: ສົ້ນໜຶ່ງ ແມ່ນສະໜອງທຶນ, ແນວພັນ, ເຕັກນິກ, ສົ້ນໜຶ່ງແມ່ນບໍລິການເກັບຊື້, ປຸງແຕ່ງຜົນຜະລິດ ແລະ ຈຳໜ່າຍ ເພື່ອໃຫ້ສອດຄ່ອງກັບກົນໄກເສດຖະກິດຕະຫຼາດທີ່ມີການຄຸ້ມຄອງຂອງລັດ, ສົ່ງເສີມການສ້າງຕົວແບບ ແລະ ສ້າງສູນຮຽນຮູ້ດ້ານເຕັກນິກການຜະລິດກັບທີ່ ກາຍເປັນບ່ອນສາທິດ ແລະ ຖ່າຍທອດຄວາມຮູ້ໃຫ້ຊາວກະສິກອນ, ສ້າງໃຫ້ປະຊາຊົນມີອາຊີບ, ມີວຽກເຮັດງານທຳ ແລະ ມີລາຍໄດ້ທີ່ໝັ້ນຄົງຈາກການຜະລິດທີ່ນຳໃຊ້ຊັບພະຍາກອນ ແລະ ແຮງງານກັບທີ່ ເຂົ້າໃນການແກ້ໄຂຄວາມທຸກຍາກໃຫ້ມີປະສິດທິຜົນ.

6) ຫັນພະນັກງານວິຊາການສະເພາະດ້ານ ລົງກໍ່ສ້າງຮາກຖານ ໃຫ້ຕິດພັນກັບຊາວກະສິກອນເຂດຊົນນະບົດບ່ອນທີ່ຍັງບໍ່ທັນໄດ້ຮັບການພັດທະນາ ເພື່ອເສີມຂະຫຍາຍຄວາມສາມາດ, ນ້ຳໃຈຮັບຜິດຊອບ ແລະ ຫົວຄິດປະດິດສ້າງໃນການນຳພາສ້າງຊົນນະບົດແບບໃໝ່, ຝຶກຝົນຫຼໍ່ຫຼອມ ແລະ ສ້າງພະນັກງານໃຫ້ເຕີບໃຫຍ່ຈາກຂະບວນການປະຕິບັດ

ງານຕົວຈິງ ເອົາໃຈໃສ່ໃນການສ້າງພະນັກງານຮາກຖານໃຫ້ເຂັ້ມແຂງຮອບດ້ານ ສາມາດເປັນຕົວແທນໃຫ້ແກ່ອົງການຈັດຕັ້ງຂັ້ນແຂວງ, ຂັ້ນເມືອງ ໂດຍມີການຊີ້ນຳບັນຊາຈາກຄະນະພັກແຕ່ລະຂັ້ນໃຫ້ເປັນລະບົບແທດເຖິງຕົວຈິງ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

**1)** ສຸມກຳລັງແຮງ ແລະ ຄວາມສາມາດຮອບດ້ານ ລວມທັງພະນັກງານ, ທຶນຮອນ, ງົບປະມານ, ລົງສູ່ຮາກຖານຊົນນະບົດ ຕາມທິດສ້າງຊົນນະບົດໃໝ່ ຢ່າງມີຄວາມຮັບຜິດຊອບ, ມີແຜນການ ແລະ ມີຈຸດສຸມ.

**2)** ສຸມໃສ່ການຂະຫຍາຍ ແລະ ກໍ່ສ້າງພື້ນຖານໂຄງລ່າງ ດ້ານເສດຖະກິດຮັບໃຊ້ການຜະລິດ ແລະ ການດຳລົງຊີວິດໃຫ້ທົ່ວເຖິງ.

**3)** ຊຸກຍູ້ສົ່ງເສີມທະນາຄານ ເຂົ້າໄປມີບົດບາດເຮັດໜ້າທີ່ບໍລິການປ່ອຍສິນເຊື່ອທີ່ສົມເຫດສົມຜົນໃຫ້ແກ່ຊາວກະສິກອນ ຢູ່ເຂດຊົນນະບົດ ສາມາດເຂົ້າເຖິງແຫຼ່ງທຶນໄດ້ຢ່າງສະດວກ.

**4)** ສຸມໃສ່ປັບປຸງການບໍລິການສາທາລະນຸປະໂພກໃຫ້ ປະຊາຊົນ ເປັນຕົ້ນ ຂົວນ້ຳຂອງແຫ່ງທີ່ 5, ຕະຫຼາດປາກຊັນຫຼັງໃໝ່ ທາງ 4 ເລັນ ແລະ ເຂດເສດຖະກິດນ້ຳຫງາງ ແລະ ສະເພາະຂົງເຂດວຽກງານກະສິກຳຕ້ອງໄດ້ສຸມໃສ່ສົ່ງເສີມການຜະລິດ ແລະ ເຕັກນິກການຜະລິດ.

### 4.3.4 ວຽກຈຸດສຸມທີ 4: ສົ່ງເສີມບົດບາດຍິງ-ຊາຍ, ໄວໜຸ່ມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ; ສ້າງໂອກາດ, ຜູ້ເສຍອົງຄະ, ອາວຸໂສ ໃຫ້ເຂົ້າເຖິງການບໍລິການຂອງລັດ.

**+ ສົ່ງເສີມບົດບາດແມ່ຍິງ-ຊາຍ-ໄວໜຸ່ມ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ:** ຮັບປະກັນສິດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ປາສະຈາກຄວາມຮຸນແຮງ, ການຈຳແນກໄດໆຕໍ່ແມ່ຍິງ ສ້າງເງື່ອນໄຂໃຫ້ແມ່ຍິງ-ຊາຍ-ໄວໜຸ່ມ ໄດ້ສຸມທຸກກຳລັງແຮງ ແລະ ຄວາມສາມາດຂອງເຂົາເຈົ້າເຂົ້າໃນການເຄື່ອນໄຫວປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໄດ້ຢ່າງເຕັມສ່ວນ, ສຸມໃສ່ບັນດາໜ້າວຽກສຳຄັນ **ດັ່ງນີ້:**

- ເອົາໃຈໃສ່ສຶກສາອົບຮົມທາງດ້ານຄຸນທາດການເມືອງໃຫ້ໜັກແໜ້ນ, ສົ່ງເສີມໃຫ້ແມ່ຍິງໄດ້ຮັບການພັດທະນາດ້ານການສຶກສາ, ຍົກລະດັບວິຊາສະເພາະ, ວິຊາຊີບ, ສີມືແຮງງານ ແລະ ໄດ້ຮັບການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງ, ສາມາດປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ, ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ ແລະ ຂອງແມ່ຍິງລາວ.
- ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ສະຫະພັນແມ່ຍິງໃນແຕ່ລະຂັ້ນ ເພື່ອເປັນຕົວແທນໃນການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກ; ຫຼຸດຜ່ອນການຈຳແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ຮັບປະກັນສິດສະເໝີພາບເທົ່າທຽມກັນລະຫວ່າງຍິງ-ຊາຍ.
- ປະສານສົມທົບກັບຄະນະພັກ, ອົງການປົກຄອງ ແລະ ການຈັດຕັ້ງທຸກພາກສ່ວນ ເພື່ອຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ພະນັກງານລັດຖະກອນແມ່ຍິງໄປຍົກລະດັບທິດສະດີການເມືອງ-ການປົກຄອງ, ລັດຖະທຳມະນູນ, ກົດໝາຍ, ສົນທິສັນຍາ, ສັນຍາສາກົນ ທີ່ພົວພັນເຖິງການພັດທະນາ ແລະ ປົກປ້ອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ ແລະ ສົ່ງເສີມໃຫ້ແມ່ຍິງຮັກສາໄດ້ມູນເຊື້ອວັດທະນະທຳຂອງຊາດ, ຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວ.
- ສືບຕໍ່ຈັດຕັ້ງປະຕິບັດຄຳຂວັນ, ຂໍ້ແຂ່ງຂັນ 3 ດີ ຕິດພັນກັບການສ້າງຄອບຄົວ ແລະ ບ້ານແມ່ຍິງ 3 ດີ ຕິດພັນກັບການສ້າງບ້ານພັດທະນາຕາມທິດ 3 ສ້າງ ແລະ ຂະບວນແຂ່ງຂັນຮັກຊາດ ແລະ ພັດທະນາໃຫ້ກວມ 50% ຂຶ້ນໄປ.
- ຊຸກຍູ້ສົ່ງເສີມຂະບວນການຜະລິດເປັນສິນຄ້າຂອງແມ່ຍິງໃຫ້ມີໂອກາດໄດ້ເປັນເຈົ້າຂອງທຸລະກິດມີຈຳນວນເພີ່ມຂຶ້ນ.
- ສົມທົບກັບຄະນະພັກແຕ່ລະຂັ້ນ ຊຸກຍູ້ສົ່ງເສີມໃຫ້ແມ່ຍິງໄດ້ຮັບຕຳແໜ່ງນຳພາ-ຄຸ້ມຄອງຂັ້ນບ້ານໃຫ້ກວມ 5% ຂຶ້ນໄປ; ຂັ້ນເມືອງກວມ 5% ຂຶ້ນໄປ; ສະມາຊິກສະພາແຂວງໃຫ້ໄດ້ 20%ຂຶ້ນໄປ.
- ສົ່ງເສີມໃຫ້ເດັກຍິງໃນເກນອາຍຸໄດ້ຮຽນຈົບມັດທະຍົມຕອນຕົ້ນ ໃຫ້ໄດ້ 80%.
- ສົ່ງເສີມ ສິດສະເໝີພາບຍິງ-ຊາຍ ໃນການເຂົ້າເຖິງການບໍລິການດ້ານການສຶກສາ, ສາທາລະນະສຸກ ແລະ ສະຫວັດດີການສັງຄົມ ເພື່ອຫຼຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກ.
- ສົ່ງເສີມແມ່ຍິງເຂົ້າຮ່ວມເປັນຄະນະກຳມະການຄຸ້ມຄອງ ແລະ ເປັນສະມາຊິກກອງທຶນໃຫ້ເພີ່ມຂຶ້ນ.
- ສ້າງເງື່ອນໄຂໃຫ້ແມ່ຍິງ ແລະ ເດັກນ້ອຍທີ່ມີບັນຫາໄດ້ເຂົ້າເຖິງຂະບວນການຍຸຕິທຳຢ່າງກວ້າງຂວາງ.

**+ ການພັດທະນາຊາວໜຸ່ມ-ເຍົາວະຊົນ.**

- ສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ຊາວໜຸ່ມ-ໄວໜຸ່ມ, ເຍົາວະຊົນ-ອານຸຊົນໃນທົ່ວເມືອງໃຫ້ໄດ້ 80% ຂຶ້ນໄປ; ລະດົມຊາວໜຸ່ມປະກອບສ່ວນເຂົ້າເປັນທະຫານພັນທະໃຫ້ໄດ້ຕາມຈຳນວນທີ່ຂັ້ນເທິງກຳນົດໄວ້.

- ປັບປຸງ ແລະ ຂະຫຍາຍການຈັດຕັ້ງຊາວໜຸ່ມ, ເຍົາວະຊົນ ໃຫ້ເຕີບໃຫຍ່ເຂັ້ມແຂງ ສາມາດເປັນເສນາທິການໃຫ້ແກ່ຄະນະພັກ.

- ຂະຫຍາຍສະມາຊິກຊາວໜຸ່ມ, ເຍົາວະຊົນ ແລະ ອະນຸຊົນທັນອາໃຫ້ໄດ້ 95% ຂອງຈຳນວນໄວເຍົາວະຊົນ-ອານຸຊົນໃນທົ່ວແຂວງ, ກວດກາການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ແລະ ຂໍ້ແຂ່ງຂັນ 3 ດີ 4 ຮູ້ ຂອງເຍົາວະຊົນ.

- ບຳລຸງສ້າງສະມາຊິກຊາວໜຸ່ມໃນຖັນແຖວພະນັກງານໃຫ້ກາຍເປັນພະນັກງານໜຸ່ມທີ່ມີຄຸນນະພາບໃຫ້ໄດ້ 80% ຂຶ້ນໄປ.

- ປຸກລະດົມ, ຊຸກຍູ້ ເຮັດໃຫ້ຊາວໜຸ່ມ ແລະ ໄວໜຸ່ມໃຫ້ໄດ້ເຂົ້າໂຮງຮຽນມັດທະຍົມຕອນປາຍໃຫ້ໄດ້ 90% ຂຶ້ນໄປ.

- ສ້າງກອງອາສະໝັກຊາວໜຸ່ມເມືອງ ໃຫ້ໄດ້ເມືອງລະ 1 ກອງ.

- ຊຸກຍູ້-ສົ່ງເສີມວິຊາຊີບໄລຍະສັ້ນ ໃຫ້ແກ່ຊາວໜຸ່ມ-ເຍົາວະຊົນ ໃນຕົວເມືອງ ແລະ ຊົນນະບົດ ໂດຍສະເພາະຜູ້ດ້ອຍໂອກາດ ຂາດທຶນການສຶກສາ ໃຫ້ມີວຽກເຮັດງານທຳທີ່ແນ່ນອນ.

- ສືບຕໍ່ພັດທະນາກຳລັງແຮງງານໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ, ສ້າງແຮງງານໃຫ້ສອດຄ່ອງ ແລະ ຕິດພັນກັບໂຄງປະກອບເສດຖະກິດ ໂດຍສຸມໃສ່ຂົງເຂດກະສິກຳ, ອຸດສາຫະກຳ ແລະ ການບໍລິການ.

- ສ້າງແຮງງານໃຫ້ມີສະຕິຊາດ, ເປັນພົນລະເມືອງດີ, ເຄົາລົບນັບຖືລະບຽບກົດໝາຍ, ມີລະບຽບວິໄນ, ມີຈັນຍາບັນ, ອົດທົນ ແລະ ຫ້າວຫັນໃນການເຮັດວຽກ, ມີຄວາມກະຕືລືລົ້ນຕໍ່ການພັດທະນາຕົນເອງ ແລະ ເປັນແຮງງານທີ່ເຂັ້ມແຂງ, ໝັ້ນຄົງ.

- ຄວບຄຸມອັດຕາການວ່າງງານໃຫ້ຢູ່ໃນລະດັບ 0,23%.

- ປະສານສົມທົບກັບພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເພື່ອຈັດຝຶກອົບຮົມພັດທະນາສີມືແຮງງານ ໃຫ້ໄດ້ຕາມມາດຖານທີ່ໄດ້ກຳນົດໄວ້.

- ສືບຕໍ່ລົງເກັບກຳຂໍ້ມູນແຮງງານນະໂຍບາຍຕາມດຳລັດ 272/ລບ ໃນທົ່ວເມືອງ ພ້ອມທັງປິດບັນຊີການຂໍນະໂຍບາຍໃຫ້ສຳເລັດ.

- ສືບຕໍ່ຕິດຕາມຄຸ້ມຄອງແຮງງານລາວ ແລະ ຕ່າງປະເທດ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

**+ ສ້າງໂອກາດຜູ້ເສຍອົງຄະ, ອາວຸໂສເຂົ້າເຖິງການບໍລິການຂອງລັດ.**

ສ້າງໂອກາດໃຫ້ຜູ້ເສຍອົງຄະ, ອາວຸໂສ ໂດຍສະເພາະບຸກຄົນທີ່ມີບຳເນັດ, ບຳນານ, ໃນສັງຄົມໄດ້ຮັບການບໍລິການດ້ານຕ່າງໆເຊັ່ນ: ດ້ານສະຫວັດດີການສັງຄົມ, ການສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ບຸກຄົນເຫຼົ່ານີ້ມີຄວາມສຸກດ້ານຈິດໃຈ, ກາຍ, ສຸຂະພາບແຂງແຮງ ມີອາຍຸຍືນ ມີຊີວິດການເປັນຢູ່ທີ່ດີເລື້ອຍໆ ພວກເຮົາຕ້ອງໄດ້ສຸມໃສ່ບັນດາໜ້າວຽກທີ່ສຳຄັນດັ່ງນີ້:

- ສ້າງເງື່ອນໄຂ ແລະ ສິ່ງອຳນວຍຄວາມສະດວກ ການໄປມາ ທີ່ພັກພາອາໃສ່ ການກິນຢູ່ ໄວ້ໃຫ້ຄົນອາວຸໂສບຳນານ ຄົນເສຍອົງຄະຍ້ອນປະຕິບັດພາລະກິດຂອງຊາດໃຫ້ຄົບສຸດ.

- ສ້າງລະບົບການເງິນ ( ເບ້ຍລ້ຽງ, ເງິນເດືອນ) ສະໜອງໃຫ້ສະດວກ ທັນເວລາ ແລະ ພຽງພໍ.

- ມີການດູແລສຸຂະພາບຢ່າງເປັນລະບົບ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ສ້າງຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການຍົກສູງຜະລິດຕະພາບ ແລະ ເພີ່ມລາຍຮັບຈາກການພັດທະນາ.

2) ສ້າງຄວາມເຂັ້ມແຂງໃຫ້ແກ່ສະຫະພັນແມ່ຍິງໃນແຕ່ລະຂັ້ນ ເພື່ອເປັນຕົວແທນໃນການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກ.

3) ສ້າງໃຫ້ອະນຸຊົນ, ເຍົາວະຊົນ ມີຄຸນສົມບັດສິນທຳປະຕິວັດ, ເປັນຜູ້ຄົນຮູ້ຜູ້ດີຂອງພໍ່ແມ່ ແລະ ຄູບາອາຈານ; ສ້າງໃຫ້ໄວໜຸ່ມມີຄວາມຮູ້, ຄວາມສາມາດທາງດ້ານວິຊາການຢ່າງໜ້ອຍໜຶ່ງດ້ານຕໍ່ໜຶ່ງຄົນ.

4) ສ້າງໂອກາດຜູ້ເສຍອົງຄະ, ອາວຸໂສເຂົ້າເຖິງການບໍລິການຂອງລັດ.

**4.3.5 ວຽກຈຸດສຸມທີ 5: ສັງຄົມໄດ້ຮັບການປົກປ້ອງ ມີສະຫວັດດີການສັງຄົມທີ່ດີ.**

ເພື່ອຮັບປະກັນ ສິດ ແລະ ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ທີ່ໄດ້ເຂົ້າຮ່ວມໃນການປະກັນສັງຄົມຂອງແຂວງເຮົາໃຫ້ມີຄວາມຍຸດຕິທຳ ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ ແລະ ປະຕິບັດຖືກຕາມເປົ້າໝາຍປະກັນສັງຄົມທີ່ກົດໝາຍໄດ້ກຳນົດໄວ້ໃຫ້ໄດ້ດີ, ລັດໄດ້ມີນະໂຍບາຍ ແລະ ຫຼັກການ **ຄື:**

**+ ນະໂຍບາຍລັດກ່ຽວກັບວຽກງານປະກັນສັງຄົມ.**

ລັດຊຸກຍູ້ ແລະ ສົ່ງເສີມການພັດທະນາວຽກງານປະກັນສັງຄົມ ໃຫ້ດຳເນີນໄປຄຽງຄູ່ກັບການເຕີບໂຕທາງດ້ານເສດຖະກິດຊື່ງລັດ, ຜູ້ໃຊ້ແຮງງານ ແລະ ຜູ້ປະກັນຕົນປະກອບທຶນເຂົ້າໃນວຽກງານປະກັນສັງຄົມ ເພື່ອຮັບປະກັນການຕອບສະໜອງການອຸດໜູນປະກັນສັງຄົມພາຍໃຕ້ການຄຸ້ມຄອງຂອງລັດ ໂດຍມີການຍົກເວັ້ນອາກອນສຳລັບເງິນອຸດໜູນປະກັນສັງຄົມປະເພດຕ່າງໆ.

- ລັດຊຸກຍູ້ໃຫ້ພົນລະເມືອງເຂົ້າຮ່ວມປະກັນສັງຄົມ ເພື່ອຮັບປະກັນໃຫ້ໄດ້ການອຸດໜູນ ປະກັນສັງຄົມຕາມທີ່ໄດ້ກຳນົດໃນກົດໝາຍ.
- ລັດຊຸກຍູ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນທຶນຮອນ ແລະ ເຕັກນິກວິຊາການເຂົ້າໃນການພັດທະນາວຽກປະກັນສັງຄົມໃຫ້ເຕີບໃຫຍ່ຂຶ້ນເປັນກ້າວໆ.

**+ ຫຼັກການພື້ນຖານກ່ຽວກັບວຽກງານປະກັນສັງຄົມ.**

- ສອດຄ່ອງແນວທາງນະໂຍບາຍ, ຍຸດທະສາດ ແລະ ຄຸ້ມຄອງຕາມກົດໝາຍຢ່າງລວມສູນເປັນເອກະພາບພາຍໃນຂອບເຂດທົ່ວປະເທດ.
- ຮັບປະກັນການສົມທົບທຶນເຂົ້າກອງທຶນປະກັນສັງຄົມຂອງລັດຖະບານ, ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ, ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈຕາມອັດຕາສ່ວນເງິນສົມທົບທີ່ໄດ້ກຳນົດໄວ້ໃນກົດໝາຍ.
- ຮັບປະກັນປົກປ້ອງສິດ, ຜົນປະໂຫຍດໃນການອຸດໜູນປະກັນສັງຄົມໃຫ້ຜູ້ປະກັນຕົນ ແລະ ຄອບຄົວ.
- ຮັບປະກັນຄວາມຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້.
- ຮັບປະກັນການສົມທົບທຶນ, ສະເລ່ຍຄວາມສ່ຽງ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃຫ້ມີຄວາມຍືນຍົງ.
- ຮັບປະກັນການຄິດໄລ່ເງິນອຸດໜູນປະກັນສັງຄົມປະເພດຕ່າງໆ ໂດຍຖືເອົາເງິນປະກັນຕົນ ຫຼື ຄ່າແຮງງານຕ່ຳສຸດເປັນຕົວຕັ້ງ (ມີຫຼັກການຂອງລັດຖະບານວາງອອກ).
- ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ຊຸກຍູ້ໃຫ້ພົນລະເມືອງເຂົ້າຮ່ວມປະກັນສັງຄົມ ເພື່ອຮັບປະກັນໃຫ້ໄດ້ການອຸດໜູນ ປະກັນສັງຄົມຕາມໄດ້ກຳນົດໃນກົດໝາຍ.

2) ຊຸກຍູ້ບຸກຄົນ ນິຕິບຸກຄົນ ແລະການຈັດຕັ້ງທັງພາຍໃນແລະ ຕ່າງປະເທດ ປະກອບສ່ວນທຶນຮອນ ແລະ ເຕັກນິກວິຊາການເຂົ້າໃນການພັດທະນາວຽກປະກັນສັງຄົມໃຫ້ເຕີບໃຫຍ່ຂະຫຍາຍຕົວ.

**4.4. ເປົ້າໝາຍທີ 4: ການພັດທະນາຕາມທິດສີຂຽວ ແລະ ເປັນມິດຕໍ່ສິ່ງແວດລ້ອມ.**

ກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກເຮົາໄດ້ ມີນະໂຍບາຍໃຫ້ທົ່ວສັງຄົມກຳແໜ້ນແນວທາງພັດທະນາຕາມທິດສີຂຽວ ແລະ ຍືນຍົງ; ໃນໄລຍະຜ່ານມາມີຫຼາຍປະກົດການປ່ຽນແປງທາງດ້ານເສດຖະກິດ-ສັງຄົມ, ບັນດາວິກິດການທາງເສດຖະກິດເກີດຖີ່ຂຶ້ນ, ມີບັນຫາສະພາບແວດລ້ອມເສື່ອມໂຊມ ແລະ ໄພພິບັດຕ່າງໆເກີດຂຶ້ນຍ້ອນການປ່ຽນແປງດິນຟ້າອາກາດ ແລະ ອື່ນໆ. ສະພາບດັ່ງກ່າວມີຜົນຕໍ່ຄວາມໝັ້ນທ່ຽງ, ຄວາມຕໍ່ເນື່ອງ ແລະ ຜົນກະທົບໂດຍທາງກົງ ແລະ ທາງອ້ອມຕໍ່ການພັດທະນາ, ເປັນສິ່ງທ້າທາຍຕໍ່ການວາງແຜນພັດທະນາເສດຖະກິດ-ສັງຄົມໃນຕໍ່ໜ້າ, ໃນນັ້ນ ເພື່ອຮັບປະກັນໝາກຜົນ ແລະ ຄວາມຍືນຍົງຂອງການພັດທະນາຕ້ອງເອົາໃຈໃສ່ບາງທິດທາງ ແລະ ວຽກງານຈຳນວນໜຶ່ງດັ່ງນີ້:

**4.4.1 ວຽກຈຸດສຸມທີ 1: ຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ.**

- ເພີ່ມຜົນຜະລິດ, ການໃຊ້ ຫຼື ການຈັດການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີປະໂຫຍດສູງສຸດ ຮູ້ຈັກຖະໜອມໃຊ້ເພື່ອມີໄວ້ໃຊ້ຢ່າງຍາວນານ.

- ປະຊາຊົນ ແລະ ພາກລັດຊ່ວຍກັນຄວບຄຸມການປ່ອຍສິ່ງເສດເຫຼືອທີ່ສ້າງຂຶ້ນໃຫ້ອອກສູ່ທຳມະຊາດໜ້ອຍທີ່ສຸດ.

- ໃຫ້ປະຊາຊົນມີຈິດສຳນຶກປັບປ່ຽນພຶດຕິກຳການບໍລິໂພກຊັບພະຍາກອນທຳມະຊາດຢ່າງເໝາະສົມເປັນຕົ້ນ ຝຶກອົບຮົມໃຫ້ຄວາມຮູ້ແກ່ຜົນຮ້າຍຂອງການບໍລິໂພກສັດປ່າ, ຜົນຮ້າຍທີ່ຈະຕາມມາເຖິງການບໍລິໂພກ ແລະ ນຳໃຊ້ພືດຜັກ ໝາກໄມ້ຕາມທຳມະຊາດຢ່າງຂາດການຄຸ້ມຄອງ ແລະ ພາກລັດຕ້ອງໄດ້ວາງມາດຕະການກະຈາຍລາຍໄດ້ອອກສູ່ປະຊາຊົນ ໃນທຸກກຸ່ມອາຊີບເພື່ອສ້າງຄວາມໝັ້ນຄົງທາງດ້ານເສດຖະກິດ.

- ກຳນົດພື້ນທີ່ຊຸ່ມນ້ຳ, ດິນທາມໃຫ້ເປັນພື້ນທີ່ທີ່ອຸດົມສົມບູນໄປດ້ວຍລະບົບນິເວດ ແລະ ຊີວະນາໆ ພັນເພື່ອນຳໃຊ້ເຂົ້າໃນການພັດທະນາ

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

- ແຕ່ລະບ້ານຕ້ອງມີປ່າຊົມໃຊ້, ມີເຂດສະຫງວນສັດນ້ຳ-ສັດເຄິ່ງບົກເຄິ່ງນ້ຳ ແລະ ສັດປ່າ.

- ຄວບຄຸມການປ່ອຍສິ່ງເສດເຫຼືອ, ກຳຈັດກິ່ນ, ຝຸ່ນ ແລະ ຮັບປະກັນມົນລະພິດທາງສຽງ: ໂຮງງານ, ຕະຫຼາດ, ອູ່ສ້ອມແປງ, ຮ້ານບັນເທີງ.

- ກຳນົດພື້ນທີ່ຊຸ່ມນ້ຳ, ດິນທາມ **ເຊັ່ນ:** ອ່າງຫ້ວຍປີງ, ໜອງສາມຂາ, ໜອງຫຍ້າ, ອ່າງນ້ຳກະດັນ ເມືອງປາກຊັນ; ໜອງຫຼົ່ມ, ໜອງຊອດ, ໜອງບຸ່ງກວາງ ເມືອງປາກກະດິງ; ອ່າງນ້ຳຝາຍນ້ຳກາບ ເມືອງບໍລິຄັນ; ອ່າງເກັບນ້ຳເຂື່ອນນ້ຳເທີນ 1 ເມືອງວຽງທອງ, ອ່າງເກັບນ້ຳ ນ້ຳເທີນພາກຂະຫຍາຍ ເມືອງຄຳເກີດ ແລະ ກຸດຟ້າແມບ ເມືອງທ່າພະບາດ.

- ກຳນົດວັງສະຫງວນປາ ຢູ່: ນ້ຳຊັນ 10 ແຫ່ງ, ນ້ຳງຽບ 4 ແຫ່ງ, ນ້ຳມັງ 2 ແຫ່ງ, ນ້ຳ ຮີ້ 2 ແຫ່ງ, ນ້ຳໂລ້ 1 ແຫ່ງ, ນ້ຳຈີງ 1 ແຫ່ງ, ນ້ຳກະດັນ 1 ແຫ່ງ, ນ້ຳສາ 1 ແຫ່ງ, ນ້ຳຊູນ 1 ແຫ່ງ, ນ້ຳເຫືອງ 1 ແຫ່ງ, ນ້ຳຊາວ 1 ແຫ່ງ, ນ້ຳໝາງ 1 ແຫ່ງ, ນ້ຳປູ໋ 1 ແຫ່ງ, ນ້ຳທອນ 2 ແຫ່ງ, ນ້ຳພາວ 2 ແຫ່ງ, ນ້ຳເທີນ 3 ແຫ່ງ, ນ້ຳຍ້ອງ 2 ແຫ່ງ, ນ້ຳ ມ່ອນ 3 ແຫ່ງ, ນ້ຳ ສັກ 3 ແຫ່ງ, ນ້ຳອ້ອນ 2 ແຫ່ງ, ນ້ຳຈາດ 2 ແຫ່ງ, ນ້ຳມະເຮືອງ 2 ແຫ່ງ.

- ກຳນົດເຂດອະນຸລັກ ປ່າໄມ້ເປັນຢາ 7 ເມືອງ 7 ເຂດ.

- ກຳນົດດອນກາງນ້ຳຂອງໃຫ້ເປັນດິນປູກພືດກະສິກຳຍາວນານ ຄື: ປູກຕົ້ນໄຜ່, ຕົ້ນພ້າວ, ຕົ້ນຕານ, ຕົ້ນອິນທະຜາລຳ, ຕົ້ນໝາກຄ້ຽວ ເພື່ອປ້ອງກັນດິນເຈື່ອນຈາກການກັດເສາະຂອງນ້ຳຂອງ.

- ສູ້ຊົນເນື້ອທີ່ປົກຫຸ້ມປ່າໄມ້ໃຫ້ໄດ້ 75% ອີງຕາມຂໍ້ຕົກລົງລັດທະມົນຕີກະຊວງກະສິກຳ-ປ່າໄມ້ສະບັບເລກທີ 3822/ປກ ລົງວັນທີ 18 ສິງຫາ 2017 ໂດຍການຖ່າຍດາວທຽມ ເຊັນເຕີເນວ 2 ປີ 2019 ຕາມຂໍ້ມູນຂອບເຂດ ເອເລັກໂຕນິກ ຂອງກົມແຜນທີ່ແຫ່ງຊາດ.

#### 4.4.2 ວຽກຈຸດສຸມທີ 2: ຈັດສັນ ແລະ ຂຶ້ນທະບຽນທີ່ດິນໃນຂອບເຂດທົ່ວແຂວງ.

- ເອົາໃຈໃສ່ຄຸ້ມຄອງ, ນຳໃຊ້ທີ່ດິນ 8 ປະເພດ ໃຫ້ສອດຄ່ອງຕາມກົດໝາຍ, ລະບຽບການ ແລະ ແຜນຈັດສັນທີ່ດິນ ແລະ ຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານຂອງແຂວງ.

- ການພັດທະນາ ແລະ ນຳໃຊ້ເນື້ອທີ່ດິນແຂວງບໍລິຄຳໄຊໃຫ້ໄດ້ດີ ມີປະໂຫຍດ.

- ເຮັດງານສຶກສາ, ວິໄຈ, ໃຫ້ລະອຽດ ຕໍ່ການນຳໃຊ້ເນື້ອທີ່ດິນເປັນຈຳນວນຫຼາຍຂອງນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ.

- ກຳນົດຂອບເຂດດິນກະສິກຳ, ແກ້ໄຂບັນຫາທີ່ດິນ ແລະ ການຈັບຈອງທີ່ດິນຂອງປະຊາຊົນເພື່ອການພະລິດ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ໃຫ້ມີມາດຕະການເດັດຂາດຕໍ່ຜູ້ຄຸ້ມຄອງດິນຫຼາຍ ກ່ວາກົດໝາຍທີ່ດິນກຳນົດ (ເປັນຕົ້ນ ຜູ້ມີເງິນຢູ່ໃນເມືອງໄປຊື້ດິນຢູ່ເຂດຊົນນະບົດປະໄວ້ ຜູ້ຢູ່ຊົນນະບົດ ຂາຍດິນແລ້ວມາເຮັດວຽກຢູ່ໃນເມືອງ), ການຄຸ້ມຄອງດິນແຕ່ບໍ່ນຳໃຊ້, ການນຳໃຊ້ດິນທີ່ເຮັດໃຫ້ດິນເຊື່ອມຄຸນ, ການຫັນປ່ຽນທີ່ດິນ ແລະ ອື່ນໆ... ດ້ວຍວິທີການຂຶ້ນສຳມະໂນຕອນດິນໃຫ້ລະອຽດ ແລະ ປະຕິບັດຫຼັກການ ການຄຸ້ມຄອງລັດແຫ່ງກົດໝາຍ.

2) ກຳນົດເຂດນິຄົມອຸດສາຫະກຳ, ເຂດສະຫງວນເປັນຂອງລັດ, ເຂດນຳໃຊ້ຊ້ຳ (ເຂດທີ່ດິນແຫຼ່ງນ້ຳ, ເຂດທີ່ດິນປ່າທາມ, ເຂດທີ່ດິນແຫ້ງແລ້ງ ແລະ ດິນນ້ຳຖ້ວມ), ເຂດຈັດສັນຊຸມຊົນ ແລະ ເຂດບໍລິການ, ເຂດໂຄງການ, ເຂດປ່າສະຫງວນແຫ່ງຊາດຊຶ່ງມີຄວາມຕ້ອງການພັດທະນາ.

3) ກວດກາເບິ່ງພື້ນທີ່ນາບ່ອນໃດ ເຫັນວ່າບໍ່ສາມາດທຳການຜະລິດໄດ້ ຍ້ອນສາຍເຫດຕ່າງໆ ທີ່ບໍ່ເອື້ອອຳນວຍກໍ່ຕ້ອງໄດ້ຫັນປ່ຽນການນຳໃຊ້ໃຫ້ເໝາະສົມ **ເຊັ່ນ:** ທົ່ງໜອງແຊງ ເມືອງປາກຊັນ, ທົ່ງໂພນຕານ ທາງເຂົ້າບໍ່ນ້ຳເຢັນເມືອງຄຳເກີດ, ພື້ນທີ່ລຸ່ມຊຶມລະປະທານ ນ້ຳຊູນ ບ້ານພູຄຳ ເມືອງບໍລິຄັນ, ພື້ນທີ່ເດີ່ນຍົນເກົ່າ ບ້ານຫວາຍນ້ອຍ ເມືອງທ່າພະບາດ.

**4.4.3 ວຽກຈຸດສຸມທີ 3: ການສ້າງແຜນພັດທະນາຂອງຂະແໜງການຕ້ອງສອດຄ່ອງກົມກຽວໄປຕາມຍຸດທະສາດການເຕີບໂຕສີຂຽວ, ກຽມພ້ອມຮັບມື ແລະ ປ້ອງກັນໄພພິບັດທຳມະຊາດ.**

**4.4.3.1 ການສ້າງແຜນພັດທະນາຂອງຂະແໜງການຕ້ອງສອດຄ່ອງກົມກຽວໄປຕາມຍຸດທະສາດການເຕີບໂຕສີຂຽວ.**

ເພື່ອເຮັດໃຫ້ການພັດທະນາ ແຕ່ລະຂົງເຂດວຽກງານມີປະສິດທິພາບທີ່ດີກ່ວາເກົ່າ ຕ້ອງສ້າງແຜນໃຫ້ສອດຄ່ອງ ກັບຍຸດທະສາດສີຂຽວເຊັ່ນ:

- ສ້າງອຸດສາຫະກຳໄຟຟ້າຈາກພະລັງງານນ້ຳ, ພະລັງງານແສງຕາເວັນ, ການທ່ອງທ່ຽວທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ, ກະສິກຳສະອາດ, ອຸດສາຫະກຳປຸງແຕ່ງສະບຽງອາຫານ, ການບໍລິການທາງຜ່ານ ແລະ ຂະແໜງການອື່ນໆ ເພື່ອຕອບສະໜອງຄວາມຕ້ອງການຕະຫຼາດພາຍໃນ ແລະ ຕ່າງປະເທດ ທີ່ນັບມື້ນັບເພີ່ມຂຶ້ນ.

- ຂະແໜງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ສຶກສາຄວາມເປັນໄປໄດ້ ໃນການສ້າງໂຄງການທ່ອງທ່ຽວທຳມະຊາດ ເຊັ່ນ: ຍ່າງປ່າ, ລ່ອງເຮືອໃນລັກສະນະຄົ້ນຄວ້າ, ສຳຫຼວດ ແລະ ພັກຜ່ອນ ດ້ວຍການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ, ທ່ອງທ່ຽວທາງປະຫັວດສາດ ເຊັ່ນ: ເຂດຄ້າຍເກົ່າຂອງຝະລັ່ງ ຢູ່ບ້ານນາແປ, ທາງເຄື່ອນໄຫວເຮັດການປະຕິວັດປົດປ່ອຍຊາດຂອງການນຳທົ່ງພິລາເມືອງໄຊຈຳພອນ ເພື່ອຫຼຸດຜ່ອນການຈັບຈອງທີ່ດິນຊະຊາຍຂອງປະຊາຊົນ.

- ຂະແໜງພະລັງງານບໍ່ແຮ່ ສຶກສາຄວາມເປັນໄປໄດ້ ໃນການສ້າງໄຟຟ້າແສງຕາເວັນໃສ່ດິນນ້ຳຖ້ວມ ແລະ ໜ້ານ້ຳ.

- ຂະແໜງກະສິກຳ ສຶກສາ, ຄົ້ນຄວ້າ ແລະ ວິໄຈ ພື້ນທີ່ກັບຄວາມເໝາະສົມໃນການປູກ ແລະ ການລ້ຽງເຊັ່ນ: ຄວາມເໝາະສົມປະເພດດິນກັບພືດ, ຄວາມເໝາະສົມປະເພດຂອງນ້ຳ, ຂອງອາກາດ ກັບການລ້ຽງ.

- ຂະແໜງອຸດສາຫະກຳ ແລະ ການບໍລິການ ສຶກສາຄົ້ນຄ້ວາ ສະຖານທີ່ຕັ້ງ ທີ່ມີຄວາມເໝາະສົມໃນການສ້າງຕັ້ງ ໂຮງງານອຸດສາຫະກຳ, ສະຖານທີ່ບໍລິການ (ຕະຫຼາດ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ຮ້ານບັນເທີງ) ຕະຫຼອດຮອດການ ບໍລິການຂົນສົ່ງຕ່າງໆ.

- ສືບຕໍ່ສຳຫຼວດກຳນົດ 8 ປະເພດທີ່ດິນ ໃຫ້ລະອຽດ ໂດຍຈະໄດ້ສົມທົບກັບສູນກາງໃນການຈັດຕັ້ງປະຕິບັດຕົວຈິງ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ສຸມໃສ່ພັດທະນາຂະແໜງການທີ່ແຂວງເຮົາມີທ່າແຮງໄດ້ປຽບ ເປັນມິດກັບສິ່ງແວດລ້ອມ ແລະ ມີຄວາມຍືນຍົງສູງ ເພື່ອຂັບເຄື່ອນການຂະຫຍາຍຕົວຂອງເສດຖະກິດ.

2) ສ້າງວຽກເຮັດງານທຳ ແລະ ກິດຈະກຳຫາລາຍໄດ້ໃຫ້ແກ່ປະຊາຊົນ ເພື່ອຫຼຸດຜ່ອນຄວາມທຸກຍາກ.

**4.4.3.2 ກຽມພ້ອມຮັບມື ແລະ ປ້ອງກັນໄພພິບັດທາງທຳມະຊາດ.**

ແຂວງບໍລິຄຳໄຊ ເປັນເຂດທີ່ມີລະດັບນ້ຳຝົນຫຼາຍ ສະເລ່ຍສູງສຸດ 3.908,9 ມມ ຕ່ຳສຸດ 2.577,9 ມມ/ປີ ເດືອນທີ່ມີຝົນຫຼາຍ ແມ່ນເດືອນ 5,6,7,8 ແລະ 9 ຄື: ສູງສຸດ 801 ມມ ແລະ ຕ່ຳສຸດ 143 ມມ, ເດືອນທີ່ມີຝົນຕົກປານກາງ ເດືອນ 4 ແລະ 10 ຄື: ສູງສຸດ 266,5 ມມ ແລະ ຕ່ຳສຸດ 00 ມມ, ເດືອນທີ່ມີຝົນຕົກໜ້ອຍ 1,2,3,11,12 ຄື: ສູງສຸດ 190 ມມ(ເດືອນ11 ປີ 2005) ແລະ ຕ່ຳສຸດ 00 ມມ; ສະເລ່ຍຄວາມໄວຂອງລົມ:

+ ເໜືອ ສູງສຸດ N/55 ຕ່ຳສຸດ N/40.

+ ຕາເວັນອອກສຽງເໜືອ ສູງສຸດ NE/49 ຕ່ຳສຸດ NE/48.

+ ຕາເວັນອອກ ສູງສຸດ E/42 ຕ່ຳສຸດ E/40.

+ ໃຕ້ S/25.

- ໃຫ້ມີຄະນະກຳມະການຕ້ານ ແລະ ສະກັດກັ້ນ (ຕ້ານແລ້ງ, ຕ້ານຖ້ວມ, ການລະບາດຂອງພະຍາດຄົນ-ສັດ ແລະ ພືດ) ເຮັດວຽກຢ່າງມີຈຸດສຸມ, ມີກອງເລຂາປະຈຳການຂັ້ນແຂວງ ແລະ ເມືອງ.

- ຂຶ້ນທະບຽນພື້ນທີ່ ທີ່ມີຄວາມສ່ຽງຕໍ່ໄພພິບັດແຕ່ລະປະເພດຢູ່ແຕ່ລະເມືອງ (ໄຟໃໝ້ປ່າ, ລົມພະຍຸ ແລະ ນໍ້າຖ້ວມ).

- ແຕ່ລະເມືອງ ມີສູນຮອງຮັບຊົ່ວຄາວ ກໍລະນີມີການຍົກຍ້າຍສຸກເສີນ 2-3 ບ່ອນ (ໃຫ້ແຕ່ລະເມືອງແຕ້ມແຜນວາດ: ນໍ້າປ່າໄຫຼຫຼາກ, ນໍ້າຖ້ວມ ແລະ ກໍລະນີເກີດອຸທົກກະໄພ).

- ມີອຸປະກອນຮັບມືໄພນໍ້າຖ້ວມ (ເຮືອຈັກແຂງແຮງປະຈໍາຢູ່ແຕ່ລະສູນ ຂອງແຂວງ ແລະ ເມືອງ 7ເມືອງ, ມີເຄື່ອງຊູຊີບ, ເຄື່ອງກະຈາຍສຽງ).

- ອຸປະກອນຮັບມືອະຄີໄຟ (ລົດດັບເພີງ, ບັ້ງດັບເພີງ, ອຸປະກອນຕ່າງໆທີ່ກ່ຽວພັນ).

- ມີການຝຶກຊ້ອມຮັບມື ສອງຄັ້ງ/ປີ (ຮັບມືກັບໄພນໍ້າຖ້ວມ, ຮັບມືກັບອັກຄີໄຟ, ຮັບມືກັບພະຍຸ)

- ມີຄວາມພ້ອມທາງດ້ານສະບຽງອາຫານ (ເຂົ້າ, ນໍ້າມັນເຊື້ອໄຟ, ນໍ້າ, ຢາປົວພະຍາດ, ແນວພັນພືດ, ອາຫານແຫ້ງ, ເຄື່ອງໃຊ້ຄົວເຮືອນ, ເຄື່ອງນຸ່ງຫົ່ມ).

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານ ດັ່ງນີ້:**

1) ຕິດຕາມເຝົ້າລະວັງ ການປ່ຽນແປງດິນຟ້າອາກາດ, ກະກຽມຮັບມືກັບໄພພິບັດທາງທໍາມະຊາດທີ່ເກີດຂຶ້ນໂດຍບໍ່ຄາດຄິດໃຫ້ທັນການ ແລະ ມີປະສິດທິຜົນ, ປາສະຈາກ ແລະ ຫຼຸດຜ່ອນການສູນເສຍທັງຊີວິດ ແລະ ຊັບສິນ,

2) ຈັດຕັ້ງປະຕິບັດຢ່າງມີແຜນ, ມີການຝຶກຊ້ອມທີ່ດີ, ມີການກະກຽມຢ່າງຮັດກຸມ. ຕ້ອງສຸມໃສ່ໃຫ້ຄວາມສໍາຄັນໃນການປ້ອງກັນ ແລະ ຕ້ອງປະຕິບັດຢ່າງເຂັ້ມງວດ.

3) ສຸມໃສ່ຈັດສັນ ແລະ ຄຸ້ມຄອງທີ່ດິນ 8 ປະເພດໃຫ້ສໍາເລັດ 2 ເມືອງ ຄື: ເມືອງທ່າພະບາດ ແລະ ເມືອງປາກກະດິງ ດ້ວຍລະບົບດິຈິຕອນ ຕາມໂຄງການ 1 ປະເທດ 1 ແຜນທີ ຄື: ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ.

4) ສຸມໃສ່ຄຸ້ມຄອງຊັບພະຍາກອນທໍາມະຊາດໃຫ້ມີຄວາມຍືນຍົງດ້ວຍ (1) ສ້າງແຜນແບບມີສ່ວນຮ່ວມລະຫວ່າງ ລັດ, ເອກະຊົນ ແລະ ຄົນໃນຊຸມຊົນ, (2) ການເຂົ້າຮ່ວມຂອງປະຊາຊົນເພື່ອການພັດທະນາທີ່ຍືນຍົງ, (3) ຮັບປະກັນ 3 ຜົນປະໂຍດຢ່າງສົມສ່ວນ.

### 4.5. ເປົ້າໝາຍທີ 5: ການຮ່ວມມື, ເຊື່ອມໂຍງ ແລະ ເຊື່ອມຈອດພາຍໃນປະເທດ, ພາກພື້ນ ແລະ ສາກົນ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ.

### 4.5.1 ວຽກຈຸດສຸມທີ 1: ສົ່ງເສີມການພົວພັນຮ່ວມມື, ຂົນຂວາຍ ແລະ ຍາດແຍ່ງການຊ່ວຍເຫຼືອຈາກເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນ ເພື່ອປະກອບສ່ວນພັດທະ ນາເສດຖະກິດ-ສັງຄົມ.

ກອງປະໃຫຍ່ ຄັ້ງທີ X ຂອງພັກ ໄດ້ເນັ້ນຄວາມເປັນເຈົ້າການເຊື່ອມໂຍງເສດຖະກິດກັບສາກົນ ແລະ ພາກພື້ນຕາມເນື້ອໃນຈິດໃຈເສີມຂະຫຍາຍກໍາລັງພາຍໃນດ້ວຍລະດັບສູງ, ຍົກສູງປະສິດທິຜົນການຮ່ວມມືສາກົນ, ຮັບປະກັນເອກະລາດ, ເປັນເຈົ້າຕົນເອງ ແລະ ການກໍານົດທິດສັງຄົມນິຍົມ; ພັກໄດ້ວາງນະໂຍບາຍ ເປັນເຈົ້າການ ແລະ ເຊື່ອມໂຍງເສດຖະກິດສາກົນຢ່າງຕັ້ງໜ້າ, ພ້ອມທັງເປີດກວ້າງ ການຮ່ວມມືສາກົນໃນຂົງເຂດອື່ນ; ມາຮອດປະຈຸບັນ, ພັກຍາມໃດກໍໄດ້ຖືເປັນສໍາຄັນ ແລະ ໄດ້ກໍານົດວ່າການເຊື່ອມໂຍງສາກົນ ແມ່ນພາລະກິດຂອງທົ່ວປວງຊົນ ແລະ ຂອງທັງລະບົບການເມືອງ ໂດຍພາຍໃຕ້ການນໍາພາຂອງພັກ, ທຸກກົນໄກນະໂຍບາຍແມ່ນຕ້ອງເສີມຂະຫຍາຍລັກສະນະເປັນເຈົ້າການ, ຕັ້ງໜ້າ ແລະ ມີຫົວຄິດປະດິດສ້າງ, ຂຸດຄົ້ນບັນດາກໍາລັງບົ່ມຊ້ອນຂອງທົ່ວສັງຄົມ, ສ້າງໂຄງປະກອບພື້ນຖານໂຄງລ່າງໃຫ້ທັນສະໄໝ, ຍົກສູງກໍາລັງແຮງສັງລວມ ແລະ ຄວາມສາມາດທຸກຂົງເຂດທີ່ມີ, ຕິດແໜ້ນກັບການເພີ່ມທະວີລະດັບການເຊື່ອມຕໍ່ລະຫວ່າງບັນດາແຂວງໃນທົ່ວປະເທດ, ຖືເອົາການເຊື່ອມໂຍງເສດຖະກິດແມ່ນຈຸດໃຈກາງ ແລະ ການເຊື່ອມໂຍງໃນຂົງເຂດອື່ນໆ ຕ້ອງສ້າງເງື່ອນໄຂສະດວກໃຫ້ແກ່ການເຊື່ອມໂຍງເສດຖະກິດ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ, ວຽກງານປ້ອງການຊາດ ແລະ ປ້ອງກັນຄວາມສະຫງົບ, ຮັກສາ ແລະ ເສີມຂະຫຍາຍສີສັນວັດທະນາທໍາຂອງຊາດ ແລະ ຈັດຕັ້ງປະຕິບັດຢ່າງຄົບຊຸດໃນຍຸດທະສາດເຊື່ອມໂຍງລວມຕາມເສັ້ນທາງ, ຕາມບາດກ້າວເດີນທີ່ສອດຄ່ອງກັບເງື່ອນໄຂຕົວຈິງ ຕາມຄວາມສາມາດຂອງປະເທດ ແລະ ຂອງແຂວງ ດ້ວຍປັດໄຈສ້າງສະພາບແວດລ້ອມສັນຕິພາບ, ສະຖຽນລະພາບ ເພື່ອການພັດທະນາເຊື່ອມໂຍງຢ່າງເລິກເຊິ່ງ ໃນບາງບັນຫາພື້ນຖານ **ຄື:** ປະຕິບັດຕາມຫຼັກການສະເໝີພາບ, ຕ່າງຝ່າຍຕ່າງມີຜົນ

ປະໂຫຍດ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະ ກັນ; ນໍາໃຊ້ທິດນໍາທັງຮ່ວມມື, ທັງຕໍ່ສູ້, ມຸ້ງໄປເຖິງການສ້າງທ່າດຸ່ນດ່ຽງ, ປະສົມປະສານທາງດ້ານຜົນປະໂຫຍດ ແລະ ຖືຜົນປະໂຫຍດລວມຂອງຊາດເປັນສໍາຄັນຕົ້ນຕໍ ຕາມຫົວຂໍ້ເປົ້າ ໝາຍສູ້ຊົນ ເຊື່ອມໂຍງລະອຽດ **ດັ່ງນີ້:**

- ໂຄງການລາວ-ລຸກຊໍາບວກ 030, ທະນາຄານໂລກເພື່ອການພັດທະນາທາງດ້ານກະສິກໍາເປັນສິນຄ້າ, ການຊ່ວຍເຫຼືອເພື່ອພັດທະນາການສຶກສາ ຈາກ ເຢຍລະມັນ, ອາສາສະໝັກ-ຊ່ຽວຊານ ທາງດ້ານສຸຂະພາບ ຈາກ ຍີ່ປຸ່ນ, ສ. ເກົາຫຼີ, ໄທ ແລະ ໂຄງການພັດທະນາພື້ນຖານໂຄງລ່າງຕ່າງໆ,
- ຊອກຫາໂຄງການທີ່ປຶກສາ ທີ່ຕ້ອງການນໍາໃຊ້ຊ່ຽວຊານຈາກຕ່າງປະເທດ ກໍ່ຄືອົງການຈັດຕັ້ງສາກົນ ບໍ່ສັງກັດລັດຖະບານ ເຂົ້າໃສ່ວຽກງານວຽກງານເຕັກນິກ, ການເຈລະຈາທາງດ້ານການຄ້າ, ການເຂົ້າຫາແຫຼ່ງທຶນ, ການຊອກຫາຕະຫຼາດ, ການສົ່ງເສີມການຂາຍ, ພິເສດ ແມ່ນການຮ່ວມມືຮອບດ້ານກັບ ສສ ຫວຽດນາມ ແລະ ການຮ່ວມມືກັບ ສປ ຈີນ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ຍາດແຍ່ງເອົາການຊ່ວຍເຫຼືອເຂົ້າໃສ່ການພັດທະນາ ຂະແໜງການເສດຖະກິດ ແລະ ສັງຄົມ ໃຫ້ມີທ່າແຮງໃນການຈັດຕັ້ງປະຕິບັດ.

2) ຮ່ວມມື ກັບປະເທດທີ່ໃຫ້ການພັດທະນາ ເປັນການຊ່ວຍເຫຼືອສັງຄົມ ແລະ ການຊ່ວຍເຫຼືອມະນຸດສະທໍາ.

3) ເພີ່ມເງື່ອນໄຂໃນການເຈລະຈາຕໍ່ລອງ ທາງດ້ານການລົງທຶນ, ການຕະຫຼາດ, ຕະຫຼອດຮອດ ການສ້າງຄວາມສະຫງົບປອດໄພ.

### 4.5.2 ວຽກຈຸດສຸມທີ 2: ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງພາກພື້ນ ແລະ ສາກົນ.

#### 4.5.2.1 ການພັດທະນາຕົວເມືອງ.

❖ **ເມືອງປາກຊັນ: " ສ້າງເມືອງປາກຊັນ ໃຫ້ເປັນແດນກຸຫຼາບ ສະຫງົບ ສີຂຽວ ສະອາດ ງາມຕາ ພັດທະນາໃຫ້ຍືນຍົງ ". "**

ລວມຍອດຜະລິດຕະພັນພາຍໃນຮອດປີ 2024 ໃຫ້ບັນລຸ 1.246,78 ຕື້ກີບ, ການຂະຫຍາຍຕົວຂອງເສດຖະກິດ 8,2% ລາຍໄດ້ສະເລ່ຍຕໍ່ຫົວຄົນ 2.186 ໂດລາຕໍ່ຄົນ, ໂຄງປະກອບເສດຖະກິດ ກະສິກໍາ ກວມ 36%, ຂະຫຍາຍຕົວ 5,4%; ອຸດສະຫາກໍາ ກວມ 45% ຂະຫຍາຍຕົວ 3,8% ແລະ ການບໍລິການ ກວມ 19,6% ຂະຫຍາຍຕົວ 5,8% ຊຶ່ງຈະສຸມໃສ່ໂຄງການໃຫຍ່ **ຄື:** ໂຄງການ ICD, ໃດຊັນ, ດວງຈະເລີນ (ສົ້ນຂົວນໍ້າຂອງ), ໂຄງການຕະລາດປາກຊັນໃໝ່, ໂຄງການອ່າງຫ້ວຍສຽດ ແລະ ໂຄງການປູກໝາກພູກ (ບ້ານນາໄໝ ແລະ ບ້ານຫ້ວຍຊາຍ).

❖ **ເມືອງ ທ່າພະບາດ: " ສ້າງເມືອງທ່າພະບາດໃຫ້ກາຍເປັນເມືອງ ກະສິກໍາສະອາດໃນການຜະລິດ ເສດຖະກິດພັດທະນາ, ແຫຼ່ງທ່ອງທ່ຽວວັດທະນະທໍາທີ່ລືຊ່າ, ສິ່ງແວດລ້ອມສວຍງາມຕາ ປວງປະຊາມີຄວາມຜາສຸກ "."**

ລວມຍອດຜະລິດຕະພັນພາຍໃນຮອດປີ 2024 ໃຫ້ບັນລຸ 591,02 ຕື້ກີບ, ການຂະຫຍາຍຕົວຂອງເສດຖະກິດ 5,8% ລາຍໄດ້ສະເລ່ຍຕໍ່ຫົວຄົນ 2.173 ໂດລາຕໍ່ຄົນ, ໂຄງປະກອບເສດຖະກິດ ກະສິກໍາ ກວມ 46%, ຂະຫຍາຍຕົວ 2,8%; ອຸດສະຫາກໍາ ກວມ 32% ຂະຫຍາຍຕົວ 9,5% ແລະ ການບໍລິການ ກວມ 20% ຂະຫຍາຍຕົວ 7,2% ຊຶ່ງຈະສຸມໃສ່ໂຄງການໃຫຍ່ລຸ່ມນີ້:ໂຄງການໄຟຟ້າແສງຕາເວັນບ້ານທ່າບົກ, ບໍລິສັດຈີຊິນ-ລາວເຕັກນິ ກວ/ສພ/ນກ ຊີວະພາບ.

❖ **ເມືອງປາກກະດິງ: " ໃຫ້ເປັນເມືອງ ທີ່ເພິ່ງພໍໃຈໃນການບໍລິການທາງ ຜ່ານ, ການຜະລິດກະສິກໍາທີ່ສະອາດຕິດພັນກັບອຸດສາຫະກໍາ-ປຸງແຕ່ງ ແລະ ການທ່ອງທ່ຽວແບບ ປະຊາຊົນມີສ່ວນຮ່ວມທີ່ຍືນຍົງ ".**

ລວມຍອດຜະລິດຕະພັນພາຍໃນຮອດປີ 2024 ໃຫ້ບັນລຸ 806,94 ຕື້ກີບ, ການຂະຫຍາຍຕົວຂອງເສດຖະກິດ 7,3% ລາຍໄດ້ສະເລ່ຍຕໍ່ຫົວຄົນ 1.419 ໂດລາຕໍ່ຄົນ, ໂຄງປະກອບເສດຖະກິດ ກະສິກໍາ ກວມ 40%, ຂະຫຍາຍຕົວ 3%; ອຸດສະຫາກໍາ ກວມ 42% ຂະຫຍາຍຕົວ 12% ແລະ ການບໍລິການ ກວມ 18%

ຂະຫຍາຍຕົວ 7% ຊຶ່ງຈະສຸມໃສ່ໂຄງການໃຫຍ່ລຸ່ມນີ້: ການກໍ່ສ້າງທາງ 4 ເລັນ, ສືບຕໍ່ພັດທະນາ ແລະ ຄຸ້ມຄອງສິນຄ້າກະສິກຳ **ເປັນຕົ້ນ:** ສວນໝາກມ່ວງ, ສວນໜໍ່ໄມ້ກິນຊຸງ, ສວນໝາກກ້ຽງໃຫຍ່, ສວນປາງພາລາ...

❖ **ເມືອງ ບໍລິຄັນ: " ແຫຼ່ງຜະລິດກະສິກຳທີ່ດີ, ບໍລິການທາງຜ່ານ, ທ່ອງທ່ຽວທີ່ສະດວກ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະອາດ ຍືນຍົງ ".**

ລວມຍອດຜະລິດຕະພັນພາຍໃນຮອດປີ 2024 ໃຫ້ບັນລຸ 857,96 ຕື້ກີບ, ການຂະຫຍາຍຕົວຂອງເສດຖະກິດ 7,6% ລາຍໄດ້ສະເລ່ຍຕໍ່ຫົວຄົນ 1.651 ໂດລາຕໍ່ຄົນ, ໂຄງປະກອບເສດຖະກິດ ກະສິກຳ ກວມ 41%, ຂະຫຍາຍຕົວ 4%; ອຸດສະຫາກຳ ກວມ 36% ຂະຫຍາຍຕົວ 12% ແລະ ການບໍລິການ ກວມ 23% ຂະຫຍາຍຕົວ 8,8% ຊຶ່ງຈະສຸມໃສ່ໂຄງການໃຫຍ່ **ຄື:** ໂຄງການໄຟຟ້າແສງຕາເວັນ, ກາວີໂກບໍ່ແຮ່ຈຳກັດ, ໂຄງການປູກພືດເສດຖະກິດ ແລະ ລ້ຽງສັດ ວິທະຍາຄານໄກສອນ, ໂຄງການປູກກ້ວຍຫອມເປັນສິນຄ້າ, ດວງຈະເລີນການຄ້າ ແລະ ອື່ນໆ.

❖ **ເມືອງຄຳເກີດ: " ສ້າງເມືອງຄຳເກີດ ເປັນເມືອງບໍລິການທາງຜ່ານ ພັດທະນາການທ່ອງ ທ່ຽວ ສົ່ງເສີມຜະລິດກະສິກຳສະອາດ-ອຸດສາຫະກຳ ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມແບບຍືນຍົງ ຮັບປະກັນຄວາມສະຫງົບປອດໄພເປັນພື້ນຖານ ແລະ ສ້າງເປັນເມືອງເນວຫຼັງຍຸດທະສາດ ".**

ລວມຍອດຜະລິດຕະພັນພາຍໃນຮອດປີ 2024 ໃຫ້ບັນລຸ 1.405,82 ຕື້ກີບ, ການຂະຫຍາຍຕົວຂອງເສດຖະກິດ 7,7% ລາຍໄດ້ສະເລ່ຍຕໍ່ຫົວຄົນ 2.053 ໂດລາຕໍ່ຄົນ, ໂຄງປະກອບເສດຖະກິດ ກະສິກຳ ກວມ 43%, ຂະຫຍາຍຕົວ 3,7%; ອຸດສະຫາກຳ ກວມ 37% ຂະຫຍາຍຕົວ 13% ແລະ ການບໍລິການ ກວມ 20% ຂະຫຍາຍຕົວ 7,6% ຊຶ່ງຈະສຸມໃສ່ໂຄງການໃຫຍ່ລຸ່ມນີ້: ໂຄງການພັດທະນາເຂດເສດຖະກິດນ້ຳງາງ, ໂຄງການກໍ່ສ້າງໂຮງງານມັນຕົ້ນແທງຮົວ+ບໍລິສັດດາກອນ.

❖ **ເມືອງວຽງທອງ: ""ພັດທະນາເມືອງວຽງທອງ ເປັນຍຸດທະສາດແນວຫຼັງ, ເຊື່ອມໂຍງເສດຖະກິດ, ຜະລິດກະສິກຳສະອາດ, ອານຸລັກວັດທະນະທຳ, ພັດທະນາການທ່ອງທ່ຽວ, ຄຸ້ມຄອງສິ່ງແວດລ້ອມແບບຍືນຍົງ "."**

ລວມຍອດຜະລິດຕະພັນພາຍໃນຮອດປີ 2024 ໃຫ້ບັນລຸ 468,15 ຕື້ກີບ, ການຂະຫຍາຍຕົວຂອງເສດຖະກິດ 5,8% ລາຍໄດ້ສະເລ່ຍຕໍ່ຫົວຄົນ 1.366 ໂດລາຕໍ່ຄົນ, ໂຄງປະກອບເສດຖະກິດ ກະສິກຳ ກວມ 53%, ຂະຫຍາຍຕົວ 3,7%; ອຸດສະຫາກຳ ກວມ 20% ຂະຫຍາຍຕົວ 8,9% ແລະ ການບໍລິການ ກວມ 27% ຂະຫຍາຍຕົວ 8% ຊຶ່ງຈະສຸມໃສ່ໂຄງການໃຫຍ່ **ຄື:** ໂຄງການກໍ່ສ້າງຕະຫຼາດໃຫຍ່ບ້ານສົບນາ, ໂຄງການຖູກັນນ້ຳຂອງເຂື່ອນໄຟຟ້ານ້ຳເທີນ 1.

❖ **ເມືອງໄຊຈຳພອນ: " ພັດທະນາເມືອງໄຊຈຳພອນ ວິລະຊົນ ເປັນຍຸດທະສາດແນວຫຼັງ ພັດທະນາເສັ້ນທາງພື້ນຖານໂຄງລ່າງ ຜະລິດກະສິກຳຕິດພັນກັບການບໍລິການ, ຮັກສາທຳມະຊາດ ແລະ ວັດທະນະທຳໃຫ້ຍືນຍົງ ". "**

ສ້າງພື້ນຖານໂຄງລ່າງເສດຖະກິດໃຫ້ເປັນຕົວແບບພັດທະນາຊົນນະບົດໃໝ່ ຂອງລັດຖະບານ ໂດຍຮັບປະກັນໃຫ້ ລວມຍອດຜະລິດຕະພັນພາຍໃນຮອດປີ 2024 ໃຫ້ບັນລຸ 115,35 ຕື້ກີບ, ການຂະຫຍາຍຕົວຂອງເສດຖະກິດ 5,6% ລາຍໄດ້ສະເລ່ຍຕໍ່ຫົວຄົນ 1.114 ໂດລາຕໍ່ຄົນ, ໂຄງປະກອບເສດຖະກິດ ກະສິກຳ ກວມ 65%, ຂະຫຍາຍຕົວ 3,2%; ອຸດສະຫາກຳ ກວມ 10% ຂະຫຍາຍຕົວ 8,5% ແລະ ການບໍລິການ ກວມ 25% ຂະຫຍາຍຕົວ 10,3% ຊຶ່ງຈະສຸມໃສ່ໂຄງການໃຫຍ່ **ຄື:** ໂຄງການກໍ່ສ້າງຕະຫຼາດຖາວອນ ບ້ານນ້ຳອ້ອນ, ໂຄງການຂຸດຄົ້ນແກ້ວນາງຝານ, ການກໍ່ສ້າງເສັ້ນທາງ ໂພນສີ-ນ້ຳອ້ອນ, ນ້ຳອ້ອນ-ແທງທຸຍ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ປະຕິບັດຕົວເລກມະຫາພາກ, ເປົ້າໝາຍ ແລະ ຈຸດສຸມ ການພັດທະນາທີ່ໄດ້ລະບຸໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມຂອງ 7 ເມືອງໃຫ້ເປັນໂຄງການ ແລະ ແຜນການຈັດຕັ້ງປະຕິບັດລະອຽດ.

2) ສູ້ຊົນ ເຮັດໃຫ້ເຂດທີ່ໄດ້ກຳນົດເປັນເຂດພັດທະນາເຂດເສດຖະກິດ ໄດ້ຮັບການພັດທະນາ ເຊັ່ນ: ເຂດເສດຖະກິດພິເສດ ສົ້ນຂົວນ້ຳຂອງແຫ່ງທີ 5, ວຽງຄຳ-ທ່າສະອາດ, ນ້ຳຫາງາງ, ດອນລົ່ນ ປາກນ້ຳຊັນ ແລະ ອ່າງຫ້ວຍສຽດ.

**4.5.2.2 ເຂດເສດຖະກິດພິເສດໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງພາກພື້ນ ແລະ ສາກົນ.**

ນຳໃຊ້ເຂດເສດຖະກິດສົ້ນຂົວນ້ຳຂອງແຫ່ງທີ 5 ເປັນເຂດເສດຖະກິດສະເພາະ (ບ່ອນຄ່ຽນຖ່າຍສິນຄ້າ, ຮ້ານຄ້າປອດພາສີ, ສະຖານທີ່ຫ້ອງປະຊຸມ-ສຳມະນາ, ອາຄານທີ່ພັກຕ່າງໆ, ບ່ອນຈັດຕະຫຼາດນັດສິນຄ້າກະສິກຳອິນຊີ, ຮ້ານຄ້າໂອດອບ ແລະ ຮ້ານສະດວກຊື້), ເປັນຈຸດພັກເພື່ອເຊື່ອມໂຍງກັບເຂດທ່ອງທ່ຽວມໍລະດົກໂລກທົ່ງໄຫຫີນ ແຂວງຊຽງຂວາງ; ນະຄອນຫຼວງວຽງຈັນ, ອອກໃສ່ທາງເລກ 8 ເຂົ້າ ສສ ຫວຽດນາມ, ຈັງຫວັດບຶງການປະເທດໄທ ແລະ ແຂວງພາກໃຕ້ຂອງລາວ.

- ໃຫ້ເຂດເສດຖະກິດສົ້ນຂົວນ້ຳຂອງເຊື່ອມຈອດກັບເຂດທ່ອງທ່ຽວອ່າງຫ້ວຍສຽດ (ລົງທຶນດ້ວຍນັກລົງທຶນຂອງຈີນ), ເຂດທ່ອງທ່ຽວທຳມະຊາດໜອງຫຍ້າ, ເຂດທ່ອງທ່ຽວລະບົບນິເວດ ແລະ ຊີວະນາໆພັນ (ບ້ານກ້ອຍອຸດົມ ສຳຫຼວດໂດຍນັກລົງທຶນຂອງປະເທດຍີ່ປຸ່ນ).

- ໃຫ້ການສຳຫຼວດ, ສຶກສາຄົ້ນຄວ້າໂຮງງານເຫຼັກ ເລກ 1 ຢູ່ເມືອງທ່າພະບາດເປັນກໍລະນີສຶກສາ ສ້າງເປັນເມືອງອຸດສາຫະກຳທີ່ເຊື່ອມໂຍງກັບຕ່າງປະເທດ ທາງດ້ານແຮງງານ, ການທັດສະນະສຶກສາ, ການຕະຫຼາດ ແລະ ທີ່ສຳຄັນ ເປັນເມືອງຕົວແບບທາງດ້ານສິ່ງແວດລ້ອມໂຮງງານສີຂຽວ.

- ໃຫ້ເຂດວຽງຄຳ-ທ່າສະອາດ, ເຂື່ອນໄຟຟ້າເທີນ 1, ດິນປູກຝັງລຽບແຄມຂອງ, ທຳມະຊາດ ເມືອງປາກກະດິງ ເປັນເຂດພັດທະນາ ອຸດສາຫະກຳການຜະລິດການປຸງແຕ່ງ, ກະສິກຳ ແລະ ການທ່ອງທ່ຽວ ທີ່ສາມາດດຶງດູດການລົງທຶນ ໃນລັກສະນະການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ **(FDI “Internal & External” & ODA)** ໃຫ້ໄດ້ຫຼາຍ.

- ໃຫ້ເຂດເສດຖະກິດນ້ຳຫາງງ ແລະ ເທດສະບານ ຫຼັກຊາວ ເມືອງຄຳເກີດ ເປັນເຂດໃຈກາງການເຊື່ອມໂຍງເສດຖະກິດຊື້-ຂາຍ ທາງດ້ານຕາເວັນອອກ.

- ໃຫ້ ເມືອງບໍລິຄັນເປັນຈຸດເຊື່ອມຕໍ່ດ້ວຍການບໍລິການທີ່ດີ ຕາມເສັ້ນທາງ 4B ປ່ຽນມາເປັນເສັ້ນທາງ 5101 ຫຼື ເລກທີ 21, ທາງ 1 ດີ ໄປຫາແຂວງ ຊຽງຂວາງ ແລະ ເຊື່ອມຕໍ່ທາງ 13 ໃຕ້.

- ໃຫ້ເຂດບ້ານຜາບໍ່ ເມືອງວຽງທອງ ເປັນເຂດເຊື່ອມໂຍງການລົງທຶນດ້ວຍການລ້ຽງ (ງົວ, ແບ້) ປູກພືດສະອາດ; ເມືອງໄຊຈຳພອນ ເປັນເຂດເຊື່ອມໂຍງດ້ານການທ່ອງທ່ຽວທຳມະຊາດ **ພູຂຽວ-ນ້ຳໃສ.**

- ນຳໃຊ້ເສັ້ນທາງ ເລກ 13 ໃຕ້, ທາງເລກ 8, ທາງ ເລກ 4B ປ່ຽນມາເປັນເສັ້ນທາງ 5101 ຫຼື ເລກທີ 21, ທາງ 1 ດີ, ທາງ 1 ອີ ເປັນວົງຈອນເຊື່ອມໂຍງການທ່ອງທ່ຽວ (ຊົມ, ຊື້ ແລະ ໃຊ້) ຕາມບ້ານ ແລະ ຊຸມຊົນແຕ່ລະເຂດ.

- ສະເໜີກະຊວງການຕ່າງປະເທດ ຈັດກອງປະຊຸມກັບທູດ ແລະ ອົງການຈັດຕັ້ງສາກົນ ທີ່ມີສຳນັກງານ ແລະ ເຄື່ອນໄຫວວຽກງານຢູ່ ສປປ ລາວ ເພື່ອສະເໜີທ່າແຮງ, ເງື່ອນໄຂ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ນະໂຍບາຍຕ່າງໆ ຂອງແຂວງບໍລິຄຳໄຊ ໃນການດຶງດູດການລົງທຶນເຂົ້າໃສ່ການພັດທະນາໃຫ້ໄດ້ 1 ຄັ້ງຕໍ່ປີ.

- ຈັດກອງປະຊຸມ ຮ່ວມກັບ ອົງການ INGO ທີ່ມາເຄື່ອນໄຫວເຮັດວຽກຢູ່ແຂວງບໍລິຄຳໄຊ ໃນຫົວຂໍ້ກ່ຽວກັບການພັດທະນາເສດຖະກິດ-ສັງຄົມ ແບບຍືນຍົງ, ການຊອກຫາແຫຼ່ງທຶນ, ການມີສ່ວນຮ່ວມຂອງສັງຄົມໃນການພັດທະນາ, ການນຳໃຊ້ເງື່ອນໄຂ ແລະ ທ່າແຮງທີ່ເໝາະສົມ ຂອງແຂວງເຂົ້າໃສ່ການພັດທະນາ.

- ສືບຕໍ່ພົບປະແລກປ່ຽນບົດຮຽນກັບແຂວງຮ່າຕິ໋ງ, ເຫງະອານ ສສ ຫວຽດນາມ ແລະ ຈັດກອງປະຊຸມວຽກງານຊາຍແດນກັບແຂວງໜອງຄາຍ, ບຶງການ ແລະ ນະຄອນພະນົມ ປະເທດໄທປີລະຄັ້ງ.

- ປະສານສົມທົບໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນໂດຍສະເພາະ 3 ປະເທດ ທີ່ນຳໃຊ້ທາງເລກ 8A ແລະ ເລກ 12, ອະນຸພາກພື້ນແມ່ນ້ຳຂອງ **(GMS).**

- ແຕ່ງຕັ້ງຄະກຳມະການຄຸ້ມຄອງປຸກລະດົມຍາດແຍ່ງເອົາການຊ່ວຍເຫຼືອ ແລະ ການລົງທຶນ ເຂົ້າໃສ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງ ໃຫ້ໄດ້ຫຼາຍ, ຄຸ້ມຄອງບັນດາອົງການຈັດຕັ້ງສາກົນ, NGOs ແລະ ສະມາຄົມຕ່າງໆ ທີ່ເຄື່ອນໄຫວຢູ່ແຂວງ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

- ຜັດປ່ຽນກັນຈັດຕັ້ງການເຄື່ອນໄຫວພົບປະແລກປ່ຽນບົດຮຽນກັບແຂວງຮ່າຕິ໋ງ, ເຫງະອານ ແລະ ແຂວງອື່ນໆ ສສ ຫວຽດນາມ, ພົວພັນ-ຮ່ວມມື, ປະສານງານທາງດ້ານວິຊາການ ແລະ ຂະແໜງການທີ່ກ່ຽວຂ້ອງປະຊຸມປຶກສາຫາລື, ແລກປ່ຽນບົດ ຮຽນກ່ຽວກັບການຜະລິດ, ການຄ້າ, ການລົງທຶນ ແລະ ອື່ນໆ ໃຫ້ເປັນປົກກະຕິ.

- ຈັດກອງປະຊຸມຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນ ກັບແຂວງ ໜອງຄາຍ, ບຶງການ ແລະ ນະຄອນພະນົມ ປະເທດໄທ ໃຫ້ເປັນປົກກະຕິ, ປຶກສາຫາລືດ້ານວິຊາການ ແລະ ພັດທະນາຂີດຄວາມສາມາດໃນການແຂ່ງຂັນດ້ານການຄ້າຂອງຜູ້ປະກອບການ ແລະ ກະກຽມທຸກເງື່ອນໄຂ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການສ້າງຂົວມິດຕະພາບ ແຫ່ງທີ 5 ໃຫ້ສຳເລັດຕາມລະດັບຄາດໝາຍ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ສ້າງລາຍຮັບໃຫ້ສັງຄົມແບບຍືນຍົງ ແລະ ທົ່ວເຖິງ ດ້ວຍການບໍລິການຄົບວົງຈອນ ແລະ ບໍລິການທີ່ດີ.

2) ຊຸກຍູ້ໃຫ້ທຸກພາກສ່ວນໃນຂົງເຂດເສດຖະກິດ ແລະ ສັງຄົມ ພ້ອມກັນຂັບເຄື່ອນ ດ້ວຍການແບ່ງໄລຍະ ແລະ ກຳນົດເຂດ ການພັດທະນາໄປຕາມເງື່ອນໄຂຂອງແຕ່ລະເຂດ ແລະ ແຕ່ລະທ້ອງຖິ່ນ.

3) ສຸມໃສ່ດຶງດູດການລົງທຶນຂອງ **FDI** ແລະ **ODA** ດ້ວຍສຶກສາຄວາມສາມາດເປັນໄປໄດ້ກ່ອນການລົງທຶນເປັນຕົ້ນ: 1) ສາມາດອະທິບາຍໄດ້ທາງດ້ານຜະລິດຕະພັນ ແລະ ການບໍລິການ, 2) ການສະໜອງ ແລະ ຄວາມຕ້ອງການທາງດ້ານການຕະຫຼາດ, 3) ວິທີທາງການຜະລິດ, 4) ທາງດ້ານການບໍລິການ ແລະ ການຕອບສະໜອງພື້ນຖານໂຄງລາງ, 5) ຄັດເລືອກສະຖານທີ່ທີ່ຖືກຕ້ອງ, 6) ຄາດຄະເນທຶນ ແລະ ການບໍລິຫານທຶນ, 7) ຄາດຄະເນການຂາຍລາຍຮັບ ແລະ ກຳໄລ.

### 4.5.3 ວຽກຈຸດສຸມທີ 3: ພື້ນຖານໂຄງລ່າງໄດ້ຮັບການພັດທະນາ ແລະ ສາມາດເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ ທັງຍັງສາມາດເຊື່ອມຈອດກັບພາກພື້ນ ແລະ ສາກົນ.

ແຂວງບໍລິຄຳໄຊມີທ່າແຮງທາງດ້ານທີ່ຕັ້ງ ໂດຍສະເພາະ ໄລຍະທາງເຊື່ອມຈອດກັບປະເທດອ້ອມຂ້າງທີ່ສັ້ນ, ເປັນສີ່ແຍກກະຈາຍການເຊື່ອມໂຍງທີ່ເໝາະສົມກັບປາຍທາງທຸລະກິດ ແລະ ການທ່ອງທ່ຽວ, ຕັ້ງຢູ່ໃນແນວພື້ນທີ່ພັດທະນາເສດຖະກິດ **(Economic Corridors Development)** ແລະ ເປັນພື້ນທີ່ຮ່ວມພັດທະນາ 3 ປະເທດ 9 ແຂວງ ນຳໃຊ້ທາງເລກ 8 ແລະ ເລກທີ 12; ສະນັ້ນ, ແຂວງບໍລິຄຳໄຊ ຈຶ່ງມີສັກກາຍະພາບ ທີ່ຈະກາຍເປັນປະຕູເສດຖະກິດທີ່ສຳຄັນໃນພາກພື້ນ ໂດຍຖືເອົາການບໍລິການທາງຜ່ານເປັນສຳຄັນ ອຳນວຍຄວາມສະດວກຂອດບໍລິການໃຫ້ດີຂຶ້ນກວ່າເກົ່າ ດ້ວຍການນຳໃຊ້ຂົວນ້ຳຂອງ ແຫ່ງທີ່ 5 ແລະ ເຂດເສດຖະກິດສົ້ນຂົວໃຫ້ເປັນປະໂຫຍດສູງສຸດ ສຳລັບການພັດທະນາແຕ່ລະເມືອງ.

- ເນື່ອງຈາກແຂວງບໍລິຄຳໄຊ ເປັນແຂວງພາກກາງຂອງປະເທດ ມີທາງຜ່ານສູ່ຕາເວັນຕົກ - ຕາເວັນອອກ; ສະນັ້ນ, ແຂວງບໍລິຄຳໄຊ ຍັງສືບຕໍ່ຍຶດໝັ້ນ ພັນທະການຮ່ວມມືເຊື່ອມໂຍງຕ່າງຝ່າຍຕ່າງມີຜົນປະໂຫຍດກັບທຸກປະເທດໃນພາກພື້ນ ກໍ່ຄືບັນດາປະເທດລຸ່ມແມ່ນນ້ຳຂອງ.

- ນຳໃຊ້ທ່າແຮງຂອງ ພື້ນທີ່ເຂົ້າໃນການສ້າງລາຍຮັບໃຫ້ແຂວງ **ເປັນຕົ້ນ:** ຈັດງານຕະຫຼາດນັດຊາຍແດນຢູ່ບັນດາເມືອງທີ່ມີເງື່ອນໄຂ ເຊັ່ນ: ຕະຫຼາດນັດເຂົ້າໜຽວ, ປາກນ້ຳຈີດ, ໜາກກ້ວຍຢູ່ດ່ານສາກົນ ນ້ຳພາວ-ເກົາແຈ໊ວ, ຕະຫຼາດນັດຊາຍແດນສິນຄ້າທົ່ວໄປ ຢູ່ດ່ານທ້ອງຖິ່ນ ນ້ຳອ້ອນ-ແທງຖຸຍ (ສສ ຫວຽດນາມ); ບ້ານຫວຍ ເມືອງທ່າພະບາດ - ອຳເພີເປີງຈານ ຈັງຫວັດໜອງຄາຍ, ບ້ານທ່າສະອາດ ເມືອງປາກກະດິງ-ອຳເພີບຸ່ງຄ້າ ຈັງຫວັດບຶງການ ປະເທດໄທ.

- ສ້າງເງື່ອນໄຂໃຫ້ສິນຄ້າກະສິກຳຂອງຊາວບ້ານໄດ້ເຊັນສັນຍາ ແລກປ່ຽນ ຊື້-ຂາຍກັບປະເທດໃກ້ຄຽງແບບສິນຄ້າຊາຍແດນ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ຍຶດໝັ້ນແນວທາງການຕ່າງປະເທດ ດ້ວຍໄມຕີຈິດມິດຕະພາບ, ຮັກສາສັນຕິພາບ, ເອກະລາດ, ມິດຕະພາບ, ຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ ແລະ ເປີດກວ້າງການພົວພັນກັບຕ່າງປະເທດ, ເຂດແຄວ້ນຫຼາຍທິດ, ຫຼາຍຝ່າຍ, ຫຼາຍລະດັບບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ສືບຕໍ່ປັບປຸງ ແລະ ເພີ່ມທະວີການພົວພັນມິດຕະພາບ, ຄວາມສາມັກຄີ ແລະ ການຮ່ວມມືແບບພິເສດຮອບດ້ານກັບແຂວງແຮກສ໋ຽວອ່າຕິ້ງ ແລະ ແຂວງ ເຫງະອານ ແລະ ບັນດາແຂວງ ສສ ຫວຽດນາມ.

2) ສືບຕໍ່ພົວພັນ-ຮ່ວມມືຖານະບ້ານໃກ້ເຮືອນຄຽງກັບແຂວງໜອງຄາຍ, ບຶງການ ແລະ ນະຄອນພະນົມ ປະເທດໄທທີ່ມີຊາຍແດນຮ່ວມກັນ.

**4.6. ເປົ້າໝາຍທີ 6: ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ ແລະ ສັງຄົມໄດ້ຮັບການປົກປ້ອງຕາມທິດລັດແຫ່ງກົດໝາຍຢ່າງມີຄວາມສັກສິດ.**

**4.6.1 ວຽກຈຸດສຸມທີ 1: ເພີ່ມທະວີການຄຸ້ມລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ, ປັບປຸງກົນໄກການຕ່າງໆເປັນຕົ້ນ: ການປະສານງານດ້ວຍຫຼາຍຮູບແບບ ແລະ ວ່ອງໄວຂຶ້ນ.**

ໃນເງື່ອນໄຂ ທີ່ເຕັກໂນໂລຊີ ໃຫ້ຄວາມສະດວກ ແລະ ເອື້ອອຳນວຍ ໃນໄລຍະຜ່ານມາ ວຽກງານສ່ວນໜຶ່ງທີ່ໄດ້ນຳໃຊ້ເຕັກໂນໂລຊີ ເຂົ້າໃນການປະສານງານເຫັນວ່າມີຜົນປະໂຫຍດຫຼາຍ; ສະນັ້ນ, ໃນຊຸມປີຕໍ່ໜ້າການນຳໃຊ້ສື່ທາງອີເລັກໂຕນິກ ເຂົ້າໃນວຽກງານການຄຸ້ມຄອງບໍລິຫານລັດຈຶ່ງແມ່ນທາງເລືອກໃນການຈັດຕັ້ງປະຕິບັດ, ແຕ່ທາງດ້ານເນື້ອໃນຕ່າງໆ ກ່ອນຈະອອກມາເປັນນິຕິກຳປະກາດໃຊ້ໃຫ້ເໝາະສົມ ແລະ ມີຄວາມຜິດພາດໜ້ອຍທີ່ສຸດ ການຄຸ້ມຄອງບໍລິຫານລັດຮັບໃຊ້ສັງຄົມໃຫ້ມີປະສິດທິພາບຈຶ່ງແມ່ນປັດໄຈສຳຄັນ **ດັ່ງນີ້:**

- ພະນັກງານນຳພາ ແລະ ຫົວໜ້າ ຢູ່ແຕ່ລະຂະແໜງການ ຕ້ອງເປັນເຈົ້າການນຳພາ-ຊີ້ນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃຫ້ບັນລຸຕາມທິດທາງຄາດໝາຍທີ່ວາງອອກ ລວມທັງແບ່ງຄວາມຮັບຜິດຊອບໃຫ້ຂັ້ນຂະແໜງການ ແລະ ທ້ອງຖິ່ນຊຸກຍູ້ການຈັດຕັ້ງປະຕິບັດວຽກງານໃນແຕ່ລະຂົງເຂດ ຕາມພາລະບົດບາດ ແລະ ການມອບໝາຍ.

- ພະນັກງານ, ສະມາຊິກພັກ, ລັດຖະກອນ, ກຳມະກອນ, ນັກຮຽນຮູ້ປັນຍາຊົນ, ປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆ, ຊາວຕ່າງດ້າວຜູ້ບໍ່ມີສັນຊາດທີ່ດຳລົງຊີວິດຢູ່ລາວ, ນັກທຸລະກິດ, ພາກລັດ ແລະ ເອກະຊົນ ລວມທັງນັກທຸລະ ກິດຕ່າງປະເທດ ທີ່ມາລົງທຶນຢູ່ແຂວງບໍລິຄຳໄຊໃຫ້ພ້ອມກັນເຊີດຊູນໍ້າໃຈເປັນເຈົ້າປະເທດຊາດ, ສາມັກຄີເປັນຈິດໜຶ່ງໃຈດຽວ, ເດັດດ່ຽວຜ່ານຜ່າອຸປະສັກຕ່າງໆ, ສູ້ຊົນເຂົ້າຮ່ວມຈັດຕັ້ງປະຕິບັດວຽກງານສຳຄັນ ທີ່ລັດຖະບານວາງອອກ ໃຫ້ປະກົດຜົນເປັນຈິງ ເພື່ອຜົນປະໂຫຍດຂອງຊາດ, ຂອງແຂວງ, ຂອງປະຊາຊົນ ແລະ ຂອງພວກເຮົາໝົດທຸກຄົນ.

- ຍົກສູງສະຕິລະວັງຕົວຕໍ່ຜູ້ບໍ່ຫວັງດີ, ເພີ່ມທະວີຄວາມສາມັກຄີເປັນຈິດໜຶ່ງໃຈດຽວ, ເດັດດ່ຽວຕ້ານກົນອຸບາຍຫັນປ່ຽນໂດຍສັນຕິ ຂອງອິດທິກຳລັງປໍລະປັກ, ບໍ່ໃຫ້ຕົກຢູ່ໃນກົນອຸບາຍທຳລາຍມ້າງເພ, ຍຸແຍ່ໃສ່ຮ້າຍປ້າຍສີຂອງພວກຄົນບໍ່ດີ ຢູ່ພາຍໃນ ແລະ ຕ່າງປະເທດ ໃນທຸກຮູບແບບ.

- ເນື້ອໃນນິຕິກຳ ທີ່ອອກມາຈັດຕັ້ງປະຕິບັດຕ້ອງມີຈຸດສຸມ, ຮັບປະກັນຕໍ່ຜົນປະໂຫຍດສ່ວນລວມ, ບໍ່ແມ່ນຂອງກຸ່ມຄົນຈຳນວນໜ້ອຍ ແຕ່ໄປກະທົບເຖິງຜົນປະໂຫຍດຂອງກຸ່ມຄົນຈຳນວນຫຼາຍ ແລະ ເປັນເວລາຍາວ.

- ເພີ່ມທະວີການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າກ່ຽວກັບແຜນສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ເພື່ອຮັບປະກັນຄວາມສອດຄ່ອງກັບ ແນວທາງນະໂຍບາຍຂອງພັກ, ການພັດທະນາເສດຖະກິດ-ສັງຄົມ, ການປົກປ້ອງສິດ ແລະ ຜົນປະໂຫຍດລວມຂອງແຂວງ, ລວມໝູ່ ແລະ ປະຊາຊົນບັນດາເຜົ່າພາຍໃນແຂວງໃຫ້ໄດ້10ສະບັບຂຶ້ນໄປ; ການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ເປັນຕົ້ນ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຂວງ, ໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ ຕ້ອງຕອບສະໜອງຄວາມຮຽກຮ້ອງຕ້ອງການ ໃນການປົກປັກຮັກສາ ແລະ ພັດທະນາແຂວງບໍລິຄຳໄຊ ໃຫ້ມີສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ-ຍຸຕິທຳ.

- ສືບຕໍ່ປັບປຸງກົນໄກປະສານງານກັບອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ອົງການກວດສອບພາກກາງ ໃນການເພີ່ມທະວີການຕິດຕາມກວດກາ ເພື່ອເຮັດໃຫ້ທຸກພາກສ່ວນອຳນາດລັດຂັ້ນທ້ອງຖິ່ນເຄື່ອນໄຫວຖືກຕ້ອງຕາມພາລະບົດບາດ ທີ່ໄດ້ກຳນົດໄວ້ໃນກົດໝາຍ ຢ່າງມີປະສິດທິພາບ.

- ສືບຕໍ່ປັບປຸງກົງຈັກການຈັດຕັ້ງ, ບຸກຄະລາກອນຂອງສະພາປະຊາຊົນຂັ້ນແຂວງ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ມີຄວາມຮູ້-ຄວາມສາມາດໃນການປະຕິບັດສິດ ແລະ ໜ້າທີ່ ເພື່ອຮັບປະກັນການເປັນເສນາທິການໃຫ້ແກ່ ສະພາປະຊາຊົນຂັ້ນແຂວງ ຕາມທີ່ກົດໝາຍກຳນົດ ໃຫ້ມີປະສິດທິພາບ.

- ສືບຕໍ່ເອົາໃຈໃສ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງທຸກຂອງປະຊາຊົນທີ່ຍື່ນຜ່ານສະພາປະຊາຊົນແຂວງ ໃຫ້ທັນກັບເວລາ ແລະ ສອດຄ່ອງກັບກົດໝາຍທີ່ໄດ້ກຳນົດໄວ້.

- ການກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ IX ແລະສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ II ຕ້ອງຮັບປະກັນໃຫ້ສາມາດເລືອກໄດ້ຕົວແທນຂອງປະຊາຊົນ ທີ່ມີມາດຕະຖານ, ເງື່ອນໄຂທີ່ກໍານົດໄວ້ໃນກົດໝາຍ **ເປັນຕົ້ນ:** ແມ່ນຜູ້ທີ່ມີນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນລາວ, ມີຄວາມຈົງຮັກພັກດີ, ບໍລິສຸດສັດຊື່ຕໍ່ພັກ, ຕໍ່ປະເທດຊາດ, ກໍາແໜ້ນ ແລະ ຢຶດໝັ້ນແນວທາງປ່ຽນແປງໃໝ່, ລັດຖະທໍາມະນູນ ແລະ ກົດໝາຍ; ມີຄວາມຮູ້ຄວາມສາມາດ, ມີບົດຮຽນ ແລະ ປະສົບປະການໃດໜຶ່ງທີ່ແນ່ນອນຈາກສາຂາອາຊີບຕ່າງໆ ທັງພາກລັດ ແລະ ເອກະຊົນ, ມີຕົວແທນຈາກສູນກາງ ແລະ ທ້ອງຖິ່ນ, ຕົວແທນຂອງເພດ, ເຜົ່າ ໃນອັດຕາສ່ວນທີ່ເໝາະສົມ; ເປັນຜູ້ທີ່ມີຄວາມຕັດສິນໃຈ ເສຍສະຫຼະຜົນປະໂຫຍດສ່ວນຕົວ ເພື່ອປະເທດຊາດ ແລະ ປະຊາຊົນບັນດາເຜົ່າ.

- ສົ່ງເສີມວຽກງານຍຸດຕິທໍາ, ໂຄສະນາເຜີຍແຜ່ກົດໝາຍ ປະຕິບັດຄໍາຕັດສິນຂອງສານ ແລະ ແກ້ໄຂບັນຫາຂໍ້ຂັດແຍ່ງຕ່າງໆ.

- ການປະສານງານ ແຕ່ລະຄັ້ງໃນແຕ່ລະແໜງການ ຕ້ອງເຫັນໄດ້ເຖິງ ຄວາມສໍາຄັນທີ່ເປັນອັນລວມຂອງພັກ-ລັດ ໃນການພັດທະນາ, ແມ່ນຄວາມຈໍາເປັນພາວະວິໄສ ທີ່ຕ້ອງພ້ອມກັນແກ້ໄຂປັບປຸງ, ໃຫ້ຄວາມສໍາຄັນກັບທຸກພາກສ່ວນ ໃນການປຶກສາຫາລື.

- ຫຼີກລ້ຽງການປະສານງານແບບເດັດຖານ ໂດຍໃຫ້ພາກສ່ວນອື່ນຕ້ອງປະຕິບັດຕາມ ໂດຍບໍ່ໄດ້ຮັບການຄົ້ນຄ້ວາຮ່ວມກັນ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ປັບປຸງກົງຈັກການຈັດຕັ້ງໃຫ້ກະທັດຮັດ, ເບົາບາງ ແລະ ສົມເຫດສົມຜົນ; (ພ້ອມທັງຄົ້ນຄວ້າ-ຜັນຂະຫຍາຍດໍາລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຂະແໜງການຕົນທັງແຂວງ ແລະ ເມືອງໃຫ້ແທດກັບຕົວຈິງ.

2) ສະກັດກັ້ນ ແລະ ຕ້ານປະກົດການຫຍໍ້ທໍ້ໃນການຄຸ້ມຄອງບໍລິຫານລັດ.

3) ຊຸກຍູ້ການຈັດຕັ້ງປະຕິບັດນະໂຍບາຍ, ຄໍາຂວັນຮັກຊາດ ແລະ ພັດທະນາ.

4) ສຸມໃສ່ ຕິດຕາມ,ກວດກາ ວຽກງານຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.

5) ຮັບປະກັນຄວາມຍຸຕິທໍາທາງສັງຄົມ, ເປັນຕົ້ນຈັດຕັ້ງປະຕິບັດຄໍາຕັດສິນຂອງສານ.

- ສຸມໃສ່ໂຄສະນາເຜີຍແຜ່ກົດໝາຍ ທາງສື່ມວນຊົນ ໃຫ້ໄດ້ 160 ຄັ້ງ ລົງເຜີຍແຜ່ຢູ່ໂຮງຮຽນ ແລະ ອົງການປົກຄອງອື່ນໆ 1.350 ຄັ້ງ.

- ປັບປຸງໜ່ວຍໄກ່ເກ່ຍຂັ້ນບ້ານໄດ້ 100%.

- ຢັ້ງຢືນ ທະບຽນສານໃຫ້ ໄດ້ 5.000 ສະບັບ, ປັບປຸງນິຕິກໍາລຸ່ມກົດໝາຍໃຫ້ໄດ້ 10 ສະບັບ.

6) ຈັດຕັ້ງປະຕິບັດບາງວຽກຈຸດສຸມຂອງແຕ່ລະຂະແໜງການເປັນແຕ່ລະໄລຍະ (ທຸກໆໄຕມາດ).

**4.6.2 ວຽກຈຸດສຸມທີ 2: ສ້າງ ແລະ ປັບປຸງ ລະບຽບການຕ່າງໆ ໃຫ້ມີຄວາມສອດຄ່ອງ ແລະ ຮັດກຸມຫຼາຍຂຶ້ນ, ເປັນເຈົ້າການຄົ້ນຄ້ວາກ່ຽວກັບການແບ່ງຂັ້ນຄຸ້ມຄອງພາຍໃນຂະແໜງການຕົນ, ມອບສິດ, ມອບຄວາມຮັບຜິດຊອບໃຫ້ແກ່ທ້ອງຖິ່ນຮາກຖານຢ່າງຈະແຈ້ງຂາດຕົວ.**

- ບັນດາຂະແໜງການທີ່ຕິດພັນກັບການບໍລິການສັງຄົມຕ້ອງມີນິຕິກໍາລຸ່ມກົດໝາຍ ເພື່ອເປັນບ່ອນອີງໃນການເຄື່ອນໄຫວ.

- ການສ້າງນິຕິກໍາລຸ່ມກົດໝາຍທີ່ເປັນການບໍລິການສັງຄົມທົ່ວໄປ ຕ້ອງຜ່ານຂະບວນການຂອງສະພາປະຊາຊົນຂັ້ນຕ່າງໆທີ່ເຫັນວ່າເໝາະສົມ, ສໍາລັບນິຕິກໍາ ສະເພາະຮັບໃຊ້ຂອງຂະແໜງການຕ້ອງມີບ່ອນອີງທີ່ໜັກແໜ້ນ ແລະ ເປັນສິ່ງຮັບໃຊ້ຜົນປະໂຫຍດລວມຂອງສັງຄົມ.

- ເຮັດໃຫ້ຄົນໄດ້ເຂົ້າຫາວຽກຢ່າງແທດເຖິງ, ຖືເອົາຕໍາແໜ່ງງານເປັນຫຼັກ, ເອົາກົດໝາຍລັດຖະກອນເປັນບ່ອນອີງ ແລະ ນໍາເອົາທີ່ຕັ້ງພາລະບົດບາດຂອງພາກສ່ວນທີ່ກ່ຽວຂ້ອງມາຈັດຕັ້ງປະຕິບັດ.

- ຈໍານວນບຸກຄະລາກອນຂັ້ນນໍາພາຂອງພັກ-ລັດ ສໍາລັບພະແນກການ, ຫ້ອງການຂັ້ນເມືອງ, ເຫັນສົມຄວນປະຕິບັດຕາມຄໍາສັ່ງເລກທີ 11/ຄລສພ ລົງວັນທີ 21 ສິງຫາ 2019.

- ຈໍານວນພົນໃນຂົງເຂດລັດຖະກອນ ຕ້ອງເລັ່ງໃສ່ຄຸນນະພາບເປັນຫຼັກ ເອົາຫຼາຍວຽກຄ້າຍຄືກັນມາໃຫ້ກຸ່ມຄົນຈໍານວນໜ້ອຍຮັບຜິດຊອບ ເພື່ອຫຼຸດຜ່ອນການໃຊ້ຈ່າຍງົບປະມານບໍລິຫານ ຜູ້ໜຶ່ງເຮັດຫຼາຍວຽກ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານ ດັ່ງນີ້:**

1) ໃຫ້ກົງຈັກການຈັດຕັ້ງທຸກຂັ້ນ, ທຸກຂະແໜງການກະທັດຮັດ,

2) ໃຫ້ອົງການຈັດຕັ້ງຂອງລັດ ແຕ່ຂັ້ນແຂວງຮອດເມືອງ ເຫັນວ່າໃນພາກສ່ວນໃດມີຂະແໜງການວຽກງານຄ້າຍຄຽງກັນ ເພື່ອເປັນການຫຼຸດຜ່ອນງົບປະມານບໍລິຫານ ກໍ່ສາມາດຍຸບຮວມເຂົ້າກັນ.

3) ເສີມຂະຫຍາຍສິດເປັນເຈົ້າໃຫ້ແກ່ທ້ອງຖິ່ນຮາກຖານ ໃນການປະຕິບັດພາລະບົດບາດມະຫາພາກ.

4) ບຸກທະລຸ ເປັນເຈົ້າການຄົ້ນຄວ້າກ່ຽວກັບການ ແບ່ງຂັ້ນຄຸ້ມຄອງພາຍໃນຂະແໜງການຂອງຕົນ ແລະ ມອບສິດ, ມອບຄວາມຮັບຜິດຊອບໃຫ້ແກ່ທ້ອງຖິ່ນຮາກຖານຢ່າງຈະແຈ້ງຂາດຕົວ.

**4.6.3 ວຽກຈຸດສຸມທີ 3: ສືບຕໍ່ຈັດຕັ້ງປະຕິບັດວຽກງານ 3 ສ້າງໃຫ້ມີປະສິດທິຜົນ ຊຸກຍູ້ສົ່ງເສີມໃຫ້ວຽກງານ 3 ສ້າງ ເປັນບາດລ້ຽວໃໝ່ໃນການແບ່ງຂັ້ນຄຸ້ມຄອງ.**

ພວກເຮົາຕ້ອງເຂົ້າໃຈວ່າ ວຽກງານ 3 ສ້າງ ແມ່ນການເອົາມະຕິ IX ເຂົ້າໃສ່ວຽກຕົວຈິງ, ແມ່ນການປະຕິບັດທິດນຳຍຸດທະສາດກ່ຽວກັບການສ້າງຄວາມໝັ້ນຄົງໃຫ້ແກ່ລັດ ປະຊາທິປະໄຕ ປະຊາຊົນ ແລະ ທິດນຳກ່ຽວກັບ 4 ບຸກທະລຸໃນພາກຕົວຈິງ; ສະນັ້ນ, ຈຶ່ງເວົ້າແບບສັງລວມໄດ້ວ່າ 3 ສ້າງແມ່ນການປະຕິວັດອັນເລິກເຊິ່ງເຖິງຖອງໃນເງື່ອນໃໝ່ ຍ້ອນ 3 ສ້າງ ແມ່ນວຽກທີ່ມີລັກສະນະຍຸດທະສາດທັງໃນສະເພາະໜ້າ ແລະ ຍາວນານ ເພື່ອບັນລຸຈຸດໝາຍ **ເຮັດໃຫ້ລະບອບປະຊາທິປະໄຕ ປະຊາຊົນຂອງພວກເຮົາ ມີຄວາມໝັ້ນຄົງ.** ພວກເຮົາຈຶ່ງບັນລຸໄດ້ຈຸດມຸ້ງໝາຍທີ່ວ່າ " ***ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີປະຊາທິປະໄຕ, ຍຸດຕິທຳ ແລະ ສີວິໄລ*** "ດ້ວຍການສ້າງບັນດາປະຖົມປັດໄຈ ແລະ ເງື່ອນໄຂຕ່າງໆໃຫ້ມີ ລັກສະນະຮອບດ້ານ ກວມເອົາທາງດ້ານການເມືອງ, ດ້ານເສດຖະກິດ, ດ້ານສັງຄົມວັດທະນະທຳ ແລະ ດ້ານປ້ອງກັນຊາດປ້ອງກັນຄວາມສະຫງົບ; ສະນັ້ນ, ຈຶ່ງແມ່ນໜ້າທີ່ລວມຂອງທົ່ວພັກ, ທົ່ວລັດ, ທົ່ວກອງກຳລັງ ແລະ ທົ່ວປວງຊົນເຮົາຮ່ວມກັນເຮັດ; ໃນໄລຍະຜ່ານມາພວກເຮົາເຫັນວ່າ 3 ສ້າງ ພວມເຂົ້າສູ່ການປະຕິບັດຕົວຈິງ ດ້ວຍບັນຍາກາດອັນຟົດຟື້ນ ແລະ ໄດ້ຮັບການສະໜັບສະໜູນຢ່າງກວ້າງຂວາງ ຈາກທົ່ວພັກ ແລະ ທົ່ວສັງຄົມ, ເຖິງວ່າໃນເບື້ອງຕົ້ນຈະມີບັນຫາດ້ານຄວາມເຂົ້າໃຈ ແລະ ມີອັນທີ່ເຮັດບໍ່ທັນຖືກໃນບາງດ້ານ ແຕ່ໂດຍລວມແລ້ວ 3 ສ້າງພວມສ້າງຄວາມເຊື່ອໝັ້ນຕໍ່ໝາກຜົນທີ່ເກີດຂຶ້ນໃນຕໍ່ໜ້າ; ດັ່ງນັ້ນ, ພວກເຮົາຕ້ອງສືບຕໍ່ຍູ້ແຮງຂະບວນການ 3 ສ້າງ ໃຫ້ເຂົ້າສູ່ລວງເລິກໃນຊຸມປີຕໍ່ໜ້າ ແລະ ສືບຕໍ່ນຳໃຊ້ວຽກງານດັ່ງກ່າວຢ່າງມີຈຸດສຸມ ແລະ ຖືກກັບຕົວຈິງ.

- ສ້າງໂຄງການຈຸດສຸມພັດທະນາ ແລະ ໂຄງການຜະລິດເປັນສິນຄ້າ ຕ້ອງມີຢູ່ທຸກໆເມືອງ ແລະ ທຸກໆບ້ານເປົ້າໝາຍ 3 ສ້າງ, ທັງນີ້ ກໍ່ເພື່ອແກ້ໄຂບັນຫາຕົວຈິງທີ່ຍັງມີຢູ່ບ່ອນນັ້ນ ໂດຍສະເພາະແມ່ນບັນຫາຄວາມທຸກຍາກຂອງຄອບຄົວ ແລະ ການບັນລຸເປົ້າໝາຍສະຫະສະຫວັດ.

- ພວກເຮົາເລືອກເອົາ 3 ເມືອງເປົ້າໝາຍ ແລະ ບ້ານເປົ້າໝາຍ 6 ບ້ານ ເຂົ້າໃນວຽກງານ 3 ສ້າງດ້ວຍການຍູ້ການພັດທະນາສູ່ບາດລ້ຽວໃໝ່ ຢ່າງແຂງແຮງເປັນຕົ້ນ: ເລັ່ງໃສ່ການສ້າງພື້ນໂຄງລ່າງ ທີ່ມີເງື່ອນໄຂເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດຄົວເຮືອນ ໂດຍສະເພາະການຫຼຸດຕົ້ນທຶນການຜະລິດ ແລະ ການສ້າງລາຍຮັບທີ່ຍືນຍົງ ຈາກການເຂົ້າເຖິງຕະຫຼາດທີ່ໝັ້ນຄົງ.

- ໂຄງການພັດທະນາ ແລະ ໂຄງການຜະລິດເປັນສິນຄ້າ ຢູ່ເມືອງ ແລະ ບ້ານເປົ້າໝາຍ 3 ສ້າງຕ້ອງມີລັກສະນະບຸລິມະສິດ ແລະ ມີຈຸດສຸມ, ໝາຍຄວາມວ່າ ສຸມໃສ່ເສີມຂະຫຍາຍທ່າແຮງ ແລະ ຄວາມສາມາດຂອງເມືອງ ແລະ ບ້ານເປົ້າໝາຍເປັນຫຼັກ ເຮັດໃຫ້ເມືອງນັ້ນ, ບ້ານນັ້ນ, ມີການພັດທະນາກ່ອນ ເພື່ອເປັນກຳລັງແຮງ ແລະ ກາຍເປັນບ່ອນຮຽນຮູ້ສາມາດເອົາບ້ານອື່ນມາຖອດຖອນຮຽນຮູ້ຕົວຈິງໄດ້ ແລ້ວຈຶ່ງຂະຫຍາຍໄປບ້ານອື່ນຕາມລຳດັບ. ວຽກງານດັ່ງກ່າວນີ້ ໃຫ້ພະແນການທີ່ກ່ຽວຂ້ອງ ລົງສົມທົບຕົວຈິງກັບເມືອງ ເພື່ອສ້າງແຜນໂຄງການລົງທຶນໂດຍສະເພາະ ການຊອກແຫຼ່ງທຶນຈາກແຫຼ່ງອື່ນ ທີ່ບໍ່ແມ່ນການລົງທຶນຂອງລັດໂດຍກົງ ແລະ ຕ້ອງມີການຈັດລະດັບບຸລິ ມະສິດວ່າ: ຄວນເຮັດອັນໃດກ່ອນ ແລະ ເຮັດອັນໃດພາຍຫຼັງ, ເພື່ອໃຫ້ເມືອງໃຫ້ບ້ານມີກິດຈະການພັດທະນາຕໍ່ເນື່ອງ ອັນສຳຄັນແມ່ນໃຫ້ສົມທົບແໜ້ນ ລະຫວ່າງ ການກໍ່ສ້າງພື້ນຖານໂຄງລ່າງ, ເສັ້ນທາງ, ກັບໂຄງການສົ່ງເສີມການຜະລິດເປັນສິນຄ້າ ແລະ ການບໍລິການສ້າງລາຍໄດ້ຕົວຈິງຂອງປະຊາຊົນ, ບໍ່ເນັ້ນໜັກແຕ່ດ້ານໃດດ້ານໜຶ່ງ; ສ່ວນໂຄງການ ດ້ານການສຶກສາ, ສາທາລະນະສຸກ, ໂຄງການດ້ານການປົກປັກຮັກສາຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ, ໂຄງການຝຶກອົບຮົມຍົກລະດັບຄວາມຮູ້ຂອງພະນັກງານຢູ່ຮາກຖານ, ທັງໝົດໂຄງການເຫຼົ່ານັ້ນ ລ້ວນແຕ່ມີພະນັກງານວິຊາການລົງເຮັດຕົວຈິງ; ສັງລວມໄດ້ວ່າ ການລົງຮາກຖານຂອງຂະແໜງການ ກໍ່ຕ້ອງລົງໄປຕາມ

ວຽກງານວິຊາສະເພາະຂອງໂຄງການເຫຼົ່ານັ້ນ, ຫາກບໍ່ແມ່ນລົງໄປເວົ້າແບບລວມໆ.

- ກ້າເຮັດ ກ້າຮັບຜິດຊອບໃນການແບ່ງຂັ້ນຄຸ້ມຄອງ ກໍ່ຄືການມອບສິດ, ມອບຄວາມຮັບຜິດຊອບ ແລະ ຈັດສັນຜົນປະໂຫຍດໃຫ້ແກ່ທ້ອງຖິ່ນ; ບັນຫາການຕອບສະໜອງພະນັກງານໃຫ້ເມືອງ ຕິດພັນກັບການປັບປຸງກົງຈັກໃຫ້ມີຄວາມສາມາດແບກຫາບພາລະໜ້າທີ່ໃໝ່ທີ່ເພີ່ມຂຶ້ນ ແລະ ບັນຫາການຈັດຕັ້ງນຳພາຂອງພັກຢູ່ຂັ້ນບ້ານ (ບ້ານໃຫຍ່) ເພື່ອໃຫ້ຖືກກັບກົດລະບຽບ ແລະ ສາມາດນຳພາການສ້າງບ້ານໃຫຍ່ໃຫ້ກາຍສີສັນເປັນຕົວເມືອງນ້ອຍ ແລະ ບັນຫາອື່ນໆອີກ, ຕ້ອງເຮັດດ້ວຍຄວາມຮອບຄອບ-ໜັກແໜ້ນ, ຄຳນຶງເຖິງອັນທີ່ເປັນຫຼັກການລວມ ແລະ ລະບຽບກົດໝາຍ ຕະຫຼອດຮອດມູນເຊື້ອ ແລະ ຈຸດພິເສດຂອງແຕ່ລະທ້ອງຖິ່ນຮາກຖານ ໂດຍຍຶດໝັ້ນໃນຫັດ ສະນະບຸກທະລຸ, ສູ້ຊົນເຮັດໃຫ້ສຳເລັດເປັນກ້າວໆ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານດັ່ງນີ້:**

1) ຊຸກຍູ້ສົ່ງເສີມການພັດທະນາເປັນບາດລ້ຽວໃໝ່ດ້ວຍການເລີ່ມຈາກການຄົ້ນຄວ້າກຳແໜ້ນທ່າແຮງຂອງແຕ່ລະບ່ອນ, ສຸມໃສ່ຄົ້ນຄວ້າເຮັດເປັນໂຄງການພັດທະນາ ແລະ ໂຄງການຜະລິດເປັນສິນຄ້າ ທີ່ແນໃສ່ເສີມຂະຫຍາຍທ່າ ແຮງກັບທີ່ ທີ່ມີຢູ່ແຕ່ລະເມືອງ ແລະ ຢູ່ແຕ່ລະບ້ານ.

2) ຊຸກຍູ້ສົ່ງເສີມການພັດທະນາໃຫ້ບ້ານ 3 ສ້າງເປັນບາດລ້ຽວໃໝ່ຢ່າງມີຈຸດສຸມ ແລະ ຖືກຕ້ອງຕາມຄວາມຈິງ.

**4.6.4 ວຽກຈຸດສຸມທີ 4: ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.**

ພາຍຫຼັງໄດ້ຮັບການປົດປ່ອຍ, ປະເທດເຮົາໄດ້ປະສົບກັບຄວາມຫຍຸ້ງຍາກ ແລະ ການທົດສອບອັນຂ້ຽວຂາດ ສັບສົນທີ່ນັບບໍ່ຖ້ວນ ເຊິ່ງເກີດມາຈາກການມ້າງເພທຳລາຍຢ່າງຮອບດ້ານ ແລະ ລຽນຕິດຂອງບັນດາອິດທິກຳລັງປໍລະປັກ, ບວກກັບຄວາມດ້ອຍພັດທະນາຫຼ້າຫຼັງຂອງລະບອບເກົ່າ ແລະ ຜົນຮ້າຍຈາກສົງຄາມທຳລາຍເຜົາຜານຢ່າງໜັກໜ່ວງຫຼາຍປີ, ແຕ່ພາຍໃຕ້ການນຳພາອັນປີຊາສາມາດຂອງພັກ, ພວກເຮົາໄດ້ທັບມ້າງກົນອຸບາຍມ້າງເພທຳລາຍ ແລະ ການປິດລ້ອມໂຈມຕີຂອງບັນດາອິດທິກຳລັງປໍລະປັກຢ່າງມີຜົນສຳເລັດ, ປົກປັກຮັກສາເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດໄວ້ໄດ້ຢ່າງໝັ້ນຄົງ.

**4.6.4.1 ວຽກງານດ້ານ ປກຊ.**

- ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງຕາມມະຕິ ເລກທີ 03 ຂອງກົມການເມືອງສູນກາງພັກຄືກົມກອງຕັ້ງທັບຢູ່ບ່ອນໃດ ຕັ້ງໜ້າເຂົ້າຮ່ວມ ແລະ ນຳພາປະຊາຊົນ ພັດທະນາເສດຖະກິດ-ສັງຄົມ ຕິດພັນກັບການນຳພາສ້າງທ່າສະໜາມປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ສູ້ຊົນເຮັດໃຫ້ສະພາບທົ່ວແຂວງ ມີຄວາມສະຫງົບ, ສັງຄົມເປັນລະບຽບຮຽບຮ້ອຍ, ສ້າງເງື່ອນໄຂໃຫ້ກັບການພັດທະນາເສດຖະກິດ-ສັງຄົມ ຂອງແຂວງຂະຫຍາຍຕົວຕໍ່ເນື່ອງ.

- ຕິດຕາມກຳແໜ້ນສະພາບການເຄື່ອນໄຫວຂອງສັດຕູ ແລະ ກຸ່ມຄົນບໍ່ດີ, ມີແຜນການຈັດວາງກຳລັງ, ສະກັດກັ້ນ ແລະ ແກ້ໄຂບັນຫາທີ່ຈະກໍ່ໃຫ້ເກີດຄວາມບໍ່ສະຫງົບໃຫ້ທັນເວລາ, ເອົາໃຈໃສ່ຊີ້ນຳແຜນການເຄື່ອນໄຫວກວດກາປ້ອງກັນເວນຍາມສຳນັກງານອົງການ, ລະບົບຄັງສາງ, ເສັ້ນທາງຍຸດທະສາດ, ການນຳຂັ້ນສູງ ແຂກພາຍໃນ ແລະ ຕ່າງປະເທດ, ບັນດາກອງປະຊຸມ, ວັນບຸນສຳຄັນຕ່າງໆ ໃຫ້ມີຄວາມສະຫງົບປອດໄພ 100%.

- ປັບປຸງກໍ່ສ້າງກຳລັງກອງຫຼອນ-ປ້ອງກັນຕົວທີ່ປະຈຳຢູ່ບ້ານ, ສຳນັກງານຫ້ອງການຕ່າງໆ ໃຫ້ສາມາດປົກປັກຮັກສາຄວາມສະຫງົບປອດໄພໄດ້ເປັນຢ່າງດີ; ສືບຕໍ່ຫັດແອບສ້າງບ້ານປ້ອມໝັ້ນສູ້ຮົບ, ກຸ່ມບ້ານສູ້ຮົບຕິດລ່ຽນ, ສ້າງຄອບ ຄົວ-ບ້ານປ້ອງກັນຊາດເຂັ້ມແຂງ, ຝຶກອົບຮົມວຽກງານປ້ອງກັນຊາດເປົ້າໝາຍ 3 ແລະ ເປົ້າໝາຍ 4.

- ສືບຕໍ່ຮັບປະກັນດ້ານພະລາທິການ-ເຕັກນິກ ໃຫ້ຂະຫຍາຍຕົວເພີ່ມຂຶ້ນ ທາງດ້ານປະລິມານ ແລະ ຄຸນນະພາບ.

- ເຮັດໃຫ້ປະເທດຊາດ ກໍ່ຄືແຂວງຂອງພວກເຮົາ ໄດ້ກ້າວເຂົ້າສູ່ສັງກາດໃໝ່, ສັງກາດແຫ່ງການສ້າງສາບ້ານເມືອງ ໄປສູ່ຄວາມຈະເລີນພັດທະນາ.

- ເອົາໃຈໃສ່ແກ້ໄຂບັນຫາເຂດເຊື່ອມຕໍ່ບັນດາແຂວງອ້ອມຂ້າງໃຫ້ມີຄວາມສະຫງົບ.

**4.6.4.2 ວຽກງານດ້ານ ປກສ.**

- ສືບຕໍ່ນຳເອົາການຄວາມສະຫງົບປອດໄພມາສູ່ສັງຄົມ, ເດັດດ່ຽວເຂັ້ມແຂງປົກປັກຮັກສາຜົນປະໂຫຍດອັນຊອບທຳຂອງພັກທີ່ຍາດມາໄດ້ໃຫ້ໝັ້ນຄົງຕໍ່ໄປ.

- ສືບຕໍ່ເດີນຕາມການນຳພາຂອງພັກ ທີ່ແທດເໝາະກັບຈຸດພິເສດຂອງປະເທດກໍ່ຄືແຂວງເຮົາໃນໄລຍະໃໝ່.

- ມີຄວາມສະດຸ້ງໄວຕໍ່ສະພາບການກຳແໜ້ນສະພາວະຄວາມເປັນຈິງຂອງໂລກ, ສຶກສາບົດຮຽນຂອງຕ່າງປະເທດ ຢ່າງມີການເລືອກເຟັ້ນ.

✓ **ເພື່ອບັນລຸເປົ້າໝາຍດັ່ງກ່າວພວກເຮົາສຸມໃສ່ບາງດ້ານ ດັ່ງນີ້:**

1) ຮັບປະກັນຄວາມສະຫງົບປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມໄດ້ໂດຍພື້ນຖານ, ອຳນາດການປົກຄອງຂອງລະບອບປະຊາທິປະໄຕປະຊາຊົນໄດ້ຮັບການສ້າງຕັ້ງ ແລະ ປັບປຸງນັບມື້ນັບໜັກແໜ້ນ ແລະ ເປັນລະບົບຄົບຊຸດ ແຕ່ສູນກາງລົງເຖິງທ້ອງຖິ່ນ ແລະ ຮາກຖານ.

2) ຮັບການຊ່ວຍເຫຼືອອັນໃຫຍ່ຫຼວງຈາກເພື່ອນມິດສາກົນເຂົ້າໃສ່ຄວາມໝັ້ນຄົງຂອງຊາດ.

3) ເພື່ອສ້າງເງື່ອນໄຂອັນຈຳເປັນໃຫ້ແກ່ການກຳນົດ ແລະ ຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມຮອບດ້ານໃນຊຸມປີຕໍ່ໜ້າ.

4) ສ້າງກຳລັງໃຫ້ມີທາດແທ້ປະຕິວັດ ແລະ ມີຄວາມເຂັ້ມແຂງທາງດ້ານຍຸດໂທປະກອນ.

5) ໃຫ້ຄຳປຶກສາແກ່ຜູ້ຕິດຢາເສບຕິດ ແລະ ຄອບຄົວ ພ້ອມທັງສຸມໃສ່ວຽກໂຄສະໜາອົບຮົມໃຫ້ມີຈຸມສຸມ.

6) ສຸມໃສ່ປັບປຸງ-ເພີ່ມປະສິດຖິພາບກົນໄກປະສານງານດ້ອຍລະບົບການຕິດຕໍ່ສື່ສານທີ່ດີ, ການຮ່ວມມືທີ່ດີ ແລະ ການປະສານງານທີ່ດີ.

## 5. ທິດທາງການລົງທຶນ.

ໃນ 5 ປີຕໍ່ໜ້າທົ່ວແຂວງມີຄວາມຕ້ອງການທຶນທັງໝົດໃນການພັດທະນາເຂົ້າໃນວຽກງານຈຸດສຸມຕ່າງໆປະມານ 7.472,3 ຕື້ກວ່າກີບ.

### 5.1 ການລົງທຶນຂອງລັດ.

ສຸມໃສ່ການພັດທະນາພື້ນຖານໂຄງລ່າງທີ່ຈຳເປັນ, ໂຄງການບູລິມະສິດຂອງແຂວງ, ຊຳລະໜີ້ສິນ ແລະ ໂຄງການສືບຕໍ່, ສົມທົບທຶນເພື່ອຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອເພື່ອການພັດທະນາ, ພັດທະນາລະບົບການສຶກສາ ແລະ ສາທາລະນະສຸກ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ເພີ່ມທະວີເອົາໃຈໃສ່ຄຸ້ມຄອງການລົງທຶນຂອງລັດຕາມແຜນການທີ່ສະພາແຫ່ງຊາດຮັບຮອງ, ຢຸດຕິໂຄງການນອກແຜນ ແລະ ໂຄງການລົງທຶນກ່ອນ, ຈັດສັນແຫຼ່ງທຶນເຂົ້າໃນການພັດທະນາ ລະຫວ່າງ ຕົວເມືອງ ແລະ ຊົນນະບົດຢ່າງສົມສ່ວນ, ໂດຍສະເພາະໃນ 5 ປີຕໍ່ໜ້າມີຄວາມຕ້ອງການທຶນໃນການເພື່ອມາພັດທະນາປະມານ 2.025,4 ຕື້ກີບ ກວມ 27,1% ແລະ ການຊ່ວຍເຫຼືອທາງການພັດທະນາ ປະມານ 441,65 ຕື້ກີບ ກວມ 5,9% ສ່ວນຮ້ອຍ.

✓ **ເພື່ອບັນລຸຕາມທິດທາງການລົງທຶນດັ່ງກ່າວພວກເຮົາສຸມໃສ່ຊຸກຍູ້ສົ່ງເສີມບາງໂຄງການພັດທະນາ ດັ່ງນີ້:**

1. ໂຄງການກໍ່ສ້າງຂົວແຫ່ງທີ 5 ຄາດວ່າປີ 2021 ຈະໄດ້ລົງມືຈັດຕັ້ງປະຕິບັດ.
2. ໂຄງການລາວ-ລູກຊໍາບວກ 030.

### 5.2 ການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ.

ເລັ່ງໃສ່ການລົງທຶນໂຄງການຂະໜາດກາງ, ຂະໜາດໃຫຍ່ ທີ່ເປັນທ່າແຮງໄດ້ປຽບ **ເປັນຕົ້ນ:** ດ້ານອຸດສາຫະກຳໄຟຟ້າພະລັງນ້ຳ, ອຸດສາຫະກຳປຸງແຕ່ງ, ກໍ່ສ້າງພື້ນຖານໂຄງລ່າງທາງດ້ານການບໍລິການ, ການບໍລິການທ່ອງທ່ຽວ ແລະ ການຜະລິດກະສິກຳແບບເປັນຟາມ, ເລັ່ງໃສ່ການລົງທຶນໃນໂຄງການປຸງແຕ່ງ, ຜົນພະລິດກະສິກຳຂອງປະຊາຊົນ, ໂຄງການສົ່ງເສີມການຜະລິດໃນຮູບແບບ 1+2+3 ທີ່ແຂວງໄດ້ມີລະບຽບການສົ່ງເສີມທີ່ລະອຽດແລ້ວ ເພື່ອບັນລຸຍຸດທະສາດການພັດທະນາຂອງແຂວງ ເຊິ່ງ 5 ປີ ຕໍ່ໜ້າຕ້ອງການມີການລົງທຶນຈາກພາກເອກະຊົນ ແລະ ຕ່າງປະເທດທັງໝົດລະຫວ່າງ 2.863,84 ຕື້ກີບ ກວມ 38,3%ຂອງທຶນທັງໝົດ.

✓ **ເພື່ອບັນລຸຕາມທິດທາງການລົງທຶນດັ່ງກ່າວພວກເຮົາສຸມໃສ່ຊຸກຍູ້ສົ່ງເສີມບາງໂຄງການພັດທະນາ ດັ່ງນີ້:**

**1) ເມືອງປາກຊັນ.**

1. ໂຄງການ ICD ສົ້ນຂົວນ້ຳຂອງ
2. ໂຄງການ ໄດຊັນ ສົ້ນຂົວນ້ຳຂອງ

3. ໂຄງການພັດທະນາຕະຫຼາດປາກຊັນ.
4. ໂຄງການພັດທະນາແຫຼ່ງທ່ອງທ່ຽວອ່າງຫ້ວຍສຽດ ເມືອງປາກຊັນ.
5. ໂຄງການປູກໝາກພຸກບ້ານນາໃໝ.
6. ໂຄງການປູກໝາກພຸກບ້ານຫ້ວຍຊາຍ.
7. ໂຄງການ GMS4 (ກັນເຈື່ອນ, ຂີ້ເຫຍື້ອ, ຄອງລະບາຍນ້ຳ, ສວນສາທາລະນະ)

**2) ເມືອງທ່ານພະບາດ.**

1. ບໍລິສັດລາວຈີຊິນ-ລາວ ວ/ສພ/ນກ ຊີວະພາບ.
2. ໂຄງການໄຟຟ້າແສງຕາເວັນບ້ານທ່າບົກ.
3. ໂຄງການປູກພືດກະສິກຳສະອາດ ບ້ານຍາງເຄືອ.

**3) ເມືອງປາກກະດິງ.**

1. ໂຄງການປູກໝາກມ່ວງ ບໍລິສັດຊຽງຕາລີ່.
2. ໂຄງການ ປູກໝາກຖົ່ວລຽນ, ໝາກມັງກອນ ບໍລິສັດງົວເກົ້າໂຕ.
3. ໂຄງການຕະຫຼາດບ້ານວຽງຄຳ.
4. ໂຄງການເຂື່ອນໄຟຟ້ານ້ຳເທີນ 1.

**4) ເມືອງບໍລິຄັນ.**

1. ບໍລິສັດຄາວິໂກ ບໍ່ແຮ່ລາວຈຳກັດ ບ້ານບໍ່.
2. ໂຄງການປູກພືດເສດຖະກິດ ແລະ ລ້ຽງສັດ ວິທະຍາຄານໄກສອນ ບ້ານຫາດດອນຄູນ.
3. ບໍລິສັດ ວີເອັດອຸດສາຫະກຳການຄ້າ ປູກກ້ວຍ ຢູ່ບ້ານຫາດຢື້ນ.
4. ໂຄງການປູກກ້ວຍຫອມເປັນສິນຄ້າ ບໍລິສັດ ນາງ ກິ່ງແກ້ວ ບ້ານສອງຄອນໃໝ່.
5. ບໍລິສັດດວງຈະເລີນ ພັດທະນາກະສິກຳ ບ້ານໂພນທອງ.
6. ບໍລິສັດພຸດພາວັນ ບໍລິຄຳໄຊ ການກະເສດ ບ້ານຊຶມຊື່ນ.

**5) ເມືອງຄຳເກີດ.**

1. ໂຮງງານແປ້ງມັນຕົ້ນແຫງຮົວ + ບໍລິສັດ ດຣາກອນ ບ້ານສີບພວນ.
2. ໂຄງການພັດທະນາເສດຖະກິດນ້ຳຫາງາງ.
3. ໂຄງການບໍ່ຄຳ ຄຳເກີດ-ແສນອຸດົມ.

**6) ເມືອງວຽງທອງ.**

1. ໂຄງການກໍ່ສ້າງຕະຫຼາດສີບນາ.
2. ໂຄງການຄູກັນນ້ຳຂອງເຂື່ອນໄຟຟ້ານ້ຳເທີນ 1.
3. ໂຄງການຂຸດຄົ້ນຫີນກາບິສ (ບໍລິສັດຄຳປະສິງ).

**7) ເມືອງໄຊຈຳພອນ.**

1. ໂຄງການກໍ່ສ້າງຕະຫຼາດຖາວອນ ບ້ານນ້ຳອ້ອນ.
2. ໂຄງການຂຸດຄົ້ນແກ້ວນາງຝານ.

**8) ໂຄງການທາງ 4 ເລັນ ຜ່ານແຂວງບໍລິຄຳໄຊ (ເມືອງທ່າພະບາດ 60 ກມ, ປາກຊັນ 50 ກມ ແລະ ປາກກະດິງ 68 ກມ) ລວມມີ ສຳຫຼວດອອກແບບ, ກໍ່ສ້າງ, ຍົກຍ້າຍສິ່ງກີດຂວາງ.**

**9) ທາງດ່ວນວຽງຈັນ-ຮ່າໂນ້ຍ.**

**5.3 ການລົງທຶນຈາກສິນເຊື່ອທະນາຄານ.**

ການປ່ອຍສິນເຊື່ອຂອງທະນາຄານ ແລະ ກອງທຶນຕ່າງໆສຸມໃສ່ສົ່ງເສີມການຜະລິດ, ການບໍລິການ, ການລົງທຶນຂອງກຸ່ມຜະລິດປະຊາຊົນ, ສົ່ງເສີມການຜະລິດ, ການສ້າງເສດຖະກິດຄອບຄົວ ເຮັດໃຫ້ຜູ້ດ້ອຍໂອກາດໃນຊົນນະບົດໄດ້ເຂົ້າເຖິງແຫຼ່ງທຶນ ແລະ ສະໜອງສິນເຊື່ອໃຫ້ແກ່ຫົວໜ່ວຍຈຸນລະວິສາຫະກິດ, ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (MSMEs) ໃຫ້ທັນເວລາ, ໃນ 5 ປີ 2021-2025 ຈະມີການປ່ອຍສິນເຊື່ອສະສົມປະມານ 10-15% ຕໍ່ປີ ( 2.141 ຕື້ກີບ ກວມ 28,7% ຂອງທຶນທັງໝົດ ສະເລ່ຍ 428 ຕື້ກີບ/ປີ).

## ພາກທີ III
## ມາດຕະການ, ກົນໄກການຈັດຕັ້ງປະຕິບັດແຜນພັດທະນາ
## ເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V ແຂວງບໍລິຄຳໄຊ (2021 - 2025)

**1. ມາດຕະການໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V (2021-2025).**

**1.1 ສົ່ງເສີມຄວາມຍືນຍົງ ແລະ ຄວາມຫຼາກຫຼາຍທາງດ້ານເສດຖະກິດ.**

- ຮັບປະກັນການຂະຫຍາຍຕົວຂອງເສດຖະກິດຢ່າງໝັ້ນທ່ຽງ ລະຫວ່າງ 4-5% ຕາມທິດຍືນຍົງ ແລະ ສີຂຽວດ້ວຍການຮັບປະກັນສະຖຽນລະພາບຂະແໜງການເງິນພາກລັດ, ຄຸ້ມຄອງໜີ້ສາທາລະນະ ໃຫ້ຫຼຸດລົງເທື່ອລະກ້າວ; ຫຼຸດຜ່ອນໂຄງການສະເໜີໃໝ່, ພິຈາລະນາໂຄງການທີ່ຈຳເປັນຢ່າງມີຈຸດສຸມ.
- ຫຼຸດຜ່ອນອັດຕາໜີ້ເສຍ, ສ້າງຄວາມເຂັ້ມແຂງໃຫ້ພາກທະນາຄານທຸລະກິດຂອງລັດ.
- ຂະຫຍາຍຖານລາຍຮັບໃຫ້ມີຄວາມໝັ້ນຄົງ ຖາວອນ ດ້ວຍການສົ່ງເສີມໃຫ້ຫົວໜ່ວຍຈຸນລະວິສາຫະກິດ, ທຸລະກິດຂະໜາດນ້ອຍ, ກາງ (MSMEs).
- ປັບປຸງການຄຸ້ມຄອງ ແລະ ເກັບອາກອນໃຫ້ມີປະສິດທິພາບ ດ້ວຍການນຳໃຊ້ເຄື່ອງມືໄອທີທີ່ທັນສະໄໝ.
- ສ້າງປັດໄຈເອື້ອອຳນວຍໃນການເຂົ້າເຖິງແຫຼ່ງທຶນ ຄຽງຄູ່ກັບການຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານທີ່ກ່ຽວຂ້ອງ.
- ສືບຕໍ່ປັບປຸງພາກລາຍຈ່າຍໃຫ້ມີຄວາມຮັດກຸມ ປະຢັດມັດທະຍັດ ແລະ  ຫຼີກລ້ຽງການໃຊ້ຈ່າຍທີ່ບໍ່ຈຳເປັນ ແລະ ສິ້ນເປືອງ.
- ສ້າງກົນໄກໃນການລະດົມທຶນພາຍໃນ ເພື່ອເປັນທຶນສະສົມໃນການກໍ່ສ້າງໂຄງລ່າງສາທາລະນະທີ່ຈຳເປັນ.
- ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ເພື່ອດຶງດູດການລົງທຶນພາກເອກະຊົນ ດ້ວຍສິ່ງຈູງໃຈຫຼາຍຮູບແບບຄຽງຄູ່ກັບການປັບປຸງ ແລະ ບັງຄັບໃຊ້ມາດຕະການຢ່າງມີປະສິດທິພາບ.

**1.2 ການພັດທະນາຊັບພະຍາກອນມະນຸດ.**

- ຫັນພະນັກງານໄປສູ່ວິຊາສະເພາະ (ມືອາຊີບ).
- ເພີ່ມທະວີທຶນເຂົ້າໃນວຽກງານພັດທະນາຊັບພະຍາກອນມະນຸດ ແນ່ໃສ່ການສ້າງຄຸນນະພາບຂອງການຮຽນການສອນເປັນຫຼັກ.
- ວາງແຜນການນຳໃຊ້ທ່າແຮງຈາກຊັບພະຍາກອນໜຸ່ມນ້ອຍ.
- ຮັບປະກັນວຽກງານໂພສະນາການ, ນ້ຳດື່ມສະອາດ, ສຸຂາພິບານ, ມີອາຍຸຍືນ ແລະ ຫຼຸດຜ່ອນອັດຕາການຕາຍ ຂອງແມ່ ແລະ ເດັກລຸ່ມ 5 ປີ.
- ມີແຜນສ້າງຄວາມສາມາດທາງດ້ານພາສາຕ່າງປະເທດໃຫ້ໄວໜຸ່ມ ສາມາດຮູ້ໃນລະດັບທີ່ແນ່ນອນ.

**1.3 ສົ່ງເສີມຊີວິດການເປັນຢູ່ທີ່ດີ ແລະ ສັງຄົມທີ່ໜ້າຢູ່.**

- ສືບຕໍ່ຫຼຸດຜ່ອນຄວາມທຸກຍາກ, ຄວາມບໍ່ສະເໝີພາບຍິງ-ຊາຍ ແລະ ຄວາມແຕກໂຕນກັນ  ລະຫວ່າງ ຊົນນະບົດ ແລະ ໂຕເມືອງ, ຄົນຮັ່ງ ແລະ ຄົນທຸກ **ເຊັ່ນ:** ຄວາມບໍ່ເທົ່າທຽມທາງດ້ານການກະຈາຍລາຍໄດ້ ແລະ ການຊົມໃຊ້ຫຼຸດລົງ.
- ປົກປ້ອງສິດ ແລະ ສະຫວັດດີການຂອງເດັກນ້ອຍ, ຫຼຸດຜ່ອນ ແລະ ຕໍ່ຕ້ານການໃຊ້ຄວາມຮຸນແຮງຕໍ່ຜູ້ຍິງ ແລະ ເດັກນ້ອຍ.
- ມີນະໂຍບາຍເບິ່ງແຍງຜູ້ສູງອາຍຸ ແລະ ຜູ້ເສຍອົງຄະ ແລະ ສົ່ງເສີມພວກເພິ່ນມີສ່ວນຮ່ວມໃນການຮັບໃຊ້ສັງຄົມໃຫ້ຫຼາຍ.
- ມີລະບົບການປົກປ້ອງສັງຄົມທີ່ມີປະສິດທິຜົນເພື່ອສະຫວັດດີການສັງຄົມທີ່ເທົ່າທຽມກັນ;  ເພີ່ມຄວາມປອດໄພຢູ່ໃນສັງຄົມ, ເພີ່ມທະວີສາຍດ່ວນ, ລະບົບການແກ້ໄຂບັນຫາສຸກເສີນ, ກ້ອງວົງຈອນປິດ.

**1.4 ປົກປັກຮັກສາສິ່ງແວດລ້ອມ ແລະ ຫຼຸດຜ່ອນຄວາມສ່ຽງຈາກຜົນກະທົບຕ່າງໆ.**

- ເພີ່ມການປົກປັກຮັກສາສິ່ງແວດລ້ອມສະອາດ ແລະ ສີຂຽວ ແນໃສ່ຫຼຸດຜ່ອນຈຳນວນຂອງຜູ້ເສຍຊີວິດ ຫຼື ເຈັບຈາກໄພພິບັດທຳມະຊາດ, ມີການຍົກລະດັບຄວາມສາມາດໃຫ້ແກ່ການກູ້ໄພ, ບັນເທົາທຸກ ແລະ ຟື້ນຟູຄວາມເສຍຫາຍທີ່ເກີດຂຶ້ນຈາກໄພພິບັດ.

- ສົ່ງເສີມຮູບແບບເສດຖະກິດຮອບວຽນເພື່ອຫຼຸດຜ່ອນການເອື່ອຍອີງໃສ່ທຳມະຊາດ ແລະ ຫຼຸດຜ່ອນການທຳລາຍສິ່ງແວດລ້ອມ ເປັນຕົ້ນການຫຼຸດຜ່ອນຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ, ຫຼຸດຜ່ອນມົນລະພິດທາງອາກາດ, ນ້ຳເສຍ.

- ມີການຍົກລະດັບຄວາມສາມາດໃນການປັບຕົວ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ເປັນຕົ້ນການຈູດເຜົາຕ່າງໆ.

- ສືບຕໍ່ຄວາມພະຍາຍາມໃນການເພີ່ມເນື້ອທີ່ປ່າໄມ້ ແລະ ຟື້ນຟູປ່າ ໂດຍສະເພາະຊີວະນາໆພັນທີ່ມີຄວາມສ່ຽງທີ່ຈະສູນພັນ.

**1.5 ສ້າງໂຄງລ່າງທີ່ມີຄວາມທົນທານ, ສົ່ງເສີມການເຊື່ອມໂຍງ-ເຊື່ອມຈອດໃນທຸກລະດັບ.**

- ເພີ່ມທະວີການຮ່ວມມື, ເຊື່ອມຈອດ ແລະ ເຊື່ອມໂຍງ ກັບພາກພື້ນ ແລະ ສາກົນ ເປັນຕົ້ນການຮ່ວມມືດ້ານການຄ້າການສົ່ງອອກ ເພື່ອສົ່ງເສີມການຜະລິດ ແລະ ການສົ່ງອອກ, ມີຫົວຄິດປະດິດສ້າງໃນການນຳເອົາຕະຫຼາດໄປຫາຜູ້ຜະລິດທີ່ຢູ່ຫ່າງໄກ.

- ປັບປຸງຊົນລະປະທານໃຫ້ມີຄວາມທົນທານສາມາດເຮັດການຜະລິດໄດ້ຕະລອດປີ; ວາງແຜນການພັດທະນາເຄຫາຜັງເມືອງແຕ່ຫົວທີ ພັດທະນາຈັດສັນເຂດທີ່ຢູ່ອາໄສໃຫ້ເໝາະສົມ ແລະ ທັນສະໄໝ.

- ນຳໃຊ້ເຄື່ອງມືໄອທີ ທີ່ທັນສະໄໝເຂົ້າມາຊ່ວຍອຳນວຍຄວາມສະດວກໃນການເຂົ້າເຖິງ ແລະ ຄຸ້ມຄອງໂຄງລ່າງບາງປະເພດ **ເຊັ່ນ:** ການຊື້-ຂາຍ, ການບໍລິການຕ່າງໆ.

**1.6 ປັບປຸງການຄຸ້ມຄອງບໍລິຫານລັດ.**

- ເພີ່ມທະວີຄວາມສາມັກຄີປອງດອງ, ທຸກຄົນໃນທົ່ວສັງຄົມມີສ່ວນຮ່ວມໃນການພັດທະນາ ດ້ວຍການນຳໃຊ້ຊ່ອງທາງອອນລາຍ ເພື່ອສັງລວມຄວາມຄິດເຫັນກ່ຽວກັບການປັບປຸງບໍລິຫານພາກລັດແບບຫົວຄິດປະດິດສ້າງ.

- ມີການຈັດສັນທຶນຮອນທີ່ຊັດເຈນ ເໝາະສົມສຳລັບຂະແໜງ ICT ແລະ ການຄົ້ນຄວ້າ ແລະພັດທະນາ.

- ຍົກລະດັບຄວາມຮູ້ຄວາມສາມາດຂອງບຸກຄະລາກອນ ປັບປຸງແນວຄິດຂອງຂະແໜງບໍລິຫານລັດໃຫ້ເຂົ້າໃຈ ແລະ ມີແນວຄວາມຄິດທີ່ຖືກຕ້ອງກ່ຽວກັບການໃຫ້ບໍລິການຕໍ່ສາທາລະນະຊົນ ເພື່ອສ້າງຄວາມເຊື່ອໝັ້ນຂອງສັງຄົມຕໍ່ລັດ.

- ສຶກສາຄວາມເປັນໄປໄດ້ໃນການນຳໃຊ້ເຄື່ອງມື **ICT** ໃນການດຳເນີນທຸລະກຳໃນຫຼາຍຂະແໜງ ເພື່ອເປັນການປະຢັດເວລາ, ມີປະສິດທິພາບສູງ ແລະ ສາມາດຕິດຕາມໄດ້ ເຊັ່ນ: ເສຍອາກອນ ຜ່ານ **BCEL ONE**.

- ປັບປຸງບໍລິຫານຄຸ້ມຄອງຂອງລັດ ແລະ ຂອດປະສານງານໃຫ້ມີປະສິດທິພາບ, ປັບປຸງການບໍລິຫານລັດໃຫ້ສາມາດກວດສອບໄດ້ ແລະ ມີຄວາມໂປ່ງໃສ.

**2. ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V (2021-2025).**

2.1 ຈັດຕັ້ງການເຊື່ອມຊຶມເນື້ອໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V ຂອງແຂວງ ໃຫ້ເລິກເຊິ່ງດ້ວຍຫຼາຍຮູບແບບ, ເສີມຂະຫຍາຍບົດບາດຂອງທຸກອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ, ບັນດາການຈັດຕັ້ງສັງຄົມ, ພາກທຸລະກິດ, ແນວໂຮມ, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນບັນເຜົ່າໃນທົ່ວແຂວງ ເຂົ້າຮ່ວມກັນປະຕິບັດ.

2.2 ຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V ຂອງແຂວງໃຫ້ກາຍເປັນແຜນປະຕິບັດຂອງບັນດາຂະແໜງການ ແລະ ທ້ອງຖິ່ນຢ່າງທັນການ.

2.3 ຕິດຕາມ, ກວດກາ ແລະ ປະເມີນຜົນກາງສະໄໝຢ່າງເປັນປົກກະຕິຕໍ່ເນື່ອງ ເພື່ອສາມາດກຳໄດ້ຂໍ້ສະດວກ-ຂໍ້ຫຍຸ້ງຍາກໃນເວລາປະຕິບັດຕົວຈິງຢູ່ແຕ່ລະທ້ອງຖິ່ນ.

2.4 ເສີມຂະຫຍາຍບົດບາດຂອງຂະແໜງກວດກາລັດ ຂອງບັນດາພະແນກການ ແລະ ທ້ອງຖິ່ນໃນການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດເປົ້າໝາຍຕ່າງໆຂອງແຜນ ຕາມສິດ-ໜ້າທີ່ທີ່ກົດໝາຍກຳນົດ.

**ເຈົ້າແຂວງບໍລິຄຳໄຊ**

ປອ. ກອງແກ້ວ ໄຊສົງຄາມ